International Labour Organization

UN DESA

MOHRSS
Ministry of Human Resources and Social Security of the People's Republic of China

# ບົດລາຍງານ ການທົບທວນກາງສະໄໝ ການຈັດຕັ້ງປະຕິບັດ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ຢູ່ ສປປ ລາວ



# ບົດລາຍງານ ການທົບທວນກາງສະໄໝ ການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມ ແຫ່ງຊາດ ຢູ່ ສປປ ລາວ

ຈັນສີ ສາມາວົງ ແລະ ເລີບລິນ ເດ, ອົງການແຮງງານສາກົນ

ສະຫງວນລິຂະສິດ © ອົງການແຮງງານສາກົນ 2024
ຈັດພິມຄັ້ງທຳອິດ 2024

Attribution 4.0 International (CC BY 4.0)

ນີ້ແມ່ນການເຂົ້າເຖິງວຽກງານແບບເປີດ ເຊິ່ງເຜີຍແຜ່ພາຍໃຕ້ໃບອະນຸຍາດສາກົນ Creative Commons Attribution 4.0 (https://creativecommons.org/licenses/by/4.0/). ຜູ້ນຳໃຊ້ສາມາດນຳມາໃຊ້ອີກ, ດັດປັບ, ປັບປຸງຈາກວຽກຕົ້ນສະບັບ, ຕາມລະອຽດໃນໃບອະນຸຍາດ. ຈະຕ້ອງໄດ້ອ້າງອີງເຖິງ ອົງການ ILO ຢ່າງຈະແຈ້ງ ເພາະເປັນເຈົ້າຂອງວຽກຕົ້ນສະບັບ. ການນຳໃຊ້ສັນຍາລັກຂອງອົງການ ILO ແມ່ນບໍ່ໄດ້ອະນຸຍາດໃຫ້ມີສ່ວນກ່ຽວຂ້ອງກັບວຽກຂອງຜູ້ນຳໃຊ້.

**ການອ້າງອີງເຖິງແຫລ່ງທີ່ມາຂອງຂໍ້ມູນ** ຕ້ອງອ້າງເຖິງວຽກດັ່ງນີ້: International Labour Organization, ບົດລາຍງານ ການທົບທວນກາງສະໄໝ ການຈັດຕັ້ງປະຕິບັດ ຍຸດທະສາດປົກປ້ອງສັງຄົມ ແຫ່ງ ຊາດ ຢູ່ ສປປ ລາວ, Vientiane: International Labour Office, 2024.

**ການແປພາສາ** ໃນກໍລະນີຂອງການແປວຽກງານນີ້, ຈະຕ້ອງຕື່ມຂໍ້ຈຳກັດຄວາມຮັບຜິດຊອບ ພ້ອມດ້ວຍແຫຼ່ງທີ່ມາຂອງຂໍ້ມູນ: ການແປນີ້ ອົງການແຮງງານສາກົນ (ILO) ບໍ່ໄດ້ເປັນຜູ້ແປ ແລະ ບໍ່ຄວນຖືວ່າເປັນການແປຢ່າງເປັນທາງການຂອງອົງການ ILO. ອົງການ ILO ບໍ່ຮັບຜິດຊອບຕໍ່ເນື້ອໃນ ຫຼື ຄວາມຖືກຕ້ອງຂອງການແປນີ້.

**ການດັດປັບ** ໃນກໍລະນີທີ່ມີການດັດປັບວຽກງານນີ້, ຈະຕ້ອງຕື່ມຂໍ້ຈຳກັດຄວາມຮັບຜິດຊອບ ພ້ອມດ້ວຍແຫຼ່ງທີ່ມາຂອງຂໍ້ມູນ: ນີ້ແມ່ນການດັດປັບຈາກວຽກງານຕົ້ນສະບັບຂອງອົງການແຮງງານສາກົນ (ILO). ຄວາມຮັບຜິດຊອບສຳລັບທັດສະນະແລະ ຄວາມຄິດເຫັນທີ່ສະແດງອອກໃນການດັດປັບ ແມ່ນເປັນຂອງຜູ້ຂຽນ ຫຼື ຜູ້ດັດປັບພຽງແຕ່ຜູ້ດຽວ ແລະ ບໍ່ໄດ້ຮັບການຮັບຮອງຈາກອົງການ ILO.

ໃບອະນຸຍາດ CC ນີ້ບໍ່ໄດ້ນຳໃຊ້ກັບສິ່ງພິມທີ່ບໍ່ໄດ້ສະຫງວນລິຂະສິດຂອງອົງການ ILO ລວມທັງສິ່ງພິມນີ້. ຖ້າຫາກວ່າສິ່ງພິມທີ່ໄດ້ອ້າງອີງເຖິງແຫຼ່ງທີ່ມາແມ່ນຂອງບຸກຄົນທີສາມ, ຜູ້ນຳໃຊ້ສິ່ງພິມດັ່ງກ່າວ ມີຄວາມຮັບຜິດຊອບພຽງຜູ້ດຽວໃນການຂໍອະນຸຍາດນຳໃຊ້ກັບຜູ້ຖືສິດ.
ຂໍ້ຂັດແຍ່ງໃດໆທີ່ເກີດຂຶ້ນພາຍໃຕ້ໃບອະນຸຍາດນີ້ ທີ່ບໍ່ສາມາດແກ້ໄຂຮ່ວມກັນໄດ້ ຈະຖືກສົ່ງໄປຫາອະນຸຕຸລາການ ອີງຕາມກົດລະບຽບອະນຸຕຸລາການຂອງຄະນະກຳມາທິການຂອງອົງການສະຫະປະຊາຊາດ ວ່າດ້ວຍກົດໝາຍການຄ້າສາກົນ (UNCITRAL). ຄູ່ສັນຍາ ຈະມີຂໍ້ຜູກມັດຈາກອະນຸຕຸລາການໃດນຶ່ງ ທີ່ເປັນຜົນມາຈາກການຕັດສິນຂອງອະນຸຕຸລາການດັ່ງກ່າວ ແລະ ຖືວ່າເປັນການຕັດສິນຂັ້ນສຸດທ້າຍຂອງຂໍ້ຂັດແຍ່ງດັ່ງກ່າວ.
ຄຳຖາມທັງໝົດກ່ຽວກັບສິດ ແລະ ໃບອະນຸຍາດ ຄວນສົ່ງໄປຫາໜ່ວຍງານສິ່ງພິມຂອງອົງການ ILO (ສິດທິ ແລະໃບອະນຸຍາດ), 1211 Geneva 22, Switzerland, ຫຼືສົ່ງທາງອີເມວທີ່ rights@ilo.org.

---

ISBN: 9789220409671 (web PDF) ISBN 9789220408971 (web PDF) ຍັງມີສະບັບ [English]: Report of the Mid-Term Review of the National Social Protection Strategy in the Lao People s Democratic Republic, 9789220408964 (web PDF).

---

ຊື່ທີ່ນຳໃຊ້ເຂົ້າໃນສິ່ງພິມຂອງອົງການ ILO ແມ່ນສອດຄ່ອງກັບການປະຕິບັດຂອງອົງການສະຫະປະຊາຊາດ, ແລະ ການນຳສະເໜີສິ່ງພິມດັ່ງກ່າວບໍ່ໄດ້ບົ່ງບອກເຖິງຄວາມຄິດເຫັນໃດໆຂອງອົງການ ILO ຕໍ່ກັບສະຖານະພາບທາງກົດໝາຍຂອງປະເທດໃດໜຶ່ງ, ຂົງເຂດ ຫຼື ເຂດແຄ້ວນ ຫຼື ອຳນາດການປົກຄອງ, ຫຼື ກ່ຽວກັບການກຳນົດຂອບເຂດຊາຍແດນຂອງຕົນ.
ຄວາມຮັບຜິດຊອບຕໍ່ຄວາມຄິດເຫັນທີ່ສະແດງຢູ່ໃນບົດຄວາມຕ່າງໆ, ບົດສຶກສາຄົ້ນຄວ້າ ແລະ ການປະກອບສ່ວນອື່ນໆ ເປັນຄວາມຮັບຜິດຊອບຂອງຜູ້ຂຽນພຽງແຕ່ຜູ້ດຽວ, ແລະ ການພິມເຜີຍແຜ່ ບໍ່ໄດ້ເປັນການຮັບຮອງຂອງອົງການ ILO ຕໍ່ກັບຄວາມຄິດເຫັນທີ່ສະແດງຢູ່ໃນບົດຄວາມຕ່າງໆເຫຼົ່ານັ້ນ.
ການອ້າງອີງເຖິງຊື່ບໍລິສັດ ແລະ ຜະລິດຕະພັນ ແລະ ຂະບວນການທາງການຄ້າ ບໍ່ໄດ້ໝາຍເຖິງການຮັບຮອງຂອງອົງການ ILO, ແລະ ການທີ່ບໍ່ໄດ້ກ່າວເຖິງຊື່ຂອງບໍລິສັດ, ຜະລິດຕະພັນ ຫຼື ຂະບວນການທາງການຄ້າສະເພາະໃດໜຶ່ງ ບໍ່ໄດ້ໝາຍຄວາມວ່າບໍ່ອະນຸມັດ.
ຂໍ້ມູນຂ່າວສານກ່ຽວກັບສິ່ງພິມຕ່າງໆຂອງອົງການ ILO ແລະ ເອກະສານຕ່າງໆທາງດິຈິຕອນ ສາມາດເຂົ້າໄປເບິ່ງໄດ້ທີ່: www.ilo.org/publns.

---

ຈັດພິມໃນ : © Adri Berger/ILO

# ບົດສະແດງຄວາມຂອບໃຈ

ໃນປີ 2023, ອົງການແຮງງານສາກົນໄດ້ຮັບບົດສະເໜີ ຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອໃຫ້ສະໜັບສະໜູນການທົບທວນໄລຍະກາງຂອງ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ຂອງ ສປປ ລາວ. ຜົນໄດ້ຮັບຈາກການທົບທວນຈະນຳໄປໃຊ້ເປັນພື້ນຖານ ໃນການຕັດສິນນະໂຍບາຍປະຕິຮູບ ແລະ ການປັບປຸງ ວິທີການຈັດຕັ້ງປະຕິບັດຂອງຍຸດທະສາດປົກປ້ອງສັງຄົມ ແຫ່ງຊາດໃນໄລຍະຕໍ່ໄປ.

ບົດລາຍງານດັ່ງກ່າວໄດ້ຂຽນຂຶ້ນໂດຍທ່ານ ຈັນສີ ສາມາ ວົງ, ທີ່ປຶກສາ ແລະ ນາງ ເລີບລີນ ເດ, ຫົວໜ້າໂຄງການ ປົກປ້ອງສັງຄົມຂອງອົງການແຮງງານສາກົນ ປະຈຳ ສປປ ລາວ. ການເກັບກຳຂໍ້ມູນຂັ້ນຕົ້ນ ແລະ ການສຳພາດໄດ້ ຖືກດຳເນີນການໂດຍ ທ່ານ ຈັນສີ ສາມາວົງ. ທ່ານ ທອງ ເຫຼັກ ຊິ່ງ, ຜູ້ປະສານງານອົງການແຮງງານສາກົນ ກໍ່ໄດ້ ເປັນຜູ້ສະໜອງຂໍ້ມູນ ແລະ ປະສານງານໃນການທົບ ທວນຄັ້ງນີ້. ບົດລາຍງານດັ່ງກ່າວໄດ້ຖືກກວດແກ້ດ້ານ ວິຊາການໂດຍທ່ານ ນາງ ມາເຣອ ເຟກໍເຊັດ, ຫົວໜ້າ ໂຄງການປົກປ້ອງສັງຄົມດ້ານສຸຂະພາບ, ທ່ານ ເກນນີຈິ ຣິໂຣຊິ, ຊ່ຽວຊານປົກປ້ອງສັງຄົມປະຈຳພາກພື້ນ, ແລະ ທ່ານ ນາງ ມາຣຽມ ອັບດູ, ຫົວໜ້າພະແນກນະໂຍບາຍ ສັງຄົມ ຂອງອົງການ ຢູນິເຊັບ ປະຈຳ ສປປ ລາວ.

ຂໍສະແດງຄວາມຂອບໃຈພິເສດມາຍັງຄະນະ ກຳມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມ ແລະ ກຸ່ມຮັບຜິດຊອບຜົນໄດ້ຮັບດ້ານປົກປ້ອງສັງຄົມຂອງ ອົງການ ສປຊ ທີ່ໄດ້ປະກອບຄຳຄິດເຫັນທີ່ມີຄຸນຄ່າ ແລະ ໄດ້ຮັບຮອງຜົນໄດ້ຮັບຂອງບົດລາຍງານສະບັບນີ້. ອົງການແຮງງານສາກົນ ຂໍສະແດງຄວາມຂອບໃຈມາຍັງ ທ່ານ ວິໄລພົງ ສີສົມຫວັງ, ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ, ກະຊວງ ຮສສ ພ້ອມດ້ວຍ ທີມ ງານ ທີ່ໄດ້ໃຫ້ທິດຊີ້ນຳ ແລະ ປະສານງານຢ່າງໃກ້ສິດ ຕໍ່ການດຳເນີນການທົບທວນຄັ້ງນີ້ ຈຶ່ງໄດ້ຮັບຜົນຕາມ ຄາດໝາຍ.

ຂໍສະແດງຄວາມຮູ້ບຸນຄຸນຕໍ່ທ່ານ ຈອນ ມາລອຍ ທີ່ ກວດແກ້ບົດລາຍງານສະບັບນີ້, ທ່ານ ທະນູເພັດ ມະນີ ແສງ ທີ່ໄດ້ດຳເນີນການອອກແບບ ແລະ ທ່ານ ນາງ ແສງເດືອນ ພົມມະສຸຂາ ທີ່ໄດ້ຊ່ວຍເຫຼືອດ້ານວຽກງານ ບໍລິຫານໃນຕະລອດຊ່ວງໄລຍະເວລາການທົບທວນ. ຂອບໃຈພິເສດຕໍ່ທ່ານ ທອງເຫຼັກ ຊິ່ງ ແລະ ແສງຟ້າ ສຸກ ຂະທີວົງ ທີ່ໄດ້ແປອອກມາເປັນພາສາລາວ.

ພວກຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຕໍ່ ການຊ່ວຍເຫຼືອດ້ານການເງິນເງິນ ຂອງໂຄງການ ILO UNDESA ເສີມຂະຫຍາຍການປົກປ້ອງສັງຄົມທຸກ ຖ້ວນໜ້າ ເພື່ອການບັນລຸເປົ້າໝາຍພັດທະນາແບບ ຍືນຍົງ ແລະ ລຶບລ້າງຄວາມທຸກຍາກ , ຖ້າບໍ່ໄດ້ຮັບ ການຊ່ວຍເຫຼືອຈາກໂຄງການດັ່ງກ່າວ, ພວກເຮົາຈະບໍ່ມີ ບົດລາຍງານສະບັບນີ້.

# ສາລະບານ


- **ຊື່ ແລະ ອັກສອນຫຍໍ້** 6
- **ບົດນຳຂັດຫຍໍ້** 8
  - ການຈັດຕັ້ງປະຕິບັດຢູ່ສູນກາງ 10
  - ການຈັດຕັ້ງປະຕິບັດຢູ່ຂັ້ນທ້ອງຖິ່ນ 11
  - ກອບຕິດຕາມ ແລະ ປະເມີນຜົນ, ແລະ ການຈັດຕັ້ງປະຕິບັດ 11
  - ການລົງທຶນໃສ່ວຽກປົກປ້ອງສັງຄົມ 11
- **I. ພາກສະເໜີ** 14
  - ປະຫວັດຄວາມເປັນມາ 14
  - ຈຸດປະສົງ ແລະ ຂອບເຂດ ຂອງ ການປະເມີນຜົນ 16
  - ເນື້ອໃນຂອງບົດລາຍງານ 16
- **II. ວິທີການວິທະຍາ ທີ່ນຳໃຊ້ໃນການທົບທວນ** 17
  - ຂໍ້ຈຳກັດ 18
- **III. ສະພາບເງື່ອນໄຂເສດຖະກິດ-ສັງຄົມ** 19
  - ສະພາບເງື່ອນໄຂຂອງປະເທດ 19
  - ສະພາບເງື່ອນໄຂ ດ້ານນະໂຍບາຍ 21
  - ສະພາບການປົກປ້ອງສັງຄົມ ໂດຍລວມ 24
- **IV. ຜົນໄດ້ຮັບຕົ້ນຕໍ** 26
  - ການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມໂດຍສັງເຂບ 26
  - ຂໍ້ສະເໜີແນະເພື່ອປັບປຸງການຈັດຕັ້ງປະຕິບັດຍຸດທະສາດ 32
  - ການຈັດຕັ້ງປະຕິບັດ ກອງທຶນການປະກັນສຸຂະພາບ 35
    - ຄວາມຄືບໜ້າຮອດປະຈຸບັນ 40
    - ຊ່ອງຫວ່າງ ແລະ ສິ່ງທ້າທາຍ 44
    - ຄຳແນະນຳ 44
  - ການຈັດຕັ້ງປະຕິບັດລະບົບປະກັນສັງຄົມແຫ່ງຊາດ 45
    - ຄວາມຄືບໜ້າຮອດປະຈຸບັນ 47
    - ຊ່ອງຫວ່າງ ແລະ ສິ່ງທ້າທາຍ 51
    - ຄຳແນະນຳ 53
  - ການຈັດຕັ້ງປະຕິບັດເສົາຄ້ຳດ້ານສະຫວັດດີການສັງຄົມ 54
    - ຄວາມຄືບໜ້າຮອດປະຈຸບັນ 55
    - ຊ່ອງຫວ່າງ ແລະ ສິ່ງທ້າທາຍ 63
    - ຄຳແນະນຳ 64
- **ເອກສານອ້າງອີງ** 66
- **ເອກະສານຊ້ອນທ້າຍ 1. ຄວາມຄືບໜ້າການຈັດຕັ້ງປະຕິບັດ NSPS** 68
- **ເອກະສານຊ້ອນທ້າຍ 2. ລາຍການເອກະສານທີ່ໄດ້ທົບທວນ** 101
- **ເອກະສານຊ້ອນທ້າຍ 3. ຕາຕະລາງເກັບກຳຂໍ້ມູນ** 104

# ຊື່ ແລະ ອັກສອນຫຍໍ້

| | |
|---|---|
| ASEAN | ສະມາຄົມປະຊາຊາດ ແຫ່ງ ອາຊີຕາເວັນອອກສຽງໃຕ້ |
| GDP | ລວມຍອດຜະລິດຕະພັນພາຍໃນ |
| IMF | ອົງການ ການເງິນ ສາກົນ |
| LECS | ການສຳຫລວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ |
| LFTU | ສະຫະພັນ ກຳມະບານ ແຫ່ງ ສປປ ລາວ |
| LNCCI | ສະພາການຄ້າ ແລະ ອຸສາຫະກຳ ແຫ່ງ ສປປ ລາວ |
| LSB | ສູນສະຖິຕິ ແຫ່ງ ຊາດ |
| LSSO | ອົງການປະກັນສັງຄົມແຫ່ງຊາດ |
| MAF | ກະຊວງກະສິກຳ ແລະ ປ່າໄມ້ |
| MECG | ການໃຫ້ອຸດໜູນແມ່ຍິງ ແລະ ເດັກກ່ອນໄວຮຽນ |
| MIS | ລະບົບຄຸ້ມຄອງຂໍ້ມູນຂ່າວສານ |
| MOES | ກະຊວງສຶກສາທິການ ແລະ ກິລາ |
| MOF | ກະຊວງການເງິນ |
| MOH | ກະຊວງສາທາລະນະສຸກ |
| MOIC | ກະຊວງອຸດສາຫະກຳ ແລະ ການຄ້າ |
| MOLSW | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| NGO | ອົງການບໍ່ສັງກັດລັດ |
| NHI | ການປະກັນສຸຂະພາບ ແຫ່ງ ຊາດ |
| NHIB | ຫ້ອງການປະກັນສຸຂະພາບ ແຫ່ງ ຊາດ |
| NSEDP | ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ |
| NSPC | ຄະນະຊີ້ນຳລະດັບຊາດ ເພື່ອການປົກປ້ອງສັງຄົມ |
| NSPS | ຍຸດທະສາດປົກປ້ອງສັງຄົມ ແຫ່ງ ຊາດ |
| NSSF | ກອງທຶນປະກັນສັງຄົມ ແຫ່ງ ຊາດ |

| | |
|---|---|
| ODA | ເງິນຊ່ວຍເຫຼືອລ້າ |
| RAP | ຂັ້ນຕອນການປະເມີນຜົນແບບວ່ອງໄວ |
| TOT | ການສ້າງຄູຝຶກ |
| TVET | ການຝຶກອົບຮົມວິຊາຊີບ ແລະ ອະຊີວະສຶກສາ |
| WFP | ອົງການອາຫານໂລກ |
| WHO | ອົງການອະນາໄມໂລກ |

# ບົດນຳຂັດຫຍໍ້

## ປະຫວັດຄວາມເປັນມາ

ລັດຖະບານ ແຫ່ງ ສປປ ລາວ ເຫັນເຖິງການປະກອບສ່ວນ ຂອງການປົກປ້ອງສັງຄົມ ໃນການຫຼຸດຜ່ອນຄວາມທຸກຍາກ, ຄວາມບໍ່ສະເໝີພາບ ແລະ ການສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ແລະ ຄວາມສະມັກຄີປອງດອງແບບຍືນຍົງ. ດັ່ງນັ້ນ, ຈຶ່ງມີຄວາມໝາຍໝັ້ນໃນການບັນລຸການປົກປ້ອງສັງຄົມທົ່ວປວງຊົນ ໂດຍພິຈາລະນາສະພາບເງື່ອນໄຂດ້ານເສດຖະກິດ-ສັງຄົມ ແລະ ຊັບພະຍາກອນທີ່ມີ ພ້ອມທັງສ້າງພື້ນຖານປົກປ້ອງສັງຄົມທີ່ສາມາດປົກປ້ອງປະຊາຊົນ ລາວ ທັງໝົດ ຈາກວິກິດການດ້ານເສດຖະກິດ,ສັງຄົມ, ໄພພິບັດທຳມະຊາດ ແລະ ຄວາມສ່ຽງດ້ານອື່ນໆ.

ຍຸດທະສາດ ປົກປ້ອງສັງຄົມ ແຫ່ງ ຊາດ - ວິໄສທັດ 2030 ແລະ ເປົ້າໝາຍຮອດປີ 2025 ຈຶ່ງໄດ້ຖືກຮັບຮອງຢ່າງເປັນທາງການໃນ ປີ 2020 ໂດຍທີ່ມີຈຸດປະສົງຂະຫຍາຍ ແລະ ຍົກລະດັບການປົກປ້ອງສັງຄົມ ຢູ່ ສປປ ລາວ ເພື່ອປະກອບສ່ວນໃຫ້ແກ່ການພັດທະນາຊັບພະຍາກອນມະນຸດ ຄຽງຄູ່ກັບການປະກອບສ່ວນໃນການຈັດຕັ້ງປະຕິບັດ ແລະ ບັນລຸເປົ້າໝາຍໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາຂະແໜງການຕ່າງໆ. ເພື່ອບັນລຸໄດ້ຕາມສິ່ງທີ່ໄດ້ກ່າວມານັ້ນ, ຈຶ່ງໄດ້ກຳນົດ ວິໄສທັດຮອດປີ 2030 ແລະ ກຳນົດສາມເປົ້າໝາຍຫຼັກໃນຍຸດທະສາດປົກປ້ອງສັງຄົມແຫ່ງຊາດຄື: ການປະກັນສຸຂະພາບ, ການປະກັນສັງຄົມ ແລະ ສະຫວັດດີການສັງຄົມ. ດ້ວຍການພັດທະນາລະບົບປົກປ້ອງສັງຄົມຄາດວ່າ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ຈະປະກອບສ່ວນໃນການແຈກຢາຍຜົນປະໂຫຍດຈາກ ການພັດທະນາເສດຖະກິດຄືນໃໝ່ໃຫ້ແກ່ທຸກພາກສ່ວນຂອງສັງຄົມ, ການສົ່ງເສີມຄວາມສາມັກຄີປອງດອງ, ການຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ ແລະ ການຂະຫຍາຍຕົວຂອງປະເທດຊາດ ແບບເຂັ້ມແຂງຍາວນານ.

ຈຸດປະສົງຂອງການທົບທວນກາງສະໄໝ ແມ່ນເພື່ອປະເມີນຄວາມຄືບໜ້າໃນການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ຈົນຮອດປະຈຸບັນ ເພື່ອເປັນພື້ນຖານໃນການກຳນົດທິດທາງຍຸດທະສາດ ສຳລັບໄລຍະການຈັດຕັ້ງປະຕິບັດຕໍ່ໄປ ພ້ອມທັງເປັນຂໍ້ມູນໃຫ້ແກ່ ຄູ່ຮ່ວມພັດທະນາ ເພື່ອພິຈາລະນາການຊ່ວຍເຫຼືອ. ການທົບທວນ ຈະສົມທຽບວຽກ ແລະ ກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດຕົວຈິງ ກັບ ແຜນເບື້ອງຕົ້ນ ທີ່ລະບຸໃນຍຸດທະສາດ ແລະ ປະເມີນຄວາມກ່ຽວຂ້ອງ ລະຫວ່າງ ກິດຈະກຳ ແລະ ຜົນໄດ້ຮັບຄາດຄະເນ.

ການທົບທວນ ຄັ້ງນີ້ໄດ້ນຳໃຊ້ວິທີການແບບປະສົມປະສານ ລວມທັງວິທີການແບບປະລິມານ ແລະ ຄຸນນະພາບ. ການວິເຄາະ ແມ່ນນຳໃຊ້ຂໍ້ມູນຫຼັກ ແລະ ແຫຼ່ງຂັ້ນສອງ ເພື່ອຕອບແຕ່ລະຄຳຖາມໃນການທົບທວນ. ຜົນຂອງການທົບທວນ ກໍໄດ້ຖືກຢັ້ງຢືນເພື່ອຕັ້ງເປັນຂໍ້ສະຫຼຸບ.

## ຜົນໄດ້ຮັບຕົ້ນຕໍ

ພະຍາດໂຄວິດ-19 ແລະ ສິ່ງທ້າທາຍດ້ານເສດຖະກິດ ໄດ້ສົ່ງຜົນກະທົບຕໍ່ກັບໄລຍະເບື້ອງຕົ້ນ ຂອງ ການຈັດຕັ້ງປະຕິບັດຍຸດທະສາດ ແຕ່ເຖິງຢ່າງໃດກໍຕາມ ກໍມີຄວາມຄືບໜ້າຫຼາຍພໍສົມຄວນ ໂດຍສະເພາະແມ່ນການເພີ່ມທະວີຄວາມສອດຄ່ອງກົມກຽວ ລະຫວ່າງບັນດານິຕິກຳ, ນະໂຍບາຍ ແລະ ອົງການຈັດຕັ້ງ. ຄະນະກຳມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມຖືກສ້າງຕັ້ງຂຶ້ນພາຍໃຕ້ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ແລະ ມີໜ້າທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດ ແລະ ຕິດຕາມຄວາມຄືບໜ້າ ຂອງ ຍຸດທະສາດ. ມີທັງໝົດ ສີ່ອົງການຈັດຕັ້ງຕົ້ນຕໍ ທີ່ຮັບຜິດຊອບການຈັດຕັ້ງປະຕິບັດ ກໍຄື ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງສຶກສາທິການ ແລະ ກິລາ, ແລະ ກະຊວງສາທາລະນະສຸກ. ຄະນະກຳມາທິການດັ່ງກ່າວ ຂຶ້ນກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີພາລະບົດບາດເປັນຈຸດປະສານງານເພື່ອຮັບປະກັນການບັນລຸເປົ້າໝາຍຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ. ນອກນັ້ນ, ຍັງໄດ້ສ້າງຕັ້ງບັນດາ ຄະນະກຳມາທິການຂັ້ນທ້ອງຖິ່ນຢູ່ແຕ່ລະແຂວງ ເຊິ່ງແມ່ນ ທ່ານ ຮອງເຈົ້າແຂວງ ເປັນປະທານ, ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ເປັນ ຮອງປະທານ ແລະ ສະມາຊິກຈາກພະແນກທ້ອງຖິ່ນອື່ນໆ ເປັນຄະນະ.

ເສດຖະກິດ ປະເທດລາວ ກຳລັງມີການຂະຫຍາຍຕົວແຕ່ລະກ້າວ ແລະ ມີ ແນວໂນ້ມຈະສືບຕໍ່ຂະຫຍາຍຕົວໃນຊຸມປີຕໍ່ໜ້າ ແຕ່ການລົງທຶນ ຂອງ ລັດຖະບານ ໃນຂະແໜງປົກປ້ອງສັງຄົມຍັງບໍ່ທັນພຽງພໍ. ຄວາມພະຍາຍາມໃນການເພີ່ມທະວີວຽກປົກປ້ອງສັງຄົມກໍຖືກຜົນກະທົບຍ້ອນຂາດແຫຼ່ງງົບປະມານໄລຍະຍາວທີ່ຍືນຍົງ. ຖ້າສົມທຽບກັບບັນດາປະເທດໃນພາກພື້ນ, ເຫັນວ່າການລົງທຶນໃນວຽກປົກປ້ອງສັງຄົມ ຖືວ່າຕໍ່າຫຼາຍ ຍ້ອນຂາດປະສິດທິຜົນໃນການນຳໃຊ້ແຫຼ່ງທຶນພາຍໃນ. ດັ່ງນັ້ນ, ມີຄວາມສຳຄັນທີ່ຕ້ອງນຳໃຊ້ຊັບພະຍາກອນທີ່ມີຢູ່ ສຳລັບວຽກ ປົກປ້ອງສັງຄົມ ແບບກົມກຽວ ແລະ ມີປະສິດທິພາບ. ເຖິງວ່າການທົບທວນກາງສະໄໝ ຈະບໍ່ມີຄຳຕອບ ສຳລັບທຸກຄຳຖາມທີ່ຕັ້ງຂຶ້ນມາກໍຕາມ, ມີຄຳແນະນຳຈຳນວນໜຶ່ງ ທີ່ສາມາດຊ່ວຍໃນການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ໂດຍທີ່ນຳໃຊ້ຊັບພະຍາກອນທີ່ມີໃນປະຈຸບັນ ຫຼື ການປັບປຸງວິທີການ ຂອງ ແຜນງານ ເພື່ອຍົກລະດັບປະສິດທິພາບໃນການຈັດຕັ້ງຍຸດທະສາດສຳລັບໄລຍະທີ່ຍັງເຫຼືອ.

ການທົບທວນ ໄດ້ຍົກໃຫ້ເຫັນເຖິງຄວາມຄືບໜ້າພໍສົມຄວນ ໃນການຈັດຕັ້ງປະຕິບັດ ວຽກງານປັບປຸງນິຕິກຳ ເພື່ອຍົກລະດັບ ຄວາມສອດຄ່ອງ ແລະ ການປະສານງານຫຼາຍດ້ານ. ຄະນະກຳມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມ ໄດ້ຖືກສ້າງຕັ້ງຂຶ້ນພາຍໃຕ້ດຳລັດນາຍົກລັດຖະມົນທີ ເລກທີ 655/ນຍ ແລະ ມີພາລະບົດບາດອັນສຳຄັນ. ນອກນັ້ນ, ກໍໄດ້ສະໜັບສະໜູນການຈັດຕັ້ງປະຕິບັດ ດຳລັດ ເລກທີ. 02/ຄປສ, ໃນການສ້າງຕັ້ງກອງເລຂາ ຂອງຄະນະກຳມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມ ເຊິ່ງມີພາລະບົດບາດເຄື່ອນໄຫວໃນຂັ້ນສູນກາງ ແລະ ແຂວງ. ດຳລັດ ເລກທີ.03/ຄປສ ຍັງໄດ້ກຳນົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງ ຄະນະກຳມາທິການແຫ່ຊາດ ເພື່ອການປົກປ້ອງສັງຄົມ ແບບຈະແຈ້ງ ເພື່ອຮັບປະກັນການຄຸ້ມຄອງແບບມີປະສິດທິພາບ. ຢູ່ຂັ້ນແຂວງ ກໍໄດ້ມີບາດກ້າວອັນສຳຄັນ ກໍຄື ການສ້າງຕັ້ງ ຄະນະກຳມະການປົກປ້ອງສັງຄົມຂັ້ນແຂວງ.

ໂຄງຮ່າງການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານປະຈຸບັນ ແມ່ນນຳໃຊ້ຮູບແບບສາຍຕັ້ງ ເຊິ່ງບັນດາກະຊວງເປັນຜູ້ນຳພາ ໂດຍມີ ຂະແໜງການສາຍຂວາງ ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອ. ຄະນະກຳມາທິການແຫ່ງຊາດ ເປັນຜູ້ປະສານງານການຈັດຕັ້ງປະຕິບັດຍຸດທະສາດໂດຍຮ່ວມມືກັບຄູ່ຮ່ວມພັດທະນາ ແລະ ຕິດຕາມການຈັດຕັ້ງປະຕິບັດ, ແຕ່ມີຂໍ້ບົກຜ່ອງດ້ານໂຄງສ້າງການຄຸ້ມຄອງ ແລະ ໜ້າທີ່ຮັບຜິດຊອບ. ການຈັດຕັ້ງປະຕິບັດແມ່ນມີລັກສະນະກະແຈກກະຈາຍ ແລະ ຂຶ້ນກັບສາຍຕັ້ງເປັນສ່ວນຫຼາຍ ໂດຍສະເພາະແມ່ນການຄຸ້ມຄອງຂັ້ນທ້ອງຖິ່ນ ທີ່ບໍ່ໄດ້ຮັບງົບປະມານທີ່ຈຳເປັນໃນການຈັດຕັ້ງປະຕິບັດຍຸດທະສາດ ເຊິ່ງເຮັດໃຫ້ເສຍໂອກາດໃນການຈັດຕັ້ງປະຕິບັດ. ຈຳເປັນຕ້ອງມີການທົບທວນໂຄງສ້າງໃນການຄຸ້ມຄອງບໍລິຫານ ເພື່ອຮັບປະກັນການປັບປຸງປະສິດທິພາບ ແລະ ຄວາມຮັບຜິດຊອບ.

ກອງເລຂາໄດ້ເຮັດພາລະບົດບາດອັນສຳຄັນ ໃນການສົ່ງເສີມການຈັດຕັ້ງປະຕິບັດ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ. ຂະແໜງການທີ່ກ່ຽວຂ້ອງ ລວມທັງ ບັນດາກະຊວງ, ອົງການຈັດຕັ້ງທາງສັງຄົມ ແລະ ຄູ່ຮ່ວມພັດທະນາ ຮັບຮູ້ເຖິງພາລະບົດບາດດັ່ງກ່າວ ແລະ ເຫັນວ່າກອງເລຂາ ເປັນຈຸດປະສານງານໃຈກາງສຳລັບການແກ້ໄຂບັນຫາລະດັບນະໂຍບາຍ ແລະ ການຈັດຕັ້ງປະຕິບັດ. ເຖິງຢ່າງໃດກໍຕາມ, ໄດ້ສັງເກດເຫັນວ່າ ກອງເລຂາ ຍັງມີຂໍ້ຈຳກັດໃນການເຕົ້າໂຮມບັນດາກະຊວງໃຫຍ່ໆ ທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ.

ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ມີພາລະບົດບາດສຳຄັນໃນວຽກການປົກປ້ອງສັງຄົມ. ບັນດາຄະນະກຳມະການເພື່ອການປົກປ້ອງສັງຄົມ ຂັ້ນທ້ອງຖິ່ນ ມີຄວາມສຳຄັນ ໃນການສະໜັບສະໜູນ ການຈັດຕັ້ງປະຕິບັດບັນດາແຜນງານປົກປ້ອງສັງຄົມ ແຫ່ງຊາດ ແລະ ການຕິດຕາມປະສິດທິຜົນ. ນອກນັ້ນ, ກໍເປັນຜູ້ສະໜອງຂໍ້ມູນຂ່າວສານທີ່ສຳຄັນ ເພື່ອເປັນພື້ນຖານໃຫ້ແກ່ການປັບປຸງ ນະໂຍບາຍລະດັບຊາດຕ່າງໆ. ເຖິງຢ່າງໃດກໍຕາມ, ການທົບທວນຄັ້ງນີ້ ພົບເຫັນວ່າມີ ສິ່ງທ້າທາຍສະເພາະ ໃນການສ້າງລະບົບປົກປ້ອງສັງຄົມແບບຮອບດ້ານ ຍ້ອນຂາດການສື່ສານ ແລະ ໂຄສະນາເຜີຍແຜ່ ກ່ຽວກັບພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງ ບັນດາຄະນະກຳມະການຂັ້ນທ້ອງຖິ່ນ.

ການທີ່ອົງການປົກຄອງຂັ້ນທ້ອງຖິ່ນບໍ່ຄ່ອຍມີສ່ວນຮ່ວມ ໃນຂະບວນການກຳນົດກຸ່ມເປົ້າໝາຍ ສຳລັບບາງແຜນງານ ເຮັດໃຫ້ເກີດຂໍ້ຜິດພາດ ທີ່ຜູ້ໄດ້ຮັບຜົນປະໂຫຍດ ທີ່ມີເງື່ອນໄຂ ອາດບໍ່ສາມາດເຂົ້າເຖິງບັນດາອຸດໜູນທີ່ຕົນເອງເກີດສິດໄດ້ຮັບຜົນປະໂຫຍດ. ວິທີການກຳນົດກຸ່ມເປົ້າໝາຍແບບນີ້ ອາດເຮັດໃຫ້ບຸກຄົນ ແລະ ຄົວເຮືອນທີ່ມີຄວາມສ່ຽງ ອາດເສຍໂອກາດໃນການໄດ້ຮັບຜົນປະໂຫຍດ ຈາກອຸດໜູນປົກປ້ອງສັງຄົມຕ່າງໆ. ນອກນັ້ນ, ການເກີດສິດ ເພື່ອໄດ້ຮັບຜົນປະໂຫຍດຈາກແຜນງານຕ່າງໆນີ້ ອາດຖືກໂນ້ມນ້າວ ດ້ວຍການພິຈາລະນາໃນຂັ້ນທ້ອງຖິ່ນ ແລະ ອາດເຮັດໃຫ້ເກີດຂໍ້ຜິດພາດໃນການເລືອກເປົ້າໝາຍ ແລະ ການສູນເສຍຊັບພະຍາກອນທີ່ຄວນຈັດສັນໃຫ້ແກ່ບັນດາຄົວເຮືອນທີ່ມີລາຍຮັບຕ່ຳ ແລະ ມີຄວາມບອບບາງ. ປະຈຸບັນນີ້, ກົນໄກ ແລະ ກາລະໂອກາດໃນການປະສານງານ ລະຫວ່າງອົງການປົກຄອງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ຍັງມີຂໍ້ຈຳກັດ.

ຍັງບໍ່ທັນຮູ້ແນ່ນອນວ່າ ລະບົບຄຸ້ມຄອງຂໍ້ມູນຂ່າວສານ MIS ຈະຖືກນຳໃຊ້ເພື່ອຈຸດປະສົງການຄຸ້ມຄອງຍຸດທະສາດຢ່າງດຽວ ຫຼື ຈະເປັນເຄື່ອງມືເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດແຜນງານຕ່າງໆ ທີ່ນອນຢູ່ໃນຍຸດທະສາດ. ນອກນັ້ນ ຍັງບໍ່ມີຄວາມແນ່ນອນວ່າ ຈະນຳໃຊ້ລະບົບຄຸ້ມຄອງຂໍ້ມູນຂ່າວສານໃນໄລຍະຍາວຕໍ່ໄປແນວໃດ. ລັດຖະບານມີແຜນທີ່ຈະພັດທະນາລະບົບ MIS ສຳລັບ ຄະນະກຳມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມ. ລະບົບ MIS ຈະຂຶ້ນກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ຈະເປັນສູນສັງລວມຂໍ້ມູນຂ່າວສານດ້ານການປົກປ້ອງສັງຄົມໃນທົ່ວປະເທດ ໂດຍສະເພາະແມ່ນຈາກຍຸດທະສາດປົກປ້ອງສັງຄົມແຫ່ງຊາດ. ຢ່າງໃດກໍ່ຕາມ, ກອງເລຂາ ແລະ ຄະນະກຳມາທິການ ຍັງມີຂໍ້ຈຳກັດດ້ານວິຊາການ ແລະ ແຫຼ່ງທຶນທີ່ນຳໃຊ້ໃນການບຳລຸງຮັກສາລະບົບດັ່ງກ່າວໃນໄລຍະຍາວ.

ລະບົບຕິດຕາມ ແລະ ປະເມີນຜົນ (M&E) ຍັງບໍ່ທັນຖືກຈັດຕັ້ງປະຕິບັດເຕັມສ່ວນ ນັບຕັ້ງແຕ່ເລີ່ມຈັດຕັ້ງປະຕິບັດ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ເຊິ່ງໄດ້ສົ່ງຜົນສະທ້ອນທີ່ຈະແຈ້ງຕໍ່ກັບທັງດ້ານຄວາມຮັບຜິດຊອບ ແລະ ການຮຽນຮູ້. ໃນຂະນະທີ່ມີການລາຍງານແບບຕໍ່ເນື່ອງໃນລະດັບແຜນງານ ແລະ ໂຄງການ ກໍຕາມ, ເຈດຈຳນົງຂອງຍຸດທະສາດ ແມ່ນເພື່ອເຮັດໃຫ້ລະບົບການລາຍງານລວມສູນ ແລະ ສ້າງກົນໄກການລາຍງານທົ່ວຂະແໜງການເພື່ອມາທົດແທນລະບົບທີ່ເຮັດແບບກະແຈກກະຈາຍ. ການລວບລວມຕົວຊີ້ບອກ ແລະ ຂໍ້ມູນຕ່າງໆພາຍໃຕ້ແຜນງານຕ່າງໆ ແມ່ນບໍ່ໄດ້ດຳເນີນການເປັນປົກກະຕິ ແລະ ເປັນລະບົບ. ບໍ່ມີຄວາມຈະແຈ້ງວ່າເປັນຫຍັງລະບົບຕິດຕາມປະເມີນຜົນຈຶ່ງບໍ່ໄດ້ເກີດຂຶ້ນຈິງຕາມທີ່ກຳນົດໄວ້. ເຫດຜົນສ່ວນໃຫຍ່ອາດຈະແມ່ນຍ້ອນພະນັກງານສ່ວນຫຼາຍມີວຽກປະຈຳເປັນຂອງຕົນເອງ ແລະ ຄະນະກຳມາທິການ ແລະ ກອງເລຂາຍັງຂາດຄວາມອາດສາມາດໃນການຄຸ້ມຄອງລະບົບຕິດຕາມປະເມີນຜົນ.

ການຈັດສັນງົບປະມານເພີ່ມເຕີມ ເປັນບາດກ້າວທີ່ຈຳເປັນໃນການຈັດຕັ້ງປະຕິບັດ ແລະ ການປະສານວຽກງານພາຍໃຕ້ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ. ການຈັດຕັ້ງປະຕິບັດຍຸດທະສາດ ຕ້ອງການແຜນລະດົມທຶນໄລຍະຍາວ. ເວົ້າສະເພາະ, ການຂະຫຍາຍການປົກປ້ອງສັງຄົມດັ່ງທີ່ໄດ້ກ່າວມາຂ້າງເທິງ ຈະປະກອບສ່ວນອັນສຳຄັນໃນການຫຼຸດຜ່ອນຄວາມທຸກຍາກ. ເຖິງຢ່າງໃດກໍຕາມ, ເພື່ອຈະບັນລຸໄດ້ ກໍຕ້ອງມີການຈັດສັນແຫຼ່ງທຶນເພີ່ມຕື່ມ ໃຫ້ແກ່ວຽກງານປົກປ້ອງສັງຄົມ ແບບຍືນຍົງໃນໄລຍະຍາວ. ຍຸດທະສາດໄດ້ ສະເໜີໃຫ້ເພີ່ມການລົງທຶນໃນວຽກປົກປ້ອງສັງຄົມ ເທື່ອລະກ້າວ ເພື່ອບໍ່ໃຫ້ເພີ່ມພາລະແບກຫາບຫຼາຍເກີນໄປຕໍ່ກັບງົບປະມານລັດ. ປະຈຸບັນ, ຂໍ້ກັງວົນຫຼັກແມ່ນ ການຂາດສະຖຽນລະພາບ ຂອງ ເສດຖະກິດມະຫາພາກ ເຊິ່ງເປັນໄພຂົ່ມຂູ່ຕໍ່ກັບ ມາດຕະຖານຊີວິດການເປັນຢູ່ ຂອງ ປະຊາຊົນລາວ ຍ້ອນບັນຫາໄພເງິນເຟີ້, ເສດຖະກິດທີ່ຖອຍ ແລະ ລະດັບການລົງທຶນໃນຂະແໜງສັງຄົມທີ່ຫຼຸດລົງ.

ນອກນັ້ນ, ລາຍຈ່າຍພາກລັດທຽບໃສ່ສ່ວນຮ້ອຍຂອງ GDP ຖືວ່າຢູ່ໃນລະດັບທີ່ຕ່ຳຫຼາຍ ຖ້າສົມທຽບໃສ່ມາດຕະຖານຂອງ ພາກພື້ນ ແລະ ລະດັບລາຍຮັບຂອງປະເທດ. ສະພາບນີ້ເກີດຂຶ້ນຍ້ອນຂໍ້ຈຳກັດໃນການລະດົມການເກັບລາຍຮັບພາຍໃນ ເຊິ່ງເຮັດໃຫ້ມີຂໍ້ຈຳກັດດ້ານງົບປະມານທີ່ຈະນຳໃຊ້ເພື່ອການລົງທຶນ. ເປັນສິ່ງທີ່ໜ້າເສຍດາຍ ທີ່ການຈັດສັນງົບປະມານ ເພື່ອການປົກປ້ອງສັງຄົມ ຍັງເປັນສັດສ່ວນທີ່ນ້ອຍ ພ້ອມທັງການລົງທຶນໃນຂະແໜງການສຶກສາ ແລະ ສາທາລະນະສຸກທີ່ຫຼຸດລົງ.

ການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ຕ້ອງເອື່ອຍອີງການລະດົມທຶນຈາກພາຍນອກເປັນສ່ວນໃຫຍ່ ເພື່ອອັດຊ່ອງວ່າງ ແລະ ເພື່ອບັນລຸເປົ້າໝາຍ ຂອງ ຍຸດທະສາດ ໂດຍສະເພາະແມ່ນໃນຂົງເຂດຂອງ ວຽກສັງຄົມສົງເຄາະ ແລະ ການພັດທະນາລະບົບປົກປ້ອງສັງຄົມ. ລາຍຈ່າຍການລົງທຶນ ດ້ານການປົກປ້ອງສັງຄົມ ສະທ້ອນໃຫ້ເຫັນໄດ້ ຈາກຮູບແບບການຈັດຕັ້ງປະຕິບັດແບບກະແຈກກະຈາຍ ລວມທັງການມີສ່ວນຮ່ວມຂອງ ພາກລັດ, ແຫຼ່ງທຶນ ແລະ ຄວາມຮັບຜິດຊອບ ຂອງ ອົງການຈັດຕັ້ງ. ດັ່ງນັ້ນ, ຈຶ່ງມີຄວາມຫຍຸ້ງຍາກໃນການຄິດໄລ່ຕົວເລກລາຍຈ່າຍການລົງທຶນໃນຂະແໜງສັງຄົມແບບຮອບດ້ານໃນປະຈຸບັນ.

ລະບົບປະກັນສຸຂະພາບ ເປັນບາດກ້າວທີ່ສຳຄັນ ເພື່ອບັນລຸເປົ້າໝາຍໃນການປົກຄຸມສຸຂະພາບທົ່ວປວງຊົນ ດ້ວຍການຫຼຸດຜ່ອນສິ່ງກີດກັ້ນ ທາງດ້ານການເງິນຕ່າງໆ ຕໍ່ການເຂົ້າເຖິງການບໍລິການປິ່ນປົວສຸຂະພາບ. ໄດ້ມີການຂະຫຍາຍອັດຕາປົກຄຸມໃນຂອບເຂດທົ່ວປະເທດ, ຍົກເວັ້ນນະຄອນຫຼວງວຽງຈັນ, ເຊິ່ງເປັນການ ຂະຫຍາຍການປົກຄຸມຢ່າງກວ້າງຂວາງ ນັບຕັ້ງແຕ່ສ້າງກອງທຶນນີ້ຂຶ້ນມາໃນປີ 2017, ກອງທຶນປະກັນສຸຂະພາບໄດ້ປະເຊີນໜ້າກັບບັນຫາການຂາດງົບປະມານ. ບັນຫາດັ່ງກ່າວ ໄດ້ສົ່ງຜົນກະທົບຕໍ່ກັບ ຄວາມສາມາດ ຂອງ ສະຖານທີ່ປິ່ນປົວສຸຂະພາບ ໃນການສະໜອງການບໍລິການທີ່ມີຄຸນນະພາບ ແລະ ການຕອບສະໜອງຄວາມຕ້ອງການຂອງຄົນເຈັບທີ່ນັບມື້ນັບເພີ່ມຂຶ້ນ.

# ທາງເລືອກເພື່ອພິຈາລະນາ

## ການຈັດຕັ້ງປະຕິບັດຢູ່ຂັ້ນສູນກາງ

- ກອງເລຂາ ແລະ ຄູ່ຮ່ວມພັດທະນາ ຄວນດຳເນີນການສຶກສາຕົ້ນທຶນຂອງເສົາຄ້ຳສະຫວັດດີການສັງຄົມ ແລະ ນຳໃຊ້ຜົນການສຶກສາດັ່ງກ່າວ ໃນການຈັດບູລິມະສິດຂອງໜ້າວຽກ ແລະ ການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ໄປພ້ອມໆກັບ ເອກະສານອື່ນໆ ທັງໝົດນີ້ກໍ່ເພື່ອຄວາມຍືນຍົງດ້ານການເງິນ ແລະ ການຈັດສັນແຫຼ່ງງົບປະມານພາຍໃນໃຫ້ໄປຕາມບູລິມະສິດເພື່ອໃຫ້ລະບົບປົກປ້ອງສັງຄົມໄດ້ຮັບການສະໜັບສະໜູນດ້ານການເງິນຢ່າງພຽງພໍ.

- ວາງແຜນ ແລະ ຕິດຕາມການຈັດຕັ້ງປະຕິບັດຍຸດທະສາດຢ່າງມີປະສິດທິຜົນ. ຈຳເປັນຕ້ອງພັດທະນາວົງຈອນການວາງແຜນແບບລວມໝູ່. ເພື່ອຮັບປະກັນການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແບບມີປະສິດທິພາບ ກໍຕ້ອງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຕົກລົງເຫັນດີເປັນເອກະພາບ ກ່ຽວກັບ ແຜນຈັດຕັ້ງປະຕິບັດ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ໂດຍລວມມີ ເປົ້າໝາຍ, ກອບເວລາ ແລະ ຜົນໄດ້ຮັບ ພ້ອມທັງກຳນົດພາກສ່ວນຮັບຜິດຊອບແຕ່ລະກິດຈະກຳລະອຽດ.

- ການປົກປ້ອງສັງຄົມເປັນວຽກປິ່ນອ້ອມ ໂດຍມີບັນດາກະຊວງເປັນຜູ້ເຮັດພາລະບົດບາດໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນງານ, ລັດຖະບານຄວນສຶກສາຄວາມເປັນໄປໄດ້ຕ່າງໆ ໂດຍຄວນວິເຄາະຂໍ້ດີ ແລະ ຂໍ້ເສຍໃນການນຳເອົາຄະນະກຳມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມໃຫ້ຂຶ້ນກັບຂັ້ນສູງກວ່າ ເຊັ່ນ ຂັ້ນສຳນັກງານນາຍົກ ຫຼື ກະຊວງການເງິນ. ທັງໝົດນີ້ກໍ່ເພື່ອໃຫ້ຂັ້ນເທິງເຫັນເຖິງຄວາມສຳຄັນ ແລະ ໃຫ້ບູລິມະສິດໃນການຕັດສິນໃຈຈັດສັນງົບປະມານໃຫ້ແກ່ວຽກງານປົກປ້ອງສັງຄົມ.

- ການມີສ່ວນຮ່ວມ ແລະ ການສະໜັບສະໜູນ ຂອງ ກອງເລຂາ ໃນກິດຈະກຳ ຂອງ ກຸ່ມເຮັດວຽກຂະແໜງການ (SWGs) ຫຼື ບັນດາຄະນະກຳມະການຍ່ອຍທີ່ປາກົດມີຢູ່ແລ້ວ ແມ່ນມີຄວາມສຳຄັນເພື່ອຄວາມສອດຄ່ອງທາງດ້ານນະໂຍບາຍ ແລະ ການປະສານງານ. ກອງເລຂາ ຄວນປະສານສົມທົບ ຢ່າງເປັນເຈົ້າການ ກັບກຸ່ມເຮັດວຽກຂະແໜງການ ແລະ ໃຫ້ຄຳແນະນຳ ແລະ ການຊ່ວຍເຫຼືອ ເພື່ອຮັບປະກັນຄວາມສອດຄ່ອງກັບນະໂຍບາຍ.

- ເພີ່ມທະວີການໂຄສະນາເຜີຍແຜ່ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ແລະ ບູລິມະສິດຕ່າງໆ ໃນຂັ້ນທ້ອງຖິ່ນ ແລະ ສືບຕໍ່ ຕິດຕາມການຈັດຕັ້ງປະຕິບັດ ແຜນດຳເນີນງານ ເພື່ອສາມາດເຫັນເຖິງບັນຫາສິ່ງທ້າທາຍ ຫຼື ສິ່ງກີດກັ້ນ ຕໍ່ການຈັດຕັ້ງປະຕິບັດກິດຈະກຳ.

### ການຈັດຕັ້ງປະຕິບັດຢູ່ຂັ້ນທ້ອງຖິ່ນ

- ສະເໜີໃຫ້ແຕ່ງຕັ້ງຜູ້ປະສານງານ ໃນການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດໃນຂັ້ນແຂວງ ແລະ ເມືອງ ໂດຍໃຫ້ກຳນົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຢ່າງຈະແຈ້ງ. ຜູ້ປະສານງານ ຕ້ອງມີຄວາມເຂົ້າໃຈຮອບດ້ານກ່ຽວກັບ ຍຸດທະສາດທັງໝົດ ແລະ ເປັນຈຸດເຊື່ອມຕໍ່ກັບກອງເລຂາຂັ້ນສູນກາງ ຫຼື ກຸ່ມເຮັດວຽກຂະແໜງການ ຫຼື ຄະນະກຳມະການຍ່ອຍຕ່າງໆ.

- ເພີ່ມຄວາມຮັບຮູ້ ກ່ຽວກັບ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ໃນຂັ້ນເມືອງ ແລະ ພະຍາຍາມເຊື່ອມສານການນຳໃຊ້ບູລິມະສິດຍຸດທະສາດ ເຂົ້າໃນການວາງແຜນ. ຂໍ້ສະເໜີດ້ານເທິງ ອາດແກ້ໄຂໄດ້ລະດັບໃດໜຶ່ງ ແຕ່ຕ້ອງມີມາດຕະການເພີ່ມຕື່ມ ເພື່ອສົ່ງເສີມການມີສ່ວນຮ່ວມ ແລະ ເຫັນດີເຫັນພ້ອມກັບຍຸດທະສາດໃນຕໍ່ໜ້າ. ວິທີໜຶ່ງເພື່ອສົ່ງເສີມແມ່ນການໂຄສະນາເຜີຍແຜ່ ໂດຍໃຊ້ບົດສັງລວມເນື້ອໃນຍຸດທະສາດ ສຳລັບຂັ້ນທ້ອງຖິ່ນ.

- ກອງເລຂາ ແລະ ຄູ່ຮ່ວມພັດທະນາ ສືບຕໍ່ສະໜັບສະໜູນການສ້າງຂີດຄວາມສາມາດ ໃນການປົກປ້ອງສັງຄົມ ດ້ວຍການນຳໃຊ້ ຊຸດເຄື່ອງມື ເພື່ອສ້າງຄູຝຶກ ຢູ່ຂັ້ນທ້ອງຖິ່ນແບບຕັ້ງໜ້າ.

- ຄູ່ຮ່ວມພັດທະນາ ຄວນໃຫ້ການສະໜັບສະໜູນ ການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດໂດຍເລີ່ມຈາກການຈັດສັນງົບປະມານ ແລະ ການຊ່ວຍເຫຼືອດ້ານວິຊາການໃຫ້ໄປຕາມລວງດຽວກັນ (ເພື່ອບໍ່ໃຫ້ມີຊ່ອງວ່າງ) ແລະ ສ້າງເວທີເພື່ອສົ່ງເສີມການວາງແຜນວຽກ, ແຜນງົບປະມານ ແລະ ການເຈລະຈາຕໍ່ລອງຮ່ວມກັນ.

### ກອບຕິດຕາມ ແລະ ປະເມີນຜົນ, ແລະ ການຈັດຕັ້ງປະຕິບັດ

- ເພື່ອແກ້ໄຂສິ່ງທ້າທາຍ ກໍຄື ຂໍ້ຈຳກັດໃນການໃຊ້ເຄື່ອງມືຕິດຕາມ ແລະ ປະເມີນຜົນນັ້ນ, ຕ້ອງຈັດຕັ້ງປະຕິບັດບັນດາມາດຕະການ ແລະ ຄຳແນະນຳ ຈາກການທົບທວນ ກອບຕິດຕາມປະເມີນຜົນ.

- ເພື່ອຍົກລະດັບການຮຽນຮູ້ ແລະ ຄວາມຮັບຜິດຊອບ, ຄວນສ້າງໃຫ້ມີບົດລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຍຸດທະສາດ ຫົກເດືອນຕົ້ນປີ/ທ້າຍປີ ໂດຍນຳໃຊ້ຂໍ້ມູນຈາກກອບຕິດຕາມປະເມີນຜົນ. ບົດລາຍງານທີ່ກ່າວມາແມ່ນເຄື່ອງມືທີ່ສຳຄັນ ໃນການປະເມີນການຈັດຕັ້ງປະຕິບັດຍຸດທະສາດ ແລະ ເປັນຕົວບົ່ງຊີ້ໃຫ້ເຫັນວ່າຂົງເຂດໃດຕ້ອງການປັບປຸງຕື່ມ. ຖ້າປະຕິບັດຕາມຕາຕະລາງການລາຍງານ, ບັນດາພາກສ່ວນກ່ຽວຂ້ອງກໍສາມາດເຂົ້າເຖິງ ຂໍ້ມູນລ່າສຸດ ກ່ຽວກັບ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນງານເພື່ອເປັນພື້ນຖານໃນການຕັດສິນໃຈ ແລະ ປັບປຸງວິທີການຈັດຕັ້ງປະຕິບັດໃຫ້ດີຂຶ້ນ.

- ບັນດາອານຸກຳມະການ ຫຼື ກອງເລຂາ ຕ້ອງຄົ້ນຄວ້າຕົວຊີ້ບອກທີ່ມີຄຸນນະພາບ ເພື່ອນຳໃຊ້ໃນການຕິດຕາມຄວາມຄືບໜ້າໃນການບັນລຸເປົ້າໝາຍ, ເຊື່ອມສານເຂົ້າໃນກອບຕິດຕາມປະເມີນຜົນ, ກຳນົດຂະບວນການເກັບກຳຂໍ້ມູນທີ່ເປັນປະຈຳ, ແລະ ຍົກລະດັບຄຸນນະພາບການນຳໃຊ້ຂໍ້ມູນປົກປ້ອງສັງຄົມ ເພື່ອການວາງແຜນວຽກງານຕົວຈິງ.

- ແຕ່ງຕັ້ງ ຜູ້ປະສານງານ ຂອງ ແຕ່ລະກະຊວງ ແລະ ກົມກອງກ່ຽວຂ້ອງ ເພື່ອເພີ່ມທະວີການຕິດຕາມ ເປັນປະຈຳ ສຳລັບແຕ່ລະຂົງເຂດໜ້າວຽກວິຊາການ.

- ປັບປຸງແບບຟອມລາຍງານຂໍ້ມູນຂ່າວສານ ແລະ ຕົວຊີ້ບອກທີ່ກ່ຽວຂ້ອງ ຂອງລະບົບຄຸ້ມຄອງຂໍ້ມູນຂ່າວສານ ເພື່ອຮັບປະກັນຄວາມສອດຄ່ອງກັບ ກັບກອບຕິດຕາມປະເມີນຜົນ ແລະ ປະສານສົມທົບ ກັບ ພະແນກສະຖິຕິ ຂອງກະຊວງ ຮສສ ເພື່ອຈັດການຝຶກອົບຮົມຮອບດ້ານຄືນໃໝ່.

### ການລົງທຶນໃສ່ວຽກງານປົກປ້ອງສັງຄົມ

- ເພື່ອກ້າວຜ່ານອຸປະສັກ ແລະ ຮັບປະກັນການລົງທຶນໃສ່ວຽກງານປົກປ້ອງສັງຄົມ ແບບຍືນຍົງ ແລະ ຍາວນານ, ລັດຖະບານ, ກໍຄື ກະຊວງ ຮສສ, ຄວນພິຈາລະນາເຮັດວຽກຮ່ວມມື ກັບຄູ່ຮ່ວມພັດທະນາ ໃນການລະດົມທຶນ ເພື່ອການພັດທະນາລະບົບປົກປ້ອງສັງຄົມໃນໄລຍະຍາວ. ວິທີການແກ້ໄຂ ທີ່ເປັນທາງເລືອກໜຶ່ງ ແມ່ນການສ້າງ ກອງທຶນສະຫວັດດີການສັງຄົມແບບລວມສູນ ແລະ ການເຕົ້າໂຮມທຶນເຂົ້າເປັນກອງທຶນດຽວ. ຖ້າສ້າງຕັ້ງກອງທຶນຂຶ້ນມາ ກໍສາມາດນຳໃຊ້ທຶນຮອນ ຂອງຜູ້ໃຫ້ທຶນແບບເຊື່ອມສານ ເພື່ອຫຼີກລ່ຽງການເຮັດວຽກແບບທັບຊ້ອນ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍດ້ານບໍລິຫານ ພ້ອມທັງຮັບປະກັນຄວາມສອດຄ່ອງຂອງແຜນງານກັບບູລິມະສິດລະດັບຊາດ.

- ການຈັດຕັ້ງປະຕິບັດ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດປະເຊີນໜ້າກັບສິ່ງທ້າທາຍຫຼາຍດ້ານ ຍ້ອນຂໍ້ຈຳກັດດ້ານງົບປະມານ, ການລົງທຶນ ແລະ ຄວາມອາດສາມາດ ຂອງພາກລັດ. ເພື່ອແກ້ໄຂສິ່ງທ້າທາຍເຫຼົ່ານີ້, ພາກລັດຕ້ອງມີສ່ວນຮ່ວມຢ່າງຕັ້ງໜ້າ ໃນການອອກແບບ ແລະ ພັດທະນາລະບົບປົກປ້ອງສັງຄົມ. ຍຸດທະສາດ ຄວນຖືກເຊື່ອມສານເຂົ້າໃນແຜນດຳເນີນງານຂອງບັນດາຂະແໜງການກ່ຽວຂ້ອງ ແລະ ມີການສື່ສານແບບມີປະສິດທິຜົນ ເພື່ອໃຫ້ທ້ອງຖິ່ນໂດຍສະເພາະແມ່ນຂັ້ນແຂວງ ແລະ ເມືອງຮັບຮູ້ ແລະ ເຂົ້າໃຈຈະແຈ້ງ. ງົບປະມານຂອງພາກລັດ ຄວນເປັນແຫຼ່ງທຶນຫຼັກໂດຍໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫຼືອ ຈາກຄູ່ຮ່ວມພັດທະນາ ໃນການກຳນົດກົນໄກທີ່ເໝາະສົມ ເພື່ອຈັດຕັ້ງປະຕິບັດຍຸດທະສາດ.

- ການເກັບກຳຂໍ້ມູນ ກ່ຽວກັບ ການຊ່ວຍເຫຼືອ ຂອງ ຄູ່ຮ່ວມພັດທະນາໃນການຈັດຕັ້ງປະຕິບັດ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ແບບເປັນລະບົບມີຄວາມສຳຄັນເປັນຢ່າງຍິ່ງ. ຂະບວນການດັ່ງກ່າວ ສາມາດເຮັດໃຫ້ມີຄວາມເຂົ້າໃຈແບບ

ກະຈ່າງແຈ້ງ ກ່ຽວກັບ ການຈັດສັນຊັບພະຍາກອນດ້ານການເງິນ ເຂົ້າໃນໜ້າວຽກການປົກປ້ອງສັງຄົມຕ່າງໆ ແລະ ອໍານວຍຄວາມສະດວກໃຫ້ແກ່ການວາງແຜນ ແລະ ປະສານງານ. ຂະບວນການນີ້ສາມາດຊ່ວຍໃນການຊອກຮູ້ບ່ອນມີຊ່ອງວ່າງ ຫຼື ການລະດົມທຶນແບບທັບຊ້ອນ ເພື່ອຮັບປະກັນການຈັດສັນ ແລະ ນໍາໃຊ້ຊັບພະຍາກອນ ສະໜູນວຽກປົກປ້ອງສັງຄົມແບບມີປະສິດທິພາບ ແລະ ປະສິດທິຜົນ.

- ໃນລະດັບຊາດ ກໍ່ມີຄວາມຈໍາເປັນໃນການພັດທະນາສາລະບານ ບັນຊີແຫ່ງລັດ (COA) ທີ່ສອດຄ່ອງກັບມາດຕະຖານສາກົນ, ລະບຽບການ ຂອງ ລັດຖະບານ ແລະ ຍຸດທະສາດ ປົກປ້ອງສັງຄົມແຫ່ງຊາດ ເພື່ອເອື້ອອໍານວຍໃຫ້ແກ່ການຕິດຕາມ ແລະ ລາຍງານ ລາຍຈ່າຍການລົງທຶນ ດ້ານປົກປ້ອງສັງຄົມ ແບບຊັດເຈນຖືກຕ້ອງ. ນອກນັ້ນ, ກໍມີຄວາມສໍາຄັນ ທີ່ ສາລະບານບັນຊີ ຕ້ອງສອດຄ່ອງກັບມາດຕະຖານສາກົນ ແລະ ຊອກຫາວິທີເພື່ອຕິດຕາມ ແລະ ລາຍງານລາຍຈ່າຍທີ່ຕິດພັນກັບວຽກສັງຄົມສົງເຄາະ. ດ້ວຍການນໍາໃຊ້ວິທີການນີ້, ສປປ ລາວ ສາມາດຮັບປະກັນຄວາມຄືບໜ້າໃນການພັດທະນາລະບົບປົກປ້ອງສັງຄົມທີ່ມີປະສິດທິຜົນ ແລະ ຍືນຍົງ ທີ່ປະກອບສ່ວນໃຫ້ແກ່ການຫຼຸດຜ່ອນຄວາມບໍ່ສະເໝີພາບ ແລະ ສົ່ງເສີມການພັດທະນາແບບທົ່ວເຖິງ.

# ພາກສະເໜີ

**ນັບຕັ້ງແຕ່ປີ 2016, ອົງການແຮງງານສາກົນ ໄດ້ໃຫ້ການຊ່ວຍເຫຼືອດ້ານວິຊາການ ໃຫ້ແກ່ ລັດຖະບານ ແຫ່ງ ສປປ ລາວ ເພື່ອການສ້າງ, ຮັບຮອງ ແລະ ຈັດຕັ້ງປະຕິບັດ ຍຸດທະສາດ ປົກປ້ອງສັງຄົມ ແຫ່ງ ຊາດ - ວິໄສທັດຮອດປີ 2030, ແລະ ເປົ້າໝາຍ 2025.** ໃນສ່ວນໜຶ່ງ ຂອງຂະບວນການ, ອົງການແຮງງານສາກົນ ໄດ້ໃຫ້ຄຳແນະນຳດ້ານນະໂຍບາຍ ໃຫ້ແກ່ລັດຖະບານ ແລະ ຄູ່ຮ່ວມງານພາກສັງຄົມ, ໄດ້ດຳເນີນການສຶກສາຕົ້ນທຶນອຸດໜູນ ປົກປ້ອງສັງຄົມ ແລະ ສ້າງແຜນຈັດຕັ້ງປະຕິບັດ ແລະ ກອບຕິດຕາມປະເມີນຜົນ ຂອງຍຸດທະສາດປົກປ້ອງສັງຄົມແຫ່ງຊາດ. ມີໂຄງການຮ່ວມມືຂອງ ສປຊ ບໍ່ປະຖິ້ມໃຜຢູ່ຂ້າງຫຼັງ: ສ້າງພື້ນຖານໃຫ້ແກ່ລະບົບປົກປ້ອງສັງຄົມຢູ່ ສປປ ລາວ ທີ່ສະໜັບສະໜູນ ລັດຖະບານ ໃນການປະສານງານ, ຈັດຕັ້ງປະຕິບັດ, ບໍລິຫານຄຸ້ມຄອງ ແລະ ຕິດຕາມ ຍຸດທະສາດ ຕັ້ງແຕ່ປີ 2020 ຫາ 2022.

**ຄະນະກຳມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມ ໄດ້ຖືກສ້າງຕັ້ງຂຶ້ນໃນວັນທີ 9 ທັນວາ 2021 ພາຍໃຕ້ດຳລັດນາຍົກລັດຖະມົນຕີ ເລກທີ 655/ນຍ.** ຄະນະກຳມາທິການ ແລະ ກອງເລຂາ ດັ່ງກ່າວ ມີໜ້າທີ່ຮັບຜິດຊອບໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ. ກອງເລຂາ ຄະນະກຳມາທິການ ແມ່ນຖືກສ້າງຕັ້ງຂຶ້ນເພື່ອຈຸດປະສົງໃນການປະສານງານກັບບັນດາພາກສ່ວນທີ່ເປັນຜູ້ຈັດຕັ້ງປະຕິບັດ ແລະ ຮັບປະກັນການເກັບກຳຂໍ້ມູນແບບທັນເວລາ ພ້ອມທັງການບັນທຶກ ແລະ ແລກປ່ຽນຂໍ້ມູນຂ່າວສານ. ກອງເລຂາ ມີພາລະບົດບາດໃນການຈັດກອງປະຊຸມ ຕາມແຕ່ລະໄລຍະ ເພື່ອປຶກສາຫາລື ແລະ ທົບທວນຂໍ້ມູນຕົວຊີ້ບອກ ແລະ ມີໜ້າທີ່ຮັບຜິດຊອບອື່ນໆ. ຕົວຊີ້ບອກທີ່ໄດ້ກຳນົດໄວ້ໃນກອບຕິດຕາມປະເມີນຜົນແມ່ນເພື່ອຈຸດປະສົງໃນການຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໜ້າວຽກ ແລະ ກິດຈະກຳປົກປ້ອງສັງຄົມ ແບບເປັນປະຈຳ.

**ຄະນະກຳມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມ ພ້ອມທັງຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນຈະຈັດກອງປະຊຸມປະຈຳປີເພື່ອປະເມີນຄວາມຄືບໜ້າ ໃນການບັນລຸເປົ້າໝາຍຂອງຂະແໜງການ ແລະ ແຜນຕ່າງໆທີ່ໄດ້ຕົກລົງຮ່ວມກັນ.** ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ຈະຖືກປະເມີນ ຕາມກົນໄກການທົບທວນກາງສະໄໝ ໃນປີ 2023 ເພື່ອເບິ່ງຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດ ໃນໄລຍະທີ I, ຜົນກະທົບຂອງກິດຈະກຳທີ່ຈັດຕັ້ງປະຕິບັດແລ້ວ ພ້ອມທັງ ການປັບປຸງ ແລະ ແກ້ໄຂຂໍ້ຄົງຄ້າງ ເພື່ອຍົກລະດັບການດຳເນີນງານ ແລະ ຜົນໄດ້ຮັບຈົນຮອດປີ 2025. ບົດລາຍງານນີ້ແມ່ນໄດ້ນຳສະເໜີຜົນໄດ້ຮັບຂອງການທົບທວນກາງສະໄໝຂອງຍຸດທະສາດປົກປ້ອງສັງຄົມແຫ່ງຊາດ.

## 1.1. ປະຫວັດຄວາມເປັນມາ

**ການມີສ່ວນຮ່ວມຂອງທຸກພາກສ່ວນ ໃນສັງຄົມ ເປັນສິ່ງທີ່ສຳຄັນ ເພື່ອສະໜັບສະໜູນການຂະຫຍາຍຕົວ ຂອງ ເສດຖະກິດ ພ້ອມທັງຫຼຸດຜ່ອນຄວາມບໍ່ສະເໝີພາບ ແລະ ຄວາມທຸກຍາກໄປຄຽງຄູ່ກັນ.** ຄວາມແຕກໂຕນ ດ້ານລາຍຮັບພ້ອມທັງການແຈກຢາຍຜົນປະໂຫຍດຈາກການພັດທະນາເສດຖະກິດ ໃນ ສປປ ລາວ ຍັງເຫັນວ່າບໍ່ມີຄວາມສະເໝີພາບ. ບາງກຸ່ມປະຊາກອນ ມີຄວາມບອບບາງຫຼາຍກວ່າ ເປັນຕົ້ນແມ່ນ ຄອບຄົວທຸກຍາກທີ່ມີເດັກນ້ອຍ, ຜູ້ພິການ, ຜູ້ສູງອາຍຸປ່ຽວພອຍ ແລະ ກຸ່ມຄົນຊົນເຜົ່າ.

**ລັດຖະບານແຫ່ງ ສປປ ລາວ ຮັບຮູ້ເຖິງຄວາມສຳຄັນຂອງການປະກອບສ່ວນຂອງການປົກປ້ອງສັງຄົມເຂົ້າສູ່ການຫລຸດຜ່ອນຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບພ້ອມທັງການສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ແລະ ຄວາມສະມັກຄີປອງດອງແບບຍືນຍົງ.** ລັດຖະບານ ມີຄວາມໝາຍໝັ້ນໃນການບັນລຸການປົກຄຸມປົກປ້ອງສັງຄົມທົ່ວປວງຊົນ ໂດຍອີງໃສ່ຊັບພະຍາກອນທີ່ມີ ແລະ ສະພາບເງື່ອນໄຂດ້ານເສດຖະກິດ-ສັງຄົມ ຂອງປະເທດ ຄຽງຄູ່ກັບການສ້າງພື້ນຖານປົກປ້ອງສັງຄົມທີ່ເປັນສິ່ງຕ້ອງການ ເພື່ອປົກປ້ອງປະຊາຊົນລາວທັງໝົດ ຈາກວິກິດການດ້ານເສດຖະກິດ-ສັງຄົມ, ໄພພິບັດທຳມະຊາດ ແລະ ຄວາມສ່ຽງດ້ານອື່ນໆ.

**ຍຸດທະສາດປົກປ້ອງສັງຄົມແຫ່ງຊາດມີຈຸດປະສົງເພີ່ມທະວີ ແລະ ຕໍ່ຍອດຈາກການຈັດຕັ້ງປະຕິບັດຄວາມໝາຍໝັ້ນຂອງ ລັດຖະບານແຫ່ງ ສປປ ລາວ ຕໍ່ກັບສາກົນ ແລະ ເປົ້າໝາຍລະດັບຊາດ.** ການຂະຫຍາຍລະບົບປົກປ້ອງສັງຄົມ ແມ່ນຕ້ອງປະຕິບັດຕາມມາດຖານສາກົນ ແລະ ພາກພື້ນເຊັ່ນ: ສົນທິສັນຍາ ວ່າດ້ວຍ ສິດທິມະນຸດ; ສົນທິສັນຍາສາກົນ ວ່າດ້ວຍສິດທິດ້ານເສດຖະກິດ, ສັງຄົມ ແລະ ວັດທະນາທຳ; ສົນທິສັນຍາສາກົນວ່າດ້ວຍມາດຕະຖານການປະກັນສັງຄົມຂັ້ນຕ່ຳ (No.102); ຂໍ້ແນະນຳ ກ່ຽວກັບ ພື້ນຖານການປົກປ້ອງສັງຄົມ (No. 202); ຖະແຫຼງການອາຊຽນ ວ່າດ້ວຍການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປົກປ້ອງສັງຄົມ; ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs). ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ຮັບຮູ້ເຖິງຄວາມສຳຄັນ ແລະ ກ່ຽວຂ້ອງກັບເປົ້າໝາຍພັດທະນາແບບຍືນຍົງ ເນື່ອງຈາກວ່າໄດ້ເຊື່ອມສານເຂົ້າໃນເປົ້າໝາຍ, ຈຸດປະສົງ ແລະ ກິດຈະກຳ ພ້ອມທັງເປັນມາດຕະຖານສົມທຽບ ສຳລັບການຕິດຕາມ ແລະ ປະເມີນຜົນສຳເລັດ ຂອງ ການຈັດຕັ້ງປະຕິບັດຍຸດທະສາດ.

**ເປົ້າໝາຍ ຂອງ ຍຸດທະສາດ ແມ່ນເພື່ອສົ່ງເສີມ, ຂະຫຍາຍ ແລະ ປັບປຸງການຈັດຕັ້ງປະຕິບັດນະໂຍບາຍປົກປ້ອງສັງຄົມ ແລະ ປະກອບສ່ວນໃຫ້ແກ່ການພັດທະນາຕົ້ນທຶນມະນຸດ ຢູ່ ສປປ ລາວ,**

**ພ້ອມທັງປະກອບສ່ວນຕໍ່ການບັນລຸເປົ້າໝາຍ ແລະ ຈຸດປະສົງຂອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາຂະແໜງການຕ່າງໆທີ່ກ່ຽວຂ້ອງ.** ເພື່ອການບັນລຸເປົ້າໝາຍໃຫ້ໄດ້ຕາມທີ່ກ່າວມານັ້ນ, ໄດ້ກຳນົດວິໄສທັດຈົນຮອດ 2030 ແລະ ກຳນົດເປົ້າໝາຍ, ຈຸດປະສົງ ແລະ ກິດຈະກຳຕ່າງໆ ເພື່ອພັດທະນາລະບົບປົກປ້ອງສັງຄົມຮອດປີ 2025. ສຳລັບການພັດທະນາລະບົບປົກປ້ອງສັງຄົມແລ້ວ, ຍຸດທະສາດປົກປ້ອງສັງຄົມແຫ່ງຊາດໄດ້ປະກອບສ່ວນຕໍ່:

- ການແຈກຢາຍຜົນໄດ້ຮັບຈາກການພັດທະນາເສດຖະກິດຄືນໃໝ່ລະຫວ່າງບັນດາກຸ່ມຕ່າງໆໃນສັງຄົມ;
- ເພີ່ມທະວີຄວາມສາມັກຄີປອງດອງ;
- ຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ;
- ການຂະຫຍາຍຕົວຂອງເສດຖະກິດແບບຮອບດ້ານ ແລະ ຍືນຍົງສຳລັບທຸກຄົນ.

**ລັດຖະບານມີພັນທະຄວາມໝາຍໝັ້ນໃນການບັນລຸການປົກປ້ອງສັງຄົມທົ່ວປວງຊົນ.** ອີງຕາມຊັບພະຍາກອນທີ່ມີຢູ່ ແລະ ສະພາບເງື່ອນໄຂດ້ານເສດຖະກິດ ແລະ ສັງຄົມ ຂອງ ປະເທດ, ລັດຖະບານ ພະຍາຍາມ ສ້າງພື້ນຖານການປົກປ້ອງສັງຄົມ ໃຫ້ແກ່ປະຊາຊົນທຸກຊັ້ນຄົນ ເພື່ອປ້ອງກັນຈາກວິກິດການດ້ານເສດຖະກິດ-ສັງຄົມ, ໄພພິບັດທຳມະຊາດ ແລະ ໄພພິບັດທີ່ມະນຸດເປັນຜູ້ສ້າງຂຶ້ນມາ, ແລະ ຄວາມສ່ຽງອື່ນໆ ທີ່ອາດເຮັດໃຫ້ຄຸນນະພາບຊີວິດການເປັນຢູ່ຕົກຕໍ່າ ໃນຕະຫຼອດຮອບວຽນຂອງການດຳລົງຊີວິດ.

**ການຈັດຕັ້ງປະຕິບັດການປົກປ້ອງສັງຄົມຢູ່ ສປປ ລາວ ມີເປົ້າໝາຍເພື່ອການບັນລຸ ສາມ ເສົາຄ້ຳ ກໍຄື:**

**1) ການປະກັນສຸຂະພາບ:** ກອງທຶນປະກັນສຸຂະພາບແຫ່ງຊາດ ໄດ້ຖືກສ້າງຂຶ້ນໃນປີ 2019 ໂດຍຜ່ານການເຕົ້າໂຮມບັນດາກອງທຶນຕ່າງໆ ທີ່ດຳເນີນງານແບບກະແຈກກະຈາຍມາເປັນກອງທຶນດຽວກັນ, ປະຈຸບັນສາມາດປົກຄຸມໄດ້ 94.5 ສ່ວນຮ້ອຍຂອງປະຊາຊົນທັງໝົດໃນທົ່ວປະເທດ. ສຳລັບປະຊາຊົນ ທີ່ຢູ່ນອກ ນະຄອນຫຼວງວຽງຈັນແມ່ນມີສິດໄດ້ຮັບອຸດໜູນການປິ່ນປົວສຸຂະພາບ ທີ່ຈຳເປັນພື້ນຖານ ໃນນັ້ນລວມມີການນອນໂຮງໝໍ ແລະ ການບໍລິການຂັ້ນໜຶ່ງ ແລະ ຂັ້ນສອງສຳລັບ ICU ເຊິ່ງຕ້ອງໄດ້ຈ່າຍຮ່ວມໃນອັດຕາທີ່ຕໍ່າ. ສະມາຊິກປະກັນສັງຄົມ ພ້ອມທັງແມ່ຍິງຖືພາ, ເດັກນ້ອຍອາຍຸ 5 ປີລົງມາ, ຄົນເຈັບທີ່ທຸກຍາກ ແມ່ນຖືກຍົກເວັ້ນຈາກການຈ່າຍຮ່ວມ. ກອງທຶນປະກັນສຸຂະພາບ ຍັງບໍ່ທັນໄດ້ຂະຫຍາຍໄປສູ່ນະຄອນຫຼວງວຽງຈັນເທື່ອ ແຕ່ມີກອງທຶນສະເພາະສຳລັບກຸ່ມທີ່ດ້ອຍໂອກາດ ເຊັ່ນ: ກອງທຶນປະກັນສຸຂະພາບຊຸມຊົນ (CBHI), ກອງທຶນປະກັນສຸຂະພາບ ສຳລັບຜູ້ທຸກຍາກ (HEFs), ແລະ ບຸກຄົນທີສາມທີ່ສະໜອງໂອກາດການເຂົ້າເຖິງການບໍລິການປິ່ນປົວສຸຂະພາບ ໃຫ້ແກ່ຜູ້ທຸກຍາກແບບບໍ່ເສຍເງິນ.

**2) ການປະກັນສັງຄົມ:** ກອງທຶນປະກັນສັງຄົມ ແຫ່ງຊາດແມ່ນ ອົງການປະກັນສັງຄົມແຫ່ງຊາດ (ອປຊ) ເປັນຜູ້ຈັດຕັ້ງປະຕິບັດ ແລະ ກວມເອົາພະນັກງານ-ລັດຖະກອນສ່ວນໃຫຍ່, ພະນັກງານເອກະຊົນ ຈຳນວນໜຶ່ງ ແລະ ຜູ້ປະກອບອາຊີບອິດສະຫຼະ. ກອງທຶນປະກັນສັງຄົມ ເປັນພາກບັງຄັບສຳລັບແຮງງານໃນຫົວໜ່ວຍວິສາຫະກິດ ແລະ ພະນັກງານລັດຖະກອນ ແຕ່ສຳລັບຜູ້ປະກອບອາຊີບດ້ວຍຕົນເອງ ແມ່ນພາກສະໝັກໃຈ. ກອງທຶນປະກັນສັງຄົມສະໜອງອຸດໜູນດັ່ງຕໍ່ໄປນີ້: ອຸດໜູນບຳນານ, ອຸດໜູນສະມາຊິກຄອບຄົວ ແລະ ເສຍຊີວິດ, ອຸດໜູນປະກັນສຸຂະພາບ, ອຸດໜູນປ່ວຍການ, ອຸດໜູນອຸປະຕິເຫດແຮງງານ ແລະ ພະຍາດອາຊີບ, ອຸດໜູນເສຍກຳລັງແຮງງານ, ອຸດໜູນເກີດລູກ, ແລະ ອຸດໜູນວ່າງງານ.

**3) ສະຫວັດດີການສັງຄົມ:** ລະບົບສະຫວັດດີການສັງຄົມ ຢູ່ ສປປ ລາວ ຖືກອອກແບບເພື່ອໃຫ້ອຸດໜູນ ແລະ ການບໍລິການຫຼາຍດ້ານ ແຕ່ການຈັດຕັ້ງປະຕິບັດຕົວຈິງຍັງມີຂໍ້ຈຳກັດ ແລະ ມີລັກສະນະບໍ່ລວມສູນ. ໃນນີ້, ປະກອບມີ:

- ໃຫ້ການສຶກສາແກ່ເດັກນ້ອຍທຸກຄົນ ແບບບໍ່ມີຄ່າໃຊ້ຈ່າຍ ໂດຍຜ່ານການສະໜອງທຶນບໍລິຫານໂຮງຮຽນເພື່ອລົບລ້າງການເກັບເງິນຈາກນັກຮຽນ;
- ໃຫ້ທຶນການສຶກສາແກ່ເດັກນ້ອຍຊັ້ນມັດທະຍົມທີ່ມາຈາກຄອບຄົວທີ່ທຸກຍາກ;
- ໂຄງການອາຫານທ່ຽງສຳລັບເດັກນ້ອຍ ຊັ້ນປະຖົມ ແລະ ມັດຖະຍົມຢູ່ເມືອງທີ່ທຸກຍາກ;
- ສົ່ງເສີມ ແລະ ໃຫ້ທຶນຝຶກອົບຮົມວິຊາຊີບ ແລະ ອາຊີວະສຶກສາ (TVET) ໃຫ້ແກ່ນັກສຶກສາ ຈາກຄອບຄົວທີ່ທຸກຍາກ ແລະ ດ້ອຍໂອກາດ;
- ປັບປຸງຊີວິດການເປັນຢູ່ ແລະ ການເຂົ້າເຖິງການບໍລິການຂັ້ນພື້ນຖານ ຜ່ານການສ້າງຕັ້ງກຸ່ມຮ່ວມມືການຜະລິດ;
- ໃຫ້ເງິນອຸດໜູນເດັກນ້ອຍສຳລັບຄອບຄົວທີ່ທຸກຍາກ;
- ໃຫ້ການຊ່ວຍເຫຼືອພິເສດແກ່ກຸ່ມຄົນທີ່ມີຄວາມບອບບາງເຊັ່ນ: ເດັກນ້ອຍ, ຜູ້ພິການ ແລະ ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ.

ແຫຼ່ງທຶນໃນການຈັດຕັ້ງປະຕິບັດສ່ວນໃຫຍ່ ແມ່ນມາຈາກອົງການຈັດຕັ້ງສາກົນ, ອົງການ NGOs ແລະ ຜູ້ໃຫ້ທຶນພາຍນອກ.

## 1.2. ຈຸດປະສົງ ແລະ ຂອບເຂດ ຂອງ ການປະເມີນຜົນ

**ຈຸດປະສົງຫຼັກຂອງການທົບທວນກາງສະໄໝແມ່ນເພື່ອປະເມີນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດຮອດໄລຍະປະຈຸບັນ (ໄລຍະທີ I) ແລະ ໂຄງສ້າງການຄຸ້ມຄອງບໍລິຫານເຊິ່ງຈະເປັນພື້ນຖານໃຫ້ແກ່ການປັບປຸງຕາມຄວາມຈໍາເປັນສໍາລັບໄລຍະທີສອງ.** ການປະເມີນຄັ້ງນີ້ ຈະໃຫ້ຂໍ້ມູນ ເພື່ອກໍານົດທິດທາງຍຸດທະສາດສໍາລັບໄລຍະການຈັດຕັ້ງປະຕິບັດຕໍ່ໄປ ພ້ອມທັງເປັນພື້ນຖານໃຫ້ແກ່ຄູ່ຮ່ວມພັດທະນາ ໃນການພິຈາລະນາການຊ່ວຍເຫຼືອດ້ານການປົກປ້ອງສັງຄົມ ໃຫ້ແກ່ລັດຖະບານແຫ່ງ ສປປ ລາວ. ການທົບທວນຈະສົມທຽບການຈັດຕັ້ງປະຕິບັດຕົວຈິງຕໍ່ກັບຜົນໄດ້ຮັບຄາດຄະເນ ໂດຍນໍາໃຊ້ແຜນຈັດຕັ້ງປະຕິບັດຂອງຍຸດທະສາດປົກປ້ອງສັງຄົມແຫ່ງຊາດເປັນເຄື່ອງມື.

**ຈຸດປະສົງສະເພາະຂອງການທົບທວນກາງສະໄໝມີດັ່ງລຸ່ມນີ້:**

- ປະເມີນຄວາມຄືບໜ້າ ໃນການບັນລຸບັນດາຄາດໝາຍ ແລະ ຕົວຊີ້ບອກຕາມແຜນເບື້ອງຕົ້ນຂອງ ໄລຍະທໍາອິດຂອງ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ແລະ ຜົນໄດ້ຮັບເປົ້າໝາຍ ແລະ ຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດໃນແຕ່ລະຂະແໜງການພາກລັດ ພ້ອມທັງສະເໜີຄໍາແນະນໍາ ແລະ ມາດຕະການເພື່ອປັບປຸງ;

- ກໍານົດສິ່ງກີດກັ້ນຕົ້ນຕໍ ທີ່ພົບເຫັນໃນການຈັດຕັ້ງປະຕິບັດຕົວຈິງ ແລະ ການແລກປ່ຽນບົດຮຽນ;

- ກໍານົດວິທີການແກ້ໄຂ ແລະ ປັບປຸງທີ່ຈໍາເປັນ ເພື່ອບັນລຸຜົນໄດ້ຮັບຄາດຄະເນ ຄຽງຄູ່ກັບການຮັບປະກັນຄວາມສອດຄ່ອງກັບແຜນງານລະດັບຊາດ ແລະ ທ້ອງຖິ່ນ;

- ໃຫ້ຄໍາແນະນໍາ ເພື່ອການຈັດຕັ້ງປະຕິບັດຍຸດທະສາດໃນຕໍ່ໜ້າ ແລະ ການເຊື່ອມສານເຂົ້າແຜນງານຂອງ ຂະແໜງການທີ່ກ່ຽວຂ້ອງ.

**ການທົບທວນຄັ້ງນີ້ສຸມໃສ່ ສາມຂົງເຂດບູລິມະສິດຂອງຍຸດທະສາດ: ການປະກັນສຸຂະພາບ, ການປະກັນສັງຄົມ, ແລະ ສະຫວັດດີການສັງຄົມ.** ການທົບທວນນີ້ໄດ້ດໍາເນີນການຢູ່ຂັ້ນສູນກາງ ແລະ ສອງແຂວງທີ່ຖືກຄັດເລືອກກໍຄື ຈໍາປາສັກ ແລະ ຊຽງຂວາງ ຮ່ວມກັບພາກສ່ວນກ່ຽວຂ້ອງ ຂອງ ພາກລັດ, ຄູ່ຮ່ວມງານຈາກສັງຄົມ, ອົງການຈັດຕັ້ງມະຫາຊົນ ແລະ ຄູ່ຮ່ວມພັດທະນາ (ເບິ່ງເອກະສານຊ້ອນທ້າຍສໍາລັບລາຍຊື່)

## 1.3. ເນື້ອໃນຂອງບົດລາຍງານ

**ບົດລາຍງານສະບັບນີ້ ມີເນື້ອໃນດັ່ງຕໍ່ໄປນີ້: ພາກທີ 2 ມີຂໍ້ມູນລາຍລະອຽດ ກ່ຽວກັບ ວິທີການວິທະຍາ, ຜົນໄດ້ຮັບ, ວິທີການຄຸ້ມຄອງ ແລະ ແຜນວຽກ.** ພາກທີ 3 ແມ່ນພາກສະເໜີກ່ຽວກັບສະພາບເສດຖະກິດ ແລະ ສັງຄົມຢູ່ ສປປ ລາວ, ສ່ວນພາກທີ 4 ກໍນໍາສະເໜີ ກ່ຽວກັບຜົນໄດ້ຮັບຂອງການທົບທວນ ແຕ່ລະເສົາຄໍ້າ ແລະ ຂໍ້ແນະນໍາຕໍ່ການຈັດຕັ້ງປະຕິບັດຍຸດທະສາດໃນໄລຍະທີ II.

# ວິທີການວິທະຍາ ທີ່ນຳໃຊ້ ໃນການທົບທວນ

**ການທົບທວນ ໄດ້ນຳໃຊ້ວິທີການແບບປະສົມປະສານ ລວມທັງແບບປະລິມານ ແລະ ຄຸນນະພາບ.** ສ່ວນການວິເຄາະ ແມ່ນນຳໃຊ້ຂໍ້ມູນ ທີ່ເກັບກຳຈາກແຫຼ່ງຕົ້ນຕໍ ແລະ ແຫຼ່ງຂັ້ນສອງ ເຊິ່ງໄດ້ນຳເອົາມາຕອບແຕ່ລະຄຳຖາມ ທີ່ຕັ້ງຂຶ້ນສຳລັບການທົບທວນ. ຜົນຂອງການທົບທວນ ໄດ້ຖືກຢັ້ງຢືນ ແລະ ເປັນພື້ນຖານໃນການຕັ້ງຂໍ້ສະຫຼຸບ. ການທົບທວນປະກອບມີສາມໄລຍະຄື:

## 1. ໄລຍະເບື້ອງຕົ້ນ

**ໄລຍະເບື້ອງຕົ້ນແມ່ນການທົບທວນບັນດາເອກະສານທີ່ກ່ຽວຂ້ອງທັງໝົດ, ເອກະສານທີ່ສຳຄັນແມ່ນແຜນຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ແລະ ກອບຕິດຕາມ ແລະ ປະເມີນຜົນ.** ນອກນັ້ນ, ກໍມີທັງເອກະສານຍຸດທະສາດ, ກົດໝາຍ, ລະບຽບການ, ນະໂຍບາຍ, ແຜນ ແລະ ບົດລາຍງານ ຂອງ ບັນດາກະຊວງ ແລະ ແຂວງ ທີ່ມີໜ້າທີ່ຮັບຜິດຊອບໃນການ ຈັດຕັ້ງປະຕິບັດຍຸດທະສາດ. ເອກະສານອື່ນໆ ທີ່ຖືກທົບທວນລວມມີ ເອກະສານໂຄງການ, ບົດລາຍງານຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດ ໂຄງການປະຈຳປີ, ບົດບັນທຶກ ກອງປະຊຸມຄະນະກຳມາທິການແຫ່ງຊາດ, ບົດລາຍງານກອງປະຊຸມສຳມະນາ ແລະ ບົດຄົ້ນຄວ້າລະດັບວິຊາການພ້ອມທັງຜົນງານການຄົ້ນຄວ້າອື່ນໆ (ກະລຸນາເບິ່ງ ເອກະສານຊ້ອນທ້າຍ 6 ສຳລັບລາຍການລະອຽດ). ຫຼັງຈາກນັ້ນ, ກໍໄດ້ກະກຽມບົດລາຍງານເບື້ອງຕົ້ນ ເພື່ອຮັບຮອງຈາກຄະນະກຳມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມ, ກອງເລຂາ ແລະ ອົງການແຮງງານສາກົນ.

## 2. ໄລຍະ ເກັບກຳຂໍ້ມູນ

**ໄດ້ກຳນົດລາຍຊື່ຂອງພາກສ່ວນກ່ຽວຂ້ອງຫຼັກ ແລະ ໄດ້ຈັດການສຳພາດທັງຂັ້ນສູນກາງ ແລະ ທ້ອງຖິ່ນທີ່ປະກອບມີອົງການຈັດຕັ້ງພາກລັດ, ຄູ່ຮ່ວມງານລະດັບຊາດ ແລະ ຄູ່ຮ່ວມພັດທະນາຢູ່ຂັ້ນສູນກາງແມ່ນ:**

- ບັນດາກົມກ່ຽວຂ້ອງຂອງ ກະຊວງ ຮສສ:
  - ກົມແຜນການ ແລະ ການຮ່ວມມືສາກົນ
  - ກົມສັງຄົມສົງເຄາະ
  - ກົມນະໂຍບາຍ ຕໍ່ຜູ້ມີຜົນງານ, ຜູ້ພິການ ແລະ ຜູ້ສູງອາຍຸ
  - ອົງການປະກັນສັງຄົມແຫ່ງຊາດ
  - ຫ້ອງວ່າການກະຊວງ
  - ກົມຈັດຫາງານ
- ຄະນະກຳມາທິການສັງຄົມ ແລະ ວັດທະນາທຳ (ສະພາແຫ່ງຊາດ),
- ກົມແຜນການ ແລະ ການເງິນ (ກະຊວງສຶກສາທິການ ແລະ ກິລາ)
- ກົມພັດທະນາຊົນນະບົດ ແລະ ສະຫະກອນ (ກະຊວງກະສິກຳ ແລະ ປ່າໄມ້)
- ຫ້ອງການກະຊວງ ແລະ ຫ້ອງການປະກັນສຸຂະພາບແຫ່ງຊາດ (ກະຊວງສາທາລະນະສຸກ)
- ກົມແຜນການ ແລະ ຮ່ວມມື (ກະຊວງອຸດສາຫະກຳ ແລະ ການຄ້າ)
- ກົມແຜນການ (ກະຊວງແຜນການ ແລະ ການລົງທຶນ)
- ກົມງົບປະມານແຫ່ງລັດ (ກະຊວງການເງິນ)
- ສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດ,
- ສະຫະພັນແມ່ຍິງລາວ
- ສະຫະພັນກຳມະບານແຫ່ງຊາດລາວ, ແລະ
- ຫ້ອງການເກັບກູ້ລະເບີດ.

ຢູ່ ຂັ້ນແຂວງ, ໄດ້ຄັດເລືອກເອົາສອງແຂວງ ອີງຕາມການເຮັດວຽກກ່ຽວກັບຍຸດທະສາດ ໃນໄລຍະ 2 ປີຜ່ານມາ: ຈຳປາສັກ ແລະ ຊຽງຂວາງ ແລະ ກໍໄດ້ມີການສຳພາດພາກສ່ວນກ່ຽວຂ້ອງຫຼັກ. ແຜນເກັບກຳຂໍ້ມູນລະອຽດໄດ້ຂັດຕິດມາພ້ອມນີ້ ກໍຄືເອກະສານຊ້ອນທ້າຍ 3.

## 3. ໄລຍະການວິເຄາະຂໍ້ມູນ ແລະ ຮ່າງບົດລາຍງານ

**ໄລຍະນີ້ແມ່ນໄດ້ດຳເນີນການເກັບກຳ ແລະ ຢັ້ງຢືນຂໍ້ມູນພ້ອມທັງຮ່າງບົດລາຍງານ ການທົບທວນການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດກາງສະໄໝ. ຮ່າງບົດລາຍງານໄດ້ຖືກນຳສົ່ງໃຫ້ກອງເລຂາ ແລະ ກຸ່ມຮັບຜິດຊອບຜົນໄດ້ຮັບດ້ານການປົກປ້ອງສັງຄົມຂອງ UNSDCF ເພື່ອປະກອບຄຳຄິດເຫັນ.** ນອກນັ້ນ, ກໍ່ໄດ້ມີການຢັ້ງຢືນ ຜົນຂອງການທົບທວນຢູ່ ສອງ ກອງປະຊຸມ ທີ່ສຳຄັນ: ກອງປະຊຸມລາຍງານຜົນການທົບທວນໄລຍະກາງ ຂອງການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ທີ່ຈັດຂຶ້ນໂດຍ ກອງເລຂາ ແລະ ອົງການ ILO ຢູ່ນະຄອນຫຼວງວຽງຈັນ ໃນວັນທີ 19 ມັງກອນ 2024 ແລະ ກອງປະຊຸມຄະນະກຳມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມຢູ່ທີ່ທ່າລາດ ໃນວັນທີ 21 ກຸມພາ 2024.

## 2.1. ຂໍ້ຈໍາກັດ

**ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ປະກອບມີທັງໝົດ 3 ເສົາຄໍ້າ/ເປົ້າໝາຍ ແລະ 20 ກິດຈະກໍາ ຈຶ່ງເຮັດໃຫ້ມີຫຼາຍພາກສ່ວນກ່ຽວຂ້ອງມີສ່ວນຮ່ວມ.** ບັນດາກະຊວງຕ່າງໆ ກໍມີກອບການຕິດຕາມຂອງຕົນ ແລະ ການແລກປ່ຽນຂໍ້ມູນລະຫວ່າງກະຊວງ ແລະ ກອງເລຂາ ຍັງບໍ່ມີລະບົບອັດຕະໂນມັດ ພາໃຫ້ເກີດມີຂໍ້ຫຍຸ້ງຍາກ. ດັ່ງນັ້ນ, ຈຶ່ງເຮັດໃຫ້ການປະເມີນຄັ້ງນີ້ຍິ່ງມີຄວາມຊັບຊ້ອນເພີ່ມຂຶ້ນ. ເພື່ອແກ້ໄຂຂໍ້ຈໍາກັດເຫຼົ່ານີ້ ແລະ ສະເໜີຂໍ້ມູນຮອບດ້ານແບບຈະແຈ້ງ ຈຶ່ງໄດ້ມີການຢັ້ງຢືນຂໍ້ມູນ ແລະ ເກັບກໍາຄໍາຄິດເຫັນ ກ່ຽວກັບວິທີການຍົກລະດັບກົນໄກການຄຸ້ມຄອງບໍລິຫານ ໃນໄລຍະຂອງການສໍາພາດພາກສ່ວນກ່ຽວຂ້ອງຫຼັກ ແລະ ການຮ່າງບົດລາຍງານສະບັບນີ້.




© Saiyadeth Sitthilath/ILO

# III ສະພາບເງື່ອນໄຂເສດຖະກິດ - ສັງຄົມ

## 3.1. ສະພາບເງື່ອນໄຂຂອງປະເທດ

**ສປປ ລາວ, ເປັນປະເທດທີ່ມີລາຍຮັບປານກາງ, ມີ GDP ຕໍ່ຫົວຄົນ ເທົ່າກັບ $2,088 ໂດລາສະຫະລັດ ໃນປີ 2022. ປະເທດ ລາວ ມີປະຊາກອນ 7.4 ລ້ານຄົນ[1] , ເຊິ່ງຫຼາຍກວ່າໜຶ່ງສ່ວນສາມ (36.7 ສ່ວນຮ້ອຍ) ມີອາຍຸຕໍ່າກວ່າ 15 ປີ, ແລະ ມີພຽງແຕ່ 3.7 ສ່ວນຮ້ອຍ ທີ່ມີອາຍຸ 65 ປີຂຶ້ນໄປ.** ໃນໄລຍະທົດສະຫວັດທີ່ຜ່ານມາ, ເສດຖະກິດ ໄດ້ມີການຂະຫຍາຍຕົວຫຼາຍພໍສົມຄວນ ໂດຍທີ່ມີອັດຕາການຂະຫຍາຍຕົວ ຂອງ GDP ສະເລ່ຍ ເທົ່າກັບ 7 ສ່ວນຮ້ອຍ.

**ການແຜ່ລະບາດ ຂອງ ພະຍາດໂຄວິດ-19 ໄດ້ສົ່ງຜົນກະທົບຫຼາຍຕໍ່ກັບການຂະຫຍາຍຕົວຂອງເສດຖະກິດ ແຕ່ນັບແຕ່ນັ້ນມາກໍມີການຟື້ນຕົວແຕ່ລະກ້າວ.** ອັດຕາການຂະຫຍາຍຕົວ ຂອງ GDP ຕົວຈິງໄດ້ຫຼຸດລົງຫຼາຍ ຈາກ 5.5 ສ່ວນຮ້ອຍ ໃນປີ 2019 ເປັນ 0.5 ສ່ວນຮ້ອຍ ໃນປີ 2020 ເຊິ່ງເປັນຍ້ອນຜົນສະທ້ອນ ຂອງ ການແຜ່ລະບາດພະຍາດ ຕໍ່ກັບເສດຖະກິດ ເຊັ່ນການລົ້ມລະລາຍ ຂອງຂະແໜງການທ່ອງທ່ຽວສາກົນ. ການຂະຫຍາຍຕົວ ໃນປີ 2022[2] ຄາດວ່າຈະເທົ່າກັບ 2.7 ສ່ວນຮ້ອຍ ແລະ ເພີ່ມຂຶ້ນຈົນຮອດປະມານ 4-5 ສ່ວນຮ້ອຍ ໃນໄລຍະກາງ. ເຖິງວ່າລະດັບນີ້ຍັງຕໍ່າກວ່າລະດັບກ່ອນການແຜ່ລະບາດພະຍາດກໍຕາມ (ຮູບພາບທີ 1), ຂະແໜງການບໍລິການໄດ້ຮັບຜົນປະໂຫຍດຈາກການເພີ່ມຂຶ້ນຂອງການທ່ອງທ່ຽວສາກົນ ແລະ ພາຍໃນ ເຊິ່ງເປັນການປະກອບສ່ວນຕໍ່ກັບການຟື້ນຟູ. ໄລຍະການຟື້ນຟູ ຫຼັງການແຜ່ລະບາດພະຍາດ ເປັນໂອກາດການລົງທຶນຫຼຸດລົງ.

▶ ຮູບ 1. ການຂະຫຍາຍຕົວ ຂອງ GDP 2010-2022 ( ສ່ວນຮ້ອຍ)




ແຫຼ່ງຂໍ້ມູນ: ທະນາຄານໂລກ.

**ລະດັບໜີ້ສິນສາທາລະນະສູງເຮັດໃຫ້ເສດຖະກິດຂາດສະຖຽນລະພາບ ແລະ ໄດ້ສົ່ງຜົນກະທົບດ້ານລົບຕໍ່ກັບຄວາມເປັນໄປໄດ້ ໃນການພັດທະນາ.** ຢູ່ ສປປ ລາວ, ມີການປະເຊີນໜ້າກັບບັນຫາການລົ້ມລະລາຍ ແລະ ສະພາບຄ່ອງ ຍ້ອນຄວາມຕ້ອງການດ້ານທຶນຮອນ, ຂໍ້ຈໍາກັດດ້ານທາງເລືອກໃນການເຂົ້າເຖິງແຫຼ່ງທຶນ, ຄັງແຮເງິນຕາຕ່າງປະເທດຕໍ່າ ແລະ ຄວາມກົດດັນຈາກການອ່ອນຄ່າຂອງເງິນ. ໃນທ້າຍປີ 2022, ໜີ້ສິນສາທາລະນະ ແລະ ໜີ້ສິນທີ່ລັດຖະບານເປັນຜູ້ຄໍ້າປະກັນ ມີມູນຄ່າທັງໝົດເທົ່າກັບ 112 ສ່ວນຮ້ອຍ ຂອງ GDP, ຫຼື 125 ສ່ວນຮ້ອຍ ຂອງ GDP ຖ້າລວມໜີ້ຄ້າງຈ່າຍພາຍໃນ ແລະ ຮູບແບບການເປັນໜີ້ອື່ນໆ. ນອກນັ້ນ,

1 ອີງຕາມຂໍ້ມູນປີ 2023 ສູນສະຖິຕິແຫ່ງຊາດ

2 World Bank Lao Economic Monitor, ພຶດສະພາ 2023

ລາຍຈ່າຍຂອງລັດຖະບານ ໃນຂະແໜງການສຶກສາ ແລະ ສາທາລະນະສຸກ ກໍຫຼຸດລົງຈາກ 4.9 ສ່ວນຮ້ອຍ ຂອງ GDP ໃນປີ 2013 ມາເປັນ 2.6 ສ່ວນຮ້ອຍ ໃນປີ 2022. ຖ້າບໍ່ມີການເລື່ອນການຊໍາລະໜີ້ສິນຄືນ, ການຊໍາລະດອກເບ້ຍຈະເກີນລະດັບລາຍຈ່າຍເຂົ້າໃນຂະແໜງການສັງຄົມໃນປີ 2022. ຄວາມຍືນຍົງດ້ານໜີ້ສິນສາທາລະນະ ຂຶ້ນກັບການເຈລະຈາ ກັບຜູ້ໃຫ້ທຶນ. ໜີ້ສິນລະດັບສູງຈະສືບຕໍ່ເຮັດໃຫ້ມີຂໍ້ຈໍາກັດດ້ານງົບປະມານ ໂດຍທີ່ລາຍຮັບຄາດວ່າຈະເພີ່ມຂຶ້ນຕາມແຕ່ລະກ້າວ ຕາມການຂະຫຍາຍຕົວ ຂອງເສດຖະກິດ ແລະ ການປັບປຸງຂະແໜງອາກອນ. ເຖິງຢ່າງໃດກໍຕາມ, ມູນຄ່າດອກເບ້ຍສູງທີ່ຕ້ອງຊໍາລະ ຈະເຮັດໃຫ້ຂາດທຶນຮອນເພື່ອປະຕິບັດລາຍຈ່າຍອື່ນໆ. ມີການສົມມຸດຖານວ່າ ຈະມີລາຍຮັບເກີນດຸນໃນຊຸມປີຕໍ່ໜ້າ ແຕ່ການຂາດເຂີນດ້ານທຶນຮອນ ຄາດວ່າຍິ່ງຈະເພີ່ມຂຶ້ນ ຍ້ອນພາລະແບກຫາບຂອງ ການຊໍາລະໜີ້ສິນຄືນ. ພັນທະຂອງການຊໍາລະໜີ້ສິນພາຍນອກຄືນ ຈະຕົກຢູ່ສະເລ່ຍ 1.3 ຕື້ໂດລາຕໍ່ປີ ນັບແຕ່ປີ 2023 ຈົນຮອດປີ 2026 ເຮັດໃຫ້ມີຄວາມຈໍາເປັນທີ່ຕ້ອງມີທຶນຮອນພາກລັດລະດັບສູງ (ທະນາຄານໂລກ 2023b).

## ▶ ຮູບ 2. ອັດຕາສ່ວນໜີ້ສິນສາທາລະນະ ຕໍ່ GDP 2016-2022




ແຫຼ່ງຂໍ້ມູນ: ກະຊວງການເງິນ (MOF)

**ພ້ອມກັນນັ້ນ, ສະກຸນເງິນກີບກໍ່ໄດ້ອ່ອນຄ່າຫຼາຍ ນັບຕັ້ງແຕ່ປີ 2021 ເຮັດໃຫ້ອັດຕາລາຄາຜູ້ບໍລິໂພກຈ່າຍເຟີ້ໃນລະດັບທີ່ສູງຫຼາຍ. ອັດຕາແລກປ່ຽນອ່ອນຄ່າ ຈາກ 9,700 ກີບ ເປັນ 20,000 ກີບຕໍ່ໜຶ່ງໂດລາສະຫະລັດ ລະຫວ່າງ ເດືອນກັນຍາ 2021 ແລະ ກັນຍາ 2023.** ການອ່ອນຄ່າຂອງເງິນກີບ ເຮັດໃຫ້ອັດຕາເງິນເຟີ້ພາຍໃນຮ້າຍແຮງ ແລະ ເພີ່ມພາລະແບກຫາບດ້ານການຊໍາລະໜີ້ສິນຕ່າງປະເທດ ເນື່ອງຈາກວ່າ ເງິນກູ້ຢືມສ່ວນໃຫຍ່ ແມ່ນເປັນສະກຸນເງິນໂດລາ. ຕົວເລກຈາກສູນສະຖິຕິແຫ່ງຊາດສະແດງໃຫ້ເຫັນວ່າອັດຕາເງິນເຟີ້ສະເລ່ຍຢູ່ທີ່ 31.2% ໃນປີ 2023, ເຊິ່ງມີຜົນເຮັດໃຫ້ອໍານາດໃນການຊື້ຂອງຄົວເຮືອນຫຼຸດລົງຢ່າງໃຫຍ່ຫຼວງ, ອັດຕາເງິນເຟີ້ສູງໄດ້ສົ່ງຜົນກະທົບຕໍ່ກັບຄວາມສາມາດໃນການຊື້ ຂອງ ຄົວເຮືອນ. ທະນາຄານ ແຫ່ງ ສປປ ລາວ ຈຶ່ງໄດ້ຈັດຕັ້ງປະຕິບັດນະໂຍບາຍເງິນຕາທີ່ເຂັ້ມງວດກວ່າເກົ່າ ແລະ ມາດຕະການດ້ານບໍລິຫານເພື່ອຄຸ້ມຄອງອັດຕາແລກປ່ຽນໃນຕົ້ນປີ 2023 ແຕ່ເຖິງຢ່າງໃດກໍຕາມກໍເຫັນວ່ານັບມື້ຍິ່ງນັບຫຼຸດລົງ.

**ຂໍ້ຈໍາກັດດ້ານງົບປະມານ, ຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ ໄດ້ມີຜົນກະທົບຕໍ່ກັບການລົງທຶນເພື່ອພັດທະນາຊັບພະຍາກອນມະນຸດ ຢູ່ ສປປ ລາວ.** ປະຈຸບັນ, ເດັກນ້ອຍທີ່ເກີດຢູ່ ລາວ ຄາດວ່າມີທ່າແຮງດ້ານຜະລິດຕະພາບ ໄດ້ພຽງແຕ່ 45 ສ່ວນຮ້ອຍເວລາຮອດອາຍຸ 18 ປີ ຖ້າສົມທຽບໃສ່ຜູ້ທີ່ສາມາດເຂົ້າເຖິງການສຶກສາແບບເຕັມສ່ວນ ແລະ ມີສຸຂະພາບທີ່ດີ. ໃນຊຸມປີທີ່ຜ່ານມາ, ອັດຕາສ່ວນຂອງລາຍຈ່າຍພາກລັດ ທີ່ຈັດສັນໃຫ້ແກ່ຂະແໜງການສຶກສາ ເຫັນວ່ານັບມື້ນັບຫຼຸດລົງຈາກ 12.46 ສ່ວນຮ້ອຍ ໃນປີ 2017 ເປັນ 11.62 ສ່ວນຮ້ອຍ ໃນປີ 2019. ຖ້າເປັນສັດສ່ວນ ຕໍ່ກັບ GDP ກໍຫຼຸດລົງຈາກ 3.11 ສ່ວນຮ້ອຍ ເປັນ 2.59 ສ່ວນຮ້ອຍ ໃນໄລຍະເວລາດຽວກັນ. ຖ້າສົມທຽບກັບປະເທດເພື່ອນບ້ານ, ສສ. ຫວຽດນາມ ລົງທຶນເທົ່າກັບ 4.2 ສ່ວນຮ້ອຍ ຂອງລາຍຈ່າຍຂອງງົບປະມານແຫ່ງລັດ ເຂົ້າໃນການສຶກສາ ສ່ວນ ອິນໂດເນເຊຍແມ່ນເທົ່າກັບ 3.6 ສ່ວນຮ້ອຍ. ການລົງທຶນໃນຂະແໜງການສຶກສາທີ່ຕໍ່າຢູ່ ສປປ ລາວ ສະທ້ອນອອກໃນການສຶກສາທີ່ມີຄຸນນະພາບ ແລະ ຜົນໄດ້ຮັບຈາກການຮຽນທີ່ຕໍ່າ. ເຖິງວ່າຈະໃຊ້ເວລາ 10.8 ປີ ໃນລະບົບການສຶກສາ, ສະເລ່ຍແລ້ວ ນັກສຶກສາ ລາວ ສາມາດຮຽນຮູ້ໄດ້ເທົ່າກັບພຽງແຕ່ 6.4 ປີ. ຖ້າສົມທຽບກັບ ສສ. ຫວຽດນາມ ແມ່ນ 10.2 ປີ ແລະ ອິນໂດເນເຊຍ ແມ່ນ 7.9 ປີ. ລາຍຈ່າຍທີ່ຫຼຸດລົງຢ່າງຫຼວງຫຼາຍ ບວກກັບປັດໄຈ ຂອງ ການຂາດປະສິດທິພາບດ້ານລາຍຈ່າຍ ເຮັດໃຫ້ມີໄພຂົ່ມຂູ່ຕໍ່ກັບຄວາມສາມາດຂອງລັດຖະບານໃນການບັນລຸເປົ້າໝາຍການພັດທະນາຊັບພະຍາກອນມະນຸດ. ການແຜ່ລະບາດຂອງພະຍາດໂຄວິດ-19 ກໍເຮັດໃຫ້ພື້ນຖານການເກັບລາຍຮັບຂອງປະເທດມີຂໍ້ຈໍາກັດ.

## 3.2. ສະພາບເງື່ອນໄຂດ້ານນະໂຍບາຍ

**ວິໄສທັດ 2030 ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ 10 ປີ (2016-2025) (SEDS) ມີຈຸດປະສົງໃນການປະຕິຮູບປະເທດ ສປປ ລາວ ໃຫ້ກາຍເປັນປະເທດທີ່ມີລາຍຮັບປານກາງ-ສູງ ໂດຍຜ່ານການຂະຫຍາຍຕົວເສດຖະກິດທີ່ນຳໃຊ້ນະວັດຕະກຳ, ມີລັກສະນະສີຂຽວ ແລະ ຍືນຍົງ.** ເພື່ອບັນລຸເປົ້າໝາຍນີ້ ຈຶ່ງຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ຫ້າປີ ຄັ້ງທີ 9 (2021-2025). ແຜນພັດທະນາເສດຖະກິດສັງຄົມຄັ້ງທີ 9 ໄດ້ກຳນົດເອົາຫົກເປົ້າໝາຍ ເຊິ່ງລວມມີເປົ້າໝາຍດ້ານເສດຖະກິດ, ທຶນມະນຸດ, ຊີວິດການເປັນຢູ່, ສິ່ງແວດລ້ອມ, ການເຊື່ອມໂຍງ ແລະ ເຊື່ອມຈອດ ແລະ ການປົກຄອງ[4]. ເຖິງຢ່າງໃດກໍຕາມ, ກໍຍັງມີສິ່ງທ້າທາຍດ້ານການລົງທຶນເພື່ອການພັດທະນາ ຍ້ອນພື້ນຖານການເກັບລາຍຮັບຫຼຸດລົງ ແລະ ພັນທະໃນການຊຳລະໜີ້ສິນເພີ່ມຂຶ້ນ ເຊິ່ງເປັນໄພຂົ່ມຂູ່ດ້ານຄວາມພຽງພໍເພື່ອປົກຄຸມລາຍຈ່າຍ. ພ້ອມກັນນັ້ນ, ກໍເຫັນວ່າ ການຈັດສັນຊັບພະຍາກອນດ້ານງົບປະມານ ບໍ່ສອດຄ່ອງກັບນະໂຍບາຍທີ່ເປັນບູລິມະສິດ. ເວົ້າສະເພາະ, ການລົງທຶນຂອງພາກລັດໃນຂະແໜງການທີ່ມີຜົນກະທົບໂດຍກົງ ຕໍ່ກັບການພັດທະນາຊັບພະຍາກອນມະນຸດຫຼຸດລົງທັງເປັນອັດຕາສ່ວນຮ້ອຍ ຕໍ່ກັບງົບປະມານທັງໝົດ ແລະ ອັດຕາສ່ວນຮ້ອຍ ຕໍ່ GDP (ຮູບພາບທີ 3 ແລະ 4). ເພື່ອໃຫ້ບູລິມະສິດໃຫ້ແກ່ຂະແໜງການສັງຄົມ, ມີຄວາມຈຳເປັນທີ່ຕ້ອງເພີ່ມການຈັດສັນງົບປະມານເພື່ອລາຍຈ່າຍຫຼາຍປະເພດ ເປັນຕົ້ນແມ່ນເງິນເດືອນ, ສິນຄ້າ ແລະ ການບໍລິການ ແລະ ການລົງທຶນ. ຖ້າຫາກບໍ່ສາມາດລະດົມທຶນເພີ່ມເຕີມຜ່ານການປັບປຸງຖານລາຍຮັບ, ກໍຈຳເປັນຕ້ອງຫຼຸດຜ່ອນການລົງທຶນໃນຂະແໜງການອື່ນໂດຍສະເພາະແມ່ນຂະແໜງການທີ່ປະກອບສ່ວນເຂົ້າໃນເສດຖະກິດ-ສັງຄົມທີ່ຍັງບໍ່ຈະແຈ້ງ.

**ນອກນັ້ນ, ກໍໜ້າເປັນຫ່ວງທີ່ຂະແໜງການສັງຄົມບໍ່ໄດ້ຮັບບູລິມະສິດ ໂດຍສະເພາະໃນສະພາບການທີ່ເກີດໂຄວິດ-19 ໄດ້ສົ່ງຜົນກະທົບຕໍ່ກັບຜົນໄດ້ຮັບດ້ານການຮຽນການສອນ ແລະ ສຸຂະພາບ ແລະ ການສະໜອງການບໍລິການສາທາລະນະຕ່າງໆ.** ຖ້າສົມທຽບໃສ່ມາດຕະຖານພາກພື້ນ ແລະ ດ້ານລາຍຮັບ (ຮູບພາບທີ 5), ລາຍຈ່າຍພາກລັດ ໃນຂະແໜງການສຶກສາ, ສາທາລະນະສຸກ ແລະ ການປົກປ້ອງສັງຄົມຍັງຖືວ່າຕໍ່າຫຼາຍ. ຖ້າສົມທຽບໃສ່ມາດຕະຖານສາກົນ ກໍຍິ່ງຕໍ່າໄປກວ່ານັ້ນ. ຍົກຕົວຢ່າງ, ຂອບການສຶກສາ 2030 ເພື່ອການປະຕິບັດງານ ແນະນຳໃຫ້ລັດຖະບານ ຈັດສັນງົບປະມານ ລະຫວ່າງ 4 ຫາ 6 ສ່ວນຮ້ອຍ ຂອງ GDP (ແລະ/ຫຼື 15 ຫາ 20 ສ່ວນຮ້ອຍຂອງງົບປະມານທັງໝົດ) ສຳລັບການສຶກສາ.

▶ **ຮູບ 3: ປະສິດທິພາບການຈັດສັນແຫຼ່ງທຶນ (ການສຶກສາ)**




ແຫຼ່ງຂໍ້ມູນ: ທະນາຄານໂລກ

4 ແຜນພັດທະນາເສດຖະກິດສັງຄົມ ໄດ້ກຳນົດ 6 ຜົນໄດ້ຮັບ ເຊັ່ນ: (i) ເສດຖະກິດມີການເຕີບໂຕຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ຍືນຍົງ ; (ii) ພັດທະນາຊັບພະຍາກອນມະນຸດ; (iii) ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ; (iv) ປົກປັກຮັກສາສິ່ງແວດລ້ອມ ແລະ ຫລຸດຜ່ອນຄວາມສ່ຽງໃນການເກີດໄພພິບັດ; (v) ສ້າງພື້ນຖານໂຄງລ່າງໃຫ້ເຂັ້ມແຂງ, ນຳໃຊ້ທ່າແຮງ ກາລະໂອກາດທີ່ຕັ້ງ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ; ແລະ (vi) ການຄຸ້ມຄອງບໍລິຫານລັດ. ການຂາດສາລະບານດ້ານການເງິນ ເຮັດໃຫ້ມີຄວາມຫຍຸ້ງຍາກໃນການສົມທຽບກັບລາຍຈ່າຍຕໍ່ບູລິມະສິດຂອງພາກລັດ.

### ▶ ຮູບ 4: ປະສິດທິພາບການຈັດສັນແຫຼ່ງທຶນ (ສາທາລະນະສຸກ)




ແຫຼ່ງຂໍ້ມູນ: ທະນາຄານໂລກ

ຂອງ ງົບປະມານທັງໝົດກໍຕາມ ຕົວເລກຕົວຈິງແມ່ນເທົ່າກັບ 11 ສ່ວນຮ້ອຍ. ການລົງທຶນເພື່ອການພັດທະນາ ຍັງມີຂໍ້ຈໍາກັດເພີ່ມຕື່ມຍ້ອນຄວາມຫຍຸ້ງຍາກໃນການລະດົມລາຍຮັບ ແລະ ພັນທະການຊໍາລະດອກເບ້ຍທີ່ເພີ່ມຂຶ້ນ. ໃນລະຫວ່າງປີ 2016 ຫາ ປີ 2022, ຕົວເລກການລົງທຶນ ສໍາລັບການສຶກສາ ແລະ ສາທາລະນະສຸກ ລວມກັນ ຫຼຸດລົງຈາກ 4.2 ເປັນ 2.6 ສ່ວນຮ້ອຍ ຂອງ GDP ແລະ ອາດຕໍ່າໄປກວ່ານັ້ນຖ້າຫາກບໍ່ມີການເລື່ອນການຊໍາລະດອກເບ້ຍ (ຮູບພາບທີ 6). ການໃຫ້ບູລິມະສິດ ແກ່ການລົງທຶນໃນການສຶກສາ, ສາທາລະນະສຸກ ແລະ ການປົກປ້ອງສັງຄົມຈະຊ່ວຍຮັບປະກັນການນໍາໃຊ້ທຶນຮອນທີ່ມີຂໍ້ຈໍາກັດແບບມີປະສິດທິຜົນ ເພື່ອບັນລຸເປົ້າໝາຍນະໂຍບາຍ. ການກໍ່ສ້າງຊັບພະຍາກອນມະນຸດມີຄວາມສໍາຄັນຢ່າງຍິ່ງເພື່ອປັບປຸງຄວາມເປັນໄປໄດ້ດ້ານການພັດທະນາໄລຍະກາງ ພ້ອມທັງຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ.

### ▶ ຮູບ 5: ການລົງທຶນໃນຂະແໜງການສັງຄົມ, 2020 (% GDP)




ແຫຼ່ງຂໍ້ມູນ: WDI, ທະນາຄານໂລກ

### ▶ ຮູບ 6: ການລົງທຶນໃນຂະແໜງການສັງຄົມ ແລະ ລາຍຈ່າຍດອກເບ້ຍ (% GDP)




ແຫຼ່ງຂໍ້ມູນ: ທະນາຄານໂລກ

## 3.3. ສະພາບ ການປົກປ້ອງສັງຄົມ ໂດຍລວມ

**ລັດຖະບານ ແຫ່ງ ສປປ ລາວ ມີຄວາມພະຍາຍາມທີ່ຈະຂະຫຍາຍເຂດປົກຄຸມການປົກປ້ອງສັງຄົມຢ່າງຕັ້ງໜ້າໃນປະເທດໂດຍມີຈຸດປະສົງພັດທະນາແບບຮອບດ້ານ, ສອດຄ່ອງຕາມສະພາບເງື່ອນໄຂຕົວຈິງ.** ເຖິງວ່າ ພະນັກງານລັດຖະກອນ ແລະ ໜ້ອຍກວ່າເຄິ່ງໜຶ່ງຂອງຜູ້ອອກແຮງງານໃນພາກວິສາຫະກິດສາມາດເຂົ້າເຖິງການປົກປ້ອງສັງຄົມ, ແຕ່ກໍຍັງມີກຸ່ມປະຊາກອນທີ່ທຸກຍາກ ແລະ ແຮງງານນອກລະບົບທີ່ມີຂໍ້ຈຳກັດໃນການເຂົ້າເຖິງ. ແມ່ຍິງຖືພາ ແລະ ເດັກນ້ອຍສາມາດເຂົ້າເຖິງການບໍລິການສຸຂະພາບແບບບໍ່ເສຍຄ່າໂດຍຜ່ານກອງທຶນປະກັນສຸຂະພາບແຫ່ງຊາດ. ກອງທຶນປະກັນສັງຄົມພາກລັດໄດ້ຖືກສ້າງຂຶ້ນຕັ້ງແຕ່ປີ 2007, ສ່ວນພາກວິສາຫະກິດ ກໍໄດ້ຖືກສ້າງຂຶ້ນໃນປີ 2000 ໂດຍອົງການປະກັນສັງຄົມແຫ່ງຊາດ (ອປຊ). ຜູ້ອອກແຮງງານ ແລະ ສະມາຊິກຄອບຄົວ ໃນພາກວິສາຫະກິດ ລວມທັງອົງການຈັດຕັ້ງສາກົນເປັນຕົ້ນແມ່ນ ສະຖານທູດ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ລ້ວນແລ້ວຕ້ອງເຂົ້າເປັນສະມາຊິກ ຂອງລະບົບປະກັນສັງຄົມ. ເຖິງຢ່າງໃດກໍຕາມ, ບັນດາບໍລິສັດຂະໜາດນ້ອຍຫຼາຍຫົວໜ່ວຍ ຍັງບໍ່ໄດ້ເຂົ້າລະບົບປະກັນສັງຄົມ ແລະ ຍັງມີວິສາຫະກິດຂະໜາດໃຫຍ່ຈຳນວນໜຶ່ງທີ່ບໍ່ໄດ້ເຂົ້າ ຫຼື ໄດ້ເລືອກເອົາວິທີການອື່ນສຳລັບການປົກປ້ອງແຮງງານຂອງຕົນ. ຈຳນວນປະຊາກອນທີ່ຖືກປົກຄຸມ ໃນກອງທຶນປະກັນສັງຄົມ ຍັງຕ່ຳ, ພຽງແຕ່ 11.1 ສ່ວນຮ້ອຍ. ໃນເວລາທີ່ໄດ້ດຳເນີນການສຳພາດ, ອປຊ ໄດ້ໃຫ້ຂໍ້ມູນວ່າມີສະມາຊິກທັງໝົດ 827,688 ຄົນ ລວມທັງສະມາຊິກຄອບຄົວທີ່ເກີດສິດປິ່ນປົວສຸຂະພາບ ເຊິ່ງໃນນັ້ນ 430,510 ຄົນແມ່ນຜູ້ຍິງ. ນອກຈາກນັ້ນ, ປະຊາກອນທີ່ອາໄສຢູ່ແຂວງອື່ນໆຍົກເວັ້ນນະຄອນຫຼວງວຽງຈັນ ແມ່ນໄດ້ຖືກປົກຄຸມໂດຍກອງທຶນປະກັນສຸຂະພາບແຫ່ງຊາດ, ແມ່ຍິງຖືພາ ແລະ ເດັກອາຍຸຕ່ຳກວ່າ 5 ປີໄດ້ຮັບການຄຸ້ມຄອງໂດຍກອງທຶນແບບບໍ່ເສຍຄ່າ.

**ລະດັບການຫຼຸດຜ່ອນຄວາມທຸກຍາກກໍ່ບໍ່ໄດ້ຫຼຸດລົງໃນຈັງຫວະດຽວກັນກັບປະເທດອື່ນ ແລະ ຄວາມແຕກໂຕນດ້ານຄວາມບໍ່ສະເໝີພາບລະຫວ່າງເຂດຕົວເມືອງ ແລະ ຊົນນະບົດກໍເພີ່ມຂຶ້ນ.** ອີງຕາມການລາຍງານ ລ່າສຸດກ່ຽວກັບຄວາມທຸກຍາກໃນປີ 2020[5] , ອັດຕາຄວາມທຸກຍາກ ຢູ່ ສປປ ລາວ ຫຼຸດລົງ ຈາກ 24.6 ສ່ວນຮ້ອຍ ໃນປີ 2014 ເປັນ 18.3 ສ່ວນຮ້ອຍ ໃນປີ 2018. ເຖິງຢ່າງໃດກໍຕາມ, ຄວາມຄືບໜ້າຂອງການຫຼຸດຜ່ອນຄວາມທຸກຍາກ ກໍໄດ້ມີການທົ່ຖອຍ ໂດຍທີ່ມີອັດຕາຄວາມທຸກຍາກຄາດຄະເນໃນລະດັບ 31.7 ສ່ວນຮ້ອຍ ໃນປີ 2022. ເກືອບສອງສ່ວນສາມຂອງຄົວເຮືອນທັງໝົດ ໄດ້ຖືກບັງຄັບໃຫ້ຕ້ອງຫຼຸດຜ່ອນລາຍຈ່າຍ ສຳລັບການສຶກສາ ແລະ ສຸຂະພາບ ຍ້ອນອັດຕາເງິນເຟີ້. ຄວາມທຸກຍາກຍັງສືບຕໍ່ເປັນບັນຫາ ສຳລັບກຸ່ມປະຊາກອນທີ່ບໍ່ແມ່ນກຸ່ມລາວ-ໄຕ ພ້ອມທັງເປັນຄົວເຮືອນທີ່ມີລະດັບການສຶກສາຕ່ຳ. ການແຜ່ລະບາດ ຂອງ ໂຄວິດ-19 ແລະ ອັດຕາເງິນເຟີ້ ໃນໄລຍະປີ 2022-2023 ຄາດວ່າໄດ້ເຮັດໃຫ້ສູນເສຍຄວາມຄືບໜ້າໃນການຫຼຸດຜ່ອນຄວາມທຸກຍາກ. ຍິ່ງໄປກວ່ານັ້ນ, ເກືອບໜຶ່ງໃນຫ້າຄົນ ຢູ່ ສປປ ລາວ ປະສົບກັບບັນຫາການຂາດການຄ້ຳປະກັນສະບຽງອາຫານໃນລະດັບໃດໜຶ່ງ ຫາ ຮ້າຍແຮງ ໃນປີ 2018. ສະພາບການດັ່ງກ່າວ ເປັນອຸປະສັກຕໍ່ກັບການຈະເລີນເຕີບໂຕ ແລະ ການພັດທະນາຂອງເດັກນ້ອຍ ພ້ອມທັງກີດກັ້ນຄວາມສາມາດ ຂອງ ຜູ້ໃຫຍ່ ໃນການດຳລົງຊີວິດແບບເຕັມສ່ວນ ແລະ ມີສຸຂະພາບທີ່ດີ. ປະຊາກອນຢູ່ເຂດຊົນນະບົດຍິ່ງມີຄວາມສ່ຽງຕໍ່ກັບການຂາດການຄ້ຳປະກັນສະບຽງອາຫານ ຍ້ອນສະພາບພູມອາກາດທີ່ບໍ່ເອື້ອອຳນວຍ ແລະ ການຜະລິດກະສິກຳໃນລະດັບທີ່ຕ່ຳ. ເຖິງວ່າປະຊາຊົນຢູ່ເຂດຕົວເມືອງໄດ້ຮັບການປົກປ້ອງກໍຕາມ, ກໍຍັງມີຄວາມສ່ຽງທີ່ຈະຖືກກະທົບຈາກ ການເໜັງຕີງຂອງລາຄາສິນຄ້າ ແລະ ຕະຫຼາດທີ່ຂາດສະຖຽນລະພາບ ເຊິ່ງເປັນປາກົດການທີ່ເກີດຂຶ້ນຍ້ອນການແຜ່ລະບາດໂຄວິດ-19 ແລະ ອາດມີລັກສະນະຮ້າຍແຮງຂຶ້ນໃນຫຼາຍເດືອນຕໍ່ໜ້າ.

**ອີງຕາມການສຳຫຼວດຂອງສູນສະຖິຕິແຫ່ງຊາດ ແລະ ອົງການ UNICEF, ໄດ້ພົບເຫັນວ່າ 50 ສ່ວນຮ້ອຍ ຂອງ ເດັກນ້ອຍ ຢູ່ ສປປ ລາວ ຖືກຜົນກະທົບຈາກສາມຕົວຊີ້ບອກຄວາມຂາດເຂີນ ຫຼື ຫຼາຍກວ່ານັ້ນ.** ສະພາບການຍິ່ງຮ້າຍໄປກວ່ານັ້ນ ເມື່ອຄຳນຶງເຖິງຄວາມບໍ່ສະເໝີພາບ ທີ່ບໍ່ສາມາດແກ້ໄຂໄດ້ ແລະ ຂຶ້ນກັບປັດໄຈຕ່າງໆເປັນຕົ້ນແມ່ນ ຊົນເຜົ່າ, ພາສາ, ເພດ, ອາຍຸ, ລະດັບການສຶກສາ, ຄວາມພິການ ແລະ ສະຖານະເສດຖະກິດ-ສັງຄົມ. ການຂາດໂພຊະນາການເປັນບັນຫາທີ່ສຳຄັນຢ່າງຍິ່ງ ໂດຍທີ່ 33 ສ່ວນຮ້ອຍ ຂອງເດັກອາຍຸຕ່ຳກວ່າຫ້າປີ ປະສົບກັບບັນຫາການຂາດໂພຊະນາການຊ້ຳເຮື້ອແບບລວງສູງຕ່ຳກວ່າເກນມາດຕະຖານ ໃນປີ 2017. ຄວາມຊຸກຊຸມຂອງບັນຫາລວງສູງຕ່ຳກວ່າເກນມາດຕະຖານ ຢູ່ ນະຄອນຫຼວງວຽງຈັນເຫັນວ່າຕ່ຳກວ່າໝູ່ເຊິ່ງເທົ່າກັບ 13.6 ສ່ວນຮ້ອຍ ແລະ ສູງທີ່ສຸດຢູ່ ແຂວງຜົ້ງສາລີ ເຊິ່ງເທົ່າກັບ 54 ສ່ວນຮ້ອຍ. ທັງຜູ້ຊາຍ ແລະ ຜູ້ຍິງ ມີຂໍ້ຈຳກັດໃນການເຂົ້າເຖິງການບໍລິການສຸຂະພາບ ໂດຍສະເພາະແມ່ນເຂດຊົນນະບົດ. ເຖິງຢ່າງໃດກໍຕາມ, ຜູ້ຍິງ, ຍ້ອນມີພາລະບົດບາດໃນການຖືພາ, ຖືກຜົນກະທົບຈາກຂໍ້ຈຳກັດການເຂົ້າເຖິງການບໍລິການສຸຂະພາບຫຼາຍກວ່າ ແລະ ມີຄວາມສ່ຽງທີ່ຈະເສຍຊີວິດສູງກວ່າ. ນອກນັ້ນ, ການສຳຫຼວດ ກ່ຽວກັບຄວາມຮູ້-ທັດສະນະຄະຕິ-ພຶດຕິກຳ (KAP) ໂດຍທະນາຄານໂລກ ໃນເດືອນມີນາ 2023 ຊີ້ໃຫ້ເຫັນວ່າ ຢູ່ສີ່ແຂວງທີ່ເປັນເປົ້າໝາຍ (ຊຽງຂວາງ, ຫົວພັນ, ອຸດົມໄຊ ແລະ ຜົ້ງສາລີ), ໄດ້ມີປະຊາກອນກຸ່ມຊົນເຜົ່າທີ່ບໍ່ແມ່ນລາວ-ໄຕ ຫຼາຍ, ເຊິ່ງ 45.2 ສ່ວນຮ້ອຍຂອງເດັກອາຍຸຕ່ຳກວ່າຫ້າປີ ມີລວງສູງຕ່ຳກວ່າເກນມາດຕະຖານ ແລະ 22.3 ສ່ວນຮ້ອຍ ມີນ້ຳໜັກຕ່ຳກວ່າເກນມາດຕະຖານ. ເຫັນວ່າຄວາມແຕກໂຕນ ລະຫວ່າງ ກຸ່ມເສດຖະກິດສັງຄົມຕ່າງໆ ຍັງສູງ. ລວງສູງຕ່ຳກວ່າເກນມາດຕະຖານ ສົ່ງຜົນກະທົບຕໍ່ກັບບາງກຸ່ມຫຼາຍກ່ອນ ໂດຍສະເພາະແມ່ນບັນດາຄົວເຮືອນທີ່ທຸກຍາກ, ບໍ່ແມ່ນຊົນເຜົ່າລາວ-ໄຕ, ເດັກນ້ອຍຢູ່ເຂດຊົນນະບົດ ແລະ ປະຊາກອນທີ່ດຳລົງຊີວິດຢູ່ເຂດພູດອຍ. ເດັກນ້ອຍ ຂອງ ກຸ່ມປະຊາກອນທີ່ທຸກຍາກທີ່ສຸດມີອັດຕາລວງສູງ ແລະ ນ້ຳໜັກຕ່ຳກວ່າເກນມາດຕະຖານ ສູງກວ່າສາມເທົ່າຖ້າສົມທຽບໃສ່ກຸ່ມທີ່ຮັ່ງມີທີ່ສຸດ. ພ້ອມກັນນັ້ນ, ລູກຂອງແມ່ຍິງໄວໜຸ່ມ ຢູ່ເຂດຊົນນະບົດ ທີ່ມີລະດັບການສຶກສາຕ່ຳ ຍິ່ງມີອັດຕາລວງສູງຕ່ຳກວ່າເກນສູງ ຫຼື ສິບເທົ່າຕົວ ແລະ ເຮັດໃຫ້ເກີດມີຮອບວຽນການຂາດອາຫານແບບຊຳເຮື້ອຈາກຮຸ່ນສູ່ຮຸ່ນທີ່ບໍ່ສາມາດແກ້ໄຂໄດ້. ອັດຕາ

5 ເບິ່ງລາຍລະອຽດທີ່: https://www.worldbank.org/en/news/press-release/2020/10/20/lao-pdr-poverty-continues-to-decline-but-progress-under-threat#:~:text=Data%20from%20the%20LECS%20shows,(US%241)%20per%20day.

ການເກີດທີ່ສູງ ໃນກຸ່ມແມ່ຍິງໄວໜຸ່ມ, ຊ່ອງວ່າງໃນການບໍລິການຝາກທ້ອງ, ການກິນອາຫານ ແລະ ໃຫ້ອາຫານລູກທີ່ບໍ່ຖືກຫຼັກການ, ຂໍ້ຈຳກັດໃນການເຂົ້າເຖິງການບໍລິການເກີດລູກ ແລະ ການເບິ່ງແຍງດູແລສູດຕິສາດສຸກເສີນ, ການຂາດການວາງແຜນຄອບຄົວ, ຄວາມຫຍຸ້ງຍາກໃນການເຂົ້າເຖິງນໍ້າສະອາດ ແລະ ສຸຂະອະນາໄມ ແລະ ຄວາມທຸກຍາກ ທັງໝົດລ້ວນແລ້ວແຕ່ເຮັດໃຫ້ມີລະດັບການຂາດໂພຊະນາການສູງ ຢູ່ໃນປະເທດ.

**ຕົວຊີ້ບອກວຽກສາທາລະນະສຸກເຫັນວ່າມີການຍົກລະດັບ ແລະ ປັບປຸງໂດຍລວມນັບຕັ້ງແຕ່ປີ 2000 ຢູ່ ສປປ ລາວ ເປັນຕົ້ນແມ່ນ ອາຍຸຍືນສະເລ່ຍ, ອັດຕາການຕາຍຂອງແມ່ ແລະ ເດັກ, ແລະ ອັດຕາການຕາຍຂອງເດັກອາຍຸຕໍ່າກວ່າຫ້າປີ.** ເຖິງວ່າຈະມີການປັບປຸງກໍຕາມ, ປະເທດ ລາວ ຍັງມີອັດຕາການຕາຍຂອງເດັກທີ່ສູງທີ່ສຸດໃນພາກພື້ນ. ເຖິງວ່າຈະມີຄວາມຄືບໜ້າຢ່າງຫຼວງຫຼາຍ ໃນການຫຼຸດຜ່ອນການແຜ່ລະບາດ ຂອງ ພະຍາດ ທີ່ສາມາດປ້ອງກັນດ້ວຍການສັກຢາກັນພະຍາດກໍຕາມ, ການແຜ່ລະບາດຂອງ ໂຄວິດ-19 ເຮັດໃຫ້ມີຊ່ອງວ່າງດ້ານການບໍລິການສຸຂະພາບຂັ້ນພື້ນຖານ ແລະ ການສັກຢາກັນພະຍາດ ເຊິ່ງເຮັດໃຫ້ສູນເສຍຄວາມຄືບໜ້າ. ອັດຕາການສັກຢາກັນພະຍາດ ສໍາລັບເດັກ ແບບຄົບຖ້ວນ ຫຼຸດລົງ ຈາກ 76.3 ສ່ວນຮ້ອຍ ໃນປີ 2019 ເປັນ 68.6 ສ່ວນຮ້ອຍ ໃນປີ 2022 ແລະ ອັດຕາລວງສູງຕໍ່າກວ່າເກນມາດຕະຖານ ຄາດວ່າເພີ່ມຂຶ້ນຈາກ 33 ສ່ວນຮ້ອຍ ໃນປີ 2017 ເປັນ 37 ສ່ວນຮ້ອຍ ໃນປີ 2023[6] . ແຕ່ລະປີ, ມີເດັກນ້ອຍຫຼາຍ ກວ່າ 7,000 ຄົນທີ່ເສຍຊີວິດ ກ່ອນທີ່ຈະຮອດອາຍຸຫ້າປີ. ເຫດຜົນຂອງການເສຍຊີວິດສ່ວນໃຫຍ່ ຂອງ ເດັກນ້ອຍທີ່ທຸກຍາກ ແມ່ນຍ້ອນເປັນພະຍາດທີ່ສາມາດປ້ອງກັນ ແລະ ປິ່ນປົວໄດ້ ເປັນຕົ້ນແມ່ນພະຍາດຖອກທ້ອງ, ໝາກແດງ, ແລະ ເດັກນ້ອຍເກີດກ່ອນກໍານົດ ຍ້ອນຂໍ້ຈຳກັດໃນການເຂົ້າເຖິງການບໍລິການຂັ້ນພື້ນຖານຈຳເປັນທີ່ມີຄຸນນະພາບ. ມີການຄາດຄະເນວ່າມີຫຼາຍກວ່າ 400,000 ຄົນ ຖືກຜົນກະທົບຈາກພະຍາດໄຂ້ມາເລເລຍ (ເກືອບ 5.4 ສ່ວນຮ້ອຍ ຂອງປະຊາກອນທັງໝົດ) ໂດຍທີ່ມີອຸນຫະພູມເພີ່ມຂຶ້ນ ແລະ ໄພນໍ້າຖ້ວມທີ່ເກີດຂຶ້ນຈາກການປ່ຽນແປງດິນຟ້າອາກາດ. ພະຍາດໄຂ້ຍຸງ, ພະຍາດຍ່ຽວໜູ ແລະ ການເພີ່ມຂຶ້ນຂອງກໍລະນີຜູ້ເປັນພະຍາດຖອກທ້ອງ, ເຊິ່ງເປັນສາເຫດຂອງການເສຍຊີວິດຂອງ 11 ສ່ວນຮ້ອຍ ຂອງເດັກອາຍຸຕໍ່າກວ່າຫ້າປີຕໍ່ຈຳນວນທັງໝົດ, ຍິ່ງເຮັດໃຫ້ສະຖານະການຂາດໂພຊະນາການຂອງແມ່ຍິງ ແລະ ເດັກນ້ອຍຮ້າຍແຮງຂຶ້ນ[7].

**ການສຶກສາຍັງສືບຕໍ່ເປັນປັດໄຈສໍາຄັນທີ່ກ່ຽວຂ້ອງກັບຄວາມທຸກຍາກໂດຍກົງ.** ປະຊາຊົນທີ່ຢູ່ໃນຄົວເຮືອນທີ່ຫົວໜ້າຄອບຄົວບໍ່ມີການສຶກສາມີອັດຕາຄວາມທຸກຍາກຕໍ່ຫົວຄົນສູງທີ່ສຸດ ເຊິ່ງເທົ່າກັບ 34.6 ສ່ວນຮ້ອຍເຊິ່ງຫຼາຍກວ່າສິບເທົ່າຕົວຖ້າສົມທຽບໃສ່ອັດຕາຄວາມທຸກຍາກຂອງຄົວເຮືອນທີ່ຫົວໜ້າຄອບຄົວຢ່າງໜ້ອຍຮຽນຈົບຊັ້ນມັດທະຍົມ. ສ່ວນປັດໄຈການຜະລິດກະສິກໍາ ຫຼື ການວ່າງງານເປັນປັດໄຈຂັ້ນສອງທີ່ກ່ຽວຂ້ອງກັບຄວາມທຸກຍາກ. ຄວາມທຸກຍາກ ຍັງຢູ່ໃນລະດັບທີ່ສູງສໍາລັບບັນດາຄົວເຮືອນທີ່ມີຫົວໜ້າຄອບຄົວມີອາຊີບເປັນຊາວກະສິກອນເປັນຫຼັກກໍຄື 24.6 ສ່ວນຮ້ອຍ ໃນປີ 2018 ຖ້າສົມທຽບໃສ່ຕົວເລກສະເລ່ຍລະດັບຊາດ 18.3 ສ່ວນຮ້ອຍ. ນອກນັ້ນ, ກໍຍັງເປັນສັດສ່ວນທີ່ໃຫຍ່ທີ່ສຸດຂອງກຸ່ມປະຊາກອນທີ່ຊອກວຽກເຮັດງານທໍາ: 90 ສ່ວນຮ້ອຍຂອງຄົວເຮືອນທີ່ມີຫົວໜ້າຄອບຄົວວ່າງງານ ສ່ວນໃຫຍ່ເຮັດວຽກໃນຂະແໜງກະສິກໍາ ແລະ ວ່າງງານຕາມລະດູ. ປະເດັນທີສາມ, ອັດຕາຄວາມທຸກຍາກຍັງສູງໃນກຸ່ມຊົນເຜົ່າ ໂດຍສະເພາະແມ່ນກຸ່ມຊົນເຜົ່າມົ້ງ-ອິວມ້ຽນ ແລະ ມອນ-ຂະແມ (ເກືອບເຄິ່ງໜຶ່ງ ໃນປີ 2018).

**ນອກນັ້ນ, ສປປ ລາວ ຍັງຕ້ອງປະເຊີນໜ້າກັບຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດເຊັ່ນລວມມີ ອຸທົກກະໄພ, ດິນເຈື່ອນ, ໄພແຫ້ງແລ້ງ ແລະ ພາຍຸລົມຝົນເຂດຮ້ອນ ທີ່ສົ່ງຜົນກະທົບດ້ານລົບ ຕໍ່ກັບຜູ້ທຸກຍາກ ແລະ ມີຄວາມບອບບາງ.** ໂດຍທີ່ຮັບຮູ້ວ່າເປັນປະເທດທີ່ມີຄວາມສ່ຽງຈາກຜົນກະທົບ ຂອງ ການປ່ຽນແປງດິນຟ້າອາກາດ, ສປປ ລາວ ຖືກຈັດອັນດັບເປັນປະເທດທີ່ 142 ຈາກ 181 ປະເທດທັງໝົດ ສໍາລັບ ດັດສະນີຄວາມບອບບາງ ແລະ ຄວາມພ້ອມໃນການປັບຕົວກັບການປ່ຽນແປງດິນຟ້າອາກາດ (ND-GAIN) ອີງຕາມການປະເມີນປັດໄຈທາງການເມືອງ, ພູມສາດ ແລະ ສັງຄົມແບບປະສົມປະສານ[8]. ດິນບໍລິເວນສ່ວນໃຫຍ່ຈຳນວນໜຶ່ງກໍຍັງຖືກຜົນກະທົບຈາກບັນຫາລະເບີດບໍ່ທັນແຕກ (UXO).

6 Ministry of Health and the National Nutrition Sentinel Surveillance 2023.
7 WHO (2015). Climate and Health Country Profile: Lao People’s Democratic Republic.
8 https://climateknowledgeportal.worldbank.org/sites/default/files/2021-06/15505-Lao%20PDR%20Country%20Profile-WEB.pdf

# IV ຜົນໄດ້ຮັບຕົ້ນຕໍ

## 4.1. ການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມໂດຍສັງເຂບ

**ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ໄດ້ຖືກຮັບຮອງໃນປີ 2020 ໂດຍໄດ້ກຳນົດວິໄສທັດຮອດປີ 2030, ເປົ້າໝາຍ, ກິດຈະກຳ ແລະ ກອບການຈັດຕັ້ງປະຕິບັດ ຮອດປີ 2025.** ຍຸດທະສາດໄດ້ກຳນົດບັນດາເສົາຄ້ຳໃນ ສປປ ລາວ ເຊັ່ນ: ເສົາຄ້ຳດ້ານສະຫວັດດີການສັງຄົມ (ແບບບໍ່ປະກອບເງິນສົມທົບ), ປະກັນສັງຄົມ (ແບບປະກອບເງິນສົມທົບ) ແລະ ປະກັນສຸຂະພາບ (ຊຸດບໍລິການປິ່ນປົວສຸຂະພາບຈຳເປັນພື້ນຖານ). ເພື່ອຮັບປະກັນການຈັດຕັ້ງປະຕິບັດບັນດາແຜນງານປົກປ້ອງສັງຄົມແບບມີປະສິດທິຜົນໃຫ້ແກ່ປະຊາຊົນທີ່ດ້ອຍໂອກາດທີ່ສຸດ, ອົງການປົກຄອງຂັ້ນສູນກາງ, ຂັ້ນທ້ອງຖິ່ນ ແລະ ຜູ້ໃຫ້ບໍລິການ ຈະຮ່ວມມືປະສານສົມທົບໃນຂະບວນການທັງໝົດ. ຄະນະກຳມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມ ຖືກສ້າງຕັ້ງຂຶ້ນພາຍໃຕ້ຍຸດທະສາດ ແລະ ມີໜ້າທີ່ຮັບຜິດຊອບ ໃນການຈັດຕັ້ງປະຕິບັດ ແລະ ຕິດຕາມຄວາມຄືບໜ້າຂອງຍຸດທະສາດ. ຄະນະກຳມາທິການດັ່ງກ່າວມີໜ້າທີ່ອັນສຳຄັນໃນການປະສານງານລະຫວ່າງພາກລັດ ແລະ ຄູ່ຮ່ວມພັດທະນາ. ອົງການຈັດຕັ້ງປະຕິບັດຫຼັກໆປະກອບມີສີ່ພາກສ່ວນ ກໍຄື ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ກຊ ຮສສ), ກະຊວງ ກະສິກຳ ແລະ ປ່າໄມ້ (ກຊ ກປ), ກະຊວງສຶກສາທິການ ແລະ ກິລາ (ກຊ ສກ), ແລະ ກະຊວງສາທາລະນະສຸກ (ກຊ ສທ). ຄະນະກຳມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມ ເປັນອົງການຈັດຕັ້ງແບບບໍ່ປະຈຳການສັງກັດຢູ່ພາຍໃຕ້ ກະຊວງ ຮສສ ແລະ ມີກອງເລຂາເປັນເສນາທິການ. ຄະນະກຳມາທິການດັ່ງກ່າວ ປະກອບມີຄະນະຈາກບັນດາກະຊວງ ແລະ ອົງການຈັດຕັ້ງກ່ຽວຂ້ອງເຊັ່ນ: ກຊ ສກ, ກຊ ສທ, ກຊ ກປ, ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ, ກະຊວງການເງິນ, ສະຫະພັນກຳມະບານລາວ, ສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ, ແລະ ອົງການຈັດຕັ້ງມະຫາຊົນ. ນອກນັ້ນ, ຍັງໄດ້ສ້າງຕັ້ງບັນດາຄະນະກຳມະການຂັ້ນທ້ອງຖິ່ນຢູ່ແຕ່ລະແຂວງ, ເຊິ່ງເປັນປະທານ ໂດຍທ່ານຮອງເຈົ້າແຂວງ, ພະແນກແຮງງານ ສະຫວັດດີການ ແລະ ສັງຄົມ ເປັນຮອງປະທານ ແລະ ສະມາຊິກ ຈາກບັນດາພະແນກທ້ອງຖິ່ນກ່ຽວຂ້ອງ.

**ຄະນະກຳມາທິການ ເປັນອົງການຈັດຕັ້ງທີ່ບໍ່ປະຈຳການ, ມີໜ້າທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດຍຸດທະສາດໂດຍປະສານກັບອົງການຈັດຕັ້ງພາກລັດທຸກລະດັບ (ຂັ້ນສູນກາງ, ແຂວງ, ແລະ ເມືອງ), ຮ່ວມມືກັບຄູ່ຮ່ວມພັດທະນາ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ, ແລະ ການປະເມີນສະພາບການປົກປ້ອງສັງຄົມໂດຍລວມຢູ່ໃນປະເທດ ພ້ອມທັງບັນຫາຕ່າງໆທີ່ເກີດຂຶ້ນໃໝ່.** ຄະນະກຳມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມ ຍັງຕ້ອງໄດ້ຮັບປະກັນໃຫ້ມີການສະໜັບສະໜູນດ້ານການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດຈາກພາກລັດ. ໂດຍສະເພາະແມ່ນເຮັດພາລະບົດບາດໃນການສ້າງ ແລະ ສະໜັບສະໜູນດ້ານນິຕິກຳ, ການຮັບຮອງເອກະສານຍຸດທະສາດ, ການປະສານງານກັບພາກສ່ວນຕ່າງໆເພື່ອຮັບປະກັນການໃຫ້ຍຸດທະສາດປົກປ້ອງສັງຄົມຖືກຈັດຕັ້ງປະຕິບັດຢ່າງມີປະສິດຕິພາບ. ນອກຈາກນີ້, ແຜນຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມ ຍັງຖືກສ້າງຂຶ້ນເພື່ອເປັນທິດຊີ້ນຳໃນການຈັດຕັ້ງປະຕິບັດ.

**ຜົນການທົບທວນຊີ້ໃຫ້ເຫັນວ່າກິດຈະກຳການສ້າງຂີດຄວາມສາມາດແມ່ນໄດ້ສົ່ງຜົນຕໍ່ການປັບປຸງຂະບວນການຈັດຕັ້ງປະຕິບັດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ກິດຈະກຳສ້າງຂີດຄວາມສາມາດເຫຼົ່ານີ້ລວມມີການຝຶກອົບຮົມດ້ານວຽກງານປົກປ້ອງສັງຄົມໃຫ້ແກ່ 9 ແຂວງພາກເໜືອ ແລະ ການຝຶກອົບຮົມຄູຝຶກ.** ພ້ອມດຽວກັນນັ້ນ, ຄະນະກຳມາທິການແຫ່ງຊາດຍັງໄດ້ອຳນວຍຄວາມສະດວກໃນການເຂົ້າເຖິງການຝຶກອົບຮົມ, ໄດ້ຈັດກອງປະຊຸມສຳມະນາດ້ານວິຊາການກັບຄູ່ຮ່ວມພັດທະນາ, ແລະ ໄດ້ຈັດການໄປທັດສະນະສຶກສາແລກປ່ຽນບົດຮຽນກັບບັນດາປະເທດໃນອາຊຽນ. ສ່ວນໜຶ່ງຂອງກິດຈະກຳນີ້ແມ່ນ ການໄປທັດສະນະສຶກສາທີ່ປະເທດຟີລິບປິນ ທີ່ໄດ້ນຳເອົາບົດຮຽນທີ່ຖອດຖອນໄດ້ມາປັບນຳໃຊ້ຢູ່ ສປປ ລາວ ຕາມບໍລິບົດຕົວຈິງຂອງປະເທດ.

**ໄລຍະທຳອິດ ຂອງ ການຈັດຕັ້ງປະຕິບັດຍຸດທະສາດຖືກຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ຄວາມຫຍຸ້ງຍາກດ້ານເສດຖະກິດທີ່ສືບເນື່ອງມາຈົນເຖິງປະຈຸບັນ.** ເຖິງວ່າຈະມີອຸປະສັກດັ່ງກ່າວ, ກໍເຫັນວ່າມີຄວາມຄືບໜ້າໃນລະດັບທີ່ດີໃນການເພີ່ມທະວີຄວາມສອດຄ່ອງ ແລະ ການປະສານງານຫຼາຍດ້ານເປັນຕົ້ນແມ່ນທາງນິຕິກຳ, ນະໂຍບາຍ ແລະ ລະຫວ່າງອົງການຈັດຕັ້ງ. ນອກນັ້ນ, ກໍ່ເຫັນມີການການຈັດຕັ້ງປະຕິບັດໂຄງການທົດລອງການໃຫ້ເງິນອຸດໜູນສັງຄົມສົງເຄາະເຊິ່ງເປັນກາລະໂອກາດໃນການທົດສອບການນຳໃຊ້ລະບົບຄຸ້ມຄອງຂໍ້ມູນຂ່າວສານ ແລະ ກົນໄກການຊຳລະ. ອີງຕາມບົດລາຍງານການຕິດຕາມເສດຖະກິດ ສປປ ລາວ ຂອງ ທະນາຄານໂລກ, ໃນເດືອນພະຈິກ 2023, ເຫັນວ່າເສດຖະກິດຂອງ ສປປ ລາວ ກຳລັງຟື້ນຟູ ແລະ ການຂະຫຍາຍຕົວເທື່ອລະກ້າວ. ຄາດຄະເນການຂະຫຍາຍຕົວຂອງເສດຖະກິດໃນດ້ານບວກສຳລັບຊຸມປີຕໍ່ໜ້າ. ເຖິງວ່າການຈັດສັນງົບປະມານໃຫ້ແກ່ຂະແໜງສັງຄົມໄດ້ເພີ່ມຂຶ້ນໃນຊຸມປີຜ່ານມາກໍຕາມ, ລາຍຈ່າຍ ທັງໝົດ ຂອງ ພາກລັດ ສຳລັບວຽກສັງຄົມສົງເຄາະ (ລວມທັງທຶນ ODA) ຍັງບໍ່ຢູ່ໃນລະດັບທີ່ພຽງພໍ. ນອກນັ້ນ, ຍັງຈະມີຄວາມຕ້ອງການດ້ານການລະດົມທຶນຈາກພາກລັດ

ແບບຍືນຍົງເພີ່ມຂຶ້ນຍ້ອນຄາດວ່າການຊ່ວຍເຫຼືອຈາກຜູ້ໃຫ້ທຶນຈະຫຼຸດລົງໃນອານະຄົດ. ເຖິງວ່າການວາງແຜນງົບປະມານໄລຍະຍາວມີຄວາມສໍາຄັນແຕ່ປະຈຸບັນກໍຍັງບໍ່ທັນມີຂອບລາຍຈ່າຍໄລຍະກາງ (MTEF) ສໍາລັບ ການປົກປ້ອງສັງຄົມ.

**ນອກຈາກນີ້, ຄວາມພະຍາຍາມໃນການຍົກລະດັບການປົກປ້ອງສັງຄົມ ຍັງຕ້ອງປະເຊີນໜ້າກັບອຸປະສັກ ກໍຄືການຂາດງົບປະມານ.** ລາຍຈ່າຍດ້ານການປົກປ້ອງສັງຄົມຍັງຕໍ່າ. ມີຄວາມສໍາຄັນທີ່ຕ້ອງນໍາໃຊ້ຊັບພະຍາກອນທີ່ມີຢູ່ ສໍາລັບວຽກປົກປ້ອງສັງຄົມແບບມີປະສິດທິພາບ ແລະ ຮັບປະກັນໃຫ້ເກີດຜົນປະໂຫຍດສູງສຸດໂດຍການຊອກຫາວິທີການເຮັດວຽກແບບກົມກຽວຖ້າເປັນໄປໄດ້. ເຖິງວ່າການທົບທວນກາງສະໄໝ ຈະບໍ່ສາມາດຕອບໄດ້ທຸກຄໍາຖາມກໍຕາມ, ແຕ່ກໍຍັງມີຄໍາແນະນໍາຈໍານວນໜຶ່ງ ທີ່ມີທ່າແຮງໃນການຊ່ວຍການຈັດຕັ້ງປະຕິບັດຍຸດທະສາດໂດຍນໍາໃຊ້ຊັບພະຍາກອນທີ່ມີຢູ່ (ຖ້າອັດຕາເງິນສົມທົບບໍ່ມີການປ່ຽນແປງ) ຫຼື ປັບປຸງວິທີການສ້າງແຜນງານ ເພື່ອຍົກລະດັບປະສິດທິພາບ (ຖ້າຕົວຊີ້ບອກແຜນດໍາເນີນງານຍຸດທະສາດແທດເໝາະ) ໃນໄລຍະທີ່ສອງຂອງການຈັດຕັ້ງປະຕິບັດ.

## 4.1.1. ໂຄງຮ່າງການຈັດຕັ້ງ

**ການທົບທວນກາງສະໄໝ ຮັບຮູ້ເຖິງຄວາມຄືບໜ້າທີ່ພົ້ນເດັ່ນໃນການຈັດຕັ້ງປະຕິບັດວຽກງານການປັບປຸງນິຕິກໍາເພື່ອຍົກລະດັບຄວາມສອດຄ່ອງ ແລະ ການປະສານງານຫຼາຍດ້ານ.** ໂດຍສະເພາະແມ່ນການຈັດຕັ້ງປະຕິບັດດໍາລັດເລກທີ. 655/ນຍ ເພື່ອສ້າງຕັ້ງຄະນະກໍາມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມເຊິ່ງມີພາລະບົດບາດສໍາຄັນ. ນອກນັ້ນ, ກໍໄດ້ຈັດຕັ້ງປະຕິບັດຂໍ້ຕົກລົງເລກທີ 02/ຄປຊ ເຊິ່ງໄດ້ສ້າງຕັ້ງກອງເລຂາຂອງຄະນະກໍາມາທິການແຫ່ງຊາດທີ່ເຄື່ອນໄຫວຢູ່ທັງຂັ້ນສູນກາງ ແລະ ທ້ອງຖິ່ນ. ພ້ອມກັນນັ້ນ, ຂໍ້ຕົກລົງເລກທີ 03/ຄປຊ ກໍໄດ້ກໍານົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຄະນະກໍາມາທິການຢ່າງຈະແຈ້ງເພື່ອຮັບປະກັນການຄຸ້ມຄອງແບບມີປະສິດທິຜົນ. ເພື່ອຍົກລະດັບການຕິດຕາມ ແລະ ການປະເມີນຜົນ, ໄດ້ສ້າງຕັ້ງຄະນະກໍາມະການທີ່ມີໜ້າທີ່ຮັບຜິດຊອບສະເພາະກ່ຽວກັບວຽກສະຖິຕິ ແລະ ຕິດຕາມການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມພາຍໃຕ້ຂໍ້ຕົກລົງ ເລກທີ 1897/ຄປຊ. ຢູ່ຂັ້ນແຂວງ, ການສ້າງຕັ້ງຄະນະກໍາມະການປົກປ້ອງສັງຄົມແຂວງຖືວ່າເປັນບາດກ້າວທີ່ສໍາຄັນ. ບັນດາຄະນະກໍາມະການຂັ້ນແຂວງ, ເຊິ່ງເປັນປະທານໂດຍ ທ່ານ ຮອງ ເຈົ້າແຂວງ, ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມເປັນຮອງປະທານ ແລະ ປະກອບມີຄະນະຈາກບັນດາພະແນກຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ. ອົງປະກອບຂອງຄະນະທີ່ມີລັກສະນະທົ່ວເຖິງໄດ້ເອື້ອອໍານວຍໃຫ້ແກ່ການປະສານງານ ແລະ ຈັດຕັ້ງປະຕິບັດວຽກປົກປ້ອງສັງຄົມ ຂອງ ແຕ່ລະຂະແໜງການແບບຮອບດ້ານ. ໂດຍລວມແລ້ວ, ການປັບປຸງນິຕິກໍາທີ່ກ່ຽວຂ້ອງ ແລະ ການສ້າງຕັ້ງບັນດາຄະນະກໍາມະການຕ່າງໆ ໄດ້ປະກອບສ່ວນອັນໃຫຍ່ຫຼວງໃນການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກການປະສານງານການຈັດຕັ້ງປະຕິບັດການປົກປ້ອງສັງຄົມ. ການກໍານົດພາລະບົດບາດຢ່າງຈະແຈ້ງ, ຍົກລະດັບກົນໄກການປະສານງານ ແລະ ສົ່ງເສີມການຮ່ວມມືລະຫວ່າງອົງການຈັດຕັ້ງກ່ຽວຂ້ອງ ຈະເປັນພື້ນຖານໃຫ້ແກ່ການຈັດຕັ້ງປະຕິບັດແຜນງານປົກປ້ອງສັງຄົມ ແບບມີປະສິດທິພາບ ແລະ ປະສິດທິຜົນໃນອານະຄົດ.

**ໄລຍະເບື້ອງຕົ້ນຂອງການຈັດຕັ້ງປະຕິບັດຍຸດທະສາດໄດ້ສຸມໃສ່ແກ້ໄຂບັນຫາລະດັບການປົກປ້ອງທີ່ບໍ່ພຽງພໍສໍາລັບບຸກຄົນທີ່ຕ້ອງປະເຊີນກັບຄວາມສ່ຽງຕ່າງໆໃນຮອບວຽນຊີວິດເປັນຕົ້ນແມ່ນການວ່າງງານ, ບໍານານທີ່ບໍ່ພຽງພໍ ແລະ ສະພາບເງື່ອນໄຂອື່ນໆທີ່ອາດເຮັດໃຫ້ຕົກຢູ່ໃນຄວາມທຸກຍາກ ແລະ ຖືກສັງຄົມແບ່ງແຍກ.** ເພື່ອຄຸ້ມຄອງ ແລະ ຈັດຕັ້ງປະຕິບັດຍຸດທະສາດແບບມີປະສິດທິຜົນ, ຈຶ່ງໄດ້ສ້າງຕັ້ງໂຄງຮ່າງການຈັດຕັ້ງ ທີ່ຈະແຈ້ງ ກໍຄື ຄະນະກໍາມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມ ແລະ ກອງເລຂາ. ເຖິງຢ່າງໃດກໍຕາມ, ຍັງມີຄວາມຈໍາເປັນທີ່ຈະຕ້ອງກໍານົດໂຄງຮ່າງການຈັດຕັ້ງ, ກົນໄກການເຮັດວຽກ, ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບໃຫ້ຈະແຈ້ງກວ່າເກົ່າ ເພື່ອຍົກສູງຄວາມຮັບຜິດຊອບ. ທັງໝົດນີ້ຈະປະກອບສ່ວນໃຫ້ແກ່ການຫຼຸດຜ່ອນຄວາມທຸກຍາກ, ສົ່ງເສີມການມີສ່ວນຮ່ວມຂອງສັງຄົມທຸກພາກສ່ວນ, ແລະ ຮັບປະກັນອະນາຄົດທີ່ມີຄວາມໝັ້ນຄົງສໍາລັບບຸກຄົນທີ່ຕ້ອງປະເຊີນໜ້າກັບຄວາມສ່ຽງຕ່າງໆໃນຮອບວຽນຊີວິດແຕ່ລະໄລຍະ.

**ກົນໄກການຄຸ້ມຄອງປະຈຸບັນແມ່ນນໍາໃຊ້ຮູບແບບສາຍຕັ້ງທີ່ບັນດາກະຊວງຂະແໜງການຢູ່ຂັ້ນສູນກາງເປັນຜູ້ນໍາພາຂະບວນການວາງແຜນ ແລະ ການຕິດຕາມ, ສ່ວນຂະແໜງການພາກລັດທີ່ກ່ຽວຂ້ອງຢູ່ຂັ້ນແຂວງ ແລະ ຂັ້ນເມືອງ ເປັນຜູ້ຈັດຕັ້ງປະຕິບັດ.** ເຖິງຢ່າງໃດກໍຕາມ, ຮູບແບບນີ້ເຮັດໃຫ້ມີຊ່ອງວ່າງ ແລະ ການເຮັດວຽກແບບບໍ່ລວມສູນໂດຍສະເພາະແມ່ນຢູ່ຂັ້ນທ້ອງຖິ່ນທີ່ຕ້ອງເອື່ອຍອີງຂັ້ນສູນກາງເພື່ອການຈັດສັນຊັບພະຍາກອນ ລວມທັງການຈັດສັນງົບປະມານ. ມີຄວາມຈໍາເປັນທີ່ຕ້ອງປັບປຸງກົນໄກການຄຸ້ມຄອງ ເພື່ອປັບປຸງການປະສານງານ ແລະ ການມຮ່ວມມືແບບມີປະສິດທິຜົນ. ການປັບປຸງກົນໄກ ແລະ ໂຄງຮ່າງການຈັດຕັ້ງຈະສາມາດອໍານວຍໃຫ້ແກ່ການປະສານສົມທົບ ແລະ ນໍາໃຊ້ຊັບພະຍາກອນ ແລະ ບັນລຸຜົນໄດ້ຮັບທີ່ດີກວ່າເກົ່າ.

## 4.1.2. ກອງເລຂາຂອງຄະນະກໍາມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມ

**ການທົບທວນຄັ້ງນີ້ຍັງໄດ້ຍົກໃຫ້ເຫັນເຖິງພາລະບົດບາດການນໍາພາຂອງກອງເລຂານຸການສົ່ງເສີມການຈັດຕັ້ງປະຕິບັດ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ.** ບັນດາພາກສ່ວນທີ່ກ່ຽວຂ້ອງ ລວມທັງບັນດາກະຊວງ, ອົງການຈັດຕັ້ງສັງຄົມ ແລະ ຄູ່ຮ່ວມພັດທະນາ ຮັບຮູ້ເຖິງພາລະ

ບົດບາດດັ່ງກ່າວ ແລະ ເຫັນວ່າ ຄະນະກຳມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມ ເປັນຈຸດປະສານງານ ເພື່ອແກ້ໄຂບັນຫາທີ່ຕິດພັນກັບນະໂຍບາຍ ແລະ ການດຳເນີນງານ. ເຖິງຢ່າງໃດກໍຕາມ, ກອງເລຂາຍັງພົບພໍ້ກັບສິ່ງທ້າທາຍ ໃນການຈັດກອງປະຊຸມ ແລະ ເຕົ້າໂຮມບັນດາກະຊວງໃຫຍ່ຕ່າງໆ.

**ການຮັບຮູ້ເຖິງຈຸດເຂັ້ມແຂງ ຂອງ ກອງເລຂາ**

ການທົບທວນຮັບຮູ້ເຖິງຄວາມຊັບຊ້ອນ ແລະ ສິ່ງທ້າທາຍດ້ານການຈັດການຕ່າງໆ ທີ່ກອງເລຂາຕ້ອງພົບພໍ້ໃນການເຮັດວຽກ ແລະ ເນັ້ນໜັກເຖິງຄວາມສຳຄັນຂອງພາລະບົດບາດຂອງກອງເລຂາ. ເວົ້າສະເພາະ, ພາກສ່ວນກ່ຽວຂ້ອງໄດ້ສະແດງຄວາມເພິ່ງພໍໃຈໃຫ້ແກ່ຄະນະກຳມາທິການໃນການປະສານງານ ແລະ ການເຮັດວຽກຢ່າງຕັ້ງໜ້າຂອງກອງເລຂາ.

**ອຸປະສັກຕົ້ນຕໍ**

ໃນຂະນະທີ່ຮັບຮູ້ເຖິງຄວາມສຳຄັນຂອງວຽກກອງເລຂາ, ໜຶ່ງໃນສິ່ງທ້າທາຍຕົ້ນຕໍ ແມ່ນການຈັດສັນຊັບພະຍາກອນທີ່ບໍ່ພຽງພໍໃຫ້ແກ່ ຄະນະກຳມາທິການ ໃນການປະຕິບັດໜ້າທີ່ຂອງຕົນ. ກອງເລຂາ ແມ່ນຍັງມີຂະໜາດນ້ອຍ ແລະ ມີພະນັກງານລັດຖະກອນ ຂອງ ກຊ ຮສສ ຈຳນວນໜຶ່ງເທົ່ານັ້ນ ທີ່ປະຕິບັດວຽກງານ ເຊິ່ງເປັນວຽກເພີ່ມນອກຈາກວຽກປະຈຳຂອງເຂົາເຈົ້າ. ດັ່ງນັ້ນ, ຈຶ່ງເຮັດໃຫ້ມີຄວາມຊັກຊ້າໃນການດຳເນີນງານ. ເຖິງວ່າແມ່ນວ່າຄະນະກຳມາທິການຈະຖືກສ້າງຕັ້ງຂຶ້ນດ້ວຍດຳລັດກໍຕາມ, ກໍເຫັນວ່າຍັງມີຂໍ້ຈຳກັດດ້ານການຈັດສັນງົບປະມານທີ່ບໍ່ພຽງພໍ ແລະ ບໍ່ສະໝໍ່າສະເໝີເພື່ອຈັດກອງປະຊຸມ, ດຳເນີນວຽກງານຄົ້ນຄວ້າ ແລະ ການພັດທະນາ ແລະ ການຕິດຕາມກວດກາ. ວຽກສ່ວນໃຫຍ່ແມ່ນໄດ້ຮັບການຊ່ວຍເຫຼືອດ້ານວິຊາການ ແລະ ທຶນຮອນຈາກຄູ່ຮ່ວມພັດທະນາ. ການຊ່ວຍເຫຼືອແມ່ນສຸມໃສ່ຫຼາຍກິດຈະກຳເຊັ່ນ: ງົບປະມານເພື່ອປະຕິບັດພາລະບົດບາດຫຼັກ, ການພັດທະນາລະບົບ, ການທົດລອງການຈັດຕັ້ງປະຕິບັດແຜນງານສັງຄົມສົງເຄາະ, ແລະ ການສຳຫຼວດດ້ານວິຊາການເປັນຕົ້ນແມ່ນ ການທົບທວນກາງສະໄໝ. ອີກສິ່ງທ້າທາຍໜຶ່ງ ແມ່ນຂໍ້ຈຳກັດດ້ານງົບປະມານເພື່ອເຜີຍແຜ່ຍຸດທະສາດປົກປ້ອງສັງຄົມ ໃຫ້ແກ່ບັນດາກະຊວງຂະແໜງການກ່ຽວຂ້ອງພ້ອມທັງຢູ່ຂັ້ນແຂວງ ແລະ ເພື່ອຈັດການຝຶກອົບຮົມໃຫ້ແກ່ພະນັກງານຢູ່ຂັ້ນແຂວງ ແລະ ເມືອງ. ນອກນັ້ນ, ການເກັບກຳຂໍ້ມູນ ເພື່ອຕິດຕາມຄວາມຄືບໜ້າຍັງມີຂໍ້ຈຳກັດ ໂດຍສະເພາະແມ່ນສຳລັບເສົ້າຄໍ້າ ສະຫວັດດີການສັງຄົມ.

**ນອກນັ້ນກໍເຫັນວ່າສິດອຳນາດ ແລະ ຄວາມສາມາດຂອງການໂນ້ມນ້າວຂອງກອງເລຂາມີຂໍ້ຈຳກັດຈຶ່ງເຮັດໃຫ້ການສື່ສານ ແລະ ການປະສານງານຂອງກອງເລຂາບໍ່ໄດ້ຮັບບູລິມະສິດ ແລະ ລະດັບຜູ້ທີ່ສາມາດຕັດສິນບັນຫາກໍບໍ່ເຂົ້າຮ່ວມກອງປະຊຸມ.** ຢູ່ຂັ້ນແຂວງກໍເຫັນວ່າມີອຸປະສັກທີ່ຄ້າຍຄຽງກັນ. ວິທີການແກ້ໄຂອາດແມ່ນການຍົກລະດັບກອງເລຂາ ແລະ ເຊື່ອມສານເຂົ້າລະດັບທີ່ເໝາະສົມ. ຖ້າຍົກລະດັບສະຖານະ ຂອງ ກອງເລຂາ ໂດຍການໃຫ້ສິດອຳນາດໃນການປະສານງານວຽກປົກປ້ອງສັງຄົມລະຫວ່າງບັນດາກະຊວງຂະແໜງການ ແລະ ພະແນກຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ. ອີກວິທີການໜຶ່ງ ແມ່ນການສົ່ງເສີມການມີສ່ວນຮ່ວມ ຂອງ ກົມແຜນການ ຂອງ ແຕ່ລະກະຊວງແບບຮອບດ້ານ ເນື່ອງຈາກວ່າກົມມີໜ້າທີ່ຮັບຜິດຊອບໃນການສ້າງນະໂຍບາຍ ແລະ ການປະສານງານລະຫວ່າງກະຊວງກ່ຽວຂ້ອງ. ວິທີນີ້ສາມາດສ້າງສາຍພົວພັນເຊື່ອມຈອດລະຫວ່າງກອງເລຂາ ແລະ ກະຊວງອື່ນໆ ພ້ອມທັງເອື້ອອຳນວຍການປະສານງານ ແລະ ການສື່ສານ.

**ມີຄວາມສຳຄັນຢ່າງຍິ່ງທີ່ກອງເລຂາຕ້ອງກຳນົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຕົນຢ່າງຈະແຈ້ງເພື່ອສາມາດຄຸ້ມຄອງຂະບວນການເຮັດວຽກແບບມີປະສິດທິພາບ.** ຂົງເຂດໜ້າວຽກຫຼັກຂອງກອງເລຂາທີ່ຄວນໄດ້ຮັບການເອົາໃຈໃສ່ເຊັ່ນ:

- ພັດທະນານະໂຍບາຍ ແລະ ການໂຄສະນາເຜີຍແຜ່

- ການປະສານລະຫວ່າງຂະແໜງການ (ລວມທັງການຮັບປະກັນຄຸນນະພາບ ແລະ ການກຳນົດມາດຕະຖານ

- ການຄຸ້ມຄອງກົນໄກການປະສານງານ

- ການວາງແຜນ ແລະ ຂຶ້ນແຜນງົບປະມານ

- ການລະດົມທຶນ, ແລະ

- ການຕິດຕາມປະເມີນຜົນ ແລະ ການແລກປ່ຽນຖອດຖອນບົດຮຽນ.

**ດັ່ງນັ້ນ, ກອງເລຂາບໍ່ຄວນມີສ່ວນຮ່ວມໃນການຈັດຕັ້ງປະຕິບັດເນື່ອງຈາກວ່າອາດເຮັດໃຫ້ຂາດຄວາມເອົາໃຈໃສ່ວຽກບູລິມະສິດຕົ້ນຕໍຂອງຕົນ.** ຜູ້ເຂົ້າຮ່ວມການສຳພາດ ກໍໄດ້ເວົ້າເຖິງສິ່ງທ້າທາຍຈຳນວນໜຶ່ງ ທີ່ເກີດຂຶ້ນ ຍ້ອນການກຳນົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບບໍ່ຈະແຈ້ງ, ການຈັດສັນໜ້າວຽກ, ແລະ ພະນັກງານຈຳນວນໜ້ອຍທີ່ມີບໍລິມາດວຽກສູງເຊິ່ງເກີດຍ້ອນຂາດການຊີ້ນຳນຳພາທີ່ເຂັ້ມແຂງພາຍໃນກອງເລຂາ ເອງ. ຜົນສະທ້ອນທີ່ຕາມມາກໍຄື ມີພະນັກງານຈຳນວນໜ້ອຍທີ່ຮັບຜິດຊອບຫຼາຍໜ້າວຽກ ແລະ ເປັນຜູ້ທີ່ໄດ້ຮັບໂອກາດໃນການສ້າງຂີດຄວາມສາມາດ/ຊ່ວຍເຫຼືອຈາກ ຄູ່ຮ່ວມພັດທະນາສ່ວນໃຫຍ່. ສະພາບການແບບນີ້ ມີຄວາມສ່ຽງ ຕໍ່ກັບຄວາມຍືນຍົງ ແລະ ຂີດຄວາມສາມາດຂອງອົງການຈັດຕັ້ງ ຖ້າພິຈາລະນາ ຜົນກະທົບຂອງກໍລະນີທີ່ບຸກຄົນໃດໜຶ່ງທີ່ກ່າວມານັ້ນລາອອກ ຫຼື ຍ້າຍຕຳແໜ່ງ.

**ນອກນັ້ນ, ການທົບທວນຍັງໄດ້ຊີ້ໃຫ້ເຫັນເຖິງການຂາດການສື່ສານແບບເປັນປະຈຳລະຫວ່າງອົງການຈັດຕັ້ງປະຕິບັດ ແລະ ຄະນະກຳມະການຂັ້ນທ້ອງຖິ່ນ.** ຜົນຂອງການສຳພາດທັງຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນແນະນຳໃຫ້ກອງເລຂາເພີ່ມການມີສ່ວນຮ່ວມໃນວຽກວິຊາການ ແລະ

ໃຫ້ຄຳຄິດເຫັນເພີ່ມຕື່ມຕໍ່ກັບແຜນການ ແລະ ບົດລາຍງານການຕິດຕາມ ແລະ ການປະເມີນຜົນ ທີ່ຄະນະກຳມະການຂັ້ນທ້ອງຖິ່ນ ແລະ ອົງການຈັດຕັ້ງປະຕິບັດໄດ້ນຳສົ່ງໃຫ້. ແຕ່ກໍຕ້ອງຮັບຮູ້ວ່າການແຈ້ງການກ່ຽວກັບການຈັດກອງປະຊຸມ ແລະ ການນຳສົ່ງເອກະສານບໍ່ມີແຜນການ ແລະ ສ່ວນໃຫຍ່ຈະເປັນລັກສະນະເລັ່ງດ່ວນ. ຜູ້ເຂົ້າຮ່ວມການສຳພາດຈຳນວນໜຶ່ງໄດ້ສະແດງຄວາມເປັນຫວ່ງວ່າບັນຫາທີ່ສຳຄັນບໍ່ໄດ້ຖືກຍົກຂຶ້ນແບບເປັນປະຈຳໃຫ້ແກ່ຂັ້ນເທິງຮັບຮູ້ ແລະ ຜູ້ທີ່ມີອຳນາດຕັດສິນຢູ່ກະຊວງຂະແໜງການກ່ຽວຂ້ອງ ແລະ ບໍ່ສາມາດແກ້ໄຂໄດ້ແບບທັນການ.

**ຢູ່ເຂດອື່ນກໍເຫັນວ່າຂັ້ນຕອນການສ້າງໂຄງຮ່າງກົນຈັດຕັ້ງຂັ້ນທ້ອງຖິ່ນຕ້ອງໃຊ້ເວລາຫຼາຍ ແລະ ການປະຕິບັດງານຕົວຈິງມີຄວາມແຕກຕ່າງກັນລະຫວ່າງແຕ່ລະແຂວງ.** ປະຈຸບັນ, ຄະນະກຳມາທິການແຫ່ງຊາດ ແລະ ຄະນະກຳມະການຂັ້ນແຂວງຍັງບໍ່ທັນສາມາດປະຕິບັດພາລະບົດບາດສຳຄັນໃນການປະສານງານ ແລະ ຮັບປະກັນຄວາມກົມກຽວໃນການເຮັດວຽກ. ໃນຄວາມເປັນຈິງເຫັນວ່າມີອະຄະຕິຕໍ່ກັບການສະໜັບສະໜູນ ການຈັດຕັ້ງປະຕິບັດຍຸດທະສາດເຊິ່ງເປັນບັນຫາທີ່ເກີດຂຶ້ນຍ້ອນຂໍ້ຈຳກັດດ້ານສິດອຳນາດ ແລະ ອິດທິພົນຂອງກອງເລຂາ. ນອກນັ້ນ, ກໍບໍ່ມີຈຸດປະສານງານສຳລັບແຕ່ລະແຂວງ ເພື່ອໃຫ້ຄະນະກຳມາທິການ ແລະ ກອງເລຂາເຮັດວຽກນຳໂດຍກົງ. ດ້ວຍເຫດນີ້ ຈຶ່ງເຮັດໃຫ້ມີການປະສານງານເກີດຂຶ້ນກັບຫຼາຍພາກສ່ວນໄປພ້ອມກັນ ແລະ ກໍ່ໃຫ້ເກີດມີຄວາມສັບສົນ ແລະ ຂາດຄວາມຮັບຜິດຊອບ. ສ່ວນການຮັບຮູ້ກ່ຽວກັບຍຸດທະສາດກໍຍັງມີຂໍ້ຈຳກັດຫຼາຍ ແລະ ມີພຽງແຕ່ ບັນດາແຂວງພາກເໜືອທີ່ໄດ້ຮັບການຝຶກອົບຮົມກ່ຽວກັບ ການຈັດຕັ້ງປະຕິບັດຍຸດທະສາດຈາກໂຄງການເມືອກ່ອນ ແຕ່ພາກກາງ ແລະ ພາກໃຕ້ ຍັງບໍ່ທັນໄດ້ຮັບການຝຶກອົບຮົມເທື່ອ.

**ໃນຂະນະທີ່ກອງເລຂາມີຄວາມພະຍາຍາມຫຼາຍໃນການກະກຽມ ແລະ ອຳນວຍຄວາມສະດວກໃນການຈັດກອງປະຊຸມແຕ່ກໍຍັງເຫັນວ່າຕ້ອງມີຄວາມພະຍາຍາມເພີ່ມຕື່ມໃນວຽກບໍລິຫານກອງປະຊຸມໂດຍລວມ.** ອີກຄັ້ງ, ຂໍ້ຈຳກັດດ້ານສິດອຳນາດເປັນສິ່ງທ້າທາຍໃນການຮັບປະກັນການເຂົ້າຮ່ວມກອງປະຊຸມຂອງພາກສ່ວນກ່ຽວຂ້ອງຕ່າງໆ. ໃນການສຳພາດ, ຜູ້ເຂົ້າຮ່ວມການສຳພາດຍັງໄດ້ກ່າວວ່າ ຫົວໜ້າກົມຂອງບັນດາກົມກ່ຽວຂ້ອງປະຈຳແຕ່ລະກະຊວງ ສ່ວນໃຫຍ່ຈະບໍ່ໃຫ້ຄວາມສຳຄັນຕໍ່ກັບກອງປະຊຸມທີ່ກ່ຽວຂ້ອງກັບການປົກປ້ອງສັງຄົມປານໃດ ແລະ ສົ່ງພະນັກງານໃໝ່ທີ່ບໍ່ມີອຳນາດໃນການຕັດສິນບັນຫາເຂົ້າຮ່ວມເທົ່ານັ້ນ. ປາກົດການດັ່ງກ່າວເປັນການສ້າງອຸປະສັກຕໍ່ກັບຂະບວນການປຶກສາຫາລືແລະ ພາໃຫ້ຂາດປະສິດທິຜົນ.

**ພ້ອມກັນນັ້ນ, ກໍ່ເຫັນວ່າຍັງຂາດການຈັດກອງປະຊຸມສະໄໝສາມັນຂອງຄະນະກຳມາທິການເພື່ອການປົກປ້ອງສັງຄົມເພື່ອໃຫ້ຂໍ້ມູນຂ່າວສານລ່າສຸດໃຫ້ແກ່ບັນດາພາກສ່ວນກ່ຽວຂ້ອງ ພ້ອມທັງສົ່ງເສີມການມີສ່ວນຮ່ວມໃນຂະບວນການຈັດຕັ້ງປະຕິບັດ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ.** ຍັງບໍ່ມີແຜນດຳເນີນງານ ຫຼື ແຜນວຽກທີ່ຈະແຈ້ງສຳລັບກອງເລຂາ ເຊິ່ງມີຄວາມສຳຄັນໃນການລະບຸຕາຕະລາງເວລາເພື່ອຈັດກອງປະຊຸມ ແລະ ເງື່ອນໄຂທີ່ແຕ່ລະພາກສ່ວນກ່ຽວຂ້ອງຕ້ອງປະຕິບັດ ແລະ ກະກຽມກ່ອນຮອດມື້ປະຊຸມ. ການແກ້ໄຂບັນຫາເຫຼົ່ານີ້ສາມາດເຮັດໃຫ້ການຈັດຕັ້ງກອງປະຊຸມງ່າຍຂຶ້ນ ແລະ ການຍົກບັນຫາຕ່າງໆເພື່ອແກ້ໄຂໃຫ້ທັນເວລາ.

**ຜູ້ໃຫ້ຂໍ້ມູນຫຼັກຈາກ ກຊ ຮສສ ແລະ ອົງການຈັດຕັ້ງອື່ນໆ ໄດ້ລາຍງານວ່າ ການປະສານສົມທົບໂດຍລວມກັບຜູ້ໃຫ້ທຶນ ແລະ ພາກສ່ວນທີ່ບໍ່ສັງກັດລັດຖະບານທີ່ປະກອບສ່ວນໃນການຈັດຕັ້ງປະຕິບັດຍຸດທະສາດແມ່ນໜ້າທີ່ຮັບຜິດຊອບຂອງ ກອງເລຂາ.** ເຖິງຢ່າງໃດກໍຕາມ, ການລະດົມທຶນຊ່ວຍເຫຼືອແມ່ນຈັດຕັ້ງປະຕິບັດໄປຕາມແຕ່ລະເສົາຄໍ້າແບບແຍກກັນເຊິ່ງສ່ວນໃຫຍ່ແມ່ນຂຶ້ນກັບພັນທະຄວາມໝາຍໝັ້ນ ຫຼື ຂົງເຂດສະເພາະທີ່ຜູ້ໃຫ້ທຶນໃຫ້ຄວາມສຳຄັນ. ພ້ອມກັນນັ້ນ, ຍັງບໍ່ທັນມີການເກັບກຳຂໍ້ມູນ ກ່ຽວກັບກິດຈະກຳ ແລະ ງົບປະມານການຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາທີ່ສະໜັບສະໜູນການຈັດຕັ້ງປະຕິບັດຍຸດທະສາດ. ການປະສານງານລະຫວ່າງຄູ່ຮ່ວມພັດທະນາ ແລະ ກະຊວງ ຮສສ ກໍ່ເປັນສິ່ງທ້າທາຍຍ້ອນຂາດໜ່ວຍງານຂະແໜງການປົກປ້ອງສັງຄົມສະເພາະເພື່ອອຳນວຍຄວາມສະດວກການວາງແຜນຮ່ວມກັນ. ເພື່ອແກ້ໄຂສິ່ງທ້າທາຍດ້ານການປະສານງານນີ້, ຈຶ່ງໄດ້ສະເໜີໃຫ້ສ້າງໜ່ວຍງານວິຊາການ - ໂດຍອາດຈະເປັນກຸ່ມຮັບຜິດຊອບຜົນໄດ້ຮັບດ້ານການປົກປ້ອງສັງຄົມຂອງອົງການ ສປຊ UNSDCF ແລະ ມີກອງເລຂາເປັນຈຸດປະສານງານຫຼັກ.

## 4.1.3. ການຄຸ້ມຄອງຂັ້ນທ້ອງຖິ່ນ

**ຍຸດທະສາດປົກປ້ອງສັງຄົມແຫ່ງຊາດໄດ້ຮຽກຮ້ອງໃຫ້ຄະນະກຳມະການຂັ້ນແຂວງເປັນຜູ້ຄຸ້ມຄອງ, ປະສານງານ, ຕິດຕາມ ແລະ ຈັດຕັ້ງປະຕິບັດວຽກຕົວຈິງຢູ່ຂັ້ນທ້ອງຖິ່ນ.** ແນວຄວາມຄິດເບື້ອງຕົ້ນແມ່ນໃຫ້ຄະນະກຳມະການຂັ້ນແຂວງເປັນຜູ້ຮັບຜິດຊອບການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນດຳເນີນງານຢູ່ລະດັບທ້ອງຖິ່ນ. ໜຶ່ງໃນຜົນສຳເລັດຕົ້ນຕໍຂອງຍຸດທະສາດແມ່ນການສ້າງຕັ້ງຄະນະກຳມະການຂັ້ນແຂວງຢູ່ຄົບ 18 ແຂວງ. ແຕ່ເຖິງວ່າຈະມີການສ້າງຕັ້ງກໍບໍ່ໝາຍຄວາມວ່າຄະນະກຳມະການຂັ້ນແຂວງຈະສາມາດປະຕິບັດງານໄດ້ຢູ່ທຸກແຂວງເຊັ່ນ: ຢູ່ແຂວງຈຳປາສັກ. ນອກນັ້ນ, ກໍບໍ່ມີການແຕ່ງຕັ້ງຜູ້ປະສານງານຍຸດທະສາດຂັ້ນທ້ອງຖິ່ນຢູ່ແຕ່ລະແຂວງ ຫຼື ເມືອງ.

**ເຖິງວ່າຄວາມຮັບຮູ້ກ່ຽວກັບຍຸດທະສາດປົກປ້ອງສັງຄົມແຫ່ງຊາດຢູ່ຂັ້ນສູນກາງກວ້າງຂວາງ, ຢູ່ຂັ້ນແຂວງ ແລະ ຂັ້ນເມືອງແມ່ນຍັງມີໜ້ອຍ. ບັນດາຄະນຳກຳມະການຂັ້ນວິຊາການຍັງບໍ່ສາມາດກຳໄດ້ກ່ຽວກັບໜ້າທີ່ຮັບຜິດຊອບ ແລະ ບູລິມະສິດຂອງແຂວງຕົນ.** ຄະນະກຳມາທິການ (ກອງ

ເລຂາ) ຄວນໃຫ້ບູລິມະສິດໃຫ້ແກ່ການໂຄສະນາເຜີຍແຜ່ເພື່ອຍົກລະດັບຄວາມຮັບຮູ້ກ່ຽວກັບຍຸດທະສາດ ແລະ ໃຫ້ການຊ່ວຍເຫຼືອ ໂດຍສະເພາະແມ່ນການກຳນົດຄວາມບອບບາງສະເພາະ ແລະ ບູລິມະສິດການຈັດຕັ້ງປະຕິບັດ.

**ໃນຂະນະທີ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ມີພາລະບົດບາດໃນການປົກປ້ອງສັງຄົມ, ຄະນະກຳມະການຂັ້ນແຂວງກໍ່ມີຄວາມສຳຄັນໃນການສະໜັບສະໜູນການຈັດຕັ້ງປະຕິບັດແຜນງານປົກປ້ອງສັງຄົມ ແລະ ຕິດຕາມປະສິດທິຜົນ.** ນອກນັ້ນ, ກໍ່ສາມາດສະໜອງຂໍ້ມູນຂ່າວສານເພື່ອເປັນພື້ນຖານໃຫ້ແກ່ການປັບປຸງນະໂຍບາຍ. ເຖິງຢ່າງໃດກໍຕາມ, ຢູ່ ສປປ ລາວ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງຈຳປາສັກໄດ້ຍົກໃຫ້ເຫັນເຖິງສິ່ງທ້າທາຍໃນການສ້າງລະບົບປົກປ້ອງສັງຄົມຮອບດ້ານ ຍ້ອນບໍ່ມີການສື່ສານ ແລະ ກຳນົດຈະແຈ້ງ ກ່ຽວກັບໜ້າທີ່ຮັບຜິດຊອບ ແລະ ພາລະບົດບາດຂອງບັນດາຄະນະກຳມະການຂັ້ນແຂວງ ພ້ອມທັງການຈັດສັນຊັບພະຍາກອນທີ່ບໍ່ພຽງພໍ.

**ອີງຕາມການສຳພາດ, ການເຮັດວຽກແບບບໍ່ລວມສູນເປັນອີກສິ່ງທ້າທາຍອັນໃຫຍ່ຫຼວງໃນການກຳນົດເປົ້າໝາຍ. ຖານຂໍ້ມູນປົກປ້ອງສັງຄົມ, ໂດຍສະເພາະສຳລັບວຽກສະຫວັດດີ ການສັງຄົມຍັງບໍ່ທັນໄດ້ຖືກສ້າງຕັ້ງຂຶ້ນ.** ນອກນັ້ນ, ຂອບວຽກທີ່ຈຳເປັນເພື່ອຮັບປະກັນການອັບເດດຖານຂໍ້ມູນຍັງບໍ່ສົມບູນ. ດັ່ງນັ້ນ, ບັນດາຄະນະກຳມະການຂັ້ນແຂວງຈຶ່ງມີຄວາມເປັນຫ່ວງກ່ຽວກັບຄວາມຊັດເຈນ ແລະ ຄວາມສາມາດໃນການເຊື່ອຖືຖານຂໍ້ມູນ. ປະຈຸບັນນີ້, ກໍຍັງນຳໃຊ້ລະບົບ Excel ຂັ້ນພື້ນຖານເພື່ອຈະສາມາດດັດແກ້ຂໍ້ມູນເຊັ່ນການດັດແກ້ຂໍ້ມູນທີ່ຜິດພາດ.

**ພ້ອມກັນນັ້ນ, ການມີສ່ວນຮ່ວມຂອງອົງການປົກຄອງຂັ້ນທ້ອງຖິ່ນໃນຂະບວນການກຳນົດກຸ່ມເປົ້າໝາຍສຳລັບບາງແຜນງານເຮັດໃຫ້ມີສະພາບການທີ່ຜູ້ໄດ້ຮັບຜົນປະໂຫຍດທີ່ມີເງື່ອນໄຂອາດບໍ່ສາມາດເຂົ້າເຖິງອຸດໜູນທີ່ຕົນເອງເກີດສິດໄດ້ຮັບຜົນປະໂຫຍດ.** ວິທີການການກຳນົດກຸ່ມເປົ້າໝາຍແບບນີ້ອາດເຮັດໃຫ້ບຸກຄົນ ແລະ ຄົວເຮືອນທີ່ມີຄວາມສ່ຽງເສຍໂອກາດໃນການໄດ້ຮັບຜົນປະໂຫຍດຈາກແຜນງານປົກປ້ອງສັງຄົມຕ່າງໆ. ນອກນັ້ນ, ການເກີດສິດເພື່ອໄດ້ຮັບຜົນປະໂຫຍດຈາກແຜນງານຕ່າງໆນີ້ອາດຖືກໂນ້ມນ້າວ ດ້ວຍການພິຈາລະນາໃນຂັ້ນທ້ອງຖິ່ນ ແລະ ອາດເຮັດມີຂໍ້ຜິດພາດ ແລະ ການນຳໃຊ້ຊັບພະຍາກອນທີ່ຖືກຕ້ອງເຊິ່ງຄວນຈັດສັນໃຫ້ແກ່ບັນດາຄົວເຮືອນທີ່ມີລາຍຮັບຕ່ຳ ແລະ ມີຄວາມບອບບາງ. ໜ້າເສຍດາຍທີ່ປະຈຸບັນນີ້ ກົນໄກ ແລະ ກາລະໂອກາດໃນການປະສານງານລະຫວ່າງອົງການປົກຄອງຂັ້ນສູນກາງ ແລະ ທ້ອງຖິ່ນຍັງມີຂໍ້ຈຳກັດ. ເພື່ອແກ້ໄຂສິ່ງທ້າທາຍເຫຼົ່ານີ້, ຕ້ອງມີຄວາມພະຍາຍາມໃນການປັບປຸງຄວາມຊັດເຈນ ແລະ ຖືກຕ້ອງຂອງຂໍ້ມູນໃນລະບົບຄຸ້ມຄອງຂໍ້ມູນຂ່າວສານ. ຕ້ອງສ້າງລະບົບການເກັບກຳ, ຄຸ້ມຄອງ, ດັດແກ້ ຫຼື ປັບປຸງຂໍ້ມູນທີ່ເຂັ້ມແຂງເພື່ອຮັບປະກັນການກຳນົດເປົ້າໝາຍຜູ້ໄດ້ຮັບຜົນປະໂຫຍດໂດຍນຳໃຊ້ຂໍ້ມູນທີ່ເຊື່ອຖືໄດ້ ແລະ ລ່າສຸດ. ພ້ອມນັ້ນ, ມີຄວາມສຳຄັນຢ່າງຍິ່ງ ໃນການຍົກລະດັບກົນໄກການປະສານງານລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຮັບປະກັນວິທີການກຳນົດເປົ້າໝາຍຜູ້ໄດ້ຮັບຜົນປະໂຫຍດທີ່ເປັນທຳ ແລະ ເປັນລະບົບ.

### 4.1.4. ລະບົບຄຸ້ມຄອງຂໍ້ມູນຂ່າວສານ

**ອີງຕາມການທົບທວນ, ລັດຖະບານມີແຜນທີ່ຈະພັດທະນາລະບົບ MIS ສຳລັບຄະນະກຳມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມ.** ລະບົບ MIS ຈະຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ຈະເປັນສູນສັງລວມຂໍ້ມູນຂ່າວສານດ້ານການປົກປ້ອງສັງຄົມໃນທົ່ວປະເທດໂດຍສະເພາະແມ່ນຈາກຍຸດທະສາດປົກປ້ອງສັງຄົມແຫ່ງຊາດ. ເຖິງຢ່າງໃດກໍ່ຕາມ, ກອງເລຂາ ແລະ ຄະນະກຳມາທິການຍັງມີຂໍ້ຈຳກັດດ້ານວິຊາການ ແລະ ແຫຼ່ງທຶນທີ່ນຳໃຊ້ໃນການບຳລຸງຮັກສາລະບົບດັ່ງກ່າວໃນໄລຍະຍາວ. ນອກນັ້ນ, ຍັງບໍ່ທັນຮູ້ແນ່ນອນວ່າ ລະບົບຄຸ້ມຄອງຂໍ້ມູນຂ່າວສານ MIS ຈະຖືກນຳໃຊ້ເພື່ອຈຸດປະສົງການຄຸ້ມຄອງຍຸດທະສາດຢ່າງດຽວ ຫຼື ຈະເປັນເຄື່ອງມືເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນງານຕ່າງໆທີ່ນອນຢູ່ໃນຍຸດທະສາດ.

### 4.1.5. ກອບຕິດຕາມປະເມີນຜົນ

**ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ຖືກອອບແບບມາຄຽງຄູ່ກັບກອບຕິດຕາມ ແລະ ເມີນຜົນຮອບດ້ານ ເພື່ອເປັນບ່ອນອີງສຳລັບການເກັບກຳ, ວິເຄາະ ແລະ ເຜີຍແຜ່ຂໍ້ມູນຫຼັກຖານ.** ກອບຕິດຕາມດັ່ງກ່າວ ໄດ້ຄາດວ່າຈະເປັນໃຈກາງໃຫ້ແກ່ການກຳນົດນະໂຍບາຍ, ຍຸດທະສາດການດຳເນີນງານ ແລະ ການຕັດສິນບັນຫາໃນໄລຍະການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ. ເວົ້າສະເພາະ, ແມ່ນການປະກອບສ່ວນໃຫ້ແກ່ການສ້າງແຜນວຽກປະຈຳປີສຳລັບແຕ່ລະເສົາຄ້ຳ ແລະ ສະໜອງຂໍ້ມູນໃຫ້ແກ່ໜ່ວຍງານວິຊາການຂອງແຕ່ລະເສົາຄ້ຳພ້ອມທັງບັນດາຄະນະກຳມະການຂັ້ນສູງຕ່າງໆ. ຍຸດທະສາດປົກປ້ອງສັງຄົມແຫ່ງຊາດໄດ້ກຳນົດວ່າໜ້າທີ່ຮັບຜິດຊອບໃນການຕິດຕາມ ແມ່ນຂຶ້ນຢູ່ກັບຄວາມຮັບຜິດຊອບຂອງຄະນະກຳມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມ ແລະ ກອງເລຂາ. ກອງເລຂາຈະເປັນຜູ້ປະສານງານ ແລະ ຮັບປະກັນໃຫ້ພາກສ່ວນຈັດຕັ້ງປະຕິບັດຕ່າງໆເກັບກຳ, ບັນທຶກ ແລະ ແລກປ່ຽນຂໍ້ມູນລ່າສຸດແບບທັນເວລາ. ສ່ວນຂໍ້ມູນລ່າສຸດຈາກການຕິດຕາມຈະນຳສົ່ງໃຫ້ພາກສ່ວນກ່ຽວຂ້ອງ ແລະ ນຳເອົາໄປປຶກສາຫາລືໃນກອງປະຊຸມຄະນະ ກຳມາທິການແຫ່ງຊາດ ແລະ ກອງປະຊຸມຂອງກອງເລຂາ.

**ນັບຕັ້ງແຕ່ໄດ້ຮັບຮອງຍຸດທະສາດປົກປ້ອງສັງຄົມແຫ່ງຊາດໃນ 4 ປີຫຼັງ, ລະບົບຕິດຕາມ ແລະ ປະເມີນຜົນ (M&E) ຍັງບໍ່ທັນຖືກຈັດຕັ້ງປະຕິບັດເຕັມສ່ວນເທື່ອ.** ເຊິ່ງໄດ້ສົ່ງຜົນສະທ້ອນທີ່ຈະແຈ້ງຕໍ່ກັບທັງດ້ານຄວາມຮັບຜິດຊອບ ແລະ ການຮຽນຮູ້. ໃນຂະນະທີ່ມີການລາຍງານແບບຕໍ່ເນື່ອງໃນ

ລະດັບແຜນງານ ແລະ ໂຄງການກໍຕາມ, ເຈດຈຳນົງຂອງຍຸດທະສາດ ແມ່ນເພື່ອເຮັດໃຫ້ລະບົບການລາຍງານລວມສູນ ແລະ ສ້າງກົນໄກການລາຍງານທົ່ວຂະແໜງການເພື່ອມາທົດແທນລະບົບທີ່ເຮັດແບບກະແຈກກະຈາຍ. ຍັງບໍ່ທັນເຂົ້າໃຈຈະແຈ້ງ ວ່າເປັນຫຍັງ ລະບົບຕິດຕາມປະເມີນຜົນຈຶ່ງ ບໍ່ໄດ້ຖືກນຳໃຊ້ຕາມຈຸດປະສົງທີ່ຕັ້ງໄວ້. ໄດ້ມີສາເຫດຈຳນວນໜຶ່ງທີ່ໄດ້ຮັບການຍົກຂຶ້ນເປັນຕົ້ນແມ່ນ ການຂາດບຸກຄະລາກອນທີ່ພຽງພໍ ແລະ ຂໍ້ຈຳກັດດ້ານຂີດຄວາມສາມາດຂອງ ກອງເລຂາ, ຂໍ້ຈຳກັດດ້ານການຕິດຕາມຢ່າງໃກ້ຊິດຂອງຂັ້ນເທິງ ເຊິ່ງບໍ່ໄດ້ກຳນົດຄາດໝາຍ ຫຼື ລະບຸເວລາເພື່ອເຮັດແຕ່ລະໜ້າວຽກໃຫ້ສຳເລັດ.

**ໂດຍຮັບຮູ້ເຖິງຊ່ອງວ່າງ ແລະ ຜົນສະທ້ອນຕ່າງໆທີ່ໄດ້ສົ່ງຜົນກະທົບຕໍ່ກັບການຖອດຖອນບົດຮຽນ ແລະ ການຍົກສູງຄວາມຮັບຜິດຊອບ, ໜຶ່ງໃນບັນຫາຕົ້ນຕໍທີ່ໄດ້ຍົກຂຶ້ນແມ່ນການຂາດແຜນປະຈຳປີທີ່ກຳນົດເງື່ອນໄຂດ້ານໄລຍະ ແລະ ເວລາທີ່ບັນດາກະຊວງຕ້ອງສົ່ງຂໍ້ມູນການຕິດຕາມ ແລະ ການປະເມີນຜົນ.** ຍ້ອນວ່າບໍ່ມີແຜນດັ່ງກ່າວ ຈຶ່ງເຮັດໃຫ້ມີການນຳໃຊ້ວິທີການລາຍງານທີ່ບໍ່ເປັນເອກະພາບ ແລະ ມີການລາຍງານຕາມກໍລະນີຄວາມຕ້ອງການ. ນອກນັ້ນ, ບໍ່ມີກະຊວງໃດໃນບັນດາອົງການຈັດຕັ້ງປະຕິບັດ ໄດ້ແຕ່ງຕັ້ງຈຸດປະສານງານ. ໃນຂະນະທີ່ມີການຄົ້ນຄ້ວາ ແລະ ວິເຄາະເພື່ອຈັດຕັ້ງປະຕິບັດບັນດາແຜນງານ ແລະ ຂໍ້ລິເລີ່ມຕ່າງໆທີ່ຜະລິດຂໍ້ມູນຫຼາຍພໍສົມຄວນ ແລະ ສາມາດນຳໃຊ້ເພື່ອການປັບປຸງ ແລະ ການຕັດສິນບັນຫາ, ແຕ່ປາກົດວ່າບໍ່ມີກົນໄກເພື່ອຮັບປະກັນການເຂົ້າເຖິງ ແລະ ການນຳໃຊ້ຂໍ້ມູນໂດຍບັນດາກະຊວງ ແລະ ພາກສ່ວນກ່ຽວຂ້ອງເພື່ອຈຸດປະສົງຈັດຕັ້ງປະຕິບັດວຽກປົກປ້ອງສັງຄົມອື່ນໆ. ເວົ້າອີກແບບກໍຄືຍັງບໍ່ທັນມີມາດຕະຖານການເກັບກຳ ແລະ ແລກປ່ຽນຂໍ້ມູນຂ່າວສານເພື່ອຕິດຕາມຕົວຊີ້ບອກ.

## 4.1.6. ການລົງທຶນໃສ່ວຽກງານປົກປ້ອງສັງຄົມ

**ເຫັນວ່າມີຄວາມຈຳເປັນທີ່ຕ້ອງເພີ່ມການຈັດສັນງົບປະມານເພື່ອຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ.** ດັ່ງນັ້ນ, ຈຶ່ງໄດ້ແນະນຳໃຫ້ຄະນະກຳມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມສ້າງແຜນລະດົມທຶນໄລຍະຍາວເນື່ອງຈາກວ່າການພັດທະນາລະບົບປົກປ້ອງສັງຄົມທີ່ຮອບດ້ານທີ່ຈະສາມາດປະກອບສ່ວນໃນການຫຼຸດຜ່ອນຄວາມທຸກຍາກຕ້ອງການການຈັດສັນຊັບພະຍາກອນມະຫາສານໂດຍນຳໃຊ້ວິທີແບບຍືນຍົງ ແລະ ຍາວນານ. ຍຸດທະສາດຍັງໄດ້ສະເໜີໃຫ້ເພີ່ມການລົງທຶນເພື່ອວຽກສັງຄົມສົງເຄາະແຕ່ລະກ້າວເພື່ອບໍ່ເພີ່ມພາລະແບກຫາບໃຫ້ແກ່ງົບປະມານແຫ່ງລັດ. ປະຈຸບັນ, ຂໍ້ກັງວົນທີ່ສຳຄັນ ແມ່ນການຂາດສະຖຽນລະພາບຂອງເສດຖະກິດມະຫາພາກ ແລະ ອັດຕາເງິນເຟີ້ທີ່ສູງ[9], ເຊິ່ງເປັນໄພຂົ່ມຂູ່ຕໍ່ກັບມາດຕະຖານຊີວິດການເປັນຢູ່ຂອງປະຊາຊົນ ໂດຍສະເພາະແມ່ນຄອບຄົວທີ່ທຸກຍາກ ແລະ ບອບບາງ. ລະດັບໜີ້ສິນສາທາລະນະທີ່ບໍ່ຍືນຍົງ, ຂໍ້ຈຳກັດດ້ານງົບປະມານ, ຄັງແຮເງິນຕາຕ່າງປະເທດທີ່ຫຼຸດລົງ ແລະ ຄວາມສ່ຽງຂອງຂະແໜງການເງິນທີ່ເພີ່ມຂຶ້ນຊີ້ໃຫ້ເຫັນເຖິງຄວາມຈຳເປັນໃນການປະຕິຮູບແບບຮີບດ່ວນ.

**ນອກນັ້ນ, ລາຍຈ່າຍພາກລັດຂອງປະເທດເປັນອັດຕາສ່ວນຮ້ອຍຕໍ່ກັບ GDP ຖືວ່າຕໍ່າຫຼາຍຖ້າສົມທຽມໃສ່ມາດຕະຖານພາກພື້ນ ແລະ ລະດັບລາຍຮັບ.** ເຫດຜົນຕົ້ນຕໍກໍ່ແມ່ນຍ້ອນການລະດົມຖານລາຍຮັບພາຍໃນທີ່ບໍ່ເຂັ້ມແຂງ. ສ່ວນການປົກປ້ອງສັງຄົມກໍກວມເອົາສັດສ່ວນສ່ວນນ້ອຍຂອງ ລາຍຈ່າຍ ແລະ ຊຸມປີປະຈຸບັນ ກໍເຫັນວ່າການລົງທຶນໃນການສຶກສາ ແລະ ສາທາລະນະສຸກຫຼຸດລົງ (ຈາກ 4.2 ສ່ວນຮ້ອຍ ຂອງ GDP ໃນປີ 2016 ເປັນ 2.6 ສ່ວນຮ້ອຍ ໃນປີ 2022). ການຫຼຸດລົງດັ່ງກ່າວເກີດຂຶ້ນຍ້ອນລັດຖະບານຈຳເປັນຕ້ອງຫຼຸດຜ່ອນລະດັບລາຍຈ່າຍໂດຍລວມ ເຊິ່ງສືບເນື່ອງມາຈາກບັນຫາດ້ານການເກັບລາຍຮັບພາຍໃນ ແລະ ພັນທະການຊຳລະດອກເບ້ຍທີ່ເພີ່ມຂຶ້ນ.

**ການຈັດຕັ້ງປະຕິບັດວຽກສັງຄົມສົງເຄາະ ແລະ ການພັດທະນາລະບົບປົກປ້ອງສັງຄົມຕ້ອງເອື່ອຍອີງການຊ່ວຍເຫຼືອດ້ານທຶນຮອນຈາກພາຍນອກເປັນສ່ວນໃຫຍ່.** ລະດັບລາຍຈ່າຍດ້ານການປົກປ້ອງສັງຄົມທີ່ຕໍ່າເຮັດໃຫ້ຕົກຢູ່ຝ່າຍຂອງຄູ່ຮ່ວມພັດທະນາ ແລະ ອົງການ NGOs ທີ່ຕ້ອງອັດຊ່ອງວ່າງເຊິ່ງຍິ່ງເຮັດໃຫ້ຂະບວນການເຮັດວຽກບໍ່ກົມກຽວ ແລະ ກະແຈກກະຈາຍໂດຍສະເພາະແມ່ນການປະຕິບັດໜ້າທີ່ຮັບຜິດຊອບຂອງອົງການຈັດຕັ້ງ ແລະ ຄວາມເປັນເຈົ້າການຂອງແຜນງານ. ດັ່ງນັ້ນ, ຈຶ່ງມີຄວາມຫຍຸ້ງຍາກໃນການຄິດໄລ່ຕົວເລກລະອຽດຮອບດ້ານທີ່ໄດ້ລົງທຶນໃນຂະແໜງສັງຄົມ. ການຕີລາຄາການລົງທຶນໃນການປົກປ້ອງສັງຄົມໂດຍສະເພາະວຽກງານສັງຄົມສົງເຄາະ ຍັງເປັນສິ່ງທ້າທາຍຍ້ອນການມີສ່ວນຮ່ວມຂອງຫຼາຍກະຊວງຂະແໜງການກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາ ແລະ ຂໍ້ຈຳກັດດ້ານຮ່ອງງົບປະມານສະເພາະສຳລັບການປົກປ້ອງສັງຄົມ.

**ລະບົບປະກັນສຸຂະພາບແຫ່ງຊາດ ເປັນບາດກ້າວທີ່ສຳຄັນເພື່ອບັນລຸການປົກຄຸມສຸຂະພາບທົ່ວປວງຊົນດ້ວຍການແກ້ໄຂສິ່ງກີດກັ້ນດ້ານການເງິນເພື່ອເຂົ້າເຖິງການບໍລິການສຸຂະພາບ.** ເຖິງຢ່າງໃດກໍຕາມ, ຕັ້ງແຕ່ສ້າງຂຶ້ນໃນປີ 2019 ກໍເຫັນວ່າມີສະພາບການຂາດງົບປະມານທີ່ຮ້າຍແຮງເຮັດໃຫ້ສົ່ງຜົນກະທົບຕໍ່ກັບຄວາມສາມາດຂອງສະຖານທີ່ປິ່ນປົວ ໃນການໃຫ້ບໍລິການທີ່ມີຄຸນນະພາບ ແລະ ຕອບສະໜອງຄວາມຕ້ອງການທີ່ເພີ່ມຂຶ້ນຈາກຄົນເຈັບ. ແຫຼ່ງທຶນຕົ້ນຕໍສຳລັບ NHI ແມ່ນງົບປະມານປົກກະຕິຂອງລັດເສີມດ້ວຍງົບປະມານທີ່ໄດ້ຈາກການເກັບເງິນສົມທົບຈາກພະນັກງານລັດຖະກອນ ແລະ ພະນັກງານພາກວິສາຫະກິດຜ່ານກອງທຶນປະກັນສັງຄົມພ້ອມທັງເງິນທີ່ໄດ້ຈາກການຈ່າຍ

9 ທະນາຄານໂລກ, Lao Economic Monitor, ເດືອນ ພະຈິກ 2023

ຮ່ວມ. ເຖິງຢ່າງໃດກໍຕາມ, ການຈັດສັນງົບປະມານຄັງທີ່ແຕ່ລະປີໃຫ້ແກ່ຫ້ອງການປະກັນສຸຂະພາບ (NHIB) ຍັງໜ້າເປັນຫວ່ງ, ເຊິ່ງເທົ່າກັບ 180 ຕື້ກີບ (ຫຼື ປະມານ 24,000 ກີບ ຕໍ່ຄົນ ໃນປີ 2022) ນັບຕັ້ງແຕ່ປີ 2018. ແຕ່ຖ້າສົມທຽບໃສ່ງົບປະມານຄາດຄະເນທີ່ຕ້ອງການ ແມ່ນເທົ່າກັບ 344 ຕື້ກີບຕໍ່ປີ. ດັ່ງນັ້ນ, ຈຶ່ງມີຄວາມເປັນຫວ່ງກ່ຽວກັບຄວາມພຽງພໍດ້ານງົບປະມານເພື່ອໃຫ້ການບໍລິການທີ່ຈຳເປັນພື້ນຖານ, ຮັບປະກັນຄວາມຍືນຍົງຍາວນານ ແລະ ຫຼຸດຜ່ອນກໍລະນີຈົກຖົງຈ່າຍເອງ.

## 4.2. ຂໍ້ສະເໜີແນະເພື່ອປັບປຸງການຈັດຕັ້ງປະຕິບັດຍຸດທະສາດ.

### ການຈັດຕັ້ງປະຕິບັດຢູ່ຂັ້ນສູນກາງ

- **ກອງເລຂາຂອງຄະນະກຳມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມ ແລະ ຄູ່ຮ່ວມພັດທະນາຄວນດຳເນີນການສຶກສາຕົ້ນທຶນເສົາຄ້ຳສະຫວັດດີການສັງຄົມ ແລະ ນຳໃຊ້ຜົນການສຶກສາດັ່ງກ່າວໄປຄຽງຄູ່ກັບເອກະສານອື່ນໆເພື່ອຈັດລຽງບູລິມະສິດໃນການຊ່ວຍເຫຼືອ ແລະ ວາງແຜນຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ.** ວິທີນີ້ຈະສາມາດຊ່ວຍໃນການລະດົມທຶນຈາກແຫຼ່ງທຶນພາຍໃນແບບສົມດຸນ ແລະ ຍືນຍົງໂດຍຜ່ານແຜນ ພັດທະນາຂະແໜງສາທາລະນະສຸກ ຄັ້ງທີ 9, ແຜນພັດທະນາຂະແໜງແຮງງານ ແລະ ສະຫວັດດີການສັງຄົມ 5 ປີ ແລະ ການຊ່ວຍເຫຼືອຈາກພາຍນອກຕໍ່ກິດຈະກຳອີງຕາມບູລິມະສິດ. ສິ່ງທີ່ຕ້ອງສຸມໃສ່ຕົ້ນຕໍແມ່ນການຮັບປະກັນການມີທຶນຮອນທີ່ພຽງພໍເພື່ອຈັດຕັ້ງປະຕິບັດແຜນງານປົກປ້ອງສັງຄົມ.

- **ມີຄວາມສຳຄັນທີ່ຕ້ອງກຳນົດກົນໄກວາງແຜນຮ່ວມກັນເປັນຮອບວຽນສຳລັບການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດເພື່ອຮັບປະກັນໃຫ້ເກີດມີການວາງແຜນ ແລະ ຕິດຕາມການຈັດຕັ້ງປະຕິບັດຕົວຈິງ.** ການຈັດຕັ້ງປະຕິບັດຍຸດທະສາດຕ້ອງມີໂຄງຮ່າງການຈັດຕັ້ງ ແລະ ມີການປະສານງານຢ່າງເປັນລະບົບລວມທັງການຈັດກອງປະຊຸມແບບມີແຜນລະອຽດ ເພື່ອຍົກລະດັບການປະສານງານກັບພາກສ່ວນທີ່ເປັນຜູ້ຈັດຕັ້ງປະຕິບັດ, ກຳນົດໃຫ້ໄດ້ບັນຫາສຳຄັນທີ່ຕ້ອງແກ້ໄຂ ແລະ ປັບປຸງຍຸດທະສາດຕາມຄວາມເໝາະສົມ. ການສ້າງຮອບວຽນການວາງແຜນຈະອຳນວຍຄວາມສະດວກດ້ານການສື່ສານ ແລະ ປະສານງານລະຫວ່າງອົງການຈັດຕັ້ງຕ່າງໆ ພ້ອມທັງການຕັດສິນໃຈເພື່ອການຈັດຕັ້ງປະຕິບັດຍຸດທະສາດໃຫ້ມີຜົນສຳເລັດ. ເພື່ອຮັບປະກັນການບັນລຸເປົ້າໝາຍຮ່ວມກັນ, ຈຳເປັນຕ້ອງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຕົກລົງເຫັນດີກ່ຽວກັບກຳນົດເວລາທີ່ຕ້ອງບັນລຸຜົນໄດ້ຮັບ, ຄາດໝາຍທີ່ສຳຄັນ, ກອບເວລາ ແລະ ໜ້າທີ່ຮັບຜິດຊອບຂອງພາກສ່ວນກ່ຽວຂ້ອງ.

- **ການປົກປ້ອງສັງຄົມເປັນວຽກປິ່ນອ້ອມໂດຍມີບັນດາກະຊວງເປັນຜູ້ເຮັດພາລະບົດບາດໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນງານ, ລັດຖະບານຄວນສຶກສາຄວາມເປັນໄປໄດ້ຕ່າງໆໂດຍຄວນວິເຄາະຂໍ້ດີ ແລະ ຂໍ້ເສຍໃນການນຳເອົາຄະນະກຳມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມໄປຂຶ້ນກັບຂັ້ນສູງກວ່າເຊັ່ນ: ຂັ້ນສຳນັກງານນາຍົກ ຫຼື ກະຊວງການເງິນ.** ວິທີການນີ້ແມ່ນໄດ້ນຳໃຊ້ຢູ່ຫຼາຍປະເທດແລ້ວເຊັ່ນ: ປະເທດກຳປູເຈຍ ໂດຍແມ່ນ ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີປະຈຳກະຊວງເສດຖະກິດ ແລະ ການເງິນ ເປັນປະທານຂອງຄະນະກຳມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມ, ສ່ວນກອງເລຂາແມ່ນຢູ່ພາຍໃຕ້ກະຊວງເສດຖະກິດ ແລະ ການເງິນ. ທັງໝົດນີ້ກໍ່ເພື່ອໃຫ້ຂັ້ນເທິງເຫັນເຖິງຄວາມສຳຄັນ ແລະ ໃຫ້ບູລິມະສິດໃນການຕັດສິນໃຈຈັດສັນງົບປະມານໃຫ້ແກ່ວຽກງານປົກປ້ອງສັງຄົມ.

- **ການມີສ່ວນຮ່ວມ ແລະ ການສະໜັບສະໜູນຂອງກອງເລຂາໃນກິດຈະກຳຂອງໜ່ວຍງານວິຊາການ ຫຼື ຄະນະກຳມະການຂັ້ນແຂວງ ມີຄວາມສຳຄັນເພື່ອຮັບປະກັນຄວາມສອດຄ່ອງກົມກຽວດ້ານນະໂຍບາຍ ແລະ ການປະສານງານ.** ກອງເລຂາຄວນມີສ່ວນຮ່ວມຢ່າງຕັ້ງໜ້າກັບໜ່ວຍງານຂະແໜງການ ແລະ ໃຫ້ຄຳແນະນຳ ແລະ ການຊຸກຍູ້ເພື່ອຮັບປະກັນຄວາມສອດຄ່ອງຕໍ່ກັບຍຸດທະສາດ. ໃນນີ້ລວມມີການປະກອບຄຳຄິດເຫັນຕາມແຕ່ລະໄລຍະຕໍ່ກັບການຈັດຕັ້ງປະຕິບັດນະໂຍບາຍເພື່ອໃຫ້ຂໍ້ມູນໃຫ້ແກ່ຄະນະກຳມະການຂັ້ນທ້ອງຖິ່ນວ່າກິດຈະກຳທີ່ຈັດຕັ້ງປະຕິບັດໄປມີຄວາມກົມກຽວ ແລະ ບໍ່ທັບຊ້ອນກັບວຽກຂອງພາກສ່ວນອື່ນ ໂດຍສະເພາະແມ່ນປະກັນສຸຂະພາບ ແລະ ສັງຄົມສົງເຄາະ.

- **ເພີ່ມທະວີການເຜີຍແຜ່ຍຸດທະສາດປົກປ້ອງສັງຄົມແຫ່ງ ຊາດ ແລະ ບູລິມະສິດຢູ່ຂັ້ນທ້ອງຖິ່ນ.**

- **ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດແຜນດຳເນີນງານປະຈຳປີເພື່ອຍົກໃຫ້ເຫັນເຖິງຂີດເຂດວຽກງານທີ່ຍັງມີອຸປະສັກ ຫຼື ສິ່ງທ້າທາຍ.**

### ການຈັດຕັ້ງປະຕິບັດຢູ່ຂັ້ນທ້ອງຖິ່ນ

- **ປັບປຸງ ສິດອຳນາດ ແລະ ພາລະບົດບາດຂອງກອງເລຂາ ໃນການຈັດກອງປະຊຸມຢູ່ຂັ້ນທ້ອງຖິ່ນ.** ຈະເຮັດໄດ້ກໍ່ຕໍ່ເມື່ອມີການຮ່ວມມືຢ່າງໃກ້ຊິດກັບຫ້ອງການຂອງແຕ່ລະກະຊວງ.

- **ແຕ່ງຕັ້ງຜູ້ປະສານງານສຳລັບແຕ່ລະແຂວງ ແລະ ເມືອງເພື່ອເປັນຈຸດປະສານງານຍຸດທະສາດປົກປ້ອງສັງຄົມໂດຍກຳນົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຢ່າງຈະແຈ້ງ.** ບຸກຄົນເຫຼົ່ານີ້ຄວນມີຄວາມເຂົ້າໃຈຮອບດ້ານ ກ່ຽວກັບ ຍຸດທະສາດທັງໝົດ

ແລະ ຄວນເປັນຈຸດປະສານງານຂອງແຂວງ ຫຼື ເມືອງ ຕົນເອງ ລະຫວ່າງ ກອງເລຂາຂັ້ນສູນກາງ ຫຼື ໜ່ວຍງານວິຊາການ ຫຼື ອະນຸກຳມະການຕ່າງໆ.

- **ເພີ່ມຄວາມຮັບຮູ້ຂັ້ນທ້ອງຖິ່ນກ່ຽວກັບຍຸດທະສາດປົກປ້ອງສັງຄົມແຫ່ງຊາດເພື່ອເຊື່ອມສານບູລິມະສິດຂອງ ຍຸດທະສາດເຂົ້າໃນການວາງແຜນ.** ວິທີນີ້ຈະສາມາດບັນລຸສ່ວນໃດສ່ວນໜຶ່ງໂດຍນຳໃຊ້ມາດຕະການທີ່ກ່າວມາຂ້າງເທິງ ແຕ່ກໍຕ້ອງມີມາດຕະການອື່ນເພື່ອເພີ່ມທະວີຄວາມເຫັນດີເຫັນພ້ອມ. ການເຜີຍແຜ່ບົດສັງລວມຍຸດທະສາດທີ່ປະກອບມີປະເດັນຫຼັກທີ່ສຳຄັນໃຫ້ແກ່ຂັ້ນທ້ອງຖິ່ນກໍຈະສາມາດຊ່ວຍໄດ້.

- **ກອງເລຂາ ແລະ ຄູ່ຮ່ວມພັດທະນາສືບຕໍ່ໃຫ້ການສະໜັບສະໜູນ ເພື່ອສ້າງຂີດຄວາມສາມາດໃຫ້ແກ່ວຽກປົກປ້ອງສັງຄົມໂດຍການນຳໃຊ້ຊຸດເຄື່ອງມືເພື່ອສ້າງຄູຝຶກ ຢ່າງຕັ້ງໜ້າຢູ່ຂັ້ນແຂວງ.**

- **ຄູ່ຮ່ວມພັດທະນາຄວນໃຫ້ການຊ່ວຍເຫຼືອຕໍ່ການຈັດຕັ້ງປະຕິບັດຍຸດທະສາດໃຫ້ໄປໃນທິດທາງດຽວກັນໂດຍເລີ່ມຈາກການຕິດຕາມຄວາມສອດຄ່ອງ ແລະຊ່ອງວ່າງດ້ານການຈັດສັນຊັບພະຍາກອນຮ່ວມກັນ.** ພ້ອມທັງສ້າງເວທີ ຫຼື ກົນໄກເພື່ອການວາງແຜນ, ຈັດສັນທຶນຮອນ ແລະ ການເຈລາຈະຮ່ວມກັນອີງຕາມຫຼັກຖານຂໍ້ມູນ.

## ກອບຕິດຕາມ ແລະ ປະເມີນຜົນ ແລະ ການນຳໃຊ້

- **ເພື່ອແກ້ໄຂສິ່ງທ້າທາຍ, ຂໍ້ຈຳກັດໃນການນຳໃຊ້ເຄື່ອງມືຕິດຕາມປະເມີນຜົນແບບມີປະສິດທິຜົນ, ຈຳເປັນຕ້ອງໄດ້ແກ້ໄຂຢ່າງຮີບດ່ວນໂດຍຜ່ານການຈັດຕັ້ງປະຕິບັດຄຳແນະນຳຂອງການທົບທວນກອບຕິດຕາມ ແລະ ການປະເມີນຜົນ.** ບັນດາຄຳແນະນຳເຫຼົ່ານັ້ນຄວນກວມເອົາມາດຕະການສະເພາະທີ່ແນໃສ່ແກ້ໄຂອຸປະສັກໃນການນຳໃຊ້ກອບຕິດຕາມປະເມີນຜົນຢ່າງມີປະສິດທິພາບ.

  - ວິທີການໜຶ່ງທີ່ສຳຄັນແມ່ນການຈັດກິດຈະກຳໂຄສະນາເຜີຍແຜ່ ແລະ ການຝຶກອົບຮົມແບບມີຈຸດສຸມເພື່ອຍົກລະດັບຄວາມເຂົ້າໃຈກ່ຽວກັບຈຸດປະສົງ ແລະ ຜົນປະໂຫຍດຂອງການນຳໃຊ້ເຄື່ອງມືຕິດຕາມປະເມີນຜົນ. ບັນດາກິດຈະກຳເຫຼົ່ານີ້ຄວນຈັດຕັ້ງປະຕິບັດທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນເພື່ອຮັບປະກັນການມີສ່ວນຮ່ວມຂອງທຸກພາກສ່ວນກ່ຽວຂ້ອງ ລວມທັງພະນັກງານລັດຖະກອນ, ຜູ້ຈັດຕັ້ງປະຕິບັດໂຄງການ, ແລະຄະນະຕິດຕາມ ແລະ ປະເມີນຜົນ. ດ້ວຍການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບເຄື່ອງມືຕິດຕາມປະເມີນຜົນ ແລະ ຄວາມສຳຄັນໃນການຕິດຕາມຄວາມຄືບໜ້າຂອງຕົວຊີ້ບອກນັ້ນ, ບັນດາພາກສ່ວນທີ່ກ່ຽວຂ້ອງສາມາດຍົກລະດັບການຮັບຮູ້ກ່ຽວກັບຄວາມສຳຄັນ ແລະ ຄຸນຄ່າ ພ້ອມທັງນຳເອົາໄປເຊື່ອມສານເຂົ້າໃນວຽກຕິດຕາມ ແລະ ປະເມີນຜົນຕົວຈິງ.

  - ພ້ອມກັນນັ້ນ, ຄວນຈັດຕັ້ງປະຕິບັດການຝຶກອົບຮົມຮອບດ້ານເພື່ອກະກຽມຄວາມພ້ອມໃຫ້ແກ່ພາກສ່ວນກ່ຽວຂ້ອງດ້ານທັກສະ ແລະ ຄວາມຮູ້ໃນການນຳໃຊ້ເຄື່ອງມືຕິດຕາມປະເມີນຜົນ. ການຝຶກອົບຮົມດັ່ງກ່າວຄວນລວມມີບົດຝຶກຫັດພາກປະຕິບັດຕົວຈິງ ແລະ ການນຳສະເໜີກໍລະນີສຶກສາເພື່ອໃຫ້ຜູ້ເຂົ້າຮ່ວມນຳໃຊ້ຄວາມຮູ້ຈາກການຝຶກເຂົ້າໃນພາກປະຕິບັດຕົວຈິງ. ຖ້າສະໜອງການຝຶກອົບຮົມໃຫ້ພາກສ່ວນກ່ຽວຂ້ອງຕາມຄວາມຕ້ອງການແລ້ວ ເຂົາເຈົ້າຍິ່ງຈະມີຄວາມພ້ອມໃນການນຳໃຊ້ເຄື່ອງມືຕິດຕາມປະເມີນຜົນຢ່າງມີປະສິດທິພາບ ແລະ ນຳໃຊ້ທ່າແຮງຢ່າງເຕັມສ່ວນໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດໂຄງການ ແລະ ແຜນງານຕ່າງໆ.

  - ນອກນັ້ນ, ກໍຕ້ອງສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການນຳໃຊ້ເຄື່ອງມືຕິດຕາມປະເມີນຜົນ. ສາມາດບັນລຸໄດ້ດ້ວຍການສົ່ງເສີມວັດທະນະທຳການເຮັດວຽກທີ່ຍົກສູງຄວາມຮັບຜິດຊອບ ແລະ ຄວາມໂປ່ງໃສເຊິ່ງບັນດາພາກສ່ວນກ່ຽວຂ້ອງຕ້ອງຮັບຜິດຊອບຕໍ່ກັບການນຳໃຊ້ເຄື່ອງມື ແລະ ລາຍງານຜົນຕ່າງໆ. ພ້ອມກັນນັ້ນ, ການໃຫ້ການຊ່ວຍເຫຼືອ ແລະ ຄຳແນະນຳດ້ານວິຊາການກໍ່ມີຄວາມສຳຄັນຕໍ່ຂະບວນການຕິດຕາມປະເມີນຜົນເຊັ່ນດຽວກັນ ແລະ ສາມາດຊ່ວຍແກ້ໄຂສິ່ງທ້າທາຍ ແລະ ຮັບປະກັນການຈັດຕັ້ງປະຕິບັດເຄື່ອງມືຢ່າງມີປະສິດທິຜົນ.

  - ສຸດທ້າຍນີ້, ຍິ່ງມີຄວາມສຳຄັນທີ່ຕ້ອງຈັດການທົບທວນ ແລະ ປະເມີນຜົນກະທົບ ແລະ ປະສິດທິຜົນຂອງການນຳໃຊ້ເຄື່ອງມືຕິດຕາມປະເມີນຜົນຢ່າງເປັນປະຈຳ. ສາມາດເຮັດໄດ້ດ້ວຍການຈັດການທົບທວນ ແລະ ການປະເມີນຕາມແຕ່ລະໄລຍະເພື່ອຊອກຮູ້ຂົງເຂດວຽກງານເພື່ອການປັບປຸງພ້ອມທັງປັບປຸງເຄື່ອງມື ແລະ ວິທີການນຳໃຊ້ໄປຄຽງຄູ່ກັນ. ຖ້າສາມາດຕິດຕາມ ແລະ ປະເມີນຜົນການນຳໃຊ້ເຄື່ອງມືຕິດຕາມປະເມີນຜົນແບບຕໍ່ເນື່ອງ, ບັນດາພາກສ່ວນກ່ຽວຂ້ອງກໍ່ຈະສາມາດຮັບປະກັນຄວາມສອດຄ່ອງ ແລະ ປະສິດທິຜົນໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນງານ.

  - ໂດຍລວມແລ້ວ, ການແກ້ໄຂຂໍ້ຈຳກັດໃນການນຳໃຊ້ເຄື່ອງມືຕິດຕາມປະເມີນຜົນ ຕ້ອງນຳໃຊ້ມາດ

ຕະການຕັ້ງໜ້າ ແລະ ຈັດຕັ້ງປະຕິບັດຄຳແນະນຳຕ່າງໆແບບມີຈຸດສຸມ. ໃນນັ້ນປະກອບມີການໂຄສະນາເຜີຍແຜ່, ການຈັດການຝຶກອົບຮົມແບບຮອບດ້ານ, ການສ້າງສະພາບແວດລ້ອມການເຮັດວຽກທີ່ເອື້ອອຳນວຍ ແລະ ການທົບທວນຜົນກະທົບ ຂອງ ເຄື່ອງມືເປັນປະຈຳ ເພື່ອໃຫ້ພາກສ່ວນທີ່ກ່ຽວຂ້ອງສາມາດສົ່ງເສີມການນຳໃຊ້ເຄື່ອງມືດັ່ງກ່າວຢ່າງມີປະສິດທິຜົນ ແລະ ຍົກລະດັບວຽກຕິດຕາມ ແລະ ປະເມີນຜົນ.

- **ເພື່ອເພີ່ມທະວີການຮຽນຮູ້ຖອດຖອນບົດຮຽນ ແລະ ຄວາມຮັບຜິດຊອບ, ສຳຄັນແມ່ນຕ້ອງສ້າງບົດລາຍງານຫົກເດືອນຕົ້ນປີ ແລະ ທ້າຍປີທີ່ສອດຄ່ອງກັບກອບການປະເມີນຜົນ.** ບົດລາຍງານເຫຼົ່ານີ້ຈະເປັນເອກະສານທີ່ສຳຄັນ ແລະ ນຳໃຊ້ເພື່ອຕິດຕາມຜົນການຈັດຕັ້ງປະຕິບັດຍຸດທະສາດ ແລະ ກຳນົດຂົງເຂດທີ່ຈຳເປັນຕ້ອງປັບປຸງຕ່າງໆ. ດ້ວຍການປະຕິບັດຕາມລະບົບ ແລະ ກຳນົດເວລາເພື່ອການລາຍງານ, ພາກສ່ວນກ່ຽວຂ້ອງສາມາດເຂົ້າເຖິງຂໍ້ມູນກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນງານລ່າສຸດເຊິ່ງສາມາດຊ່ວຍໃຫ້ແກ່ຂະບວນການຕັດສິນໃຈໂດຍທີ່ມີຂໍ້ມູນຄົບຖ້ວນ.

- **ຄະນະກຳມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມຄວນປັບປຸງຄວາມສອດຄ່ອງກັບເປົ້າໝາຍ, ຈຸດປະສົງຍຸດທະສາດ, ຕົວຊີ້ບອກ ແລະ ແຜນດຳເນີນງານເພື່ອຍົກລະດັບກອບແຜນການຂອງຍຸດທະສາດ ແລະ ແຜນງານເພື່ອຮັບປະກັນການປັບປຸງຂະບວນການວາງແຜນ ແລະ ການຕິດຕາມການບັນລຸເປົ້າໝາຍ.**

- **ບັນດາອານຸກຳມະການ ຫຼື ກອງເລຂາ ຕ້ອງກຳນົດຕົວຊີ້ບອກທີ່ມີຄຸນນະພາບເພື່ອຕິດຕາມຄວາມຄືບໜ້າໃນການບັນລຸຈຸດປະສົງ, ເຊື່ອມສານເຂົ້າໃນກອບຕິດຕາມປະເມີນຜົນ, ກຳນົດກົນໄກການເກັບກຳຂໍ້ມູນເປັນປະຈຳ ແລະ ຍົກລະດັບການນຳໃຊ້ຂໍ້ມູນການປົກປ້ອງສັງຄົມທີ່ມີຄຸນນະພາບ ເພື່ອການວາງແຜນ.**

- **ແຕ່ງຕັ້ງຜູ້ປະສານງານການຕິດຕາມປະເມີນຜົນຢູ່ແຕ່ລະກະຊວງ ແລະ ຂັ້ນກົມເພື່ອເພີ່ມທະວີການຕິດຕາມແບບເປັນປະຈຳໃນແຕ່ລະຂົງເຂດໜ້າວຽກ.**

- **ບັນດາອະນຸກຳມະການ (ການປະສານງານເພື່ອຈັດຕັ້ງປະຕິບັດຍຸດທະສາດ) ຄວນນຳໃຊ້ກອບຕິດຕາມປະເມີນຜົນເພື່ອຈັດການທົບທວນຄວາມຄືບໜ້າເປັນປະຈຳ.** ຖ້າເຫັນວ່າຂໍ້ມູນບໍ່ຄົບຖ້ວນ ຫຼື ບໍ່ມີ, ສະມາຊິກຄວນສືບຫາສາເຫດຕົ້ນຕໍ ແລະ ພະຍາຍາມແກ້ໄຂອຸປະສັກດ້ານຂໍ້ມູນ.

- **ກອງເລຂາຄວນອຳນວຍຄວາມສະດວກໃຫ້ແກ່ຂະບວນການຮຽນຮູ້ແລະ ຖອດຖອນບົດຮຽນ ລະຫວ່າງບັນດາອະນຸກຳມະການວິຊາການຕ່າງໆ.**

- **ປັບປຸງແບບຟອມລາຍງານຂໍ້ມູນຂ່າວສານ ແລະ ຕົວຊີ້ບອກທີ່ກ່ຽວຂ້ອງ**ຂອງລະບົບຄຸ້ມຄອງຂໍ້ມູນຂ່າວສານ ເພື່ອໃຫ້ສອດຄ່ອງກັບເງື່ອນໄຂ (ປັບປຸງ) ຂອງກອບຕິດຕາມ ແລະ ປະເມີນຜົນ ພ້ອມທັງເຮັດວຽກກັບທີມງານສະຖິຕິຂອງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມເພື່ອຈັດການຝຶກອົບຮົມຄືນໃໝ່ຮອບດ້ານ ກ່ຽວກັບ ສິ່ງທີ່ໄດ້ປັບປຸງ.

## ການລົງທຶນໃສ່ວຽກງານປົກປ້ອງສັງຄົມ

- **ເພື່ອກ້າວຜ່ານອຸປະສັກ ແລະ ຮັບປະກັນການລົງທຶນໄລຍະຍາວແບບຍືນຍົງສຳລັບວຽກປົກປ້ອງສັງຄົມ, ລັດຖະບານ, ເວົ້າສະເພາະກໍຄືກະຊວງແຮງງານ ແລະ ສະຫວັດດີການສັງຄົມຄວນພິຈາລະນາເຮັດວຽກຮ່ວມກັບຄູ່ຮ່ວມພັດທະນາໃນການລະດົມທຶນຮອນແບບຍືນຍົງເພື່ອຈັດຕັ້ງປະຕິບັດກອງທຶນປົກປ້ອງສັງຄົມ.** ວິທີການໜຶ່ງແມ່ນການສ້າງກອງທຶນສະຫວັດດີການສັງຄົມ[10] ທີ່ເປັນບ່ອນລວມສູນແຫຼ່ງທຶນ ແລະ ເປັນວິທີການລົງທຶນແບບເປັນເອກະພາບກັນ. ຖ້າສ້າງຕັ້ງກອງທຶນໄດ້ກໍ່ຈະສາມາດຮັບປະກັນປະສິດຜົນໃນການນຳໃຊ້ທຶນຊ່ວຍເຫຼືອຈາກຜູ້ໃຫ້ທຶນໂດຍຫຼີກລ່ຽງການເຮັດວຽກແບບທັບຊ້ອນ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍດ້ານບໍລິຫານ ພ້ອມທັງຮັບປະກັນຄວາມສອດຄ່ອງລະຫວ່າງແຜນງານ ແລະ ບູລິມະສິດຂອງປະເທດ. ກອງທຶນນີ້ອາດຈະຖືກພັດທະນາເພື່ອຈຸດປະສົງໃນການເພີ່ມງົບປະມານຂອງພາກລັດໃສ່ວຽກງານປົກປ້ອງສັງຄົມເທື່ອລະກ້າວ ເພາະງົບປະມານຊ່ວຍເຫຼືອລ້າຈະຄ່ອຍໆຫລຸດລົງໃນອະນາຄົດ ແລະ ການເຕີບໂຕຂອງ GDP ແມ່ນຈະກໍ່ໃຫ້ເກີດມີພື້ນທີ່ງົບປະມານທີ່ສາມາດນຳມາໃຊ້ໃນການລົງທຶນໃສ່ວຽກງານປົກປ້ອງສັງຄົມໄດ້.

- **ຂໍ້ຈຳກັດດ້ານງົບປະມານ ແລະ ຄວາມສາມາດເຮັດໃຫ້ມີສິ່ງທ້າທາຍຫຼາຍດ້ານ.** ເພື່ອກ້າວຜ່ານສິ່ງທ້າທາຍດັ່ງກ່າວ, ລັດຖະບານຕ້ອງມີສ່ວນຮ່ວມລວງເລິກໃນວຽກງານ ພ້ອມທັງນຳໃຊ້ທ່າແຮງຈາກການເຮັດວຽກແບບຕໍ່ຍອດກົມກຽວ. ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ຄວນຖືກເຊື່ອມສານເຂົ້າໃນແຜນວຽກຂອງບັນດາກະຊວງ ແລະ ຖືກເຜີຍແຜ່ຢ່າງມີປະສິດທິຜົນໃຫ້ແກ່ທ້ອງຖິ່ນເພື່ອຮັບປະກັນໃນການເຊື່ອມສານວຽກງານປົກປ້ອງສັງຄົມເຂົ້າໃນບູລິມະສິດ ແລະ ແຜນຂອງທ້ອງຖິ່ນ. ວິທີການລະດົມທຶນແມ່ນເອົາແຫຼ່ງທຶນຂອງພາກລັດເປັນຫຼັກໂດຍໄດ້ຮັບການສະໜັບສະໜູນ

10 ILO (2024), Pooled Funding Arrangements in Lao PDR. https://www.ilo.org/asia/publications/issue-briefs/WCMS_908607/lang--en/index.htm

ຈາກຄູ່ຮ່ວມພັດທະນາເພື່ອສ້າງໂຄງລ່າງພື້ນຖານ ແລະ ລະບົບໃນການຈັດຕັ້ງປະຕິບັດຍຸດທະສາດ. ນອກນັ້ນ, ຄູ່ຮ່ວມພັດທະນາກໍ່ສາມາດສະໜັບສະໜູນການສ້າງຂີດຄວາມສາມາດໃນຂອບເຂດທົ່ວປະເທດ ແລະ ຮ່ວມມືກັບພາກສ່ວນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

- **ໃນລະດັບຊາດ, ມີຄວາມສຳຄັນທີ່ຕ້ອງພັດທະນາສາລະບານບັນຊີງົບປະມານທີ່ຮອບດ້ານ(COA), ເພື່ອຈະສາມາດບັນທຶກຂໍ້ມູນລາຍຈ່າຍດ້ານການປົກປ້ອງສັງຄົມ ໂດຍສອດຄ່ອງກັບມາດຕະຖານສາກົນ, ລະບຽບການພາຍໃນ ແລະ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ.** ວິທີນີ້ຈະອໍານວຍໃຫ້ແກ່ການຕິດຕາມ ແລະ ລາຍງານລາຍຈ່າຍດ້ານການປົກປ້ອງສັງຄົມທີ່ຊັດເຈນ ແລະ ຖືກຕ້ອງ.

- **ການລົງທຶນ ໃສ່ວຽກງານປົກປ້ອງສັງຄົມສໍາລັບປະເທດທີ່ມີລາຍຮັບຕໍ່າເປັນວຽກທີ່ຍາກຫຼາຍແຕ່ລັດຖະບານແຫ່ງ ສປປ ລາວ ໄດ້ສະແດງຄວາມໝາຍໝັ້ນຕໍ່ກັບການຊອກຫາວິທີແກ້ໄຂພ້ອມທັງຈັດຕັ້ງປະຕິບັດຫຼາຍວິທີການ.** ໃນນັ້ນ, ລວມມີການສ້າງກອງທຶນ, ການໂນ້ມນ້າວເພື່ອໃຫ້ຜູ້ສ້າງນະໂຍບາຍລະດັບສູງໃຫ້ຄວາມສໍາຄັນສະໜັບສະໜູນ, ການກໍານົດແຫຼ່ງທຶນແບບຫຼາກຫຼາຍ, ເພີ່ມການລະດົມທຶນຈາກພາຍໃນ, ແລະ ຮັບປະກັນການຄຸ້ມຄອງຢ່າງມີປະສິດທິຜົນ ແລະ ຍົກສູງຄວາມໂປ່ງໃສ. ດ້ວຍການຈັດຕັ້ງປະບັດວິທີການທີ່ໄດ້ກ່າວມານັ້ນ, ສປປ ລາວ ສາມາດບັນລຸຄວາມຄືບໜ້າແບບກ້າວກະໂດດໃນການພັດທະນາລະບົບປົກປ້ອງສັງຄົມທີ່ຍືນຍົງ ແລະ ມີປະສິດທິຜົນທີ່ສາມາດປະກອບສ່ວນໃນການຫຼຸດຜ່ອນຄວາມບໍ່ສະເໝີພາບ ແລະ ສົ່ງເສີມຄວາມກວມລວມທົ່ວເຖິງ.

**ປະຈຸບັນ, ເຫັນວ່າມີຄວາມຄືບໜ້າຫຼາຍໃນການປັບປຸງຜົນໄດ້ຮັບຈາກການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ນັບຕັ້ງແຕ່ປີ 2020.** ຍຸດທະສາດໄດ້ມີພາລະບົດບາດສໍາຄັນໃນການຈັດລຽງບູລິມະສິດ, ການປະສານງານ, ການກໍານົດທິດທາງ ແລະ ຕິດຕາມຄວາມຄືບໜ້າ. ການທົບທວນກາງສະໄໝ ເປັນກາລະໂອກາດໜຶ່ງທີ່ສໍາຄັນໃຫ້ແກ່ອົງການທີ່ເປັນຜູ້ຈັດຕັ້ງປະຕິບັດຍຸດທະສາດສາມາດທົບທວນທັງສິ່ງທີ່ເຮັດໄດ້ດີ ແລະ ບໍ່ໄດ້ດີ, ແລະ ກໍານົດຈຸດສຸມຄືນໃໝ່ໂດຍສະເພາະໃນຂົງເຂດວຽກງານທີ່ຕ້ອງການປັບປຸງ. ໃນຂະນະທີ່ສາມາດຂະຫຍາຍເຂດປົກຄຸມ ຂອງການປົກປ້ອງສັງຄົມ ຢູ່ ສປປ ລາວ ໂດຍຜ່ານການຂະຫຍາຍເຂດປົກຄຸມ ຂອງກອງທຶນປະກັນສັງຄົມ, ແຕ່ສ່ວນໃຫຍ່ກໍຕ້ອງເອື່ອຍອີງໃສ່ການນໍາໃຊ້ລາຍຮັບຂອງລັດຖະບານເພື່ອປົກຄຸມຍ້ອນຂະແໜງການນອກລະບົບຍັງກວມເອົາສັດສ່ວນສ່ວນໃຫຍ່. ປະເດັນນີ້ເປັນສິ່ງທ້າທາຍທີ່ທັງລັດຖະບານ ແລະ ຄູ່ຮ່ວມງານສາກົນຕ້ອງເຕົ້າໂຮມ ແລະ ຈັດສັນຊັບພະຍາກອນເພື່ອຈັດຕັ້ງປະຕິບັດແຜນງານທີ່ມີຄວາມເຂັ້ມແຂງຈໍານວນໜຶ່ງທີ່ສອດຄ່ອງກັບບູລິມະສິດຍຸດທະສາດ ຄຽງຄູ່ກັບການຫຼີກລ່ຽງການເຮັດວຽກແບບບໍ່ລວມສູນເຊິ່ງອາດເກີດຂຶ້ນຍ້ອນມີຈຸດປະສົງເປົ້າໝາຍທີ່ແຂ່ງຂັນກັນ.

## 4.3. ການຈັດຕັ້ງປະຕິບັດ ກອງທຶນປະກັນສຸຂະພາບແຫ່ງຊາດ

| ເປົ້າໝາຍ: ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ກັບລະບົບປະກັນສຸຂະພາບ |
|---|
| ຈຸດປະສົງ: ສ້າງຄວາມເຂັ້ມແຂງໃນການພັດທະນາວຽກວຽກປະກັນສຸຂະພາບເພື່ອໃຫ້ເປັນລະບົບ ແລະ ມີປະສິດທິພາບໃຫ້ທຸກຄົນສາມາດເຂົ້າເຖິງການບໍລິການປິ່ນປົວສຸຂະພາບ |

**ກອງທຶນປະກັນສຸຂະພາບແຫ່ງຊາດ ມີບາດກ້າວອັນສໍາຄັນໃນການບັນລຸເປົ້າໝາຍປົກຄຸມສຸຂະພາບທົ່ວປວງຊົນເພື່ອເປົ້າໝາຍໃນການຫລຸດພາລະແບກຫາບດ້ານການເງິນໃນການເຂົ້າເຖິງບໍລິການສາທາລະນະສຸກ.** ສປປ ລາວ ມີຄວາມຄືບໜ້າທີ່ໜ້າປະທັບໃຈໃນການຂະຫຍາຍເຂດປົກຄຸມປະກັນສຸຂະພາບໄປສູ່ປະຊາຊົນສ່ວນໃຫຍ່, ໂດຍສະເພາະແມ່ນເຂດປົກຄຸມໄດ້ເພີ່ມຂຶ້ນຈາກ 32 ສ່ວນຮ້ອຍ ໃນປີ 2015 ເປັນ 94.5 ສ່ວນຮ້ອຍ ໃນປີ 2023 (ຮູບ 7). ການບັນລຸເຂດປົກຄຸມນີ້ ແມ່ນມາຈາກນະໂຍບາຍໃນການຖົມຊຸມຄ່າປິ່ນປົວສຸຂະພາບຂອງປະຊາຊົນທຸກຖ້ວນໜ້າທີ່ໄດ້ຈັດຕັ້ງປະຕິບັດມາຕັ້ງແຕ່ປີ 2017.

**ຍຸດທະສາດປະກັນສຸຂະພາບແຫ່ງຊາດ 2021 ຫາ 2025 ໄດ້ກໍານົດວິໄສທັດ ແລະ ພາລະກິດອັນຈະແຈ້ງໃນການຈັດຕັ້ງປະຕິບັດກອງທຶນປະກັນສຸຂະພາບແຫ່ງຊາດໃຫ້ເກີດປະສິດທິພາບສູງສຸດ, ລວມທັງການສ້າງຄວາມເຂັ້ມແຂງດ້ານໂຄງສ້າງນິຕິກໍາ ແລະ ສະຖາບັນ.** ຄຽງຄູ່ກັບຍຸດທະສາດປະກັນສຸຂະພາບ, ຫ້ອງການປະກັນສຸຂະພາບແຫ່ງຊາດ (ຫກປຊ) ໄດ້ເຮັດພາລະບົດບາດອັນສໍາຄັນໃນການບັນລຸເຂດປົກຄຸມປະກັນສຸຂະພາບແບບມີປະສິດທິພາບໂດຍ ສະເພາະແມ່ນ ໄດ້ເຮັດພາລະບົດບາດໃນການຊີ້ນໍາ-ນໍາພາ, ການໂຮມທຶນ, ການກວດສອບ ແລະ ຈ່າຍເງິນໃຫ້ສະຖານທີ່ບໍລິການ, ແລະ ການຕິດຕາມປະເມີນຜົນ. ອປຊ ຍັງເຮັດພາລະບົດບາດ

### ▶ ຮູບ 7. ເຂດປົກຄຸມ ຂອງ ກອງທຶນປະກັນສຸຂະພາບ ແຍກຕາມກຸ່ມສະມາຊິກ, 2023.




ແຫຼ່ງຂໍ້ມູນ: ຫ້ອງການປະກັນສຸຂະພາບ (ຫກປຊ), ກະຊວງສາທາລະນະສຸກ

### ▶ ຮູບ 8. ເຂດປົກຄຸມປົກປ້ອງສັງຄົມດ້ານສຸຂະພາບ




* FCU5, FMAT, HEF, CBHI except VTC merged into NHI

ແຫຼ່ງຂໍ້ມູນ: ຫ້ອງການປະກັນສຸຂະພາບ (ຫກປຊ), ກະຊວງສາທາລະນະສຸກ

ໃນການຂຶ້ນທະບຽນ ແລະ ເກັບເງິນສົມທົບຈາກຜູ້ປະກັນຕົນ ປະກັນສັງຄົມເພື່ອເຮັດໃຫ້ເຂົາເຈົ້າ ແລະ ສະມາຊິກຄອບຄົວ ເກີດສິດປິ່ນປົວສຸຂະພາບ.

**ການລົງທຶນໃສ່ກອງທຶນປະກັນສຸຂະພາບແຫ່ງຊາດ ແມ່ນນຳໃຊ້ຫຼາກຫຼາຍແຫຼ່ງທຶນແບບປະສົມປະສານເຊັ່ນ: ເງິນສົມທົບຈາກສະມາຊິກປະກັນສັງຄົມ ແລະ ເງິນອຸດໜູນຈາກລັດຖະບານ.** ສະມາຊິກຜູ້ປະກັນຕົນມີສິດໃນການເຂົ້າເຖິງການບໍລິການຊຸດຮອບດ້ານລວມທັງການນອນໂຮງໝໍ ແລະ ການບໍລິການຂັ້ນໜຶ່ງ ແລະ ສອງສຳລັບ ICU, ໂດຍທີ່ຕ້ອງຈົກຈ່າຍຮ່ວມມູນຄ່າເລັກນ້ອຍລະຫວ່າງ 5,000 ຫາ 30,000 ກີບ. ແມ່ຍິງຖືພາ, ເດັກອາຍຸຕ່ຳກວ່າຫ້າປີ ແລະ ຄົນເຈັບທີ່ມາຈາກຄອບຄົວທຸກຍາກ ແລະ ຜູ້ປະກັນຕົນປະກັນສັງຄົມ ສາມາດໃຊ້ບໍລິການແບບບໍ່ເສຍຄ່າຈ່າຍຮ່ວມ.

ເຖິງຢ່າງໃດກໍຕາມ, ຍັງມີຊ່ອງຫວ່າງດ້ານເຂດປົກຄຸມຂອງກອງທຶນປະກັນສຸຂະພາບແຫ່ງຊາດ ດັ່ງລຸ່ມນີ້:

- **ຊ່ອງຫວ່າງດ້ານການປົກຄຸມກຸ່ມປະຊາກອນ:** ນະໂຍບາຍການຖືມຊຸມຈາກພາກລັດຕໍ່ກອງທຶນປະກັນສຸຂະພາບແຫ່ງຊາດແມ່ນຍັງບໍ່ທັນໄດ້ຈັດຕັ້ງປະຕິບັດຢູ່ນະຄອນຫຼວງວຽງຈັນ. ສະນັ້ນ, ປະຊາຊົນຜູ້ທີ່ບໍ່ໄດ້ເຂົ້າກອງທຶນປະກັນສັງຄົມ ແລະ ກອງທຶນປະກັນສຸຂະພາບຊຸມຊົນ ແບບສະໝັກໃຈ ແມ່ນບໍ່ໄດ້ຮັບການປົກປ້ອງດ້ານການເງິນເພື່ອຈະໄດ້ເຂົ້າເຖິງການບໍລິການສາທາລະນະສຸກໃນເວລາເຈັບເປັນ.

- **ຊ່ອງຫວ່າງການປົກປ້ອງດ້ານການເງິນ:** ເຖິງຈະມີຊຸດບໍລິການຈຳເປັນພື້ນຖານແບບຄົບຊຸດ ແລະ ອັດຕາການຈ່າຍຮ່ວມຢູ່ໃນລະດັບຕ່ຳກໍ່ຕາມ, ຍັງມີຫຼັກຖານບົ່ງຊີ້ວ່າມີຜູ້ຊົມໃຊ້ບໍລິການປິ່ນປົວສຸຂະພາບຫຼາຍຄົນຍັງໄດ້ຈ່າຍຄ່າປິ່ນປົວໃນອັດຕາສູງກວ່າເງິນຈ່າຍຮ່ວມ ສ່ວນຫຼາຍແມ່ນຍ້ອນບໍ່ມີການຈັດສັນງົບປະມານແບບພຽງພໍໃຫ້ແກ່ສະຖານທີ່ບໍລິການສຸຂະພາບ. ອີງໃສ່ເປົ້າໝາຍ SDGs[11], ລາຍຈ່າຍສາທາລະນະສຸກແບບສິ້ນເນື້ອປະດາຕົວແມ່ນໝາຍເຖິງ ອັດຕາການຈົກຖົງຈ່າຍທຽບໃສ່ສ່ວນຮ້ອຍຂອງການຊົມໃຊ້ໃນຄົວເຮືອນ ຫຼື ລາຍຮັບທີ່ເກີນມາດຖານທີ່ກຳນົດ (ເຊັ່ນ 10 ສ່ວນຮ້ອຍ ຫຼື 25 ສ່ວນຮ້ອຍ). ອີງໃສ່ຜົນການສຶກສາຂອງ ອົງການອະນາໄມໂລກ (2023 b). ອີງໃສ່ຜົນການສຶກສາຂອງອົງການ WHO (2023b), ເຫັນວ່າໃນລະຫວ່າງປີ 2012-2013 ແລະ 2018- 2019, ອັດຕາການຈົກຖົງຈ່າຍແບບສິ້ນເນື້ອປະດາຕົວ (ຂອງທັງສອງມາດຖານ) ແມ່ນໄດ້ຫລຸດລົງເປັນຈຳນວນຫຼາຍ, ສຳລັບຜູ້ທີ່ມີອັດຕາການຈ່າຍປິ່ນປົວສຸຂະພາບທີ່ຮອດເກນມາດຖານ 10 ສ່ວນຮ້ອຍ ແມ່ນຈະຫລຸດລົງຈາກ 13.5 ສ່ວນຮ້ອຍຂອງປະຊາກອນ ເປັນ 8.4 ສ່ວນຮ້ອຍ. ເຖິງຢ່າງໃດກໍ່ຕາມ, ນີ້ໝາຍຄວາມວ່າໃນແຕ່ລະປີແມ່ນຍັງມີຜູ້ຈົກຖົງຈ່າຍທີ່ຖືກພິຈາລະນາເປັນຈ່າຍແບບສິ້ນເນື້ອປະດາຕົວເປັນຈຳນວນຫຼາຍ. ສຳລັບຜູ້ທີ່ມີຖານະດີກວ່າກໍ່ຕົກເປັນຜູ້ຈົກຖົງຈ່າຍ

### ▶ ຮູບ 9. ຕົວຊີ້ບອກ SDG 3.8.2 (ສູງກວ່າ10%)




ແຫຼ່ງຂໍ້ມູນ: WHO 2023.

11 SDG indicator 3.8.2.

**▶ ຮູບ 10. ຕົວຊີ້ບອກ SDG 3.8.2 (ສູງກ່ວາ 25%)**




ແຫຼ່ງຂໍ້ມູນ: WHO 2023.

ແບບສິ້ນເນື້ອປະດາຕົວຄືກັນ (ຮູບ 9 ແລະ 10) ເຖິງເຂົາເຈົ້າຈະຖືກລາຍງານເປັນຜູ້ທີ່ມີຄວາມສ່ຽງດ້ານພາລະແບກຫາບດ້ານການເງິນໃນການເຂົ້າເຖິງບໍລິການສາທາລະນະສຸກຕໍ່າກ່ວາກໍ່ຕາມ. ສ່ວນປະຊາຊົນທີ່ອາໄສຢູ່ໃນເຂດຕົວເມືອງ ແລະ ຊົນນະບົດ ແມ່ນມີອັດຕາການຈົກຖົງຈ່າຍແບບສິ້ນເນື້ອປະດາຕົວຕາມມາດຖານ 10 ສ່ວນຮ້ອຍ ແລະ 25 ສ່ວນຮ້ອຍ ແບບໃກ້ຄຽງກັນ, ໂດຍອັດຕາສ່ວນທີ່ສູງກ່ວາໝູ່ແມ່ນຢູ່ນະຄອນຫຼວງວຽງຈັນ.

- **ຊ່ອງຫວ່າງດ້ານຊຸດຜົນປະໂຫຍດ:** ປັດຈຸບັນ ຫກປຊ ບໍ່ໄດ້ຈ່າຍຊົດເຊີຍດ້ານກິດຈະກໍາເຄື່ອນທີ່ໃຫ້ແກ່ສະຖານທີ່ບໍລິການ ໂດຍສົ່ງຜົນໃຫ້ສະຖານທີ່ບໍລິການຂາດສິ່ງຈູງໃຈໃນການເຂົ້າຮ່ວມກິດຈະກໍາເຄື່ອນທີ່.

- **ຄວາມບໍ່ສະເໝີພາບໃນການເຂົ້າເຖິງບໍລິການ:** ຍ້ອນມີອຸະສັກດ້ານການເງິນ ແລະ ອື່ນໆ, ຈຶ່ງເຮັດໃຫ້ເກີດມີຄວາມບໍ່ສະເໝີພາບໃນການເຂົ້າເຖິງບໍລິການປິ່ນປົວສຸຂະພາບການໄດ້ຮັບການປົກປ້ອງດ້ານການເງິນຂອງກຸ່ມທີ່ມີລາຍໄດ້ແຕກຕ່າງກັນ ແລະ ກຸ່ມຊົນເຜົ່າສ່ວນໜ້ອຍ. ຜົນການສໍາຫລວດ ດັດຊະນີໝາຍສັງຄົມ (2017-18) ໄດ້ສະແດງໃຫ້ເຫັນວ່າ ອັດຕາການຊົມໃຊ້ບໍລິການ, ເຂດປົກຄຸມປະກັນສຸຂະພາບ ແລະ ພາລະແບກຫາບດ້ານການເງິນຂອງກຸ່ມປະຊາກອນຕ່າງໆ ແລະ ຜູ້ທີ່ອາໄສຢູ່ເຂດທີ່ຕັ້ງພູມສັນຖານທີ່ແຕກຕ່າງກັນແມ່ນມີຄວາມແຕກໂຕນກັນຫຼາຍ. ຕົວຢ່າງ, ການເຂົ້າເຖິງບໍລິການປິ່ນປົວສຸຂະພາບຂອງປະຊາຊົນທີ່ອາໄສຢູ່ເຂດຕົວເມືອງ ແລະ ຊົນນະບົດ. ເຂດຕົວເມືອງມີອັດຕາການເສຍຊີວິດຂອງເດັກແດງ ແລະ ເດັກອາຍຸຕໍ່າກວ່າ 5 ປີຕໍ່າກ່ວາ, ເຊິ່ງຄວາມແຕກຕ່າງນີ້ແມ່ນມາຈາກທີ່ຕັ້ງພູມສັນຖານທີ່ແຕກໂຕນກັນ. ຍິ່ງໄປກ່ວານັ້ນ, ຜູ້ທຸກຍາກໂດຍສະເພາະແມ່ນຜູ້ທີ່ມີລາຍຮັບຕໍ່າ ແລະ ເປັນຄົນຊົນເຜົ່າ ແມ່ນຍັງປະເຊີນກັບສິ່ງທ້າທາຍໃນການເຂົ້າເຖິງບໍລິການປິ່ນປົວສຸຂະພາບ ແລະ ການປົກປ້ອງດ້ານການເງິນ. ເຖິງຈະມີຄວາມພະຍາຍາມໃນການຂະຫຍາຍເຂດປົກຄຸມປະກັນສຸຂະພາບກໍ່ຕາມ, ຍັງມີຄວາມແຕກໂຕນກັນລະຫວ່າງປະກັນສຸຂະພາບ ແລະ ການເຂົ້າເຖິງບໍລິການປິ່ນປົວສຸຂະພາບໃນລະບົບສາທາລະນະສຸກ. ຄວາມແຕກໂຕນນີ້ແມ່ນມາຈາກຫຼາກຫຼາຍປັດໄຈ ລວມທັງເລື່ອງຊົນເຜົ່າ, ສະຖານະເສດຖະກິດ ແລະ ທີ່ຕັ້ງພູມສັນຖານ. ນອກຈາກນັ້ນ, ການຂາດຊັບພະຍາກອນ ແລະ ຂໍ້ມູນຂ່າວສານສາທາລະນະສຸກ, ລະດັບການສຶກສາຕໍ່າ, ພຶດຕິກໍາທີ່ຍຶດໝັ້ນແບບເກົ່າ ແລະ ທັດສະນະຄະຕິຕໍ່ບຸກຄະລະກອນການແພດລ້ວນແລ້ວແຕ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ຜູ້ທຸກຍາກໃນການນໍາໃຊ້ບໍລິການສາທາລະນະສຸກ (ຮູບ 11 ແລະ 12).

**▶ ຮູບ 11. ຄວາມບໍ່ສະເໝີພາບໃນການເຂົ້າເຖິງບໍລິການສາທາລະນະສຸກໃນເຂດຕົວເມືອງ ແລະ ຊົນນະບົດ**




ແຫຼ່ງຂໍ້ມູນ: ການສຳຫລວດດັດຊະນີໝາຍສັງຄົມ II (2017-18).

**▶ ຮູບ 12. ຄວາມສະເໝີພາບໃນການເຂົ້າເຖິງບໍລິການສາທາລະນະສຸກໃນກຸ່ມທີ່ມີລາຍຮັບແຕກຕ່າງກັນ**




ແຫຼ່ງຂໍ້ມູນ: ການສຳຫລວດດັດຊະນີໝາຍສັງຄົມ II (2017-18).

**ນອກຈາກນັ້ນ, ຄວາມຍືນຍົງດ້ານການເງິນຂອງກອງທຶນປະກັນສຸຂະພາບແຫ່ງຊາດແມ່ນມີຄວາມສ່ຽງສູງ.** ງົບປະມານຂາດດູນສະສົມຮອດປີ 2023 ແມ່ນເທົ່າກັບ 151 ຕື້ກີບ (ທກປຊ, 2024). ບັນຫາດ້ານໄພເງິນເຟີ້ ແລະ ການທີ່ບໍ່ໄດ້ປັບອັດຕາການຈ່າຍເງິນໃຫ້ສະຖານທີ່ບໍລິການນັ້ນ ໄດ້ສົ່ງຜົນກະທົບຕໍ່ຄຸນນະພາບການປິ່ນປົວໃນເດືອນປະຈຸບັນ. ຄວາມຍືນຍົງດ້ານການເງິນໃນໄລຍະຍາວຂອງກອງທຶນແມ່ນຂຶ້ນກັບລະດັບການຈັດສັນງົບປະມານເພີ່ມຈາກພາກລັດສຳລັບການຈັດຕັ້ງປະຕິບັດນະໂຍບາຍອຸດໜູນປິ່ນປົວສຸຂະພາບ ແລະ ການຈ່າຍຄ່າປິ່ນປົວໃຫ້ແກ່ສະຖານທີ່ບໍລິການສາທາລະນະສຸກຕາມຕົ້ນທຶນຕົວຈິງ.

**ການຈັດສັນງົບປະມານຈາກພາກລັດເພີ່ມແມ່ນຈຳເປັນຕໍ່ການຂະຫຍາຍເຂດປົກຄຸມປະກັນສຸຂະພາບສູ່ນະຄອນຫຼວງວຽງຈັນໄປພ້ອມໆກັນກັບການຫັນແຮງງານສູ່ໃນລະບົບ ແລະ ການຕິດຕາມຊຸກຍູ້ເພື່ອຮັບປະກັນໃຫ້ວິສາຫະກິດປະຕິບັດຕາມກົດໝາຍປະກັນສັງຄົມ.**

ໃນທີ່ສຸດ, ລະບົບປະກັນສຸຂະພາບທີ່ຍືນຍົງ ແລະ ດີເດັ່ນນັ້ນ ຈໍາເປັນຕ້ອງມີການຮ່ວມຕົວຈາກຫຼາຍໆກອງທຶນເຂົ້າກັນ, ໂດຍສະເພາະແມ່ນຢູ່ນະຄອນຫຼວງວຽງຈັນທີ່ຍັງຈັດຕັ້ງປະຕິບັດຫຼາຍກອງທຶນທີ່ແຕກຕ່າງກັນ (ປະກັນສັງຄົມ, ປະກັນສຸຂະພາບຊຸມຊົນ ແລະ ກອງທຶນປະກັນສຸຂະພາບສໍາລັບຜູ້ທຸກຍາກ). ການຮ່ວມກອງທຶນເຂົ້າກັນໃນປີ 2017 ແມ່ນເພື່ອຫລຸດຜ່ອນຄ່າໃຊ້ຈ່າຍດ້ານບໍລິຫານ ແລະ ການຄຸ້ມຄອງການເງິນແບບກະແຈກກະຈາຍພ້ອມທັງເພື່ອການປັບປຸງປະສິດຕິພາບຂອງກອງທຶນ.

## 4.3.1. ຄວາມຄືບໜ້າຮອດປະຈຸບັນ

### ພັດທະນາ ແລະ ຈັດຕັ້ງປະຕິບັດກອບນິຕິກໍາສໍາລັບການປົກຄຸມສຸຂະພາບທົ່ວປວງຊົນ

**ຍຸດທະສາດປະກັນສຸຂະພາບແຫ່ງຊາດ 2021 ຫາ 2025 ໄດ້ກໍານົດວິໄສທັດ ແລະ ພາລະກິດອັນຈະແຈ້ງໃນການສ້າງຕັ້ງກອງທຶນປະກັນສຸຂະພາບແຫ່ງຊາດ.** ໂດຍສອດຄ່ອງກັບຍຸດທະສາດການເງິນສາທາລະນະສຸກ 2021 ຫາ 2025 ແລະ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ. ເພື່ອຮັບປະກັນຄວາມສອດຄ່ອງ ແລະ ການເຊື່ອມໂຍງບັນດາແຜນວຽກໃນຂົງເຂດດຽວກັນເຂົ້າກັນ.

**ກົດໝາຍວ່າດ້ວຍການປະກັນສຸຂະພາບແຫ່ງຊາດຖືກຮັບຮອງໃນເດືອນທັນວາ 2018.** ກອງທຶນປະກັນສຸຂະພາບແຫ່ງຊາດໄດ້ຖືກສ້າງຕັ້ງຂຶ້ນ, ແຫຼ່ງທຶນທີ່ນໍາໃຊ້ແມ່ນມາຈາກງົບປະມານປະຈໍາປີຂອງລັດຖະບານ, ເງິນຈ່າຍຮ່ວມຈາກຜູ້ໃຊ້ບໍລິການເວລາໄປປິ່ນປົວສຸຂະພາບຢູ່ສະຖານທີ່ບໍລິການ ແລະ ເງິນສົມທົບຈາກສະມາຊິກປະກັນສັງຄົມ. ເຖິງຢ່າງໃດກໍຕາມ, ປະຈຸບັນຍັງບໍ່ທັນໄດ້ສ້າງກອງທຶນປະກັນສຸຂະພາບທີ່ເປັນເອກະລາດຂຶ້ນເທື່ອ. ທຶນຮອນທັງໝົດທີ່ກ່ຽວຂ້ອງກັບການໃຫ້ບໍລິການແມ່ນຈັດສັນມາຈາກງົບປະມານແຫ່ງລັດຜ່ານບັນຊີສະເພາະໃນຄັງເງິນແຫ່ງຊາດຈຶ່ງເຮັດໃຫ້ເກີດມີການຊັກຊ້າໃນການຈ່າຍເງິນຊົດເຊີຍໃຫ້ກັບສະຖານທີ່ບໍລິການສາທາລະນະສຸກ. ປະຈຸບັນ, ກົດໝາຍ ກໍາລັງຖືກປັບປຸງໂດຍມີຈຸດປະສົງຢາກໃຫ້ກອງທຶນປະກັນສຸຂະພາບມີຄວາມຍືນຍົງທາງດ້ານການເງິນ, ໃຫ້ກອງທຶນມີຄວາມເປັນເອກະລາດທາງດ້ານການຈັດຕັ້ງ ແລະ ການເງິນ ແລະ ປະກອບສ່ວນໃຫ້ແກ່ການປະຕິບັດຕາມມາດຕະຖານສາກົນດ້ານເຂດປົກຄຸມ ແລະ ການມີຊຸດຜົນປະໂຫຍດທີ່ພຽງພໍ. ຄາດວ່າກົດໝາຍສະບັບປັບປຸງຈະຖືກຮັບຮອງພາຍໃນປີ 2024 - 2025.

**ເນື່ອງຈາກວ່າລະບົບ NHI ຕ້ອງປະເຊີນໜ້າກັບສິ່ງທ້າທາຍຕ່າງໆໃນການຮັບປະກັນຄວາມຍືນຍົງດ້ານການເງິນໄລຍະຍາວ ແລະ ການປົກປ້ອງທີ່ພຽງພໍ ແລະ ທ່ຽງທໍາ, ຫ້ອງການປະກັນສຸຂະພາບແຫ່ງຊາດຈຶ່ງໄດ້ເຮັດວຽກຢ່າງໃກ້ຊິດກັບຄູ່ຮ່ວມພັດທະນາເພື່ອປັບປຸງນະໂຍບາຍ ແລະ ນິຕິກໍາທີ່ມີໂດຍຜ່ານການດໍາເນີນການຄົ້ນຄ້ວາດ້ານວິຊາການ ແລະ ຂະບວນການປຶກສາຫາລືພາຍໃນທົ່ວປະເທດ.** ການຄົ້ນຄ້ວາດ້ານວິຊາການນັ້ນປະກອບມີ (i) ການປະເມີນການຈັດຕັ້ງປະຕິບັດຂອງກົດໝາຍປະກັນສຸຂະພາບ ໂດຍສະເພາະແມ່ນໄດ້ປະເມີນປະສິດທິພາບຂອງການຈັດຕັ້ງປະຕິບັດກົດໝາຍພາຍຫຼັງການຮັບຮອງໃນ 5 ປີຜ່ານມາ ແລະ ໄດ້ຮັບການປະກອບຄໍາເຫັນຕໍ່ການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວຈາກຂັ້ນທ້ອງຖິ່ນ. ການປະເມີນໃນຄັ້ງນີ້ຍັງໄດ້ກໍານົດຂົງເຂດທີ່ຕ້ອງໄດ້ປັບປຸງ ເພື່ອສົ່ງຕໍ່ໃຫ້ສະພາແຫ່ງຊາດໄປພິຈາລະນາໃນການປັບປຸງ ພາຍໃນປີ 2024-2025.

**ດັ່ງນັ້ນ, ຈຶ່ງມີຄວາມສໍາຄັນທີ່ຕ້ອງປັບປຸງຄູ່ມືວ່າດ້ວຍການບໍລິຫານລະບົບປະກັນສຸຂະພາບແຫ່ງຊາດສະບັບເລກທີ 0476/ສທ ເພາະວ່າເປັນເຄື່ອງມືທີ່ສໍາຄັນເພື່ອການຈັດຕັ້ງປະຕິບັດແບບມີປະສິດທິຜົນໂດຍນໍາໃຊ້ຜົນການຄົ້ນຄ້ວາວິໃຈແບບຮອບດ້ານໃນຂອບເຂດທົ່ວປະເທດມາເປັນພື້ນຖານໃນການປັບປຸງກົດໝາຍ.** ໃນການປັບປຸງ, ຄາດວ່າຈະມີການດັດແກ້ລາຄາຄ່າບໍລິການເຊັ່ນ: ເພີ່ມອັງເງິນສົມທົບ/ຈ່າຍຮ່ວມ ແລະ ອັດຕາການຈ່າຍເງິນໃຫ້ສະຖານທີ່ບໍລິການ ນອກຈາກນັ້ນ, ໃນກອງປະຊຸມການປະກັນສຸຂະພາບ ປະຈໍາປີ 2023, ໄດ້ມີການຕົກລົງເຫັນດີເພື່ອປັບປຸງ ດໍາລັດ 470/ລບ ທີ່ໄດ້ເຊັນຮັບຮອງໃນປີ 2018.

### ພັດທະນາລະບົບ ແລະ ສ້າງຂີດຄວາມສາມາດໃຫ້ແກ່ພະນັກງານຂອງຫ້ອງການປະກັນສຸຂະພາບແຫ່ງຊາດ

**ລະບົບຄຸ້ມຄອງຂໍ້ມູນຂ່າວສານປະກັນສຸຂະພາບແຫ່ງຊາດ (MIS) ຖືກພັດທະນາຂຶ້ນໃນປີ 2021 ໂດຍສອດຄ່ອງກັບ ແຜນຍຸດທະສາດຂໍ້ມູນຂ່າວສານສາທາລະນະສຸກແຫ່ງຊາດ 2018-2025 ເຊິ່ງເນັ້ນໃສ່ປະກອບເຄື່ອງມືໃຫ້ແກ່ ຫກປຊ ໂດຍໃຫ້ມີລະບົບຄຸ້ມຄອງຂໍ້ມູນຂ່າວສານທີ່ສາມາດໃຊ້ໄດ້ເຕັມສ່ວນ ແລະ ປະກອບສ່ວນໃຫ້ແກ່ການສ້າງຄວາມເຂັ້ມແຂງຂອງລະບົບປະກັນສຸຂະພາບ, ເຖິງຢ່າງໃດກໍຕາມ, ການນໍາໃຊ້ຂໍ້ມູນຂ່າວສານ ແລະ ລະບົບດິຈິຕອນແມ່ນຍັງຢູ່ໃນຂອບເຂດຈໍາກັດ, ໂດຍສະເພາະແມ່ນໃນຂົງເຂດການຄຸ້ມຄອງຜູ້ໄດ້ຮັບຜົນປະໂຫຍດ ແລະ ພາກນອກລະບົບ.** ລະບົບການຄຽນແທນເງິນຂອງກອງທຶນປະກັນສຸຂະພາບປະຈຸບັນແມ່ນເອື່ອຍອີງເຄື່ອງມື Excel ໂດຍສະຖານທີ່ປິ່ນປົວສົ່ງຂໍ້ມູນການຊົມໃຊ້ບໍລິການຂອງຄົນເຈັບໃຫ້ແກ່ ຫກປຊ. ຫກປຊ ໃຊ້ຂໍ້ມູນດັ່ງກ່າວ ເພື່ອຄິດໄລ່ມູນຄ່າຄ່າບໍລິການທີ່ຕ້ອງທົດແທນໃຫ້ສະຖານທີ່ປິ່ນປົວ.

**ເພື່ອອໍານວຍການຈັດຕັ້ງປະຕິບັດ ຍຸດທະສາດປະກັນສຸຂະພາບ ແລະ ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ, ຫກປຊ ກໍາລັງພັດທະນາລະບົບ E-Claim ແບບເອເລັກໂຕຣນິກເພື່ອຍົກລະດັບປະສິດທິຜົນຂອງລະບົບຊໍາລະສະສາງຂອງກອງທຶນປະກັນສຸຂະພາບແຫ່ງຊາດ ແລະ ປັບປຸງຂໍ້ມູນຂ່າວສານ ແລະ ລະບົບການຄຸ້ມຄອງຂໍ້ມູນເພື່ອການທົບທວນກົນໄກຈ່າຍເງິນໃຫ້ແກ່ສະຖານທີ່ບໍລິການ.** ຈຸດປະສົງຕົ້ນຕໍແມ່ນເພື່ອໃຫ້ສະຖານທີ່ປິ່ນປົວສາມາດສ້າງ ແລະ ນໍາສົ່ງເອກະສານຂໍເບີກຈ່າຍຜ່ານທາງເອເລັກໂຕຣນິກໃຫ້ແກ່

ຫກປຊ ໂດຍແນໃສ່ການຫຼຸດຜ່ອນເວລາ, ຄ່າໃຊ້ຈ່າຍ, ຂໍ້ຜິດພາດ ແລະ ມີຄວາມສະດວກໃນການຕິດຕາມ ແລະ ກວດສອບ. ປະຈຸບັນ, ລະບົບນີ້ກຳລັງຢູ່ໃນໄລຍະທົດລອງຢູ່ສອງແຂວງກໍຄື: ຊຽງຂວາງ ແລະ ຫົວພັນ. ລະບົບດັ່ງກ່າວຍັງບໍ່ທັນສາມາດເຊື່ອມສານເຕັມສ່ວນ ກັບລະບົບຂໍ້ມູນຂ່າວສານປະກັນສຸຂະພາບແຫ່ງຊາດເທື່ອ.

**ນອກຈາກນັ້ນ, ຄູ່ມືກວດສອບຂອງ ຫກປຊ ໄດ້ຖືກຮັບຮອງໃນປີ 2020 ເຊິ່ງເປັນເຄື່ອງມືໃນການກວດສອບການດຳເນີນງານຂອງກອງທຶນ ແລະ ການຄຸ້ມຄອງການເງິນຢ່າງໂປ່ງໃສ.** ເປົ້າໝາຍຂອງຄູ່ມືນີ້ແມ່ນເພື່ອຮັບປະກັນໃຫ້ສາມາດເກັບໄດ້ ແລະ ວິເຄາະຂໍ້ມູນໃຫ້ທັນຕາມກຳນົດເວລາ ແລະ ໃຫ້ລາຍຈ່າຍໃນການປິ່ນປົວຖືກຄິດໄລ່ຢ່າງຖືກຕ້ອງ. ໄດ້ສຳເລັດການຝຶກອົບຮົມກ່ຽວກັບການນຳໃຊ້ຄູ່ມືກວດສອບນີ້ໃນທົ່ວປະເທດ. ໂດຍໄດ້ຮັບການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ, ຄູ່ມືການຄຸ້ມຄອງການເງິນຂອງກອງທຶນປະກັນສຸຂະພາບກຳລັງຖືກພັດທະນາຂຶ້ນ. ເປົ້າໝາຍຂອງຄູ່ມືແມ່ນເພື່ອຮັບປະກັນ:

1. ການຍົກລະດັບລະບົບຄວບຄຸມພາຍໃນຂອງກອງທຶນປະກັນສຸຂະພາບ

2. ການຂຶ້ນແຜນງົບປະມານໃຫ້ສອດຄ່ອງກັບຕົວຈິງ ແລະ ໃຫ້ມີຄຸນນະພາບ

3. ມີການບັນທຶກລາຍການເຄື່ອນໄຫວດ້ານການເງິນແບບຖືກຕ້ອງ ແລະ ທັນຕາມກຳນົດເວລາ

4. ໃຫ້ມີເອກະສານປະກອບພຽງພໍ

5. ປັບປຸງກົນໄກການຈ່າຍເງິນໃຫ້ສະຖານທີ່ບໍລິການໃຫ້ທັນຕາມກຳນົດເວລາ

6. ສ້າງບົດລາຍງານດ້ານການເງິນແບບເຊື່ອຖືໄດ້, ໂປ່ງໃສ ແລະ ທັນຕາມກຳນົດເວລາ.

**ຫກປຊ ໄດ້ຮັບການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາເພື່ອຍົກລະດັບຂີດຄວາມສາມາດຂອງພະນັກງານຂອງຕົນໂດຍຜ່ານການຝຶກອົບຮົມຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນພ້ອມທັງການສະໜອງຫຼັກສູດລະດັບສາກົນກ່ຽວກັບຫົວຂໍ້ຕ່າງໆເປັນຕົ້ນແມ່ນ ການຄຳນວນຄະນິດສາດ ແລະ ການສຶກສາຕົ້ນທຶນ.** ໜຶ່ງໃນບັນຫາຕົ້ນຕໍທີ່ຖືກຍົກຂຶ້ນໃນການສຳພາດແມ່ນພະນັກງານຂອງຫກປຊ ມີຂໍ້ຈຳກັດ ແລະ ມີການສັບປ່ຽນຫຼາຍ. ຢູ່ຂັ້ນສູນກາງ, ບໍລິມາດວຽກຂອງພະນັກງານເພີ່ມຂຶ້ນຫຼາຍ ເນື່ອງຈາກວ່າຈຳນວນພະນັກງານແມ່ນເທົ່າເກົ່າໂດຍທີ່ມີພະນັກງານທັງໝົດ 30 ຄົນ ແຕ່ຮັບຜິດຊອບທຸກໆໜ້າວຽກໃນຂອບເຂດທົ່ວປະເທດ. ຢູ່ຂັ້ນແຂວງ, ມີພະນັກງານ ປະມານ 4-5 ຄົນຕໍ່ແຂວງ, ສ່ວນຂັ້ນເມືອງມີພະນັກງານປະຈຳປະມານ 1-2 ຄົນ.

**ມີການປຶກສາຫາລືຕໍ່ເນື່ອງກ່ຽວກັບການເຕົ້າໂຮມຂອງລະບົບປະກັນສຸຂະພາບ ແລະ ການປະກັນສັງຄົມໃນປີ 2019, ເຊິ່ງເວລາທີ່ລະບົບປະກັນສຸຂະພາບໄດ້ຖືກສ້າງຂຶ້ນໃນປີ 2019, ກໍໄດ້ກຳນົດໃຫ້ໂອນເງິນສົມທົບຈາກກອງທຶນປະກັນສັງຄົມ 1.25 ສ່ວນຮ້ອຍ ໃຫ້ແກ່ຫ້ອງການປະກັນສຸຂະພາບທຸກໆເດືອນເພື່ອນຳໄປຈ່າຍສະຖານທີ່ປິ່ນປົວ.** ການໂຮມສອງລະບົບເຂົ້າກັນຖືວ່າມີຄວາມຫຍຸ້ງຍາກຫຼາຍອັນເປັນຕົ້ນແມ່ນການຂາດຂໍ້ມູນ ແລະ ການລາຍງານຈາກ ຫກປຊ ກ່ຽວກັບ ການນຳໃຊ້ເງິນສົມທົບໃຫ້ແກ່ ອປຊ, ມີຄຳຮ້ອງທຸກຈາກສະມາຊິກປະກັນສັງຄົມທີ່ເພີ່ມຂຶ້ນເລື້ອຍໆ ໂດຍສະເພາະແມ່ນເລື່ອງຄຸນນະພາບການບໍລິການ, ເວລາລໍຖ້າຢູ່ໂຮງໝໍທີ່ຍາວນານ, ແລະ ການທີ່ຜູ້ປະກັນຕົນຂອງກອງທຶນປະກັນສັງຄົມໄດ້ຮັບອຸດໜູນແບບດຽວກັນ ກັບພາກປະຊາຊົນທົ່ວໄປ. ທັດສະນະມຸມມອງໃນດ້ານລົບຂອງປະຊາຊົນທົ່ວໄປຕໍ່ກອງທຶນປະກັນສຸຂະພາບແຫ່ງຊາດໄດ້ສົ່ງຜົນກະທົບຕໍ່ການເຂົ້າຮ່ວມກອງທຶນປະກັນສັງຄົມເນື່ອງຈາກວ່າປະຊາຊົນເຂົ້າໃຈວ່າເມື່ອເຂົ້າຮ່ວມກອງທຶນປະກັນສັງຄົມແລ້ວຈະໄດ້ຮັບການບໍລິການປິ່ນປົວທີ່ບໍ່ດີ ຈຶ່ງເຮັດໃຫ້ເຂົາເຈົ້າບໍ່ຢາກເຂົ້າເປັນສະມາຊິກກອງທຶນປະກັນສັງຄົມ.

## ພັດທະນາ ແລະ ປະຕິບັດຕາມມາດຕະຖານຂັ້ນຕ່ຳຂອງສະຖານທີ່ປິ່ນປົວ.

**ສ່ວນໜຶ່ງໃນວຽກປະຕິຮູບຂະແໜງການສາທາລະນະສຸກທີ່ສຳຄັນ, ກະຊວງສາທາລະນະສຸກ ໄດ້ຮັບຮອງເອົານະໂຍບາຍກ່ຽວກັບການຮັບປະກັນຄຸນນະພາບການບໍລິການປິ່ນປົວສຸຂະພາບ ກໍຄື 5 ດີ 1 ພໍໃຈ ຢູ່ທຸກລະດັບຂອງຕາໜ່າງສະຖານທີ່ປິ່ນປົວຕັ້ງແຕ່ ປີ 2016.** ເພື່ອຜັນຂະຫຍາຍນະໂຍບາຍໃນພາກຕົວຈິງ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ ມີແຜນທີ່ຈະພັດທະນາມາດຕະການຮັບປະກັນຄຸນນະພາບ ຢູ່ ທຸກລະດັບ ຂອງ ລະບົບສາທາລະນະສຸກ, ເຊິ່ງສອດຄ່ອງກັບການສະໜອງຊຸດບໍລິການສຸຂະພາບຈຳເປັນພື້ນຖານ. ນະໂຍບາຍ ຫ້າດີ ໜຶ່ງພໍໃຈ ຮຽກຮ້ອງໃຫ້ແກ່ການບັນລຸຕົວຊີ້ບອກດ້ານການຕ້ອນຮັບທີ່ອົບອຸ່ນ, ຄວາມສະອາດ, ຄວາມສະດວກ, ການບົ່ງມະຕິທີ່ຖືກຕ້ອງ, ແລະ ການປິ່ນປົວທີ່ດີ ແລະ ວອ່ງໄວເຊິ່ງເປັນສ່ວນຂອງ ຫ້າດີ ແລະ ຄວາມເພິ່ງພໍໃຈຂອງຄົນເຈັບ. ເຖິງຢ່າງໃດກໍຕາມ, ກໍຍັງມີສິ່ງທ້າທາຍ. ຍົກຕົວຢ່າງ, ຄວາມຮັບຮູ້ຂອງປະຊາຊົນກ່ຽວກັບ ສິດຂອງຕົນພາຍໃຕ້ລະບົບປະກັນສຸຂະພາບຍັງຈຳກັດ. ກະຊວງສາທາລະນະສຸກ ໄດ້ສ້າງສື່ໂຄສະນາ ເປັນຕົ້ນແມ່ນ ໂປສະເຕີ້, ສາຍດ່ວນ ແລະ ແຜ່ນພັບກ່ຽວກັບກອງທຶນປະກັນສຸຂະພາບ, ລາຍການໂທລະພາບ ແລະ ວິທະຍຸເພື່ອອະທິບາຍ ກ່ຽວກັບວຽກຂອງກອງທຶນສຸຂະພາບລວມທັງສິດ ແລະ ພັນທະ ຂອງ ພົນລະເມືອງ.

**ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກຊ ສທ, ມີພາລະບົດບາດສຳຄັນໃນການປັບປຸງຄຸນນະພາບການບໍລິການອີງຕາມນະໂຍບາຍ ຫ້າດີ ໜຶ່ງ ພໍໃຈ .** ໃນຂະນະດຽວກັນ, ກອງທຶນປະກັນສຸຂະພາບ ແຫ່ງ ຊາດ ເປັນຜູ້ຊື້ການບໍລິການ ແລະ ມີໜ້າທີ່ຮັບຜິດຊອບ ໃນການຕິດຕາມກວດກາ. ວິທີນີ້

ສາມາດຮັບປະກັນການເບີກຈ່າຍ ເພື່ອຊົດເຊີຍຄ່າບໍລິການໃຫ້ແກ່ສະຖານທີ່ປິ່ນປົວ ແບບເໝາະສົມ.

▶ **ການທົບທວນກາງສະໄໝ ພົບເຫັນວ່າມີຫຼາຍໂຄງການທີ່ກຳລັງຈັດຕັ້ງປະຕິບັດເພື່ອສະໜັບສະໜູນການປັບປຸງຄຸນນະພາບຂອງການບໍລິການສາທາລະນະສຸກ.** ໂຄງການທີ່ໄດ້ຈັດຕັ້ງປະຕິບັດບໍ່ດົນມານີ້ກໍ່ຄືໂຄງການປັບປຸງຄຸນນະພາບຂອງການບໍລິການສາທາລະນະສຸກ ແລະ ການຄຸ້ມຄອງດ້ານການເງິນຂອງໂຮງໝໍສີ່ແຂວງພາກໃຕ້ (2022-2025) ໂດຍຜ່ານການພັດທະນາລະບົບຢັ້ງຢືນນາມມະຍົດໃຫ້ແກ່ໂຮງໝໍ. ໂຄງການນີ້ໄດ້ສ້າງລະບົບເພື່ອຈັດຕັ້ງປະຕິບັດກິດຈະກຳການປັບປຸງຄຸນນະພາບຢູ່ໂຮງໝໍ, ຍົກລະດັບຄວາມສາມາດ ຂອງໂຮງໝໍໃນການສ້າງ ແລະ ຈັດຕັ້ງປະຕິບັດແຜນປັບປຸງຄຸນນະພາບໂດຍທີ່ມີງົບປະມານຈຳກັດ ແລະ ຍົກລະດັບຄວາມເພິ່ງພໍໃຈຂອງຄົນເຈັບຕໍ່ກັບການບໍລິການ. ພ້ອມນັ້ນ, ໂຄງການປັບປຸງຄຸນນະພາບການບໍລິການສຸຂະພາບ (2023-2028) ກໍ່ມີຈຸດປະສົງຍົກລະດັບຂີດຄວາມສາມາດຂອງ ກະຊວງສາທາລະນະສຸກໃນການສະໜອງການບໍລິການຄຸນນະພາບສູງໂດຍສຸມໃສ່ການຍົກລະດັບຄຸນນະພາບການບໍລິການສຸຂະພາບຢູ່ສະຖານທີ່ປິ່ນປົວຂັ້ນແຂວງ ແລະ ເມືອງ. ການບໍລິການສຸຂະພາບທີ່ມີຄຸນນະພາບເປັນອົງປະກອບທີ່ສຳຄັນສຳລັບການປົກຄຸມສຸຂະພາບທົ່ວປວງຊົນຢ່າງມີປະສິດທິຜົນພາຍໃຕ້ເປົ້າໝາຍການພັດທະນາແບບຍືນຍົງ ແລະ ການປະຕິຮູບຂະແໜງສາທາລະນະສຸກຂອງ ສປປ ລາວ, 2013-2030. ການບໍລິການທີ່ມີຄຸນນະພາບ ແລະ ການຕອບສະໜອງຄວາມຕ້ອງການຂອງຄົນເຈັບຈະສາມາດສົ່ງເສີມໃຫ້ຄົນໃຊ້ບໍລິການ ແລະ ບັນລຸຕົວຊີ້ບອກດ້ານສາທາລະນະສຸກ.

▶ **ນອກນັ້ນ, ກຊ ສທ ກຳລັງຈັດຕັ້ງປະຕິບັດໂຄງການສົ່ງເສີມການເຂົ້າເຖິງການບໍລິການດ້ານສຸຂະພາບ ແລະ ໂພຊະນາການ (2020-2029) ໂດຍມີຈຸດປະສົງປັບປຸງຄຸນນະພາບການບໍລິການສຸຂະພາບ ແລະ ໂພຊະນາການຢູ່ພື້ນທີ່ເປົ້າໝາຍຂອງປະເທດລາວ.** ໂຄງການນີ້ປະກອບມີສີ່ອົງປະກອບກໍຄື:

1. ເຊື່ອມສານການສະໜອງບໍລິການ ກັບ ການເບີກຈ່າຍເງິນກອງທຶນປະກັນສຸຂະພາບເພື່ອຈະສະໜັບສະໜູນການໂອນ ຫຼື ເບີກຈ່າຍເງິນໃຫ້ສຸກສາລາຕາມຜົນງານຕົວຈິງ , ເຊິ່ງຕິດພັນໂດຍກົງກັບບັດໃຫ້ຄະແນນດ້ານຄຸນນະພາບ ແລະ ການດຳເນີນງານ ແລະ ເຮັດໃຫ້ມີເງິນທີ່ສາມາດນຳໃຊ້ສຳລັບລາຍຈ່າຍສະເພາະທີ່ກຳນົດໄວ້.

2. ແຜນງານໜຶ່ງດຽວທີ່ມີສ່ວນຮ່ວມຫຼາຍຂະແໜງການເພື່ອປັບປຸງວຽກງານການບໍລິການສາທາລະນະສຸກ ແລະ ໂພຊະນາການຈະນຳໃຊ້ວິທີການເບີກຈ່າຍອີງຕາມຜົນສຳເລັດຕົວຊີ້ບອກ (DLIs) ທີ່ໃຫ້ບູລິມະສິດໃຫ້ແກ່ 12 ເມືອງໃນສີ່ແຂວງທີ່ມີແຜນງານໜຶ່ງດຽວຫຼາຍຂະແໜງການເພື່ອໂພຊະນາການ ຢູ່ ພາກເໜືອ ຂອງ ສປປ ລາວ ແລະ DLIs ອື່ນໆໃນຂອບເຂດທົ່ວປະເທດ.

3. ການຮຽນຮູ້ ແລະ ການບໍລິຫານໂຄງການສຸມໃສ່ການລົງທຶນ ດ້ານການປະສານງານ ແລະ ຄຸ້ມຄອງທຶນ ພ້ອມທັງຈັດຕັ້ງປະຕິບັດກິດຈະກຳທີ່ສຳຄັນ ເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດໂຄງການ.

4. ການຮັບມືກັບເຫດການສຸກເສີນເພື່ອຈະສາມາດຈັດສັນງົບປະມານຄືນໃໝ່ແບບກະທັນຫັນສຳລັບວຽກສຸກເສີນ, ໄພພິບັດ ຫຼື ເຫດການທີ່ມີຜົນກະທົບຮ້າຍແຮງ.

## ຍົກລະດັບການເຂົ້າເຖິງບໍລິການສາທາລະນະສຸກ ຢູ່ເຂດຊົນນະບົດ

**ຫ້ອງການປະກັນສຸຂະພາບແຫ່ງຊາດໄດ້ຮ່ວມມືກັບ ກະຊວງກະສິກຳ ແລະ ປ່າໄມ້ ໃນການນຳໃຊ້ລະບົບຂຶ້ນທະບຽນສັງຄົມຂອງ ກຊ ກປ ເພື່ອສະໜອງການບໍລິການໃຫ້ແກ່ຄົນທີ່ທຸກຍາກ ແລະ ຜູ້ວ່າງງານ.** ຫກປຊ ໄດ້ດຳເນີນການປຶກສາຫາລື ກັບ ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ປະຈຸບັນກຳລັງຮ່າງບົດບັນທຶກຄວາມເຂົ້າໃຈເພື່ອລົງນາມການຮ່ວມມືຢ່າງເປັນທາງການ.

**ພ້ອມນັ້ນ, ແຜນວຽກພັດທະນາຫ້າປີ ຂອງກະຊວງສາທາລະນະສຸກ ຕັ້ງແຕ່ປີ 2024-2029 ໄດ້ໃຫ້ບູລິມະສິດແກ່ການເຂົ້າເຖິງການບໍລິການສຸຂະພາບຂອງ ຄົນທຸກຍາກ**ດ້ວຍ (i) ການແລກປ່ຽນຂໍ້ມູນຂ່າວສານ ແລະ ໂຄສະນາເຜີຍແຜ່ເພື່ອໃຫ້ຄົນທີ່ທຸກຍາກ ແລະ ບອບບາງ ຮັບຮູ້ກ່ຽວກັບອຸດໜູນຂອງກອງທຶນປະກັນສຸຂະພາບ; (ii) ສ້າງລະຫັດປະຈຳຕົວທີ່ເປັນເອກະລັກໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດອີງຕາມລາຍການລາຍຊື່ລ່າສຸດຈາກຖານຈົດທະບຽນສັງຄົມ ຂອງ ກຊ ກປ; ແລະ (iii) ສະໜັບສະໜູນຄ່າເດີນທາງ ແລະ ອາຫານສ່ວນໜຶ່ງ ໃຫ້ແກ່ຄົນເຈັບທີ່ທຸກຍາກຢູ່ໂຮງໝໍນ້ອຍ.

## ຮັບປະກັນການຈັດສັນງົບປະມານພາກລັດ ທີ່ພຽງພໍ ແລະ ທັນເວລາ ໃຫ້ແກ່ວຽກປິ່ນປົວສຸຂະພາບ

**ລັດຖະບານ ແຫ່ງ ສປປ ລາວ ມີຄວາມຄືບໜ້າຫຼາຍໃນການບັນລຸການປົກຄຸມສຸຂະພາບທົ່ວປວງຊົນດັ່ງທີ່ໄດ້ລະບຸໃນແຜນພັດທະນາເສດຖະກິດ-ສັງຄົມຫ້າປີ ຄັ້ງທີ 9.** ອີງຕາມຕົວເລກການລົງທຶນໃນຂະແໜງສາທາລະນະສຸກ ຂອງ ສປປ ລາວ (ປະມານ 2.8 ສ່ວນຮ້ອຍ ຂອງ GDP), ຍັງຕ້ອງຕັ້ງຄຳຖາມວ່າລະບົບທີ່ບໍ່ເກັບເງິນສົມທົບນີ້ຈະມີຄວາມເປັນໄປໄດ້ດ້ານການເງິນໄລຍະຍາວ ຫຼື ບໍ່, ຖ້າບໍ່ເພີ່ມການຈັດສັນງົບປະມານຫຼາຍພໍສົມຄວນໃນຊຸມປີຕໍ່ໜ້າ. ກອບແຜນການປະຕິຮູບຂະແໜງສາທາລະນະສຸກຮັບຮູ້ວ່າການຈັດສັນງົບປະມານພາຍໃນໃຫ້ແກ່ຂະແໜງການສາທາລະນະສຸກແມ່ນບໍ່ພຽງພໍຕໍ່ການບັນລຸເປົ້າໝາຍຂະແໜງການ. ນອກນັ້ນ, ຍັງເຫັນວ່າມີຄວາມຈຳເປັນອັນຮີບດ່ວນໃນການຮັບປະກັນການຈັດສັນງົບປະມານສະເພາະໃຫ້ແກ່ຂະແໜງສາທາ, ໂດຍສະເພາະແມ່ນຈາກກອງທຶນປະກັນສຸຂະພາບແຫ່ງຊາດສູ່ຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອສະໜອງທຶນໃຫ້ແກ່:

- ຍົກລະດັບຄຸນນະພາບການບໍລິການດ້ວຍການເພີ່ມງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ແລະ ຈັດຕັ້ງປະຕິບັດກິດຈະກຳການໂຄສະນາເຜີຍແຜ່ກ່ຽວກັບການບໍລິການໂດຍສະເພາະແມ່ນສຳລັບວຽກສຸຂະພາບແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ໂດຍທີ່ໃຫ້ບູລິມະສິດໃຫ້ແກ່ຜູ້ທີ່ບໍ່ສາມາດເຂົ້າເຖິງໄດ້ງ່າຍເປັນຕົ້ນແມ່ນປະຊາກອນກຸ່ມຊົນເຜົ່າ ແລະ ຜູ້ທຸກຍາກ;

- ຂະຫຍາຍການປົກຄຸມຂອງກອງທຶນສຸຂະພາບຜູ້ທຸກຍາກ ເພື່ອປົກປ້ອງຄົນທຸກຍາກ;

- ແລະ (ຄ) ຂະຫຍາຍການຈັດຕັ້ງປະຕິບັດນະໂຍບາຍປິ່ນປົວແມ່ ແລະ ເດັກແບບບໍ່ເສຍຄ່າເພື່ອຫຼຸດຜ່ອນສິ່ງກີດກັ້ນຕໍ່ກັບການບໍລິການສຸຂະພາບຈະເລີນພັນ ແລະ ເດັກນ້ອຍ.

ການຄຳນວນຄະນິດສາດປະກັນສຸຂະພາບໄດ້ດຳເນີນການສຳເລັດ ແລະ ຜົນກໍຖືກຢັ້ງຢືນ ໃນປີ 2024 ແລະ ເປັນການສະໜອງຫຼັກຖານທີ່ມີຄວາມຈຳເປັນກ່ຽວກັບເງື່ອນໄຂການລົງທຶນໃນໄລຍະ 15 ປີຕໍ່ໜ້າ ອີງຕາມການອອກແບບຂອງລະບົບປະຈຸບັນ ແລະ ທາງເລືອກໃນການປະຕິຮູບອີງຕາມດຳລັດ ເລກທີ. 0476/ສທ.

**ການລົງທຶນສຳລັບຂະແໜງການສາທາລະນະສຸກຂອງ ສປປ ລາວ ເປັນສິ່ງທ້າທາຍຍາວນານຍ້ອນລະດັບການລົງທຶນຂອງພາກລັດໃນຂະແໜງສາທາຍັງຕ່ຳສົ່ງຜົນໃຫ້ອັດຕາການຈົກຖົງຈ່າຍ ແລະ ການຊ່ວຍເຫຼືອຈາກພາຍນອກຍັງຢູ່ໃນລະດັບສູງ.** ລາຍຈ່າຍຈາກແຫຼ່ງທຶນພາຍນອກຍັງສືບຕໍ່ຢູ່ໃນລະດັບສູງເຊິ່ງ ເທົ່າກັບ 39.6 ສ່ວນຮ້ອຍຂອງລາຍຈ່າຍສາທາລະນະສຸກທັງໝົດໃນປີ 2021[12] (ສປປ ລາວ, ກຊ ສາທາ, 2021a). ເຖິງວ່າອັດຕາການຈົກຖົງຈ່າຍ ຈະຫຼຸດລົງຫຼາຍພໍສົມຄວນ ຈາກ 60 ສ່ວນຮ້ອຍ ໃນປີ 2000 ເປັນ 29.5 ສ່ວນຮ້ອຍ ໃນປີ 2021 ກໍຕາມ, ລາຍຈ່າຍຈາກແຫຼ່ງທຶນພາຍນອກ ຍັງຖືວ່າເປັນແຫຼ່ງທຶນທີ່ໃຫຍ່ທີ່ສຸດທີ່ສະໜັບສະໜູນຂະແໜງການສາທາລະນະສຸກ. ເຖິງຢ່າງໃດກໍຕາມ, ລາຍຈ່າຍ ຂອງລັດຖະບານໃນຂະແໜງສາທາເຫັນໄດ້ວ່າເພີ່ມຂຶ້ນຫຼາຍພໍສົມຄວນຫຼັງຈາກລັດຖະບານໄດ້ເປີດນຳໃຊ້ກອງທຶນປະກັນສຸຂະພາບແຫ່ງຊາດ. ຈາກລາຍຈ່າຍສາທາລະນະສຸກຕໍ່ຫົວຄົນທີ່ເທົ່າກັບ 74ໂດລາ ໃນປີ 2021, ລາຍຈ່າຍຈາກພາກລັດຖະບານ (ລວມມີແຫຼ່ງທຶນພາຍນອກ) ກວມເອົາ 66 ສ່ວນຮ້ອຍ ຂອງລາຍຈ່າຍສຳລັບຂະແໜງສາທາລະນະສຸກທັງໝົດ. ອີກຄັ້ງ, ເຖິງວ່າການລົງທຶນຂອງພາກລັດເພີ່ມຂຶ້ນກໍຍັງຕ້ອງການຫຼັກຖານເພີ່ມຕື່ມເພື່ອເຂົ້າໃຈວ່າການເພີ່ມຂຶ້ນດັ່ງກ່າວໄດ້ປະກອບສ່ວນໃນການເຂົ້າເຖິງ ແລະ ການສະໜອງການບໍລິການແບບປັບປຸງແນວໃດ.

**ດ້ວຍການໂຮມເອົາບັນດາກອງທຶນຕ່າງໆເຂົ້າມາເປັນກອງທຶນປະກັນສຸຂະພາບແຫ່ງຊາດນັ້ນ, ເຫັນວ່າການລະດົມທຶນກໍມີການປັບປຸງໃຫ້ດີຂຶ້ນ.** ກົນໄກການໄຫຼວຽນຂອງງົບປະມານປະກັນສຸຂະພາບຖືກພັດທະນາຂຶ້ນມາເພື່ອຮັບປະກັນການເບີກຈ່າຍໃຫ້ແກ່ສະຖານທີ່ປິ່ນປົວແບບພຽງພໍ ແລະ ທັນເວລາພ້ອມທັງສົ່ງເສີມການກ້າວໄປສູ່ລະບົບຜູ້ເບີກຈ່າຍຝ່າຍດຽວໂດຍທີ່ມີກົນໄກການແບ່ງປັນຄວາມສ່ຽງ. ນອກນັ້ນ, ຄາດວ່າຈະສາມາດບັນລຸປະສິດທິຜົນໃນການລົງທຶນໂດຍຫຼີກລ່ຽງການເຮັດວຽກທັບຊ້ອນກັບພາລະບົດບາດຂອງ ອປຊ ແລະ ຫກປຊ. ໂດຍຜ່ານການຂະຫຍາຍການປົກຄຸມແບບຮີບດ່ວນໃນຂອບເຂດທົ່ວປະເທດ (17 ແຂວງຂອງ ສປປ ລາວ ຍົກເວັ້ນນະຄອນຫຼວງ), ການຈັດສັນງົບປະມານຂອງລັດຈຶ່ງເພີ່ມຂຶ້ນ. ພາຍໃຕ້ລະບົບປະກັນສຸຂະພາບ, ຄົນເຈັບຕ້ອງຈ່າຍຮ່ວມໃນອັດຕາທີ່ກຳນົດຄົງທີ່ຢູ່ຈຸດໃຫ້ບໍລິການເຊິ່ງຍອດທີ່ຍັງເຫຼືອແມ່ນ ຫກປຊ ເປັນຜູ້ຊົດເຊີຍໃຫ້ໂດຍນຳໃຊ້ກົນໄກຄິດໄລ່ຕໍ່ຫົວຄົນ. ຫກປຊ ໄດ້ຮັບທຶນຫຼາຍພໍສົມຄວນຈາກເງິນສົມທົບຂອງຜູ້ປະກັນຕົນໃນລະບົບປະກັນສັງຄົມ[13], ແລະ ມີໜ້າທີ່ຮັບຜິດຊອບໃນການຄຸ້ມຄອງການອຸດໜູນປະກັນສຸຂະພາບ ໃຫ້ແກ່ສະມາຊິກ ຂອງ ອປຊ. ເນື່ອງຈາກວ່າ ຫກປຊ ທຽບເທົ່າກັບກົມທີ່ຂຶ້ນກັບ ກະຊວງ ສທ, ລາຍຮັບ ແລະ ລາຍຈ່າຍຕົວຈິງບໍ່ໄດ້ລາຍງານແຍກອອກຈາກງົບປະມານທົ່ວໄປ. ລາຍຈ່າຍທີ່ມີມູນຄ່າສູງທີ່ສຸດແມ່ນການຊື້ເບ້ຍປະກັນເຊິ່ງລວມເຂົ້າໃນພາກ 63 ແລະ ເງິນສົມທົບຈາກງົບປະມານສູນກາງຂອງກະຊວງສາທາລະນະສຸກ. ດັ່ງນັ້ນ ຈຶ່ງເຮັດໃຫ້ເກີດມີຄວາມບໍ່ຈະແຈ້ງກ່ຽວກັບການນຳໃຊ້ເງິນ. ການປະເມີນການຈັດຕັ້ງປະຕິບັດ ລະບົບປະກັນສຸຂະພາບ ແຫ່ງຊາດພວມດຳເນີນການ ແລະ ຄາດວ່າທຸກຢ່າງຈະແຈ້ງຂຶ້ນ.

**ນັບຕັ້ງແຕ່ເລີ່ມຈັດຕັ້ງປະຕິບັດລະບົບປະກັນສຸຂະພາບແຫ່ງຊາດໃນປີ 2019, ຜູ້ທີ່ໄດ້ຮັບຜົນກະທົບໂດຍກົງແມ່ນສະຖານທີ່ປິ່ນປົວຍ້ອນຈຳນວນຄົນເຈັບເພີ່ມຂຶ້ນພ້ອມທັງການໃຊ້ບໍລິການເພີ່ມຂຶ້ນ.** ຢູ່ຂັ້ນແຂວງ, ຈຳນວນກໍລະນີສະເລ່ຍຂອງຄົນເຈັບເຂດນອກເພີ່ມຂຶ້ນເກືອບສອງເທົ່າຕົວຈາກ 200 ຫາ 300 ຄົນຕໍ່ມື້, ແຕ່ຈຳນວນຂອງພະນັກງານວິຊາຊີບປິ່ນປົວ ແລະ ຈຳນວນຕຽງຂອງໂຮງໝໍບໍ່ປ່ຽນແປງ ແລະ ຍັງຢູ່ຄົງທີ່. ດັ່ງນັ້ນ, ບໍລິມາດໜ້າວຽກ ແລະ ອັດຕາການເຂົ້າໂຮງໝໍຈຶ່ງເພີ່ມຂຶ້ນຫຼາຍ.

**ມີສິ່ງທ້າທາຍກ່ຽວກັບການຈັດສັນງົບປະມານໃຫ້ທັນເວລາ. ເນື່ອງຈາກວ່າກອງທຶນປະກັນສຸຂະພາບແມ່ນຂຶ້ນກັບງົບປະມານ ແລະ ຄັງເງິນແຫ່ງຊາດເປັນຜູ້ອະນຸມັດ, ການໂອນເງິນໃຫ້ແກ່ສະຖານທີ່ປິ່ນປົວຕ້ອງປະຕິບັດຕາມຂັ້ນ**

12 ບັນຊີສາທາລະນະສກແຫ່ງຊາດ 2021, ກະຊວງສາທາລະນະສກ, ສປປ ລາວ
13 ຍຸດທະສາດການເງິນສາທາລະນະສຸກ,2021-2025, ກະຊວງສາທາລະນະສຸກ, ອົງການອະນາໄມໂລກ, 2021. pp.3

**ຕອນມາດຕະຖານ ແລະ ກຳນົດເວລາເຊິ່ງສະເລ່ຍແມ່ນໃຊ້ເວລາປະມານ ສອງ ຫາ ສາມເດືອນ.** ການໂອນເງິນລ່າສຸດແມ່ນໃນໄລຍະເດືອນກັນຍາ ປີ 2023 ສຳລັບງົບປະມານທີ່ອະນຸມັດໃນໄຕມາດທີ 3 ຂອງປີ 2022. ບວກກັບບັນຫາໃນການມີທຶນທີ່ບໍ່ພຽງພໍຂອງລະບົບປະກັນສຸຂະພາບສົ່ງຜົນກະທົບອັນໃຫຍ່ຫຼວງຕໍ່ໂຮງໝໍ ແລະ ໂຮງໝໍນ້ອຍ/ສຸກສາລາໃຫ້ການສະໜອງບໍລິການທີ່ມີຄຸນນະພາບ ແລະ ຕອບສະໜອງຄວາມຕ້ອງການຂອງຄົນເຈັບທີ່ນັບມື້ນັບເພີ່ມຂຶ້ນນັ້ນ. ໂຮງໝໍກຳລັງຕົກຢູ່ໃນສະພາບຂາດດູນ. ຫກປຊ ໂດຍໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມພັດທະນາໄດ້ມີຄວາມພະຍາຍາມໃນການຮັບປະກັນການເບີກຈ່າຍໃຫ້ແກ່ສະຖານທີ່ປິ່ນປົວຂອງລັດໃຫ້ທັນເວລາແຕ່ກໍຍັງບໍ່ທັນສາມາດເຮັດໄດ້ແບບເຕັມສ່ວນເທື່ອ ແລະ ຍັງມີຂໍ້ຈຳກັດດ້ານຂໍ້ມູນກ່ຽວກັບລະບົບຂອງສະຖານທີ່ປິ່ນປົວ ແລະ ການເບີກຈ່າຍຕົວຈິງ.

## 4.3.2. ຊ່ອງຫວ່າງ ແລະ ສິ່ງທ້າທາຍ

**ຂໍ້ກັງວົນຕົ້ນຕໍທີ່ພາກສ່ວນກ່ຽວຂ້ອງຍົກຂຶ້ນແມ່ນຄວາມຍືນຍົງດ້ານການເງິນຂອງລະບົບປະກັນສຸຂະພາບ.** ແຫຼ່ງທຶນ ຈາກກອງທຶນປະກັນສຸຂະພາບໄດ້ກາຍເປັນໜຶ່ງໃນແຫຼ່ງລາຍຮັບຕົ້ນຕໍສຳລັບສະຖານທີ່ປິ່ນປົວຂອງລັດເພື່ອຊື້ຢາ ແລະອຸປະກອນການແພດ. ຕັ້ງແຕ່ກໍ່ຕັ້ງຂຶ້ນ, ສະພາບການຂາດທຶນຢ່າງມະຫາສານຂອງກອງທຶນປະກັນສຸຂະພາບ, ອັດຕາເງິນເຟີ້, ແລະ ຄວາມຊັກຊ້າໃນການໂອນຈ່າຍໃຫ້ສະຖານທີ່ປິ່ນປົວ ໄດ້ສ້າງບັນຫາຢ່າງຫຼວງຫຼາຍໃຫ້ແກ່ສະຖານທີ່ປິ່ນປົວ ແລະ ສົ່ງຜົນກະທົບຕໍ່ກັບການສະໜອງການບໍລິການທີ່ມີຄຸນນະພາບ ແລະ ຕອບສະໜອງຄວາມຕ້ອງການທີ່ນັບມື້ນັບເພີ່ມຂຶ້ນ. ບາງໂຮງໝໍກໍ່ຈຳເປັນຕ້ອງແຈ້ງສະຖານະລົ້ມລະລາຍ. ກອງທຶນປະກັນສຸຂະພາບໄດ້ຮັບແຫຼ່ງທຶນຫຼັກຈາກງົບປະມານແຫ່ງລັດ, ການສົມທົບຈາກພະນັກງານລັດຖະກອນ ແລະ ພະນັກງານພາກເອກະຊົນຜ່ານກອງທຶນປະກັນສັງຄົມແຫ່ງຊາດ ແລະ ການຈ່າຍຮ່ວມແບບເລັກນ້ອຍຈາກຄົນເຈັບ. ງົບປະມານແບບຄົງທີ່ທີ່ຈັດສັນໃຫ້ແກ່ຫ້ອງການປະກັນສຸຂະພາບແຫ່ງຊາດແມ່ນ 180 ຕື້ກີບ (ຫຼື ປະມານ 24,000 ກີບຕໍ່ຄົນ ໃນປີ 2022) ຕໍ່ປີຕັ້ງແຕ່ປີ 2018 ແລະ 230 ຕື້ກີບໃນປີ 2023 ເຮັດໃຫ້ມີຄວາມເປັນຫ່ວງກ່ຽວກັບລະດັບຄວາມພຽບພໍຂອງ ກອງທຶນປະກັນສຸຂະພາບແຫ່ງຊາດໃນການສະໜອງການບໍລິການຈຳເປັນພື້ນຖານ, ຄວາມຍືນຍົງໄລຍະຍາວ ແລະ ອັດຕາການຈົກຖົງຈ່າຍທີ່ເພີ່ມຂຶ້ນ. ກົນໄກການຈ່າຍເງິນປະຈຸບັນ ນຳໃຊ້ວິທີການແບບມອບເໝົາຕໍ່ຫົວຄົນໂດຍໂອນໃຫ້ແກ່ບັນດາໂຮງໝໍນ້ອຍທີ່ບໍ່ເຊື່ອມໂຍງກັບການປະຕິບັດງານຕົວຈິງ ຫຼືຄຸນນະພາບພ້ອມນັ້ນອັດຕາລາຄາສຳລັບການບໍລິການ ບໍ່ໄດ້ຖືກປັບປຸງຕັ້ງແຕ່ປີ 2018 ເຖິງວ່າຈະມີບັນຫາເງິນເຟີ້ກໍຕາມ. ນອກນັ້ນ, ບັນດາສະຖານທີ່ປິ່ນປົວມີຂໍ້ຈຳກັດດ້ານການນຳໃຊ້ງົບປະມານແບບເປັນເອກະລາດເຊິ່ງລະບົບການບັນຊີ ແລະການຄຸ້ມຄອງການເງິນພາກລັດ ຍັງບໍ່ທັນເຂັ້ມແຂງ.

**ອີງຕາມຜົນການສຳພາດ, ຫກປຊ ໄດ້ຮັບການຈັດສັນງົບປະມານທີ່ຕ່ຳພໍສົມຄວນ ຖ້າສົມທຽບໃສ່ກຸ່ມປະຊາກອນທີ່ຕ້ອງປົກຄຸມໃນປີ 2023, ເນື່ອງຈາກວ່າມີຂໍ້ຈຳກັດດ້ານການເງິນ, ຈຶ່ງບໍ່ສາມາດຂະຫຍາຍເຂດປົກຄຸມປະກັນສຸຂະພາບແຫ່ງຊາດສູ່ນະຄອນຫຼວງວຽງຈັນ.** ງົບປະມານປະກັນສຸຂະພາບເຫັນວ່າເພີ່ມຂຶ້ນໃນລະດັບໃດໜຶ່ງກໍຄື 50 ຕື້ກີບເຊິ່ງເປັນມູນຄ່າລວມເທົ່າກັບ 230 ຕື້ກີບ. ເຖິງຈະເປັນບາດກ້າວທີ່ດີໃນການເພີ່ມຂຶ້ນແຕ່ຄວາມເປັນຈິງແມ່ນຍັງຕ້ອງການເພີ່ມຕື່ມ. ໃນປີ 2024, ຫ້ອງການ NHIB ສະເໜີເພີ່ມງົບປະມານເປັນ 344 ຕື້ກີບ ເພື່ອຊຳລະໜີ້ສິນທີ່ຄົງຄ້າງ. ສຳລັບລະດັບງົບປະມານທີ່ມີໃນປະຈຸບັນນີ້ເຫັນວ່າລະບົບບໍ່ສາມາດຮັບປະກັນຄວາມຍືນຍົງ ແລະ ສປປ ລາວ ຈະບໍ່ສາມາດບັນລຸເປົ້າໝາຍການປົກຄຸມສຸຂະພາບທົ່ວປວງຊົນເຮັດໃຫ້ຜົນສຳເລັດທີ່ຍາດແຍ່ງມາໄດ້ໃນທົດສະຫວັດຜ່ານມາສູນເສຍໄປ.

**ການຂາດທິດຊີ້ນຳ ແລະ ຄຳແນະນຳຈະແຈ້ງຕໍ່ນະໂຍບາຍປະກັນສຸຂະພາບລວມທັງເຂດປົກຄຸມດ້ານພູມສັນຖານເປັນອີກບັນຫາສິ່ງທ້າທາຍ.** ໃນຂະນະທີ່ຮັບຮູ້ວ່າກອງທຶນປະກັນສຸຂະພາບຍັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດໄລຍະເບື້ອງຕົ້ນ, ດັ່ງນັ້ນຈຶ່ງມີຄວາມສຳຄັນທີ່ຕ້ອງປັບປຸງກົນໄກໂອນງົບປະມານຮີບດ່ວນ ເພື່ອແກ້ໄຂບັນຫາການຂາດທຶນຂອງໂຮງໝໍ ແລະ ສ້າງຄຳແນະນຳຈະແຈ້ງເພື່ອຮັບປະກັນການສະໜອງການບໍລິການທີ່ມີຄຸນນະພາບ ແລະ ມີການປົກປ້ອງດ້ານການເງິນພຽງພໍສຳລັບຜູ້ທີ່ເກີດສິດ.

## 4.3.3. ຄຳແນະນຳ

**ແນະນຳໃຫ້ ກະຊວງສາທາລະນະສຸກ ເຮັດວຽກຮ່ວມມືກັບກະຊວງການເງິນ ເພື່ອຮັບປະກັນວ່າກະຊວງການເງິນໃຫ້ບູລິມະສິດໃນການສົ່ງເສີມຄວາມຍືນຍົງດ້ານການເງິນຂອງກອງທຶນປະກັນສຸຂະພາບ ແລະ ເພີ່ມການຈັດສັນງົບປະມານໃຫ້ແກ່ກອງທຶນດັ່ງກ່າວ.** ກະຊວງສາທາ ຄວນປະຕິບັດບາດກ້າວ ເພື່ອປຶກສາຫາລືກ່ຽວກັບທາງເລືອກໃນການລະດົມທຶນໂດຍນຳໃຊ້ຜົນຂອງການວິເຄາະການປົກປ້ອງດ້ານການເງິນລ່າສຸດ[14], ແຕ່ຂໍ້ລິເລີ່ມດັ່ງກ່າວ ອາດຈຳເປັນຕ້ອງປຶກສາຫາລືໃນລະດັບວິຊາການ, ຂັ້ນບໍລິຫານພ້ອມທັງລະດັບການນຳຂອງ ລັດຖະບານ.

**ຈຳເປັນຕ້ອງໄດ້ທຳຄວາມເຂົ້າໃຈກ່ຽວກັບສິ່ງທ້າທາຍ ແລະ ຄວາມສ່ຽງໃນການໂຮມລະບົບປະກັນສຸຂະພາບ ແລະ ການປະກັນສັງຄົມເຂົ້າກັນຢ່າງລະອຽດ.** ນອກນັ້ນ,

14 WHO (2022), progress towards Universal Health Coverage in the Lao People’s Democratic Republic: Monitoring financial protection 2007-2019.

ກໍຕ້ອງທົບທວນປະສົບການ ແລະ ລະບົບຂອງປະເທດອື່ນໆທີ່ໄດ້ໂຮມລະບົບປະກັນສຸຂະພາບ ແລະ ການປະກັນສັງຄົມ ເພື່ອເປັນຂໍ້ມູນພື້ນຖານເພື່ອການສຶກສາຜົນປະໂຫຍດ, ສິ່ງທ້າທາຍ ແລະ ວິທີການຈັດຕັ້ງປະຕິບັດຕົວຈິງ. ລັດຖະບານຄວນວິເຄາະຜົນກະທົບຂອງການໂຮມສອງລະບົບຕໍ່ກັບພາກສ່ວນກ່ຽວຂ້ອງຕ່າງໆເປັນຕົ້ນແມ່ນຜູ້ໃຫ້ບໍລິການປິ່ນປົວສຸຂະພາບ, ຜູ້ໃຊ້ແຮງງານ, ແລະ ບຸກຄົນຕ່າງໆ. ດ້ວຍການປະເມີນແບບຮອບດ້ານ, ຜູ້ສ້າງນະໂຍບາຍສາມາດເກັບກໍາຂໍ້ມູນທີ່ສໍາຄັນ ເພື່ອເປັນພື້ນຖານການອອກແບບ ແລະ ຈັດຕັ້ງປະຕິບັດລະບົບ ໂດຍທີ່ມີຂໍ້ມູນຄົບຖ້ວນ.

**ນອກນັ້ນ, ຍັງມີຄວາມຈໍາເປັນທີ່ຕ້ອງເພີ່ມທະວີການໂຄສະນາເຜີຍແຜ່ ແລະ ການຍົກລະດັບຄວາມຮູ້ກ່ຽວກັບອຸດໜູນ ແລະ ຄວາມສໍາຄັນຂອງການເຂົ້າເປັນສະມາຊິກປະກັນສັງຄົມ.** ການໂຄສະນາປະຊາສໍາພັນແມ່ນແນໃສ່ແຮງງານນອກລະບົບ ແລະ ຜູ້ໃຊ້ແຮງງານສາມາດປັບທັດສະນະຄະຕິທີ່ບໍ່ຖືກຕ້ອງ ແລະ ສົ່ງເສີມການເຂົ້າເປັນສະມາຊິກຂອງກອງທຶນປະກັນສັງຄົມ ແລະ ລະບົບປະກັນສຸຂະພາບແຫ່ງຊາດ. ສາມາດບັນລຸໄດ້ຕາມທີ່ກ່າວມາດ້ວຍການຮ່ວມມືກັບອົງການຈັດຕັ້ງຂັ້ນຊຸມຊົນ, ກໍາມະບານ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ ເພື່ອເຂົ້າເຖິງ ແລະ ພົວພັນກັບຂະແໜງການນອກລະບົບແບບມີປະສິດທິຜົນ. ດ້ວຍການຈັດຕັ້ງຄໍາແນະນໍາດ້ານນະໂຍບາຍເຫຼົ່ານີ້, ກອງທຶນປະກັນສັງຄົມ ແລະ ປະກັນສຸຂະພາບ ສາມາດອັດຊ່ອງວ່າງລະຫວ່າງຂະແໜງການພາຍໃນ ແລະ ນອກລະບົບ ເຊິ່ງຈະເປັນການຂະຫຍາຍການປົກຄຸມປະກັນສັງຄົມ ແລະ ປັບປຸງຊີວິດການເປັນຢູ່ໂດຍລວມຂອງແຮງງານນອກລະບົບ. ວິທີນີ້ບໍ່ເປັນພຽງແຕ່ການປະກອບສ່ວນເຂົ້າໃນການພັດທະນາແບບຍືນຍົງ ແລະ ການປົກປ້ອງສັງຄົມເທົ່ານັ້ນ ແຕ່ຍັງເປັນການສ້າງສັງຄົມທີ່ມີລັກສະນະກວມລວມທົ່ວເຖິງ ແລະ ມີຄວາມເທົ່າທຽມ.

**ການເຂົ້າເຖິງການບໍລິການສຸຂະພາບທີ່ມີຄຸນນະພາບສູງຖືວ່າເປັນບູລິມະສິດຂອງຂະແໜງສາທາລະນະສຸກພາຍຫຼັງທີ່ສາມາດແກ້ໄຂບັນຫາການເຂົ້າເຖິງການບໍລິການແບບບໍ່ເທົ່າທຽມກັນ.** ຢູ່ ສປປ ລາວ, ການບໍລິການຄຸນນະພາບຕໍ່າຕາມໂຮງໝໍລັດໂດຍສະເພາະແມ່ນຂັ້ນທ້ອງຖິ່ນເຮັດໃຫ້ບໍ່ຄ່ອຍມີການຕອບຮັບທີ່ດີ ແລະ ເຮັດໃຫ້ປະຊາຊົນບໍ່ຢາກນໍາໃຊ້. ປະເທດລາວກາຍເປັນໜຶ່ງໃນກຸ່ມປະເທດທີ່ມີອັດຕາການຕາຍສູງຍ້ອນການບໍລິການສຸຂະພາບມີຄຸນນະພາບຕໍ່າ (ກຸ່ມເຮັດວຽກດ້ານສາທາລະນະສຸກ, 2021). ເຖິງຢ່າງໃດກໍຕາມ, ສປປ ລາວ ຍັງຕ້ອງປະເຊີນໜ້າກັບວາລະໜ້າວຽກທີ່ຍັງບໍ່ທັນເຮັດໄດ້ສໍາເລັດກໍ່ຄືການຮັບປະກັນການເຂົ້າເຖິງການບໍລິການສຸຂະພາບແບບເທົ່າທຽມກັນ ໂດຍສະເພາະຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ. ການສົ່ງເສີມປະສິດທິພາບໃນການຈັດຕັ້ງປະຕິບັດກິດຈະກໍາຢູ່ລະດັບສະຖານທີ່ປິ່ນປົວຂັ້ນຕົ້ນສາມາດສ້າງຜົນປະໂຫຍດຢ່າງຫຼວງຫຼາຍ.

**ການບໍລິການສຸຂະພາບສ່ວນໃຫຍ່ແມ່ນພາກລັດເປັນຜູ້ສະໜອງ ຢູ່ ສປປ ລາວ, ສ່ວນພາກເອກະຊົນ ກໍມີບາງສ່ວນແຕ່ຍັງເປັນແບບຈໍາກັດ.** ການລົງທຶນທີ່ມີການກໍານົດເປົ້າໝາຍຊັດເຈນຈະໄດ້ຮັບຜົນປະໂຫຍດໃນວົງກ້ວາງ ແລະ ຍາວນານນອກເໜືອຈາກຜົນໄດ້ຮັບທີ່ເກີດຂຶ້ນທັນທີ ແລະ ການປັບປຸງດ້ານໂພຊະນະການເຊັ່ນ: ການໄດ້ຮັບການປົກປ້ອງທີ່ດີ ດີກ່ວາຈາກການຕົກສູ່ຄວາມທຸກຍາກແບບສິ້ນເນື້ອປະດາຕົວຍ້ອນລາຍຈ່າຍປິ່ນປົວສຸຂະພາບ, ການຫຼຸດຜ່ອນຄວາມບໍ່ສະເໝີພາບຜ່ານການເຂົ້າເຖິງການບໍລິການ ສຸຂະພາບຈະເລີນພັນ, ແມ່, ເດັກນ້ອຍ, ເດັກເກີດໃໝ່ ແລະ ໂພຊະນາການແບບເທົ່າທຽມກັນພ້ອມທັງການສ້າງຄວາມເຂັ້ມແຂງໃຫ້ລະບົບສາທາລະນະສຸກໂດຍລວມ ແລະ ຜ່ານການເຊື່ອມສານດ້ານການບໍລິການເພື່ອກ້າວໄປສູ່ການປົກຄຸມສຸຂະພາບທົ່ວປວງຊົນ. ແນະນໍາໃຫ້ການອອກແບບເຂດປົກຄຸມ ແລະ ກອງທຶນໃນອານະຄົດ ແລະ ເງື່ອນໄຂດ້ານທຶນຮອນ ແລະ ງົບປະມານຕ້ອງອີງໃສ່ອັດຕາຫົວໜ່ວຍລາຄາ ແລະ ອັດຕາການທົດແທນຄ່າໃຊ້ຈ່າຍທີ່ປັບປຸງ (ອົງການອະນາໄມໂລກ, 2023 B).ຈາກມຸມມອງຂອງການປົກປ້ອງດ້ານການເງິນ, ປະເພດບໍລິການສຸຂະພາບທີ່ຈະເຮັດໃຫ້ຄອບຄົວຕົກສູ່ການຈົກຖົງຈ່າຍແບບສິ້ນເນື້ອປະດາຕົວຄວນໄດ້ຮັບການປົກຄຸມພາຍໃຕ້ກອງທຶນປະກັນສຸຂະພາບແຫ່ງຊາດ.

## 4.4. ການຈັດຕັ້ງປະຕິບັດລະບົບປະກັນສັງຄົມແຫ່ງຊາດ

| ເປົ້າໝາຍ: ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປະກັນສັງຄົມ |
|---|
| ຈຸດປະສົງ 1. ຜູ້ອອກແຮງງານທຸກຄົນ ແລະ ແຮງງານທີ່ປະກອບອາຊີບສ່ວນບຸກຄົນຂອງຂະແໜງໃນລະບົບໄດ້ຮັບການປົກຄຸມປະກັນສັງຄົມ<br><br>ຈຸດປະສົງ 2. ປະກັນສັງຄົມປົກຄຸມຈໍານວນແຮງງານນອກລະບົບເພີ່ມຂຶ້ນ |

**ກອງທຶນປະກັນສັງຄົມແຫ່ງຊາດ ປົກຄຸມພະນັກງານລັດຖະກອນ, ແຮງງານພາກວິສາຫະກິດ, ຜູ້ປະກອບອາຊີບອິດສະຫຼະ ແລະ ແຮງງານນອກລະບົບ.** ສ່ວນສະມາຊິກທີ່ເປັນແຮງງານນອກລະບົບນັ້ນສາມາດເຂົ້າເປັນສະມາຊິກແບບສະໝັກໃຈ. ພາກສະໝັກໃຈແມ່ນສະເພາະສໍາລັບຜູ້ປະກອບອາຊີບອິດສະຫຼະ, ຜູ້ໃຊ້ແຮງງານ, ນິຕິບຸກຄົນທີ່ບໍ່ໄດ້ຂຶ້ນທະບຽນ, ແລະ ບຸກຄົນທີ່ບໍ່ມີສ່ວນຮ່ວມໃນກໍາລັງແຮງງານສາມາດຂຶ້ນທະບຽນໄດ້ແບບສະໝັກໃຈ. ລະບົບປະກັນສັງຄົມໃຫ້ອຸດໜູນຕ່າງໆ ກໍຄື: ອຸດໜູນບໍານານ, ອຸດໜູນສະມາຊິກຄອບຄົວ ແລະ

ເສຍຊີວິດ, ອຸດໜູນປ່ວຍການ, ອຸດໜູນອຸປະຕິເຫດແຮງງານ ແລະ ພະຍາດອາຊີບ, ອຸດໜູນເສຍອົງຄະທີ່ບໍ່ກ່ຽວຂ້ອງກັບວຽກ, ອຸດໜູນເກີດລູກ, ອຸດໜູນແມ່ຍິງຖືພາ ແລະ ວ່າງງານ. ສ່ວນສະມາຊິກຂອງພາກສະໝັກໃຈຈະໄດ້ຮັບອຸດໜູນຄືກັນທັງໝົດຍົກເວັ້ນອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ແລະ ອຸດໜູນວ່າງງານ.

**ລະບົບປະກັນສັງຄົມແມ່ນອົງການປະກັນສັງຄົມແຫ່ງຊາດເປັນຜູ້ຈັດຕັ້ງປະຕິບັດ.** ສ່ວນງົບປະມານແມ່ນລະດົມຈາກການເກັບເງິນສົມທົບຈາກສະມາຊິກເປັນຕົ້ນແມ່ນ:

- ພາກລັດຖະກອນແມ່ນພະນັກງານລັດຖະກອນສົມທົບ 8 ສ່ວນຮ້ອຍ ແລະ ລັດຖະບານສົມທົບ 8.5 ສ່ວນຮ້ອຍ,
- ພາກວິສາຫະກິດແມ່ນຜູ້ໃຊ້ແຮງງານສົມທົບ 6 ສ່ວນຮ້ອຍ ແລະ ຜູ້ອອກແຮງງານຈ່າຍ 5.5 ສ່ວນຮ້ອຍຂອງວົງເງິນປະກັນຕົນທັງໝົດ;
- ສໍາລັບພາກສະໝັກໃຈ ແມ່ນຜູ້ປະກັນຕົນຕ້ອງຈ່າຍໃນອັດຕາ 9 ສ່ວນຮ້ອຍອີງຕາມລະດັບວົງເງິນປະກັນຕົນທີ່ຕົນເລືອກ.

### ▶ ຮູບ 13. ເຂດປົກຄຸມຂອງ ອປຊ ແຍກຕາມພາກ, ທັນວາ 2023




ແຫຼ່ງຂໍ້ມູນ: ບົດລາຍງານ ອປຊ ປະຈໍາປີ 2023

### ▶ ຮູບ 14. ສ່ວນຮ້ອຍຂອງປະຊາກອນທີ່ຖືກປົກຄຸມໂດຍກອງທຶນປະກັນສັງຄົມ




ແຫຼ່ງຂໍ້ມູນ: ບົດລາຍງານ ອປຊ ປະຈໍາປີ 2023

ສໍາລັບເງິນສົມທົບທັງໝົດທີ່ເກັບໄດ້ທັງພາກວິສາຫະກິດ ແລະ ພາກລັດ, ອປຊ ຕ້ອງໂອນ 1.25 ສ່ວນຮ້ອຍຂອງ ວົງເງິນສົມທົບໃຫ້ ຫກປຊ ທຸກໆເດືອນເພື່ອເປັນອຸດໜູນ ປະກັນສຸຂະພາບໃຫ້ແກ່ສະມາຊິກກອງທຶນປະກັນສັງຄົມ.

**ເຖິງວ່າໄດ້ປະເຊີນໜ້າກັບສິ່ງທ້າທາຍຈາກໂຄວິດ-19 ກໍຕາມ, ເຫັນວ່າມີຄວາມຄືບໜ້າໃນການຂະຫຍາຍການ ປົກຄຸມຂອງລະບົບປະກັນສັງຄົມສໍາລັບພາກວິສາຫະກິດ ແລະ ຜູ້ປະກອບອາຊີບອິດສະຫຼະ.** ຂໍ້ມູນວັນທີ 31 ທັນວາ ປີ 2023, ລະບົບປະກັນສັງຄົມມີຜູ້ປະກັນຕົນທີ່ ຈ່າຍສົມທົບທັງໝົດ 353,962 ຄົນ (ຮູບ 9) ແລະ ມີຜູ້ ເກີດສິດທັງໝົດ 827,688 ຄົນ ເຊິ່ງໃນນັ້ນລວມມີຜູ້ປະກັນ ຕົນ ແລະ ສະມາຊິກຄອບຄົວທີ່ເກີດສິດ. ເຊິ່ງມີອັດຕາການ ປົກຄຸມກວມເອົາ 11.1 ສ່ວນຮ້ອຍຂອງປະຊາກອນທັງໝົດ (ຮູບ 10). ເຂດປົກຄຸມແຍກຕາມພາກ, ເຫັນວ່າພາກລັດ ກວມເອົາ 493,841 ຄົນ ລວມທັງຜູ້ປະກັນຕົນ ແລະ ຜູ້ ເກີດສິດ, ພາກວິສາຫະກິດ (ພາກບັງຄັບ ແລະ ສະໝັກໃຈ) ກວມ 373,436 ຄົນ, ໃນນີ້, ເກືອບເຄິ່ງໜຶ່ງ ( 446,348 ຫຼື 51 ສ່ວນຮ້ອຍ) ແມ່ນແມ່ຍິງ.

**ປະຈຸບັນ, ໄດ້ມີການທົດລອງໂຄງການຂຶ້ນທະບຽນ ປະກັນສັງຄົມແບບເຄື່ອນທີ່ໃນຊ່ວງເດືອນພຶດສະພາ 2023 ຫາ ເດືອນກຸມພາ 2024, ແລະ ກໍໄດ້ຂະຫຍາຍ ກິດຈະກໍາຂຶ້ນທະບຽນເຄື່ອນທີ່ນີ້ໄປສູ່ແຂວງອື່ນຂອງ ປະເທດ, ຈຸດປະສົງແມ່ນເພື່ອສົ່ງເສີມໃຫ້ແຮງງານນອກ ລະບົບ ແລະ ຜູ້ທີ່ດໍາລົງຊີວິດຢູ່ເຂດຊົນນະບົດເຂົ້າເປັນ ສະມາຊິກປະກັນສັງຄົມ.** ກິດຈະກໍາຂຶ້ນທະບຽນເຄື່ອນທີ່ນີ້ ໄດ້ສົ່ງຜົນກະທົບໃນດ້ານບວກຕໍ່ການເພີ່ມຂຶ້ນຂອງສະມາຊິກ ພາກສະໝັກໃຈໃນໄລຍະ ສອງປີເຄິ່ງຜ່ານມາຖືວ່າເພີ່ມຂຶ້ນ ຫຼາຍຈາກ 5,401 ຄົນ ເປັນ 26,793 ຄົນ. ຄວາມຄືບໜ້າ ດັ່ງກ່າວໄດ້ປັບປຸງການເຂົ້າເຖິງ ລະບົບປະກັນສັງຄົມ ສໍາລັບ ແຮງງານນອກລະບົບຢູ່ຂັ້ນທ້ອງຖິ່ນແບບກ້າວກະໂດດ.

**ເພື່ອກະກຽມໃຫ້ແກ່ການປັບປຸງກົດໝາຍວ່າດ້ວຍ ປະກັນສັງຄົມ ໃນປີ 2024-25, ມີຄວາມສໍາຄັນເປັນຢ່າງຍິ່ງ ໃນການຂະຫຍາຍຂອບເຂດ, ປະສິດທິຜົນ ແລະ ຄວາມ ຍືນຍົງໄລຍະຍາວຂອງລະບົບປະກັນສັງຄົມ.** ອີງໃສ່ຜົນ ການສໍາພາດ, ມີຫຼາຍຍຸດທະສາດທີ່ສາມາດນໍາໃຊ້ເພື່ອບັນລຸ ຈຸດປະສົງດັ່ງກ່າວລວມທັງການຫັນກົດໝາຍໃຫ້ສອດຄ່ອງ ກັບມາດຕະຖານສາກົນ, ຈັດການປຶກສາຫາລືສາມຝ່າຍ ແລະ ກອງປະຊຸມສົນທະນາດ້ານກົດໝາຍ ແລະ ດໍາເນີນ ການຄໍານວນຄະນິດສາດກັບພາກສ່ວນກ່ຽວຂ້ອງລວມທັງ ຂັ້ນສູນກາງ ແລະ ທ້ອງຖິ່ນເພື່ອເພື່ອຮັບປະກັນຂະບວນການ ຕັດສິນໃຈແບບກວມລວມທົ່ວເຖິງ. ດໍາເນີນການຝຶກອົບຮົມ ກັບທີ່ດ້ານການເງິນ ແລະ ການຄໍານວນຄະນິດສາດໃຫ້ກັບ ພະນັກງານປະກັນສັງຄົມ ແລະ ອໍານວຍຄວາມສະດວກໃນ ການແລກປ່ຽນບົດຮຽນກັບຕ່າງປະເທດໂດຍສະເພາະແມ່ນ ໃນຫົວຂໍ້ດ້ານການຄຸ້ມຄອງບໍລິຫານ.

ຄວາມພະຍາຍາມດັ່ງກ່າວມີຄວາມສໍາຄັນຢ່າງຍິ່ງໃນ ການປັບປຸງລະບົບປະກັນສັງຄົມໂດຍລວມ ແລະ ຮັບປະກັນ ປະສິດທິຜົນໃນການປົກປ້ອງແຮງງານພາກບັງຄັບ ແລະ ນອກ ລະບົບແບບພຽບພໍ. ດ້ວຍການສ້າງຄວາມເຂັ້ມແຂງໃຫ້ແກ່ ລະບົບປະກັນສັງຄົມ, ປະຊາຊົນທີ່ເປັນສະມາຊິກຈະມີຄວາມ ໝັ້ນຄົງດ້ານການເງິນ, ສາມາດເຂົ້າເຖິງການບໍລິການສຸຂະພາບ ໄດ້ດີກວ່າ, ແລະ ຮັບການປົກປ້ອງຈາກຄວາມສ່ຽງຕ່າງໆເຊິ່ງ ຈະປະກອບສ່ວນໃນການຍົກລະດັບຊີວິດການເປັນຢູ່ ແລະ ການພັດທະນາເສດຖະກິດ-ສັງຄົມຂອງປະເທດໂດຍລວມ.

## 4.4.1. ຄວາມຄືບໜ້າມາຮອດປະຈຸບັນ

### ເປົ້າໝາຍ 2.1. ຜູ້ອອກແຮງງານທຸກຄົນ ແລະ ແຮງງານທີ່ປະກອບອາຊີບສ່ວນບຸກຄົນ ຂອງຂະແໜງໃນລະບົບໄດ້ຮັບການປົກຄຸມ ປະກັນສັງຄົມ.

**ການຂະຫຍາຍການປົກຄຸມຂອງລະບົບປະກັນສັງຄົມ ສໍາລັບແຮງງານໃນລະບົບ.**

**ອີງໃສ່ບົດລາຍງານຂອງອົງການແຮງງານສາກົນ (Merttens et al. 2024), ເຖິງຈະມີສິ່ງທ້າທາຍ ຫຼາກຫຼາຍໃນການຫລຸດລະດັບຄວາມເປັນນອກ ລະບົບໃນຕະຫລາດແຮງງານ ແລະ ໃນໂຄງສ້າງຂອງ ວິສາຫະກິດແຕ່ຄວາມອາດສາມາດຂອງລັດຖະບານໃນ ການສະໜອງບໍລິການໃຫ້ແກ່ແຮງງານ, ວິສາຫະກິດ ແລະ ປະກັນສັງຄົມແມ່ນມີຄວາມເຂັ້ມແຂງ.** ມີກອບ ກົດໝາຍແບບຄົບຊຸດ ແລະ ມີລະບົບປະຕິບັດການເປັນ ຢ່າງດີ ແລະ ຂະບວນການໃນການຂຶ້ນທະບຽນ, ການອອກ ໃບອະນຸຍາດວິສາຫະກິດ ແລະ ການເຂົ້າເປັນສະມາຊິກ ປະກັນສັງຄົມທີ່ຈໍາເປັນຕ້ອງໄດ້ເອົາເຂົ້າໃນບັນດານິຕິກໍາຂອງ ແຕ່ລະຂະແໜງການຂອງພາກລັດຖະບານເພື່ອອັດຊ່ອງວ່າງ ແລະ ຊີ້ແຈງຄວາມຄຸມເຄືອທີ່ມີຢູ່, ລັດຖະບານຕ້ອງສ້າງ ຄວາມເຂັ້ມແຂງຂອງຮາກຖານໃນການບັນລຸເປົ້າໝາຍ ແລະ ພັດທະນາເສດຖະກິດ.

**ລັດຖະບານໄດ້ກໍານົດບູລິມະສິດໃນລະດັບສູງເພື່ອຍົກລະດັບ ຄວາມຮັບຮູ້ ແລະ ການເຂົ້າເຖິງການປະກັນສັງຄົມໂດຍ ທີ່ມີເປົ້າໝາຍຫຼັກໃນການຂະຫຍາຍການອຸດໜູນ ການປະກັນສັງຄົມໃຫ້ແກ່ບັນດາສະມາຊິກ.** ເຫັນວ່າມີ ຄວາມພະຍາຍາມໃນການຂະຫຍາຍເຂດປົກຄຸມຂອງການ ປະກັນສັງຄົມລວມທັງການເຮັດວຽກເພື່ອຈັດຕັ້ງລະບົບ ກວດກາປະກັນສັງຄົມ, ກໍໄດ້ແຈ້ງກ່ຽວກັບການສ້າງຕັ້ງ ຫ້ອງການສາຂາຢູ່ນະຄອນຫຼວງວຽງຈັນ ແລະ ແຂວງ ພ້ອມທັງ ປັບປຸງໂຄງຮ່າງການຈັດຕັ້ງ ແລະ ຕໍາແໜ່ງ ຂອງ ອປຊ ລວມ ທັງການຊັບຊ້ອນພະນັກງານຄົນໃໝ່ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ. ກ່ອງ 2 ໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບຄວາມຮ່ວມມື ລະຫວ່າງພາກລັດ, ພາກເອກະຊົນ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສັງຄົມເພື່ອເພີ່ມລະດັບການຫັນສູ່ໃນລະບົບ

ຂອງວິສາຫະກິດ ແລະ ຜູ້ອອກແຮງງານ ແລະ ການຂະຫຍາຍເຂດປົກຄຸມປະກັນສັງຄົມ.

## ດຳເນີນການກວດກາປະກັນສັງຄົມໃນວິສາຫະກິດເປັນປະຈຳ.

**ໜຶ່ງໃນຂົງເຂດໜ້າວຽກທີ່ສຳຄັນເພື່ອເພີ່ມການຂຶ້ນທະບຽນແຮງງານເປັນສະມາຊິກປະກັນສັງຄົມຂອງບໍລິສັດທີ່ຈົດທະບຽນແມ່ນການຈັດຕັ້ງປະຕິບັດກົນໄກຕິດຕາມກວດກາ.** ການຄົ້ນຄ້ວາ ຂອງ ອົງການ ILO (Merttens et al. 2024) ໃນປີ 2023 ພົບເຫັນວ່າ 57ສ່ວນຮ້ອຍ ຂອງ ແຮງງານໃນລະບົບ ບໍ່ໄດ້ຂຶ້ນທະບຽນເປັນສະມາຊິກກອງທຶນປະກັນສັງຄົມ ເຊິ່ງເປັນຊ່ອງວ່າງທີ່ໃຫຍ່ພໍສົມຄວນ. ໜຶ່ງໃນສາເຫດຕົ້ນຕໍ ທີ່ມີຊ່ອງວ່າງດັ່ງກ່າວ ແມ່ນຍ້ອນທິດຊີ້ນຳລະດັບສູງ ທີ່ກຳນົດວ່າການຈົດທະບຽນກັບ ອົງການປະກັນສັງຄົມຄວນຈະບໍ່ແມ່ນພາກບັງຄັບສຳລັບ ວິສາຫະກິດ ເພື່ອເປັນການສົ່ງເສີມການລົງທຶນຂອງພາກເອກະຊົນໃນປະເທດ. ອົງການປົກຄອງຂັ້ນທ້ອງຖິ່ນຍົກຄຳສັ່ງດ່າວຂຶ້ນຕະຫຼອດ ແລະ ບອກວ່າບໍ່ມີພາລະບົດບາດຈະແຈ້ງໃນການບັງຄັບໃຫ້ວິສາຫະກິດຂຶ້ນທະບຽນປະກັນສັງຄົມ. ນອກນັ້ນ, ກໍມີການບໍ່ເຫັນດີຮ່ວມມືຈາກຂະແໜງການອື່ນ ເປັນຕົ້ນແມ່ນ ຂະແໜງການອຸສາຫະກຳ ແລະ ການຄ້າ ໃນກໍລະນີທີ່ ອປຊ ພະຍາຍາມສົ່ງເສີມໃຫ້ວິສາຫະກິດຂຶ້ນທະບຽນ. ດັ່ງນັ້ນ, ການບັງຄັບໃຊ້ກົດໝາຍຈຶ່ງເຮັດບໍ່ໄດ້ດີປານໃດ.

**ວິທີການທີ່ມີປະສິດທິຜົນໃນການຂຶ້ນທະບຽນແຮງງານແມ່ນການນຳໃຊ້ກົນໄກການກວດກາວິສາຫະກິດເປັນປະຈຳ ແລະ ນຳໃຊ້ມາດຕະການລົງໂທດ ຫຼື ປັບໄໝບັນດາຫົວໜ່ວຍວິສາຫະກິດທີ່ບໍ່ປະຕິບັດກົດໝາຍ.** ຂໍ້ຕົກລົງ ເລກທີ 4139 ວ່າດ້ວຍການກວດກາປະກັນສັງຄົມກໍ່ຖືກບັງຄັບໃຊ້ໃນທ້າຍປີ 2021 ເຊິ່ງໄດ້ກຳນົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ໃນການກວດກາປະກັນສັງຄົມ.

**ການສຶກສາຄັ້ງລ່າສຸດນີ້ໄດ້ກຳນົດບັນດາຂໍ້ແນະນຳຕໍ່ການກວດກາປະກັນສັງຄົມ ຂອງ ສປປ ລາວ.** ການສຶກສາໄດ້ພົບວ່າ ມີຄວາມຜິດດ່ຽງລະຫວ່າງກົດໝາຍປະກັນສັງຄົມ ແລະ ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງເຈົ້າໜ້າທີ່ກວດກາ ແລະ ພະນັກງານລັດຖະກອນໃນອົງການຈັດຕັ້ງລັດ. ໄດ້ແນະນຳໃຫ້ ອປຊ ມີພາລະບົດບາດໃນການກວດກາປະກັນສັງຄົມ ແລະ ນຳໃຊ້ມາດຕະການລົງໂທດ/ປັບໃໝວິສາຫະກິດທີ່ຝ່າຝືນ ແລະ ປັບປຸງນິຕິກຳ ແລະ ກົດລະບຽບທີ່ແຕ່ລະຂະແໜງການຈັດຕັ້ງປະຕິບັດ (Rocha, ບໍ່ທັນພິມເຜີຍແຜ່).

**ນອກນັ້ນ, ການປັບປຸງກົດໝາຍວ່າດ້ວຍການປະກັນສັງຄົມໃນປີ 2024 ຍັງຈະເປັນອິດບາດກ້າວທີ່ສຳຄັນ ເພື່ອກຳນົດພາລະບົດບາດການກວດກາແບບມີປະສິດທິຜົນເພີ່ມຂຶ້ນ.** ພາກທີ 2 (ມາດຕາ 110-114) ຂອງ ກົດໝາຍວ່າດ້ວຍການປະກັນສັງຄົມ ກໍຄາດວ່າຈະຖືກປັບປຸງ ເພື່ອໃຫ້ສອດຄ່ອງກັບຂໍ້ຕົກລົງເລກທີ 4139. ໄດ້ພັດທະນາຄູ່ມືກວດກາປະກັນສັງຄົມ ແລະ ປະຈຸບັນກຳລັງຢູ່ໃນຂັ້ນຕອນການສ້າງ ຄູ່ມືປະຕິບັດການກວດກາປະກັນສັງຄົມ (SOPs) ແລະ ຄາດວ່າເຈົ້າໜ້າທີ່ກວດກາຈະໄດ້ຮັບການຝຶກອົບຮົມ ແລະ ເລີ່ມປະຕິບັດໜ້າທີ່ພາຍໃນປີ 2025.

**ນອກນັ້ນ, ກໍມີຄວາມຄືບໜ້າໃນການພັດທະນາລະບົບຖານຂໍ້ມູນ ແລະ ການຂຶ້ນທະບຽນພາກວິສາຫະກິດແບບລວມສູນໂດຍນຳໃຊ້ MySQL[15].** ຈຸດປະສົງຕົ້ນຕໍ ຂອງ ລະບົບແມ່ນເພື່ອປັບປຸງ ແລະ ຫັນຂະບວນການຂຶ້ນທະບຽນສຳລັບພາກວິສາຫະກິດເປັນລວມສູນໃນຂອບເຂດທົ່ວປະເທດ. ສ່ວນໜຶ່ງຂອງໜ້າວຽກ ແມ່ນຜົນສຳເລັດໃນການເຄື່ອນຍ້າຍຂໍ້ມູນຈາກລະບົບເກົ່າໄປສູ່ລະບົບໃໝ່. ອປຊ ຍັງມີບູລິມະສິດໃນການພັດທະນາລະບົບ Application Programming Interface (API) ເພື່ອການເຊື່ອມຖານຂໍ້ມູນປະກັນສັງຄົມແບບອັດຕະໂນມັດກັບຖານຈົດທະບຽນພົນລະເມືອງ, ຖານສ່ວຍສາອາກອນ, ຖານຂໍ້ມູນວິສາຫະກິດແຫ່ງຊາດ, ລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ ແລະ ຖານຂໍ້ມູນອື່ນໆ ໃນປະເທດ. ເຖິງຢ່າງໃດກໍຕາມ, ບົດລາຍງານການຈັດຕັ້ງປະຕິບັດຂອງ ອປຊ ຍັງຂາດຂໍ້ມູນ ກ່ຽວກັບການພັດທະນາລະບົບຄຸ້ມຄອງຂໍ້ມູນຂ່າວສານ (MIS) ແລະ ການເຊື່ອມໂຍງເພື່ອອຳນວຍໃຫ້ເຈົ້າໜ້າທີ່ກວດກາປະກັນສັງຄົມ ສາມາດເຂົ້າເຖິງ ແລະ ນຳໃຊ້.

## ສົ່ງເສີມການເຂົ້າເປັນສະມາຊິກກອງທຶນປະກັນສັງຄົມ

**ເຫັນວ່າມີຄວາມຄືບໜ້າແບບກ້າວກະໂດດ ໃນການຈັດຕັ້ງປະຕິບັດຂໍ້ລິເລີ່ມຕ່າງໆເພື່ອເຜີຍແຜ່ຂໍ້ມູນຂ່າວສານ, ການຍົກລະດັບຄວາມຮູ້ ແລະ ການປະຊາສຳພັນ (ອປຊ 2022, ສປປ ລາວ).** ຈຸດປະສົງຕົ້ນຕໍ ແມ່ນເພື່ອອະທິບາຍ ແລະ ໃຫ້ຂໍ້ມູນ ກ່ຽວກັບອຸດໜູນ ຂອງ ກອງທຶນປະກັນສັງຄົມ ແລະ ອັດຕາເງິນສົມທົບໃຫ້ແກ່ມວນຊົນ ອີງຕາມ ກົດໝາຍ ແລະ ລະບຽບການ. ເພື່ອຈັດຕັ້ງປະຕິບັດ ຄວາມພະຍາຍາມທີ່ກ່າວມານັ້ນ, ອປຊ ໄດ້ຮ່ວມມືກັບ ອົງການຈັດຕັ້ງພາກລັດອື່ນໆ ເຊັ່ນ ສະຫະພັນ ກຳມະບານ ລາວ ແລະ ສະມາຄົມສົ່ງເສີມຄວາມກ້າວໜ້າ ຂອງ ແຮງງານນອກລະບົບ. ພ້ອມກັນນັ້ນ, ກໍຍັງໄດ້ນຳໃຊ້ສື່ມວນຊົນຕ່າງໆ ກໍຄື ການໂຄສະນາເຜີຍແຜ່ຜ່ານໜັງສືພິມ, ລາຍການວິທະຍຸ ແລະ ສື່ສັງຄົມທາງອອນລາຍ ຕ່າງໆ. ເຖິງຢ່າງໃດກໍຕາມ, ປະຈຸບັນຍັງບໍ່ທັນມີເວັບ

15 ອປຊ ນຳໃຊ້ສອງລະບົບຄຸ້ມຄອງຂໍ້ມູນຂ່າວສານ(MIS): My SQL ແລະ Fox Pro. MySQL ແມ່ນນຳໃຊ້ໃນການຄຸ້ມຄອງຖານຂໍ້ມູນສະມາຊິກກອງທຶນພາກລັດ ສ່ວນ Fox Pro ແມ່ນນຳໃຊ້ໃນການຄຸ້ມຄອງຖານຂໍ້ມູນສະມາຊິກພາກວິສາຫະກິດ ແລະ ສະໝັກໃຈ . MySQL ເປັນຖານຂໍ້ມູນແບບເປີດ, ເປັນເຊີເວີ ແລະ ສາມາດຂະຫຍາຍໄດ້. Fox Pro ແມ່ນມີໜ້າທີ່ການຂ້ອນຂ້າງຈຳກັດ, ຍ້ອນແນວນັ້ນ, ຈຶ່ງບໍ່ສາມາດລົງທະບຽນສະມາຊິກພາກວິສາຫະກິດ ແລະ ສະໝັກໃຈກັບທີ່ໄດ້.

ໃຊ້ ຫຼື ແອັບ ເພື່ອເຂົ້າເຖິງຂໍ້ມູນຂ່າວສານ ຫຼື ກວດກາຂໍ້ມູນສະມາຊິກ. ແຮງງານ ແລະ ວິສາຫະກິດ ຍັງບໍ່ທັນສາມາດຂຶ້ນທະບຽນໄດ້ແບບອອນລາຍ ຕາມຄວາມຕ້ອງການ; ປະຈຸບັນຍັງຕ້ອງເດີນທາງເພື່ອໄປຂຶ້ນທະບຽນເປັນສະມາຊິກຢູ່ ຕາມ ຫ້ອງສາຂາ ຂອງ ອປຊ. ນອກນັ້ນ, ກໍ່ໄດ້ຈັດການຝຶກອົບຮົມໃຫ້ແກ່ຂັ້ນທ້ອງຖິ່ນ ລວມທັງ ອປຊ ແຂວງ ແລະ ເມືອງ ແລະ ນາຍບ້ານ ເພື່ອຮັບປະກັນປະສິດທິຜົນໃນກິດຈະກໍາປະຊາສໍາພັນ.

### ຮັບປະກັນໃຫ້ມີການຄໍານວນຄະນິດສາດປະກັນສັງຄົມ ແລະ ມີຄັງສະສົມພຽງພໍ

**ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປະກັນສັງຄົມ ໃນຕໍ່ໜ້າຈຶ່ງໄດ້ມີການດໍາເນີນການຄໍານວນຄະນິດສາດຂອງ ກອງທຶນປະກັນສັງຄົມ ເລີ່ມແຕ່ປີ 2022 ຫາ 2024.** ການສຶກສາຄັ້ງນີ້ ແມ່ນໄດ້ຮັບການສະໜັບສະໜູນ ຈາກອົງການ ILO ໂດຍມີຈຸດປະສົງໃນການປະເມີນສະຖານະທາງການເງິນ ຂອງ ກອງທຶນ NSSF ແລະ ຮັບປະກັນຄວາມຍືນຍົງໄລຍະຍາວ ພ້ອມທັງປະກອບສ່ວນດ້ານຄໍາເຫັນວິຊາການ ເພື່ອປັບປຸງນະໂຍບາຍ ແລະ ນິຕິກໍາ ໂດຍສະເພາະແມ່ນແຜນການປັບປຸງ ກົດໝາຍ ວ່າດ້ວຍການປະກັນສັງ ທີ່ຈະນໍາສົ່ງເພື່ອໃຫ້ສະພາແຫ່ງຊາດ ພິຈາລະນາ ໃນປີ 2024. ໃນລະດັບຊາດ ກໍ່ໄດ້ມີການກໍ່ຕັ້ງ ຄະນະຄໍານວນຄະນິດສາດປະກັນສັງຄົມ ເຊິ່ງປະກອບມີ ສະມາຊິກຖາວອນປະຈໍາ 12 ທ່ານ ແລະ ສະມາຊິກສໍາຮອງທີ່ເຂົ້າຮ່ວມກອງປະຊຸມ ແລະ ການຝຶກອົບຮົມ. ອົງການ ILO ກໍໄດ້ຈັດການຝຶກອົບຮົມ ແລະ ກອງປະຊຸມລະດັບວິຊາການໃຫ້ແກ່ຄະນະ. ຄາດວ່າ ຄະນະຄໍານວນຄະນິດສາດ ຈະເຮັດວຽກຢ່າງໃກ້ສິດ ກັບຄະນະກໍາມະການປັບປຸງກົດໝາຍ ວ່າດ້ວຍການປະກັນສັງຄົມ ໃນລະຫວ່າງປີ 2024-25.

**ບົດລາຍງານການຄໍານວນຄະນິດສາດຂອງກອງທຶນປະກັນສັງຄົມແຫ່ງຊາດ ຂອງ ສປປ ລາວ ໄດ້ສະເໜີຫຼາຍຂໍ້ແນະນໍາແບບຄົບຊຸດຕໍ່ການປັບປຸງດ້ານການຄຸ້ມຄອງບໍລິຫານ, ການເງິນ ແລະ ຄວາມຍືນຍົງຂອງກອງທຶນປະກັນສັງຄົມແຫ່ງຊາດ.** ນອກຈາກນັ້ນ, ຍັງມີບົດລາຍງານການຄໍານວນຄະນິດສາດຂອງກອງທຶນປະກັນສຸຂະພາບແຫ່ງຊາດ ທີ່ໄດ້ສ້າງຂຶ້ນໄປພ້ອມກັນກັບຂອງ ກອງທຶນປະກັນສັງຄົມ ເພື່ອປະເມີນລະບົບປະກັນສຸຂະພາບແບບຄົບຊຸດ. ໄດ້ສະເໜີຂໍ້ແນະນໍາຕໍ່ການປັບປຸງອັດຕາເງິນສົມທົບ/ຈ່າຍຮ່ວມຂອງກອງທຶນປະກັນສຸຂະພາບເພື່ອຄວາມຍືນຍົງດ້ານການເງິນເຊັ່ນດຽວກັນ.

### ປັບປຸງກົນໄກການເກັບເງິນສົມທົບ ແລະ ຈ່າຍອຸດໜູນປະກັນສັງຄົມ

**ອົງການ ອປຊ ໄດ້ຈັດຕັ້ງປະຕິບັດ ຂໍ້ລິເລີ່ມ ເພື່ອປັບປຸງລະບົບການເກັບເງິນສົມທົບ ແລະ ການໃຫ້ອຸດໜູນເພື່ອໃຫ້ມີປະສິດທິພາບ, ລຽບງ່າຍ ແລະ ທັນເປັນດີຈີຕອນ.** ວິທີການຊໍາລະແບບດີຈີຕອນສໍາລັບການຈ່າຍເງິນສົມທົບ ແລະ ອຸດໜູນ ກໍາລັງຢູ່ໃນຂັ້ນຕອນການສຶກສາ ແລະ ປະເມີນ. ເຫັນວ່າ ໄດ້ມີການລົງນາມສັນຍາ ກັບຜູ້ໃຫ້ບໍລິການເງິນເອເລັກໂຕຣນິກ ຢູ່ ລາວ ເພື່ອຈ່າຍອຸດໜູນ. ນອກນັ້ນ, ກໍໄດ້ເຮັດສັນຍາ ກັບ ທະນາຄານ ສອງ ແຫ່ງ ເພື່ອອະນຸຍາດໃຫ້ຜູ້ປະກັນຕົນສາມາດຈ່າຍເງິນສົມທົບ ເຂົ້າກອງທຶນປະກັນສັງຄົມ ໂດຍຜ່ານແອັບຂອງທະນາຄານ. ອປຊ ກໍາລັງຢູ່ໃນການຕອນສຶກສາຄົ້ນຄ້ວາ ແລະ ພັດທະນາແອັບດີຈີຕອນ ຂອງ ກອງທຶນ ເພື່ອໃຫ້ສະມາຊິກພາກສະໝັກໃຈ ແລະ ພາກວິສາຫະກິດນໍາໃຊ້. ການທັນເປັນດີຈີຕອນ ຂອງການບໍລິການຈະສາມາດຊ່ວຍຍົກລະດັບປະສິດທິພາບ ແລະ ປະຢັດຄ່າໃຊ້ຈ່າຍ ພ້ອມທັງດຶງດູດໃຫ້ຄົນໄວໜຸ່ມ ເຂົ້າເປັນສະມາຊິກ ຂອງ ກອງທຶນປະກັນສັງຄົມ.

## ເປົ້າໝາຍ 2.2: ປະກັນສັງຄົມປົກຄຸມ ແຮງງານນອກລະບົບເພີ່ມຂຶ້ນ

### ປັບປຸງກົນໄກການອອກແບບລະບົບປະຈຸບັນໃຫ້ແທດເໝາະ ກັບຄຸນລັກສະນະ ຂອງ ແຮງງານນອກລະບົບ

**ຄູ່ຮ່ວມພັດທະນາຕ່າງໆເຊັ່ນ: ອົງການ ILO ແລະ Oxfam ໄດ້ສະໜັບສະໜູນວຽກສຶກສາຄົ້ນຄ້ວາກ່ຽວກັບຄວາມເຂົ້າໃຈຄຸນລັກສະນະຂອງຂະແໜງການນອກລະບົບຢູ່ ສປປ ລາວ ພ້ອມທັງກໍານົດວິທີການຂະຫຍາຍການປົກຄຸມຂອງລະບົບປະກັນສັງຄົມໃຫ້ແທດເໝາະກັບສະພາບເງື່ອນໄຂຂອງ ສປປ ລາວ.** ການສຶກສາຄົ້ນຄວ້າພົບເຫັນວ່າການບໍລິການສຸຂະພາບ ແລະ ຝາກທ້ອງເປັນການບໍລິການທີ່ນໍາໃຊ້ຫຼາຍກວ່າປະເພດອື່ນສໍາລັບສະມາຊິກພາກສະໝັກໃຈ. ເຖິງຢ່າງໃດກໍຕາມ, ກໍ່ມີຄວາມເປັນຫ່ວງເປັນໃຍກ່ຽວກັບການເຂົ້າເຖິງ ແລະ ຄວາມເພິ່ງພໍໃຈດ້ານການບໍລິການ. ນອກນັ້ນ, ເຖິງວ່າ ແຮງງານນອກລະບົບຈໍານວນໜຶ່ງຮູ້ກ່ຽວກັບກອງທຶນພາກສະໝັກໃຈກໍ່ຕາມມີແຕ່ຈໍານວນໜ້ອຍເທົ່ານັ້ນທີ່ເຂົ້າໃຈກ່ຽວກັບການອຸດໜູນ, ລະບຽບການ ແລະ ຂໍ້ຈໍາກັດ. ສາເຫດທີ່ບໍ່ເຂົ້າເປັນສະມາຊິກແມ່ນຍ້ອນບໍ່ສາມາດຈ່າຍເງິນສົມທົບ, ຄວາມຫຍຸ້ງຍາກໃນການຈ່າຍຕາມກໍານົດເວລາ, ບໍ່ພໍໃຈກ່ຽວກັບຄຸນນະພາບຂອງການບໍລິການ ແລະ ຄວາມຈໍາເປັນທີ່ຕ້ອງປຶກສາຫາລືກັບຄອບຄົວ.

**ສິ່ງທີ່ຄົ້ນພົບລວມມີການສຸມໃສ່ຂະແໜງເສດຖະກິດທີ່ມີທ່າແຮງເປັນຕົ້ນແມ່ນຂະແໜງການສົ່ງອອກເຊັ່ນ: ກາເຟທີ່ຊາວກະສິກອນມີລາຍຮັບສູງກວ່າໂດຍທົ່ວໄປ, ຂະແໜງການທີ່ຕ້ອງມີໃບອະນຸຍາດເພື່ອດໍາເນີນກິດຈະການເຊັ່ນ: ໂຮງງານຜະລິດນໍ້າດື່ມ, ຫຼືຂະແໜງການທີ່ມີສະຖານທີ່ຄົງທີ່ ເຊັ່ນ: ໂລຈິດສຕິກ.** ນອກນັ້ນ, ການວິເຄາະຂໍ້ມູນການສໍາຫຼວດຄົວເຮືອນ ແລະ ກໍາລັງແຮງງານສະແດງໃຫ້ເຫັນວ່າພະນັກງານໃນບາງອາຊີບເຊັ່ນ: ການສິດສອນມີລະດັບເປັນທາງການສູງ ແລະ ສາມາດເຂົ້າເຖິງໄດ້ງ່າຍ. ຄໍາແນະນໍາຫຼັກແມ່ນຕ້ອງເຮັດວຽກຢ່າງໃກ້ຊິດກັບອົງການຈັດຕັ້ງສັງຄົມ ແລະ ສະຫະກອນທີ່ເຄື່ອນໄຫວຢູ່ຂັ້ນຊຸມຊົນໂດຍສະເພາະແມ່ນເຂດຊົນນະບົດເພື່ອເພີ່ມໂອກາດ

### ▶ ກ່ອງ 1: ໂຄງການ SOLAR: ສ້າງຄວາມຮັບຮູ້ໃຫ້ແກ່ຊາວກະສິກອນໃນສວນຊາ ແລະ ກາເຟ.

ນາງ ກົງທອງ ແພງວິໄລ ເປັນຊາວກະສິກອນປູກກາເຟ ອາຍຸ 32 ປີ. ຜູ້ກ່ຽວດຳລົງຊີວິດກັບລູກສາມຄົນຢູ່ ບ້ານດົງ, ເມືອງເລົ່າງາມ, ແຂວງສາລະວັນ ພ້ອມກັບຜູ້ປົກຄອງຂອງລາວທີ່ມີອາຍຸ 80 ແລະ 70 ປີ. ຄອບຄົວລາວຕ້ອງໄປຫາໝໍຫຼາຍ ແລະ ຕ້ອງໃຊ້ເງິນລະຫວ່າງ 5-10 ລ້ານກີບແຕ່ລະຄັ້ງ. ດັ່ງນັ້ນ, ລາວຈຶ່ງເປັນຫ່ວງກ່ຽວກັບການທີ່ຕ້ອງເປັນພາລະແບກຫາບໃຫ້ລູກເວລາອາຍຸຫຼາຍຂຶ້ນ.


© Mongkon Duangkhiew/ILO

ໃນຕົ້ນປີ, ໂຄງການ SOLAR ທີ່ໄດ້ຮັບທຶນຈາກ ສະຫະພາບເອີຣົບ ແລະ ຈັດຕັ້ງປະຕິບັດໂດຍ ອົງການ ILO ໄດ້ຈັດກິດຈະກຳເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບກອງທຶນປະກັນສັງຄົມຢູ່ເມືອງເລົ່າງາມ. ນາງ ກົງແພງ ບໍ່ເຄີຍຮູ້ຫຍັງມາກ່ອນກ່ຽວກັບກອງທຶນ ແລະ ມີຄວາມສົນໃຈຫຼາຍກ່ຽວກັບຜົນປະໂຫຍດທີ່ຈະໄດ້ຮັບ. ລາວໄດ້ເຂົ້າຮ່ວມກິດຈະກຳເຜີຍແຜ່ຂໍ້ມູນຂ່າວສານ ແລະ ຕັດສິນໃຈເຂົ້າເປັນສະມາຊິກ. ປະຈຸບັນ, ລາວບໍ່ໄດ້ເປັນຫ່ວງແລ້ວກ່ຽວກັບການເປັນພາລະຕໍ່ລູກໃນອານະຄົດ. ນອກນັ້ນ, ກໍດີໃຈທີ່ຮູ້ວ່າຈະໄດ້ຮັບເງິນອຸດໜູນຖ້າຖືພາ, ເຈັບປ່ວຍ, ເກີດອຸປະຕິເຫດ ຫຼື ເວລາທີ່ອາຍຸສູງຂຶ້ນ. ຜູ້ຍິງຫຼາຍຄົນຢູ່ບ້ານລາວກຳລັງສັງເກດເບິ່ງວ່າລາວຈະໄດ້ຮັບອຸດໜູນຫຍັງກ່ອນທີ່ຈະຕັດສິນເຂົ້າເປັນສະມາຊິກ.

ໃນການເຂົ້າເຖິງກຸ່ມປະຊາກອນດັ່ງກ່າວ.

**ອປຊ ໄດ້ຈັດຕັ້ງປະຕິບັດໂຄງການທົດລອງເພື່ອໃຫ້ບໍລິການແບບເຄື່ອນທີ່ໃນຮູບແບບການນຳໃຊ້ຍານພາຫະນະທີ່ປະກອບດ້ວຍອຸປະກອນ IT ແລະ ພະນັກງານ ອປຊ ທີ່ເດີນທາງໄປບ້ານໜຶ່ງຕໍ່ມື້ເພື່ອຈັດຕັ້ງປະຕິບັດກິດຈະກຳປະຊາສຳພັນ, ແລກປ່ຽນຂໍ້ມູນຂ່າວສານ, ຂຶ້ນທະບຽນແຮງງານທີ່ມີຄວາມສົນໃຈ ແລະ ຮັບເອົາຄຳຮ້ອງຂໍອຸດໜູນ.** ໂຄງການທົດລອງໄດ້ປະຕິບັດຢູ່ສາມເມືອງຢູ່ພາກໃຕ້ຂອງ ສປປ ລາວ ລະຫວ່າງ ເດືອນມັງກອນ ຫາ ກຸມພາ 2024. ຈາກການທົດລອງດັ່ງກ່າວກໍ່ຈະມີການເກັບກຳບົດຮຽນທີ່ຖອດຖອນໄດ້ເພື່ອໄປປັບປຸງການບໍລິການ ແລະ ຂະຫຍາຍໄປຂອບເຂດທົ່ວປະເທດ. ນອກນັ້ນ, ໂຄງການທົດລອງກໍ່ໄດ້ນຳໃຊ້ເຄືອຂ່າຍອົງການຈັດຕັ້ງທາງສັງຄົມເພື່ອໄປໃຫ້ຂໍ້ມູນ ແລະ ສຳຫຼວດແຮງງານລ່ວງໜ້າກ່ອນທີ່ໜ່ວຍບໍລິການເຄື່ອນທີ່ຈະລົງໄປເຮັດວຽກຕົວຈິງ. ພ້ອມນັ້ນ, ສູນໃຫ້ຂໍ້ມູນຂ່າວສານແຮງງານ ກໍ່ຖືກສ້າງຕັ້ງຂຶ້ນຢູ່ເມືອງທົດລອງເພື່ອຍົກລະດັບຄວາມຮູ້ຂອງແຮງງານກ່ຽວກັບສິດ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກການປະກັນສັງຄົມ.

**ອປຊ ໄດ້ຂະຫຍາຍການສ້າງຕັ້ງຫ້ອງການຢູ່ຂັ້ນເມືອງດັ່ງທີ່ເຫັນໄດ້ຈາກພິທີເປີດຫ້ອງການປະກັນສັງຄົມເມືອງປາກຊ່ອງໃນເດືອນມິຖຸນາ ປີ 2023.** ບັນດາຫ້ອງການຢູ່ຂັ້ນເມືອງສາມາດນຳເອົາການບໍລິການມາໃກ້ຄຽງບັນດາຫົວໜ່ວຍວິສາຫະກິດ, ຊາວກະສິກອນຂະໜາດນ້ອຍ, ທຸລະກິດຄອບຄົວ, ສະຫະກອນ ແລະ ກຸ່ມຜູ້ຜະລິດ ຫຼາຍກວ່າເກົ່າ.

### 4.4.2. ຊ່ອງຫວ່າງ ແລະ ສິ່ງທ້າທາຍ

**ໃນຕະຫລອດຊ່ວງການສໍາພາດ, ພາກສ່ວນກ່ຽວຂ້ອງຫຼັກໄດ້ໃຫ້ຄໍາເຫັນວ່າຜົນການຄໍານວນຄະນິດສາດໄດ້ຢັ້ງຢືນວ່າກອງທຶນໄລຍະຍາວຂອງພາກລັດໂດຍສະເພາະແມ່ນບໍານານ ແລະ ອຸປະຕິເຫດແຮງງານແມ່ນຈະບໍ່ມີຄວາມຍືນຍົງດ້ານການເງິນ ແລະ ອປຊ ຈະບໍ່ສາມາດບັນລຸພັນທະໃນການຈ່າຍອຸດໜູນຂອງກອງທຶນນີ້ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍປະກັນສັງຄົມ.** ໂດຍລວມແລ້ວ, ງົບປະມານຂອງກອງທຶນພາກລັດນີ້ແມ່ນຂຶ້ນກັບລັດຖະບານ ແລະ ບໍ່ໄດ້ຖືກສະສົມເປັນຄັງສໍາຮອງ ຫຼື ການລົງທຶນ. ການຈັດສັນງົບປະມານແມ່ນຕ້ອງໄດ້ຂຶ້ນແຜນ ແລະ ຂໍອະນຸມັດຈາກສະພາແຫ່ງຊາດໃນແຕ່ລະປີຈຶ່ງເຮັດໃຫ້ມີຄວາມສ່ຽງໃນການຮັບປະກັນເລື່ອງຄວາມຍືນຍົງຂອງງົບປະມານສໍາລັບກອງທຶນພາກລັດ. ປະຈຸບັນ, ເງິນສົມທົບຈາກລັດຖະກອນຕໍ່ກອງທຶນແມ່ນ 8 ສ່ວນຮ້ອຍ ໃນຂະນະທີ່ລັດຖະບານປະກອບສ່ວນ 8.5 ສ່ວນຮ້ອຍ ເຊິ່ງຖ້າທຽບກັບມາດຕະຖານສາກົນແລ້ວເຫັນວ່າຍັງຕໍ່າຫຼາຍ ແລະ ຈະບໍ່ພຽງພໍເພາະສັງຄົມລາວຈະມີປະຊາກອນສູງອາຍຸຫຼາຍຂຶ້ນໃນແຕ່ລະປີ. ນອກຈາກນັ້ນ, ການອອກຮັບບໍານານກ່ອນອາຍຸຂອງລັດຖະກອນ ແລະ ລະດັບການຈ່າຍເງິນອຸດໜູນ/ເງິນນະໂຍບາຍແມ່ນບໍ່ໄດ້ຮັບການປັບປຸງໃຫ້ສອດຄ່ອງກັບສະພາບການປ່ຽນແປງດ້ານສັງຄົມ ແລະ ການພັດທະນາໃນລະບົບຄຸ້ມຄອງພາກລັດໃນປະຈຸບັນ.

**ເຖິງວ່າແນວໂນ້ມຂອງການຂະຫຍາຍເຂດປົກຄຸມຂອງກອງທຶນພາກວິສາຫະກິດ ແລະ ພາກສະໝັກໃຈຈະຊ້າແຕ່ກໍເຫັນວ່າສາມາດຂະຫຍາຍເທື່ອລະກ້າວ.** ເຖິງຢ່າງໃດກໍຕາມປະຈຸບັນກໍຍັງສາມາດປົກຄຸມຈໍານວນປະຊາກອນທີ່ຍັງໜ້ອຍຢູ່ (11.2ສ່ວນຮ້ອຍ). ຍັງມີບັນດາຫົວໜ່ວຍວິສາຫະກິດຂະໜາດນ້ອຍ ແລະ ກາງພ້ອມທັງທຸລະກິດຄອບຄົວຫຼາຍຫົວໜ່ວຍທີ່ບໍ່ປະຕິບັດກົດໝາຍປະກັນສັງຄົມ ແລະ ເງື່ອນໄຂການຂຶ້ນທະບຽນວິສາຫະກິດໂດຍທີ່ມີເຈດຈໍານົງທີ່ບໍ່ຢາກເຂົ້າລະບົບ. ດັ່ງນັ້ນ, ຍັງບໍ່ທັນມີມາດຕະການອັນເດັດຂາດຕໍ່ຜູ້ລະເມີດກົດໝາຍປະກັນສັງຄົມເຊິ່ງສ່ອງແສງໃຫ້ເຫັນໃນອັດຕາການປົກຄຸມທີ່ຍັງຕໍ່າຢູ່.

**ອົງການ ILO ໄດ້ເນັ້ນໜັກເຖິງຄວາມສໍາຄັນໃນການຈັດຕັ້ງປະຕິບັດນະໂຍບາຍປະກັນສັງຄົມສະເພາະເພື່ອແກ້ໄຂສິ່ງທ້າທາຍຕໍ່ກັບແຮງງານນອກລະບົບ (Merttens et al. 2024).** ໃນນັ້ນ, ລວມມີບັນຫາຄຸນນະພາບຂອງການບໍລິການປິ່ນປົວສຸຂະພາບທີ່ເກີດຂຶ້ນຍ້ອນການໂອນອຸດໜູນປະກັນສຸຂະພາບຂອງກອງທຶນປະກັນສັງຄົມໃຫ້ແກ່ຫ້ອງການປະກັນສຸຂະພາບແຫ່ງຊາດ, ການແກ້ໄຂຊ່ອງວ່າງດ້ານກົດໝາຍ ແລະ ນິຕິກໍາທີ່ກ່ຽວຂ້ອງກັບສັນຍາຈ້າງງານ ແລະ ຮູບແບບການເຮັດວຽກ, ພ້ອມທັງໃຫ້ຄວາມກະຈ່າງແຈ້ງກ່ຽວກັບນະໂຍບາຍປະກັນສັງຄົມໃຫ້ແກ່ ແຮງງານທີ່ເຮັດວຽກຢູ່ຄົວເຮືອນ. ການຄົ້ນຄວ້າຍັງຍົກໃຫ້ເຫັນເຖິງຄວາມຈໍາເປັນໃນການປັບປຸງການເຂົ້າເຖິງດ້ວຍການສ້າງຕັ້ງຫ້ອງການບໍລິການຢູ່ຂັ້ນເມືອງ ແລະ ໜ່ວຍງານຂຶ້ນທະບຽນແບບເຄື່ອນທີ່ພ້ອມທັງພັດທະນາລະບົບອອນລາຍເພື່ອຫລຸດຜ່ອນຄ່າໃຊ້ຈ່າຍໃນການເຂົ້າຮ່ວມເປັນສະມາຊິກ ແລະ ສົ່ງເສີມການເກັບເງິນສົມທົບ. ພ້ອມນັ້ນ, ຂໍ້ຈໍາກັດດ້ານງົບປະມານກໍ່ສົ່ງຜົນກະທົບຕໍ່ກັບການໂຄສະນາເຜີຍແຜ່ ແລະ ປະຊາສໍາພັນເຊິ່ງຊີ້ໃຫ້ເຫັນເຖິງຄວາມຈໍາເປັນໃນການພັດທະນາສື່ໂຄສະນາ ແລະ ປະຊາສໍາພັນເພື່ອສາມາດເຂົ້າເຖິງແຮງງານນອກລະບົບທີ່ມີລະດັບການສຶກສາຕໍ່າກວ່າຢ່າງມີປະສິດທິຜົນ.

**ຜູ້ເຂົ້າຮ່ວມການສໍາພາດໄດ້ຍົກເຖິງຂໍ້ກັງວົນກ່ຽວກັບສິ່ງທ້າທາຍທີ່ແຮງງານນອກລະບົບໄດ້ພົບພໍ້ເວລາທີ່ພະຍາຍາມເຂົ້າຮ່ວມລະບົບປະກັນສັງຄົມພາກສະໝັກໃຈ.** ໜຶ່ງໃນອຸປະສັກຕົ້ນຕໍແມ່ນການຂາດຂໍ້ມູນຂ່າວສານທີ່ຈະແຈ້ງ ກ່ຽວກັບລະບົບປະກັນສັງຄົມ, ອຸດໜູນ, ຂັ້ນຕອນການຂໍອຸດໜູນ ແລະ ເງື່ອນໄຂຈ່າຍເງິນສົມທົບ. ອົງການ Oxfam (2021) ໄດ້ດໍາເນີນການຄົ້ນຄ້ວາ ແລະ ພົບເຫັນບັນດາສິ່ງທ້າທາຍຂອງແຮງງານນອກລະບົບໃນການເຂົ້າເຖິງລະບົບປະກັນສັງຄົມພາກສະໝັກໃຈເຊິ່ງບັນຫາຫຼັກແມ່ນການຂາດຂໍ້ມູນຂ່າວສານ ແລະ ຄວາມຮູ້ກ່ຽວກັບລະບົບປະກັນສັງຄົມ. ສໍາລັບປະຊາກອນທີ່ມີຄວາມເຂົ້າໃຈພື້ນຖານກ່ຽວກັບການປະກັນສັງຄົມກໍຍັງເຫັນວ່າມີພຽງແຕ່ 15ສ່ວນຮ້ອຍ ມີຄວາມສົນໃຈເຂົ້າເປັນສະມາຊິກ. ການຂາດຄວາມສົນໃຈເກີດຂຶ້ນຍ້ອນຫຼາຍປັດໄຈລວມທັງການເຂົ້າໃຈຄາດເຄື່ອນກ່ຽວກັບ ຄວາມສໍາຄັນຂອງການປະກັນສັງຄົມ, ຄວາມສາມາດໃນການຈ່າຍເງິນສົມທົບເປັນຂໍ້ກັງວົນຕົ້ນຕໍເນື່ອງຈາກວ່າມີລາຍຮັບຕໍ່າ ແລະ ບໍ່ໝັ້ນຄົງເຊິ່ງເຮັດໃຫ້ບໍ່ສາມາດຈ່າຍເງິນສົມທົບແບບປົກກະຕິ. ດັ່ງນັ້ນ, ຈຶ່ງເຮັດໃຫ້ຖືກບັງຄັບຕ້ອງເລືອກລະຫວ່າງການເຂົ້າລະບົບປະກັນສັງຄົມ ຫຼື ນໍາໃຊ້ເງິນທີ່ມີເພື່ອຈຸດປະສົງອື່ນ. ອີກບັນຫາໜຶ່ງແມ່ນການທີ່ປະຊາຊົນມີແນວຄວາມຄິດໃນດ້ານລົບຕໍ່ບໍລິການປິ່ນປົວສຸຂະພາບ, ໄລຍະທາງອັນຍາວໄກຈາກຫ້ອງການປະກັນສັງຄົມຫາບ້ານຂອງປະຊາຊົນ, ຄວາມເຊື່ອທີ່ວ່າຕົນເອງບໍ່ຈໍາເປັນຕ້ອງມີປະກັນສັງຄົມເພາະຍັງໜຸ່ມ, ບໍ່ເຈັບປ່ວຍໄດ້ງ່າຍໆ ແລະ ຄວາມເຊື່ອດ້ານວັດທະນະທໍາທີ່ຫົວໜ້າຄອບທີ່ສ່ວນຫຼາຍເປັນຜູ້ຊາຍຕ້ອງເປັນຜູ້ຕັດສິນວ່າຈະເຂົ້າເປັນສະມາຊິກກອງທຶນ ຫຼື ບໍ່.

**ບັນຫາເຫຼົ່ານີ້ເນັ້ນໃຫ້ເຫັນເຖິງຄວາມຈໍາເປັນໃນການຮ່ວມມືເພື່ອອັດຊ່ອງວ່າງດ້ານຄວາມຮັບຮູ້ ແລະ ໂຄສະນາເຜີຍແຜ່ກ່ຽວກັບລະບົບປະກັນສັງຄົມພາກສະໝັກໃຈໃຫ້ແກ່ແຮງງານນອກລະບົບ.** ການໃຫ້ຂໍ້ມູນຂ່າວສານພື້ນຖານທີ່ລະອຽດຈະແຈ້ງກ່ຽວກັບການອຸດໜູນ ແລະ ລະບົບປະກັນສັງຄົມມີຄວາມສໍາຄັນເປັນຢ່າງຍິ່ງ. ນອກນັ້ນ, ຄວນພະຍາຍາມເຮັດໃຫ້ຂັ້ນຕອນການຂຶ້ນທະບຽນເປັນສະມາຊິກງ່າຍຂຶ້ນ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍດ້ວຍການສະໜອງທາງເລືອກໃນການຈ່າຍເງິນສົມທົບທີ່ມີຄວາມຍືດຍຸ່ນ ຫຼື ຄໍ້າປະກັນໃຫ້ກຸ່ມທີ່ມີລາຍຮັບຕໍ່າ. ຖ້າສາມາດແກ້ໄຂສິ່ງທ້າທາຍເຫຼົ່ານີ້ຍິ່ງຈະເຮັດໃຫ້ແຮງງານນອກລະບົບສາມາດເຂົ້າ

### ▶ ກ່ອງ 2. ຂໍ້ແນະນຳໃນການຫັນສູ່ໃນລະບົບ ແລະ ການຂະຫຍາຍເຂດປົກຄຸມປະກັນສັງຄົມ


© Phoonsab Thevongsa/ILO

ກອບນະໂຍບາຍຂອງ ສປປ ລາວ ປະຈຸບັນໄດ້ກຳນົດສອງວັດຖຸປະສົງຢ່າງຈະແຈ້ງເຊັ່ນ: (i) ເພີ່ມລະດັບການຫັນສູ່ໃນລະບົບຂອງວິສາຫະກິດໃຫ້ຫຼາຍຂຶ້ນ; ແລະ (ii) ເພີ່ມເຂດປົກຄຸມຂອງປະກັນສັງຄົມສູ່ກຳລັງແຮງງານ. ກອງທຶນປະກັນສັງຄົມໄດ້ມີຊຸດອຸດໜູນແບບຄົບຊຸດສຳລັບຜູ້ອອກແຮງງານ ແລະ ວິສາຫະກິດ. ເພື່ອຮັບຮູ້ເຖິງທ່າແຮງ, ກອງທຶນປະກັນສັງຄົມຈຳເປັນຕ້ອງຂະຫຍາຍເຂດປົກຄຸມປະກັນສັງຄົມໃຫ້ທົ່ວເຖິງ. ໄດ້ສະເໜີບັນດາຂໍ້ແນະນຳລຸ່ມນີ້ຕໍ່ລັດຖະບານ ແລະ ຄູ່ຮ່ວມງານເພື່ອພິຈາລະນາໃນການເພີ່ມລະດັບການຫັນແຮງງານຂອງຕະຫລາດແຮງງານ ແລະ ວິສາຫະກິດສູ່ໃນລະບົບໂດຍຜ່ານສາມວິທີການເຊັ່ນ: ການຮ່ວມມືກັນ, ການປັບປຸງລະບົບ ແລະ ຂະບວນການ, ແລະ ການກ້າວໄປຂ້າງໜ້າ.

ການຮ່ວມມືກັນ

- ເພີ່ມທະວີລະດັບການຮ່ວມມື ແລະ ປະສານງານລະຫວ່າງພາກລັດດ້ວຍກັນເພື່ອການຫັນວິສາຫະກິດສູ່ໃນລະບົບ ແລະ ການຂະຫຍາຍເຂດປົກຄຸມປະກັນສັງຄົມເຊັ່ນ:

    ເຊື່ອມບັນດາຖານຂໍ້ມູນທີ່ກ່ຽວຂ້ອງເຂົ້າກັນ

    ກຳນົດເງື່ອນໄຂການເຂົ້າຮ່ວມປະກັນສັງຄົມໃນຂະບວນການຂຶ້ນທະບຽນວິສາຫະກິດ, ການເສຍອາກອນ, ການອອກໃບອະນຸຍາດດຳເນີນທຸລະກິດ; ແລະ

    ຍົກສູງລະບົບການກວດກາປະກັນສັງຄົມຕໍ່ມາດຕະຖານການດຳເນີນທຸລະກິດ, ເງື່ອນໄຂການເຮັດວຽກ ແລະ ການປະຕິບັດກົດໝາຍປະກັນສັງຄົມ.

    ຍົກສູງ ແລະ ສ້າງສາຍສຳພັນກັບອົງການຕາງໜ້າຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານເພື່ອ:

    ເຜີຍແຜ່ຂໍ້ມູນຂ່າວສານ ແລະ ສະໜັບສະໜູນຂະບວນການຂຶ້ນທະບຽນ, ຈ່າຍສົມທົບ, ແລະ ຂໍອຸດໜູນ, ແລະ

    ໃຫ້ພາກປະຊາຄົມມີສ່ວນຮ່ວມໃນການເຂົ້າຮ່ວມກອງປະຊຸມສາມຝ່າຍ.

- ໃຫ້ຄວາມກະຈ່າງແຈ້ງຕໍ່ຈຸດທີ່ບໍ່ແນ່ນອນໃນໂຄງສ້າງນິຕິກຳທີ່ມີຢູ່ແລ້ວໂດຍສະເພາະແມ່ນບາງປະເພດຂອງສັນຍາແຮງງານ ແລະ ຮູບແບບທຸລະກິດ (ເຊັ່ນ ທຸລະກິດແຟນຊາຍ); ກຳນົດນະໂຍບາຍດ້ານປະກັນສັງຄົມທີ່ເໝາະສົມໃຫ້ແກ່ກຸ່ມແຮງງານໃນພາກຄົວເຮືອນ; ພັດທະນານິຕິກຳພາຍໃຕ້ກົດໝາຍໃນແຕ່ລະຂະແໜງການເພື່ອເປັນທິດທາງໃນການຈັດຕັ້ງປະຕິບັດກົດໝາຍປະກັນສັງຄົມ ແລະ ຍົກສູງການບັງຄັບໃຊ້ກົດໝາຍ.

ຍົກລະດັບ

- ແກ້ໄຂບັນຫາຄຸນນະພາບໃນການປິ່ນປົວ ອັນເນື່ອງມາຈາກການໂຮມຕົວຂອງກອງທຶນປະກັນສຸຂະພາບ ແລະ ປະກັນສັງຄົມ, ອາດຈະຄືນອຸດໜູນປະກັນສຸຂະພາບໃຫ້ ອປຊ ຫຼື ອາດປັບຊຸດຜົນປະໂຫຍດຂອງກອງທຶນປະກັນ

ສຸຂະພາບ ໃຫ້ມີຄວາມແຕກຕ່າງກັນລະຫວ່າງຜູ້ປະກັນຕົນຂອງກອງທຶນປະກັນສັງຄົມ ແລະ ສະມາຊິກປະກັນສຸຂະພາບ ແລະ ໃຫ້ ຫກປຊ ມີຄວາມເປັນເອກະລາດດ້ານການເງິນ ເພື່ອຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ປະກັນຕົນປະກັນສັງຄົມ.

- ລົງທຶນດ້ານໂຄງລ່າງພື້ນຖານໃຫ້ມີບໍລິການຂອງ ອປຊ ໃກ້ຕົວຜູ້ອອກແຮງງານ ແລະ ວິສາຫະກິດ:
  - ສືບຕໍ່ສ້າງຕັ້ງຫ້ອງການກອງທຶນຂັ້ນເມືອງ ແລະ ການບໍລິການຂຶ້ນທະບຽນເຄື່ອນທີ່;
  - ພັດທະນາລະບົບການຂຶ້ນທະບຽນ, ການຈ່າຍເງິນສົມທົບ ແລະ ການຂໍອຸດໜູນແບບອອນລາຍ.
- ໃຫ້ທາງເລືອກແກ່ຜູ້ປະກັນຕົນໃນການໃຊ້ບໍລິການຢູ່ຫຼາຍໂຮງໝໍໄດ້
- ຍົກລະດັບການໂຄສະນາປະຊາສໍາພັນ ໂດຍ:
  - ດໍາເນີນການສຶກສາເພື່ອໃຫ້ຮູ້ວ່າ ກິດຈະກໍາໂຄສະນາສື່ສານແບບໃດທີ່ຄວນຈະປັບປຸງໃຫ້ດີຂຶ້ນ;
  - ພັດທະນາເຄື່ອງມືສື່ສານໃຫ້ແທດເໝາະກັບກຸ່ມເປົ້າໝາຍ ໂດຍສະເພາະແມ່ນຜູ້ທີ່ດ້ອຍການສຶກສາ;
  - ນໍາໃຊ້ສື່ສັງຄົມເຂົ້າໃນການສື່ສານໃຫ້ມີປະສິດຕິພາບຫຼາຍຂຶ້ນ; ແລະ
  - ເຜີຍແຜ່ຂໍ້ມູນປະກັນສັງຄົມໃນພື້ນທີ່ສາທາລະນະໃຫ້ຫຼາຍຂຶ້ນ.

**ກ້າວໄປຂ້າງໜ້າ**

- ຂະຫຍາຍເຂດປົກຄຸມປະກັນສັງຄົມໂດຍເລັ່ງເປົ້າໝາຍໃສ່ກຸ່ມເສດຖະກິດຍ່ອຍທີ່ເຂົ້າເຖິງໄດ້ງ່າຍ ແລະ ມີທ່າແຮງໃນການເຂົ້າເປັນສະມາຊິກຫຼາຍກ່ວາ.
- ລົງທຶນໃສ່ດ້ານສະຫວັດດີການສັງຄົມ (ໂດຍສະເພາະແມ່ນຮູບແບບຂອງການຊົດເຊີຍລາຍຮັບໂດຍກົງ) ເພື່ອຊ່ວຍບຸກຄົນ ແລະ ຄົວເຮືອນພົ້ນຈາກການຂາດລາຍຮັບ ແລະ ການບໍ່ມີວຽກເຮັດງານທໍາອັນເນື່ອງມາຈາກຄວາມສ່ຽງໃນວົງຈອນຊີວິດ.ການລົງທຶນໃສ່ດ້ານສະຫວັດດີການສັງຄົມຈະເປັນການຊ່ວຍໜູນດ້ານຄວາມຕ້ອງການຂອງສິນຄ້າ ແລະ ບໍລິການທີ່ສະໜອງໂດຍວິສາຫະກິດ, ເປັນການເພີ່ມລາຍຮັບ ແລະ ຄວາມອາດສາມາດໃນການເຂົ້າຮ່ວມກອງທຶນປະກັນສັງຄົມຢ່າງຮອບດ້ານ.

ແຫຼ່ງຂໍ້ມູນ: Merttens et al. 2024

ເຖິງລະບົບປະກັນສັງຄົມພາກສະໝັກໃຈ ແລະ ໄດ້ຮັບການອຸດໜູນເພີ່ມຂຶ້ນ.

## 4.4.3. ຄໍາແນະນໍາ

**ອີງໃສ່ຜົນການສໍາຫລວດຂອງອົງການແຮງງານສາກົນ (Merttens et al 2024), ເຫັນວ່າມີກອບນິຕິກໍາຢ່າງພຽງພໍ ແລະ ກົນໄກ ແລະ ຂະບວນການໃນການຂຶ້ນທະບຽນວິສາຫະກິດ, ການເກັບອາກອນ, ເງື່ອນໄຂແຮງງານ ແລະ ກົດລະບຽບປະກັນສັງຄົມແບບຄົບຖ້ວນແລ້ວ.** ເຖິງຢ່າງໃດກໍ່ຕາມ, ສິ່ງເຫຼົ່ານີ້ຍັງຈະຕ້ອງໄດ້ພິຈາລະນາປັບປຸງຕື່ມ. ດ້ວຍຮູບການປັບປຸງລະບົບ ແລະ ຂະບວນການຂຶ້ນທະບຽນວິສາຫະກິດ, ການອອກໃບອະນຸຍາດດໍາເນີນທຸລະກິດ ແລະ ການປະກັນສັງຄົມເຂົ້າກັນພ້ອມທັງດັດແກ້ບັນດານິຕິກໍາຂອງຂະແໜງການເພື່ອແກ້ໄຂຊ່ອງຫວ່າງ ແລະ ຊີ້ແຈງຄວາມຄຸນເຄືອ, ລັດຖະບານຄວນຕໍ່ກັບຕົວເລກອັດຕາປົກຄຸມຂອງກອງທຶນປະກັນສັງຄົມທີ່ເທົ່າກັບ 11.2 ສ່ວນຮ້ອຍ ຂອງປະຊາກອນທັງໝົດທົ່ວປະເທດນັ້ນ, ລັດຖະບານຕ້ອງໄດ້ໃຊ້ຄວາມພະຍາຍາມໃນການຂະຫຍາຍເຂດປົກຄຸມໃຫ້ໄດ້ 15ສ່ວນຮ້ອຍ ພາຍໃນປີ 2025. ຈໍາເປັນຕ້ອງໄດ້ຍົກລະດັບການບັງຄັບໃຊ້ກົດໝາຍ, ການຕິດຕາມປະເມີນຜົນ ແລະ ການປັບປຸງນິຕິກໍາປະກັນສັງຄົມຢ່າງຕໍ່ເນື່ອງໂດຍຜ່ານການເກັບກໍາ ແລະ ວິເຄາະຂໍ້ມູນຂອງຜູ້ອອກແຮງງານແບບຄົບຖ້ວນ ແລະ ສ້າງກົນໄກໃນການເຂົ້າເຖິງນະໂຍບາຍ ແລະ ສ້າງກອບຕິດຕາມປະເມີນຜົນແຫ່ງຊາດທີ່ມີເປົ້າໝາຍ ແລະ ຕົວຊີ້ບອກທີ່ຊັດເຈນ.

**ເພື່ອອັດຊ່ອງຫວ່າງ ແລະ ເພື່ອຂະຫຍາຍເຂດປົກຄຸມປະກັນສັງຄົມ, ຈໍາເປັນຕ້ອງໄດ້ດໍາເນີນການໂຄສະນາປະຊາສໍາພັນໃນກຸ່ມຜູ້ອອກແຮງງານນອກລະບົບເປັນຢ່າງດີ.** ຂໍ້ມູນກອງທຶນຄວນຖືກແລກປ່ຽນໃນຮູບແບບງ່າຍໆ ແລະ ໃຫ້ເຂົ້າເຖິງໄດ້ງ່າຍ. ດ້ວຍການສະໜັບສະໜູນຂອງອົງການ

ແຮງງານສາກົນ, ອປຊ ກໍາລັງຂະຫຍາຍກອງທຶນພາກສະໝັກໃຈໄປໃນພາກໃຕ້ຂອງ ສປປ ລາວ ໂດຍຜ່ານການຈັດຕັ້ງປະຕິບັດກິດຈະກໍາການຂຶ້ນທະບຽນເຄື່ອນທີ່. ທັງໝົດນີ້ແມ່ນເພື່ອໃຫ້ຜູ້ອອກແຮງງານໄດ້ເຂົ້າເຖິງການບໍລິການ ແລະ ຂໍ້ມູນຂ່າວສານປະກັນສັງຄົມໄດ້ງ່າຍຂຶ້ນ ແລະ ໃນທີ່ສຸດແຮງງານນອກລະບົບກໍ່ຈະເຂົ້າຮ່ວມເປັນສະມາຊິກກອງທຶນຫຼາຍຂຶ້ນ. ກິດຈະກໍາເຄື່ອນກໍາລັງຢູ່ໃນຂັ້ນຕອນຈັດຕັ້ງປະຕິບັດ ແລະ ໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສັງຄົມ, ສະມາຄົມ ແລະ ກຸ່ມຮ່ວມມືການຜະລິດເພື່ອເຜີຍແຜ່ຂໍ້ມູນຂ່າວສານ ແລະ ດໍາເນີນການລົງທະບຽນເຄື່ອນທີ່. ເຖິງຢ່າງໃດກໍ່ຕາມ, ກິດຈະກໍານີ້ພຽງແຕ່ຈັດຕັ້ງປະຕິບັດຢູ່ 34 ໝູ່ບ້ານໃນ 3 ແຂວງພາກໃຕ້ເທົ່ານັ້ນ. ແນະນໍາໃຫ້ລັດຖະບານ ແລະ ຄູ່ຮ່ວມພັດທະນາຂະຫຍາຍກິດຈະກໍາເຄື່ອນທີ່ນີ້ໄປແຂວງອື່ນໆໃນທົ່ວປະເທດເພື່ອໃຫ້ຜູ້ອອກແຮງງານມີໂອກາດເຂົ້າເປັນສະມາຊິກກອງທຶນປະກັນສັງຄົມຫຼາຍຂຶ້ນ.

**ແນະນໍາໃຫ້ຍົກສູງການບັງຄັບໃຊ້ກົດໝາຍ ແລະ ສົ່ງເສີມການປະຕິບັດກົດໝາຍປະກັນສັງຄົມ.** ຄວນແຕ່ງຕັ້ງເຈົ້າໜ້າທີ່ກວດກາປະກັນສັງຄົມ ແລະ ດໍາເນີນການກວດກາເປັນປະຈໍາ ແລະ ໃຫ້ມີມາດຕະການທາງດ້ານກົດໝາຍຕໍ່ຜູ້ລະເມີດ ເຊັ່ນ ການປັບໄໝ. ລັດຖະບານຈໍາເປັນຕ້ອງປັບປຸງກອບນິຕິກໍາ ແລະ ແຜນການຈັດຕັ້ງປະຕິບັດດ້ານການກວດກາປະກັນສັງຄົມເຊັ່ນ: ສ້າງກົດລະບຽບໃນການກວດກາກັບທີ່ໃນບ້ານທີ່ມີຜູ້ອອກແຮງງານໃນທີ່ພັກອາໄສ. ຄວນຈັດສັນງົບປະມານ ແລະ ແຫຼ່ງຊັບພະຍາກອນໃຫ້ພຽງພໍຕໍ່ວຽກງານກວດກາປະກັນສັງຄົມ ແລະ ການຕິດຕາມປະເມີນຜົນ.

**ນອກຈາກນັ້ນ, ຜົນການຄໍານວນຄະນິດສາດຂອງກອງທຶນປະກັນສັງຄົມ ແລະ ປະກັນສຸຂະພາບໄດ້ສະເໜີຂໍ້ແນະນໍາລະອຽດໃນການປ່ຽນແປງອັດຕາເງິນສົມທົບ ແລະ ປັບປຸງລະບົບການຄຸ້ມຄອງບໍລິຫານດ້ານການເງິນ.** ບັນດາຂໍ້ແນະນໍາເຫຼົ່ານີ້ແມ່ນຢູ່ໃນບົດລາຍງານຄໍານວນຄະນິດສາດຂອງທັງສອງກອງທຶນ.

**ຈໍາເປັນຕ້ອງໄດ້ເຊື່ອມສານນິຕິກໍາປະກັນສັງຄົມກັບຂະແໜງການອື່ນເຊັ່ນ: ກົດລະບຽບດ້ານແຮງງານ, ນະໂຍບາຍອາກອນ, ພາກສ່ວນຕາງໜ້າຜູ້ໃຊ້ແຮງງານ ແລະ ອື່ນໆ ແລະ ປັບປຸງນະໂຍບາຍໃນການຫັນແຮງງານນອກລະບົບສູ່ໃນລະບົບ.** ໃນຂະນະທີ່ລັດຖະບານໄດ້ໃຫ້ຄໍາໝັ້ນສັນຍາລະດັບສູງຕໍ່ວຽກງານປົກປ້ອງສັງຄົມນັ້ນ, ຈະສົ່ງຜົນຕໍ່ການຂະຫຍາຍເຂດປົກຄຸມໃຫ້ສູງຂຶ້ນ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປະກັນສັງຄົມ, ຈໍາເປັນຕ້ອງໄດ້ເພີ່ມລະດັບການປະຕິບັດການໃນທຸກລະດັບລວມທັງການພັດທະນາລະບົບໃນຂັ້ນສູນກາງ ແລະ ທ້ອງຖິ່ນ, ການ

## 4.5. ການຈັດຕັ້ງປະຕິບັດເສົາຄໍ້າດ້ານສະຫວັດດີການສັງຄົມແຫ່ງຊາດ

| ເປົ້າໝາຍ: ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສະຫວັດດີການສັງຄົມ |
|---|
| ຈຸດປະສົງ. ຂະຫຍາຍເຂດປົກຄຸມ ແລະ ການບໍລິການ ດ້ານສະຫວັດດີການສັງຄົມສູ່ກຸ່ມເປົ້າໝາຍ. |

**ການພັດທະນາລະບົບປົກປ້ອງສັງຄົມຢູ່ ສປປ ລາວ ຍັງຢູ່ໃນໄລຍະເບື້ອງຕົ້ນ.** ປະຈຸບັນ, ລັດຖະບານໄດ້ເລີ່ມເຫັນໄດ້ເຖິງຄວາມສໍາຄັນຂອງກອງທຶນທີ່ບໍ່ປະກອບເງິນສົມທົບໃນຂົງເຂດສະຫວັດດີການສັງຄົມເປັນພື້ນຖານໃຫ້ແກ່ການຂະຫຍາຍຕົວຂອງເສດຖະກິດແບບທົ່ວເຖິງ. ການຮັບຮູ້ດັ່ງກ່າວອາດເປັນຍ້ອນການສັງເກດນະໂຍບາຍ ແລະ ຂໍ້ລິເລີ່ມຕ່າງໆທີ່ປະຕິບັດຢູ່ປະເທດອ້ອມຂ້າງ. ການແຜ່ລະບາດຂອງໂຄວິດ-19 ເນັ້ນໃຫ້ເຫັນເຖິງຄວາມຈໍາເປັນຂອງການປົກປ້ອງສັງຄົມ ເນື່ອງຈາກພົບເຫັນວ່າ ປະຊາກອນສ່ວນຫຼາຍ ຍັງມີຄວາມບອບບາງ. ເຖິງຢ່າງໃດກໍ່ຕາມ, ມາຮອດປະຈຸບັນນີ້ຍັງບໍ່ທັນມີໂຄງການໃຫ້ອຸດໜູນເງິນສົດແບບເປັນປະຈໍາ ແລະ ເປັນໂຄງການຂະໜາດໃຫຍ່ເທື່ອ.

**ແຜນງານສັງຄົມສົງເຄາະລວມມີການຊ່ວຍເຫຼືອຫຼາຍປະເພດເປັນຕົ້ນແມ່ນການໃຫ້ເງິນອຸດໜູນ ແລະ ການບໍລິການສັງຄົມຕ່າງໆ (ລວມທັງການຊ່ວຍເຫຼືອດ້ານວັດຖຸສິ່ງຂອງ).** ປະຈຸບັນມີແຜນງານໃຫ້ເງິນອຸດໜູນສອງປະເພດທີ່ເປັນຫຼັກ: ໃຫ້ເງິນອຸດໜູນແບບມີເງື່ອນໄຂ ແລະ ແບບບໍ່ມີເງື່ອນໄຂ.

1. ການໃຫ້ເງິນອຸດໜູນແບບມີເງື່ອນໄຂແມ່ນສະໜອງໃຫ້ແກ່ຄົວເຮືອນທີ່ຄົບເງື່ອນໄຂສະເພາະ ແລະ ມີຈຸດປະສົງປັບປຸງຜົນໄດ້ຮັບໃດໜຶ່ງໃນກຸ່ມຊຸມຊົນດ້ອຍໂອກາດ, ສ່ວນຫຼາຍແມ່ນດ້ານການວາງແຜນຄອບຄົວ, ດ້ານສຸຂະພາບ ແລະ ການສຶກສາ. ຕົວຢ່າງ: ກະຊວງກະສິກໍາ ແລະ ປ່າໄມ້ ໄດ້ຮັບທຶນຊ່ວຍເຫຼືອຈາກທະນາຄານໂລກໃນການຈັດຕັ້ງປະຕິບັດໂຄງການໃຫ້ເງິນອຸດໜູນແກ່ແມ່ຍິງ ແລະ ເດັກນ້ອຍຢູ່ເມືອງທີ່ທຸກຍາກທີ່ສຸດ. ເປົ້າໝາຍແມ່ນເພື່ອປັບປຸງໂພຊະນາການໃຫ້ພຽບພໍໃຫ້ແກ່ເດັກໃນຊ່ວງອາຍຸ 1000 ມື້ ແລະ ເປັນການຊ່ວຍເຫຼືອແມ່ຂອງເດັກທີ່ດ້ອຍໂອກາດ. ຜູ້ໄດ້ຮັບຜົນປະໂຫຍດຕ້ອງໄດ້ໄປໃຊ້ບໍລິການປິ່ນປົວສຸຂະພາບ ແລະ ຕ້ອງໄດ້ຮັບການຢ້ຽມຢາມຈາກນັກ

ສັງຄົມສົງເຄາະ. ທັງໝົດນີ້ແມ່ນເພື່ອເປົ້າໝາຍການປັບປຸງດ້ານໂພຊະນະການ ແລະ ການເຂົ້າເຖິງບໍລິການປິ່ນປົວສຸຂະພາບອັນຈຳເປັນພື້ນຖານ.

2. ການໃຫ້ເງິນອຸດໜູນແບບບໍ່ມີເງື່ອນໄຂເປັນການໃຫ້ອຸດໜູນແບບເງິນສົດ ຫຼື ວັດຖຸໃຫ້ແກ່ບຸກຄົນ ຫຼື ຄົວເຮືອນໂດຍບໍ່ຈຳເປັນໃຫ້ຕ້ອງປະຕິບັດໃຫ້ບັນລຸເງື່ອນໄຂໃດໜຶ່ງ. ໂຄງການທົດລອງໃຫ້ອຸດໜູນແມ່ແລະເດັກ (MECG) ແມ່ນໄດ້ສຸມໃສ່ເມືອງທີ່ມີຄວາມທຸກຍາກ ແລະ ບອບບາງກ່ວາໝູ່.

**ນອກນັ້ນ, ຍັງມີໂຄງການດ້ານສະຫວັດດີການສັງຄົມອື່ນໆ ອີກເຊັ່ນ: ໂຄງການອາຫານທ່ຽງໃນໂຮງຮຽນແຫ່ງຊາດ, ເງິນຊ່ວຍເຫຼືອເຫດການສຸກເສີນ ແລະ ການຊ່ວຍເຫຼືອດ້ານວັດຖຸສິ່ງຂອງໃຫ້ແກ່ອະດີດນັກຮົບອາຍຸສູງ, ການບັນເທົາທຸກພາຍຫຼັງໄພພິບັດ (ການຄ້ຳປະກັນສະບຽງອາຫານ), ການບັນເທົາທຸກ ແລະ ວຽກງານສັງຄົມສົງເຄາະ (ຜູ້ຖືກເຄາະຮ້າຍຈາກໄພນ້ຳຖ້ວມ), ກອງທຶນໝູນວຽນສຳລັບການຈັດຊື້ຢາສຳລັບສະຖານທີ່ປິ່ນປົວຢູ່ແຖວກັນດ້ານໜ້າ.** ບັນດາແຜນງານເຫຼົ່ານີ້ ແມ່ນຮູບພາບໂດຍລວມກ່ຽວກັບບັນດາໂຄງການ ແລະ ກິດຈະກຳທີ່ກ່ຽວຂ້ອງກັບການໃຫ້ເງິນອຸດໜູນພາຍໃຕ້ການສົງຄົມສົງເຄາະ (ສຳລັບລາຍລະອຽດ ກ່ຽວກັບ ແຕ່ລະແຜນງານ, ກະລຸນາອ່ານເພີ່ມຕື່ມຢູ່ພາກສະຫຼຸບຄວາມຄືບໜ້າສຳລັບແຕ່ລະກິດຈະກຳດ້ານລຸ່ມ). ໃນໄລຍະການທົບທວນ, ໂຄງການໃຫ້ອາຫານເດັກຢູ່ໂຮງຮຽນມີຄວາມຄືບໜ້າຫຼາຍເຊິ່ງສາມາດເຂົ້າເຖິງເດັກນ້ອຍ 274,774 ຄົນ (137,573 ເດັກຍິງ) ໃນປີ 2023. ການຈັດຕັ້ງປະຕິບັດໂຄງການ ໄດ້ພິສູດໃຫ້ເຫັນວ່າມີປະສິດທິຜົນແທ້ຈິງໃນການເພີ່ມອັດຕາເຂົ້າໂຮງຮຽນ, ປັບປຸງໂພຊະນາການ, ຍົກລະດັບການເຂົ້າ ແລະ ເອົາໃຈໃສ່ ແລະ ສະໜັບສະໜູນການບັນລຸຜົນໄດ້ຮັບດ້ານການສຶກສາ. ເຖິງຢ່າງໃດກໍຕາມ, ຍັງມີຄວາມສຳຄັນທີ່ຕ້ອງຮັບຮູ້ວ່າການປົກຄຸມຂອງແຜນງານຍັງມີຂໍ້ຈຳກັດ ແລະ ການເສີມຂະຫຍາຍຕ້ອງຂຶ້ນກັບການຊ່ວຍເຫຼືອຈາກພາຍນອກ. ເພື່ອຮັບປະກັນໃຫ້ບັນດາຄົວເຮືອນໄດ້ຮັບການຊ່ວຍເຫຼືອແບບຮອບດ້ານເພື່ອແກ້ໄຂຄວາມສ່ຽງ ແລະ ຄວາມບອບບາງກໍຕ້ອງເຊື່ອມສານບັນດາກິດຈະກຳຕ່າງໆເປັນຕົ້ນແມ່ນການໃຫ້ອາຫານທ່ຽງສຳລັບເດັກກັບແຜນງານອື່ນໆເຊັ່ນ: ແຜນງານໂພຊະນາການທີ່ຂຶ້ນກັບກະຊວງສາທາລະນະສຸກ ແລະ ລະບົບການຂຶ້ນທະບຽນຄົວເຮືອນທີ່ທຸກຍາກທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້.

**ໄດ້ມີຄວາມຄືບໜ້າຫຼາກຫຼາຍໃນການຈັດຕັ້ງປະຕິບັດເສົາຄ້ຳສະຫວັດດີການສັງຄົມພາຍໃຕ້ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ.** ເຖິງຈະມີຄວາມຄືບໜ້າສ່ວນໃດສ່ວນໜຶ່ງແລ້ວກໍ່ຕາມ, ຍັງມີຫຼາຍໜ້າວຽກທີ່ຕ້ອງສືບຕໍ່ເຮັດໃຫ້ບັນລຸຜົນໄດ້ຮັບຕື່ມ, ຍັງຂາດການລາຍງານທີ່ເປັນມາດຕະຖານ ແລະ ລະອຽດກ່ຽວກັບການອຸດໜູນໃຫ້ແກ່ຜູ້ສູງອາຍຸ, ຜູ້ທີ່ເສຍອົງຄະ, ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ພ້ອມທັງການເສີມຂະຫຍາຍໂຄງການໃຫ້ອາຫານທ່ຽງໃຫ້ແກ່ເດັກຢູ່ໂຮງຮຽນ ແລະ ການຊ່ວຍເຫຼືອດ້ານການຝຶກອົບຮົມວິຊາຊີບ ແລະ ອາຊີວະສຶກສາເພື່ອພັດທະນາສີມືແຮງງານສຳລັບປະຊາກອນທີ່ບອບບາງ. ຊ່ອງວ່າງດ້ານຂໍ້ມູນດັ່ງກ່າວອາດເປັນຍ້ອນການຂາດຖານຂໍ້ມູນລວມສູນເພື່ອເກັບກຳ ແລະ ອັບເດດຂໍ້ມູນຂ່າວສານແບບທັນການ.

## 4.5.1. ຄວາມຄືບໜ້າຮອດປະຈຸບັນ

**ໃຫ້ບໍລິການ ແລະ ອຸດໜູນແກ່ແມ່ຍິງຖືພາ ແລະ ເດັກນ້ອຍ.**

**ການປົກປ້ອງສັງຄົມສຳລັບເດັກນ້ອຍຢູ່ ສປປ ລາວ ປະກອບມີໂຄງການສຸຂະພາບແມ່, ເດັກເກີດໃໝ່, ແລະ ເດັກ.** ໂຄງການເຫຼົ່ານີ້ລ້ວນແຕ່ມີຈຸດປະສົງໃນການຊ່ວຍເຫຼືອດ້ານສຸຂະພາບໃຫ້ແກ່ເດັກອາຍຸຕ່ຳກວ່າຫ້າປີພ້ອມທັງການຊ່ວຍເຫຼືອດ້ານການສຶກສາ ເປັນຕົ້ນແມ່ນການສຶກສາທີ່ບໍ່ຕ້ອງເສຍຄ່າຮຽນ, ທຶນການສຶກສາ ຫຼື ການໃຫ້ອາຫານທ່ຽງຢູ່ໂຮງຮຽນເພື່ອສົ່ງເສີມອັດຕາການເຂົ້າໂຮງຮຽນ ແລະ ອັດຕາເຂົ້າຮຽນ. ລັດຖະບານມີຄວາມຄືບໜ້າໃນການສະໜອງການບໍລິການ ແລະ ການອຸດໜູນແມ່ຍິງຖືພາ ແລະ ເດັກນ້ອຍໂດຍສຸມໃສ່ການຫຼຸດຜ່ອນອັດຕາການຕາຍ ແລະ ອັດຕາການຕິດເຊື້ອຂອງ ແມ່ ແລະ ເດັກ. ສປປ ລາວ ສາມາດບັນລຸນິຕິນິຕິໝາຍອັນສຳຄັນໃນການສົ່ງເສີມສິດທິຂອງເດັກໃນວັນທີ 17 ກໍລະກົດ 2023 ກໍຄືການຮັບຮອງເອົາກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກນ້ອຍສະບັບປັບປຸງ ໂດຍສະພາແຫ່ງຊາດ. ບັນດາຂໍ້ກຳນົດໃນສະບັບປັບປຸງນັ້ນກວມເອົາການຍົກເວັ້ນຄ່າທຳນຽມໃນການຈົດທະບຽນການເກີດ, ການຫ້າມລົງໂທດເດັກນ້ອຍຂອງພໍ່ແມ່, ຜູ້ປົກຄອງ, ແລະ ອື່ນໆ, ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປົກປ້ອງເດັກໂດຍຜ່ານການພັດທະນາກຳລັງແຮງງານບໍລິການສັງຄົມ (UNICEF 2023a; UNICEF 2023b).

**ອີງຕາມບົດລາຍງານປະຈຳປີ 2022 ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມແມ່ນສາມາດບັນລຸຜົນໄດ້ຮັບ ແລະ ຕົວຊີ້ບອກດັ່ງຕໍ່ໄປນີ້: ເດັກນ້ອຍ 2,325 (ອາຍຸ ລະຫວ່າງ 0-18) ປີ ໄດ້ຮັບການອຸດໜູນເຊິ່ງກວມເອົາ 86.52 ສ່ວນຮ້ອຍ ຂອງເດັກນ້ອຍກຸ່ມເປົ້າໝາຍທັງໝົດ ເຊິ່ງໃນນັ້ນ 61.79 ສ່ວນຮ້ອຍ ແມ່ນຜູ້ຍິງ.** ພ້ອມກັນນັ້ນ, ປະຊາຊົນດ້ອຍໂອກາດຈຳນວນ 5,717 ຄົນ ໄດ້ຮັບການອຸດໜູນສັງຄົມສົງເຄາະ ເຊິ່ງກວມເອົາ 80.7 ສ່ວນຮ້ອຍ ຂອງ ປະຊາກອນກຸ່ມເປົ້າໝາຍ ໃນນັ້ນ 38.63 ສ່ວນຮ້ອຍ ແມ່ນຜູ້ຍິງ.

**ໂຄງການໃຫ້ອຸດໜູນແກ່ແມ່ຍິງຖືພາ ແລະ ເດັກ (MECG) ທີ່ໄດ້ຮັບການສະໜັບສະໜູນຈາກຜູ້ໃຫ້ທຶນໃນ 46 ໝູ່ບ້ານຂອງເມືອງນອງ ແຂວງສະຫວັນນະເຂດ ແລະ ເມືອງສະໝາມໄຊ, ແຂວງອັດຕະປື ເຊິ່ງໄດ້ໃຫ້ອຸດໜູນແບບເງິນສົດໃຫ້ແກ່ ຜູ້ໄດ້ຮັບຜົນປະໂຫຍດຈຳນວນ 2,596 ຄົນ ໃນປີ 2021[16].** ໂຄງການດັ່ງກ່າວໄດ້ສຸມໃສ່ແມ່ຍິງຖືພາ ແລະ

ເດັກນ້ອຍ ໂດຍມີຈຸດປະສົງປັບປຸງການເຂົ້າເຖິງການບໍລິການສັກຢາກັນພະຍາດ, ການຝາກທ້ອງກ່ອນ ແລະ ຫຼັງເກີດ, ແລະ ການປົກປ້ອງເດັກ. ມີແມ່ຍິງຖືພາຈຳນວນ 529 ຄົນ ແລະ ເດັກອາຍຸຕ່ຳກວ່າຫົກເດືອນ 453 ຄົນທີ່ໄດ້ຮັບຜົນປະໂຫຍດ, ນອກຈາກນັ້ນແມ່ນເດັກ ອາຍຸ 6 ຫາ 12 ເດືອນ. ນອກນັ້ນ, ໂຄງການກໍໄດ້ສະໜັບສະໜູນບ້ານ SOS 6 ແຫ່ງທີ່ແນໃສ່ການຊ່ວຍເຫຼືອເດັກນ້ອຍກຳພ້າທີ່ດ້ອຍໂອກາດດ້ອຍການສະໜອງການຝຶກອົບຮົມວິຊາຊີບ ແລະ ອາຊີວະສຶກສາ ແລະ ກາລະໂອກາດໃນການຈ້າງງານ. ຈຸດປະສົງໂດຍລວມແມ່ນເພື່ອຊ່ວຍເຫຼືອບຸກຄົນທີ່ມີຄວາມຕ້ອງການ ຈຳນວນ 1,231 ຄົນ ໂດຍສະເພາະແມ່ນຜູ້ຊາຍໄວໜຸ່ມ 929 ຄົນທີ່ມີຄວາມສ່ຽງທີ່ຈະຖືກຄ້າມະນຸດ. ໂຄງການໃຫ້ອຸດໜູນແມ່ຍິງຖືພາ ແລະ ເດັກ ໄດ້ປະສົບຜົນສຳເລັດໃນການສົ່ງເສີມການນຳໃຊ້ການບໍລິການຝາກທ້ອງກ່ອນ ແລະ ຫຼັງເກີດລູກ ເຊິ່ງເປັນການສ້າງຜົນກະທົບດ້ານບວກຕໍ່ກັບຊີວິດຂອງແມ່ຍິງ ຢູ່ ເຂດຊົນນະບົດຂອງ ສປປ ລາວ.

**ໃນປີ 2021, ໂຄງການໃຫ້ເງິນອຸດໜູນແບບມີເງື່ອນໄຂຂອງກະຊວງກະສິກຳ ແລະ ປ່າໄມ້ ໄດ້ເລີ່ມເບີກຈ່າຍເງິນອຸດໜູນຈຳນວນ 150,000 ກີບຕໍ່ຄົນໃຫ້ແກ່ແມ່ຍິງຖືພາ ແລະ ລູກນ້ອຍທັງໝົດ 10,000 ຄົນ ໃນ 12 ເມືອງຂອງທັງໝົດ 4 ແຂວງພາກເໜືອ (ແຂວງເປົ້າໝາຍຂອງແຜນງານໜຶ່ງດຽວດ້ານໂພຊະນະການ).** ໂຄງການມີຈຸດປະສົງບັນລຸເປົ້າໝາຍໃນການປັບປຸງການກິນອາຫານແບບຫຼາກຫຼາຍ, ການເພີ່ມການນຳໃຊ້ການບໍລິການສຸຂະພາບ ແລະ ໂພຊະນາການຂັ້ນພື້ນຖານທີ່ຈຳເປັນ, ແລະ ສົ່ງເສີມພຶດຕິກຳທີ່ດີດ້ານສຸຂະພາບ ແລະ ໂພຊະນາການຂອງເດັກນ້ອຍທີ່ມີຄວາມສ່ຽງ. ຮອດປີ 2022, ໂຄງການນີ້ໄດ້ບັນລຸຜົນສຳເລັດໂດຍໄດ້ປະກອບສ່ວນຕໍ່ການຫລຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນະການ, ໄດ້ປັບປຸງພຶດຕິກຳດ້ານໂພຊະນະການ ແລະ ສົ່ງເສີມການຮ່ວມມືປະສານງານໃນຂອບເຂດທົ່ວປະເທດ. ການໃຫ້ອຸດໜູນໂຄງການນີ້ແມ່ນແບບມີເງື່ອນໄຂ, ໝາຍຄວາມວ່າຜູ້ໄດ້ຮັບຜົນປະໂຫຍດຕ້ອງໄດ້ປ່ຽນພຶດຕິກຳຕາມການກຳນົດໄວ້ເບື້ອງຕົ້ນ. ການກຳນົດເປົ້າໝາຍແມ່ນອີງໃສ່ວິທີການສຳຫລວດມາດຖານຄວາມທຸກຍາກ ແລະ ຖານຂຶ້ນທະບຽນສັງຄົມ. ຜູ້ໄດ້ຮັບຜົນປະໂຫຍດສາມາດເລືອກວິທີການຮັບເງິນອຸດໜູນເປັນເງິນສົດ ຫຼື ຜ່ານລະບົບດິຈິຕອນໄດ້. ໂຄງການມີຈຸດປະສົງຢາກບັນລຸການຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນາການຢູ່ເຂດຊົນນະບົດ, ໂດຍສະເພາະແມ່ນໃນໄລຍະ 1000 ມື້ ທີ່ສຳຄັນຂອງພັດທະນາການໃນເດັກ.

**ແຜນງານລຶບລ້າງຄວາມທຸກຍາກ ແລະ ສົ່ງເສີມໂພຊະນະການໃນຊົນນະບົດແມ່ນໄດ້ຮັບການສະໜັບສະໜູນຈາກຖານການຂຶ້ນທະບຽນສັງຄົມທີ່ພັດທະນາຂຶ້ນໂດຍທະນາຄານໂລກ.** ຖານຂໍ້ມູນດັ່ງກ່າວລວມມີຂໍ້ມູນດ້ານຄົວເຮືອນໃນທົ່ວປະເທດ ແລະ ຄາດວ່າບັນດາກະຊວງ ແລະ ຄູ່ຮ່ວມພັດທະນາທັງໝົດຈະໃຊ້ຖານນີ້ເພື່ອກຳນົດເປົ້າໝາຍຜູ້ທຸກຍາກໃນທົ່ວປະເທດ. ເຖິງຢ່າງໃດກໍ່ຕາມ, ຖານຂໍ້ມູນນີ້ຍັງເປັນແບບຄົງທີ່ (static) ແລະ ຍັງບໍ່ທັນເຫັນໄດ້ຢ່າງຈະແຈ້ງວ່າຈະສາມາດປັບປຸງຂໍ້ມູນແບບເປັນປົກກະຕິໄດ້ແນວໃດເພື່ອໃຫ້ສອດຄ່ອງກັບການເຄື່ອນຍ້າຍຂອງປະຊາກອນໃນກຸ່ມຜູ້ທຸກຍາກ ແລະ ນອກລະບົບ.

**ໃນຊຸມປີຜ່ານມາ, ອົງການ WFP ກໍໄດ້ໃຫ້ເງິນອຸດໜູນ ໃຫ້ແກ່ປະຊາຊົນຈຳນວນ 15,871 ຄົນ (2,665 ຄອບຄົວ)**, ໂດຍທີ່ແນໃສ່ແມ່ຍິງຖືພາ, ແມ່, ຜູ້ເບິ່ງແຍງດູແລເດັກນ້ອຍລະຫວ່າງ 6-59 ເດືອນ, ຜູ້ຍິງໄວໜຸ່ມ-ໄວຈະເລີນພັນ, ຜູ້ເສຍອົງຄະ ແລະ ຄົວເຮືອນທີ່ມີຜູ້ຍິງເປັນຫົວໜ້າຄອບຄົວເປັນຫຼັກ. ຜູ້ໄດ້ຮັບຜົນປະໂຫຍດກໍ່ໄດ້ເຂົ້າຮ່ວມກິດຈະກຳໃຫ້ຂໍ້ມູນຂ່າວສານ ແລະ ຍົກລະດັບຄວາມຮູ້ກ່ຽວກັບການຊື້ອາຫານທີ່ມີຄຸນຄ່າດ້ານໂພຊະນາການ.

**ອົງການ NGO ກໍ່ໄດ້ມີການຈັດຕັ້ງປະຕິບັດໂຄງການປົກປ້ອງສັງຄົມໃນຊຸມປີທີ່ຜ່ານມາແຕ່ກໍຍັງພົບພໍກັບຂໍ້ຈຳກັດ.** ໃນນັ້ນປະກອບມີ ອົງການ Oxfam, ອົງການ Humanity & Inclusion, ແລະ ອົງການ Save the Children. Oxfam ໄດ້ຮ່ວມມືກັບ ສະຫະພັນກຳມະບານລາວ ແລະ ຄູ່ຮ່ວມງານຂັ້ນທ້ອງຖິ່ນເຊັ່ນ: ສະມາຄົມສົ່ງເສີມແຮງງານນອກລະບົບເພື່ອສະໜັບສະໜູນການປົກປ້ອງທາງສັງຄົມໃຫ້ແກ່ແຮງງານທີ່ຖືກກີດກັ້ນໂດຍສະເພາະແມ່ນແມ່ຍິງ. ອົງການ HI ກໍ່ໄດ້ເຮັດວຽກຮ່ວມບັນດາອົງການຈັດຕັ້ງທີ່ຊ່ວຍເຫຼືອຄົນທີ່ມີຄວາມພິການເພື່ອເສີມຂະຫຍາຍການໃຫ້ບໍລິການລວມທັງວຽກປົກປ້ອງສັງຄົມ ແລະ ການສົ່ງເສີມການສຶກສາແບບທົ່ວເຖິງ. ສ່ວນ Save the Children ກໍ່ມີໂຄງການກ່ຽວຂ້ອງຈຳນວນໜຶ່ງທີ່ສຸມໃສ່ການປົກປ້ອງເດັກນ້ອຍສະເພາະຢູ່ ແຂວງ ໄຊຍະບູລີ ແລະ ຫຼວງພະບາງ.

## ການໃຫ້ບໍລິການ ແລະ ອຸດໜູນໃຫ້ແກ່ຜູ້ພິການ ແລະ ຜູ້ລອດຊີວິດ ຈາກ ລະເບີດຕົກຄ້າງ

**ມີບັນດາຂໍ້ລິເລີ່ມທີ່ສຳຄັນທີ່ໄດ້ຈັດຕັ້ງປະຕິບັດເພື່ອສະໜັບສະໜູນຜູ້ພິການ ແລະ ຜູ້ທີ່ຖືກຜົນກະທົບຈາກລະເບີດຕົກຄ້າງ.** ລັດຖະບານໄດ້ຈັດຕັ້ງປະຕິບັດບັນດາກົດໝາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງກັບຄົນທີ່ມີຄວາມພິການເຊັ່ນ: ສິດໃນການເຂົ້າເຖິງການຈ້າງງານທີ່ເປັນທຳ ແລະ ມີຄວາມໝາຍ ແລະ ການເຂົ້າເຖິງການບໍລິການພື້ນຖານທີ່ຈຳເປັນ. ເພື່ອປະຕິບັດກົດໝາຍວ່າດ້ວຍຄົນທີ່ມີຄວາມພິການສະບັບ 2019 ແລະ ສົ່ງເສີມຄວາມສະເໝີພາບ ກໍ່ໄດ້ມີການຈັດບັນດາກອງປະຊຸມສຳມະນາຢູ່ທຸກລະດັບ ເພື່ອໂຄສະນາເຜີຍແຜ່, ລຶບລ້າງການຈຳແນກ ແລະ ປັບປຸງການເຂົ້າເຖິງ. ນອກນັ້ນ, ກໍໄດ້ສ້າງຮ່າງດຳລັດວ່າດ້ວຍກອງທຶນເພື່ອຄົນທີ່ມີຄວາມພິການເພື່ອເສີມຂະຫຍາຍ ແລະ ຍົກລະດັບການ

16 ຜູ້ໄດ້ຮັບຜົນປະໂຫຍດຈະໄດ້ຮັບເງິນອຸດໜູນຈຳນວນ 150,000ກີບຕໍ່ເດືອນ ແລະ ວິທີການຈ່າຍແມ່ນ 2 ເດືອນເທື່ອໜຶ່ງ ເຊິ່ງເທົ່າກັບ 300,000 ກີບ ໂດຍຈ່າຍຜ່ານ U-Money ແລະ ຈ່າຍເປັນເງິນສົດໃຫ້ຜູ້ໄດ້ຮັບຜົນປະໂຫຍດທີ່ບ້ານໂດຍພະນັກງານຂອງບໍລິສັດສະຕາຟິນເທັກ.

ບໍລິການຟື້ນຟູໜ້າທີ່ການພ້ອມທັງສະໜອງການຊ່ວຍເຫຼືອແບບມີປະສິດທິຜົນ. ຄຽງຄູ່ກັນນັ້ນ, ກໍ່ໄດ້ມີການສ້າງຕັ້ງຄະນະກໍາມະການແຫ່ງຊາດເພື່ອຜູ້ພິການ (NCDE).

**ຍຸດທະສາດ ແລະ ແຜນດໍາເນີນງານແຫ່ງຊາດສໍາລັບຜູ້ພິການ ໄດ້ຖືກສ້າງ ແລະ ຮັບຮອງເອົາໃນປີ 2020.** ຈຸດປະສົງຂອງ ຍຸດທະສາດແມ່ນການຍົກລະດັບສິດທິ ແລະ ຊີວິດການເປັນຢູ່ຂອງຜູ້ພິການໂດຍສອດຄ່ອງ ແລະ ສະໜັບສະໜູນວາລະການພັດທະນາລະດັບຊາດ. ຍຸດທະສາດສະບັບນີ້ຖືກຂັບເຄື່ອນດ້ວຍຫຼັກການພື້ນຖານທີ່ກ່ຽວຂ້ອງກັບຜູ້ພິການ. ບໍ່ວ່າຈະເປັນພາກສ່ວນໃດກໍຕາມ, ບຸກຄົນ, ພາກລັດ ຫຼື ພາກເອກະຊົນ, ສານ, ອົງການປົກຄອງທຸກຂັ້ນ, ສະພາແຫ່ງຊາດ, ຫຼື ນິຕິບຸກຄົນ ຕ້ອງພິຈາລະນາຄວາມຕ້ອງການ ແລະ ຜົນປະໂຫຍດ ຂອງຜູ້ພິການ. ພ້ອມນັ້ນ, ຍຸດທະສາດຍັງໄດ້ຮັບຮູ້ກ່ຽວກັບຄວາມສໍາຄັນຂອງການສົ່ງເສີມການມີສ່ວນຮ່ວມແບບກວມລວມທົ່ວເຖິງ ແລະ ການເຊື່ອມສານໃນຂະນະທີ່ຮັບຮູ້ວ່າ ວິທີການສະເພາະເຈາະຈົງຄວນຖືກພິຈາລະນາເປັນທາງເລືອກສຸດທ້າຍເທົ່ານັ້ນ.

**ຍິ່ງໄປກວ່ານັ້ນ, ກໍມີການຈ່າຍຊົດເຊີຍ ແລະ ການຊ່ວຍເຫຼືອຫຼາຍຮູບແບບໃຫ້ແກ່ຜູ້ພິການຈາກເຫດການລະເບີດຕົກຄ້າງ.** ການຊ່ວຍເຫຼືອດັ່ງກ່າວກວມເອົາການຝຶກອົບຮົມວິຊາຊີບ ແລະ ການຊ່ວຍເຫຼືອເພື່ອຊອກຫາວຽກເຮັດງານທໍາ. ນອກນັ້ນ, ອີງຕາມບົດລາຍງານປະຈໍາປີຂອງ ກຊ ຮສສ ປີ 2022, ລັດຖະບານໄດ້ອໍານວຍຄວາມສະດວກໃຫ້ແກ່ການປິ່ນປົວສຸຂະພາບສໍາລັບຜູ້ລອດຊີວິດຈາກລະເບີດຕົກຄ້າງຈໍານວນ 199 ຄົນ ແລະ ສະໜອງການບໍລິການຟື້ນຟູໜ້າທີ່ການ ໃຫ້ແກ່ 41,295 ຄົນທີ່ຖືກກະທົບ. ລັດຖະບານແຫ່ງ ສປປ ລາວ ໄດ້ຮັບການສະໜັບສະໜູນຈາກໂຄງການ ໂອກາດ ໄດ້ໃຫ້ການຊ່ວຍເຫຼືອໂດຍກົງແກ່ຜູ້ຮັບເຄາະຮ້າຍຈາກລະເບີດຕົກຄ້າງເຊິ່ງລວມມີການຝຶກອົບຮົມດ້ານການສ້າງວຽກເຮັດງານທໍາ, ການເຂົ້າເຖິງບໍລິການປິ່ນປົວສຸຂະພາບ ແລະ ຟື້ນຟູໜ້າທີການ. ໂຄງການຍັງໄດ້ສະໜັບສະໜູນອຸປະກອນຄໍ້າຊູ ໃຫ້ແກ່ກະຊວງສາທາລະນະສຸກ ແລະ ບຸກຄົນທີ່ພິການອີກ.

**ການໃຫ້ເງິນອຸດໜູນແກ່ເດັກນ້ອຍທີ່ມີຄວາມພິການຢູ່ເມືອງແປກ ແລະ ເມືອງຄູນ ແຂວງຊຽງຂວາງ ທີ່ຈັດຕັ້ງປະຕິບັດໂດຍ ກຊ ຮສສ** ໂດຍໄດ້ຮັບການສະໜັບສະໜູນຈາກອົງກອນ UNICEF ໄດ້ໃຫ້ເງິນອຸດໜູນ ແລະ ອຸປະກອນຄໍ້າຊູໃຫ້ແກ່ 497 ຄົນ ທີ່ພິການ, ການຊ່ວຍເຫຼືອດ້ານຟື້ນຟູຈິດໃຈ ແລະ ການສົ່ງຕໍ່. ໂຄງການຍັງມີເປົ້າໝາຍໃນການຍົກລະດັບລະບົບປົກປ້ອງເດັກ, ໄດ້ນໍາໃຊ້ລະບົບຄຸ້ມຄອງຂໍ້ມູນຂ່າວສານແບບເປີດເພື່ອບັນທຶກຂໍ້ມູນຜູ້ໄດ້ຮັບຜົນປະໂຫຍດ. ນອກນັ້ນ ອົງການ UNICEF ຍັງໄດດໍາເນີນການສຶກສາເພື່ອເປັນຫຼັກຖານໃນການຕັດສິນນະໂຍບາຍ.

## ການບໍລິການ ແລະ ການອຸດໜູນຜູ້ສູງອາຍຸ

**ປະຈຸບັນນີ້ ຍັງມີຂໍ້ມູນຈໍາກັດກ່ຽວກັບຄວາມຄືບໜ້າຂອງການໃຫ້ບໍລິການ ແລະ ອຸດໜູນຜູ້ສູງອາຍຸ, ເຖິງວ່າມີນະໂຍບາຍກໍຕາມ.** ສິ່ງທີ່ຄົ້ນພົບແມ່ນການຂາດຂໍ້ມູນຂ່າວສານກ່ຽວກັບ ການຈັດຕັ້ງປະຕິບັດກິດຈະກໍາທີ່ມີຈຸດປະສົງຊ່ວຍເຫຼືອຜູ້ສູງອາຍຸ. ເຖິງວ່າບົດລາຍງານຂອງ ກຊ ຮສສ ປະຈໍາປີ 2022 ໄດ້ຍົກໃຫ້ເຫັນກ່ຽວກັບນະໂຍບາຍທີ່ມີຢູ່ເພື່ອປົກປ້ອງຊີວິດການເປັນຢູ່ ແລະ ສິດຂອງຜູ້ສູງອາຍຸກໍຕາມ, ໜ້າເສຍດາຍທີ່ສະພາບຕົວຈິງ, ຜູ້ສູງອາຍຸຍັງບໍ່ທັນໄດ້ຮັບການຊ່ວຍເຫຼືອໃນລະດັບດີເທົ່າທີ່ຄວນ.

**ການທົບທວນຄັ້ງນີ້ກໍ່ຍົກໃຫ້ເຫັນເຖິງແຜນງານການໃຫ້ເງິນອຸດໜູນ ແລະ ຊ່ວຍເຫຼືອດ້ານວັດຖຸສິ່ງຂອງໃຫ້ແກ່ອະດີດນັກຮົບສູງອາຍຸ.** ເພື່ອເຂົ້າເຖິງການຊ່ວຍເຫຼືອດັ່ງກ່າວ, ບັນດາອະດີດນັກຮົບຕ້ອງນໍາສົ່ງເອກະສານສະໝັກໃຫ້ແກ່ອົງການທີ່ກ່ຽວຂ້ອງທີ່ມີເຄືອຂ່າຍໃຫ້ບໍລິການໃນຂອບເຂດທົ່ວປະເທດ. ບັນດາຫ້ອງການແຮງງານ ແລະ ສະຫວັດດີການເມືອງເປັນຜູ້ໃຫ້ບໍລິການ. ຖ້າເອກະສານຜ່ານ, ອະດີດນັກຮົບຜູ້ສູງອາຍຸກໍ່ສາມາດເຂົ້າເຖິງເງິນອຸດໜູນປະຈໍາເດືອນເທົ່າກັບ 70 ສ່ວນຮ້ອຍ ຂອງເງິນເດືອນສຸດທ້າຍ. ມູນຄ່າຂອງເງິນອຸດໜູນແມ່ນປະມານລະຫວ່າງ 1.2 - 2 ລ້ານກີບ.

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ກໍາລັງສ້າງແຜນດໍາເນີນງານເພື່ອປົກປ້ອງຜູ້ສູງອາຍຸ.** ປະຈຸບັນ, ກໍໄດ້ສ້າງນະໂຍບາຍ ແລະ ຄະນະກໍາມະການລະດັບຊາດເພື່ອຜູ້ສູງອາຍຸໂດຍໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມງານສາກົນ. ນາຍົກລັດຖະມົນຕີ ໄດ້ຮັບຮອງເອົາ ດໍາລັດວ່າດ້ວຍນະໂຍບາຍແຫ່ງຊາດ ເພື່ອຜູ້ສູງອາຍຸຢູ່ ສປປ ລາວ ໂດຍມີຈຸດປະສົງປົກປັກຮັກສາການປະກອບສ່ວນອັນລໍ້າຄ່າຂອງອະດີດນັກຮົບ-ນັກປະຕິວັດຈາກທຸກກຸ່ມຊົນເຜົ່າທີ່ໄດ້ຕໍ່ສູ້ເພື່ອຍາດແຍ່ງເອົາເອກະລາດ ແລະ ປະກອບສ່ວນເຂົ້າໃນວຽກງານພັດທະນາປະເທດ. ນອກນັ້ນ, ດໍາລັດກໍ່ມີຈຸດປະສົງໃຫ້ການຊ່ວຍເຫຼືອ ແລະ ເບິ່ງແຍງດູແລ, ທັງດ້ານວັດຖຸ ແລະ ຈິດໃຈໃຫ້ແກ່ຜູ້ສູງອາຍຸທີ່ມີຄວາມຈໍາເປັນຢູ່ທຸກພາກສ່ວນຂອງສັງຄົມລວມທັງພາກລັດ ແລະ ພາກເອກະຊົນ, ຄອບຄົວ ແລະ ຊຸມຊົນ ເພື່ອຮັບປະກັນໃຫ້ຜູ້ສູງອາຍຸສາມາດສືບຕໍ່ປະກອບສ່ວນໃຫ້ແກ່ປະເທດຊາດ ແລະ ຖ່າຍທອດປະເພນີ ແລະ ວັດທະນາທໍາອັນດີງາມໃຫ້ແກ່ຮຸ່ນຕໍ່ໄປ.

## ການໃຫ້ບໍລິການ ແລະ ອຸດໜູນຜູ້ຖືກເຄາະຮ້າຍຈາກໄພພິບັດທໍາມະຊາດ ແລະ ໄພພິບັດທີ່ສ້າງຂຶ້ນໂດຍມະນຸດ

**ພາຍໃຕ້ແຜນງານຊ່ວຍເຫຼືອ ແລະ ບັນເທົາໄພພິບັດແຫ່ງຊາດ, ຄະນະກໍາມະການຄວບຄຸມ ແລະ ປ້ອງກັນໄພພິບັດແຫ່ງຊາດ ແລະ ຂັ້ນແຂວງ ໄດ້ເຮັດພາລະກິດຢ່າງເຕັມທີ່ໃນການຮັບມືກັບໄພນໍ້າຖ້ວມຕັ້ງແຕ່ ເດືອນກັນຍາ ປີ 2019 ເປັນຕົ້ນມາ ໂດຍໄດ້ສ້າງແຜນຍົກຍ້າຍຜູ້ໄດ້ຮັບຜົນກະທົບ, ຊ່ວຍຊີວິດ ແລະ ຊ່ວຍເຫຼືອບັນເທົາທຸກແກ່ຜູ້ໄດ້ຮັບຜົນ**

**ກະທົບ.** ອີງຕາມຂໍ້ມູນຂອງບົດລາຍງານປະຈຳປີ 2022 ຂອງ ກຊ ຮສສ, ເຫັນວ່າມີຄວາມຄືບໜ້າພໍສົມຄວນໃນການບັນລຸເປົ້າໝາຍເພື່ອຈັດສັນງົບປະມານໄປຊ່ວຍເຫຼືອຜູ້ຖືກເຄາະຮ້າຍຢູ່ 50 ເມືອງ ພາຍໃນ 9 ແຂວງ ທີ່ຖືກກະທົບດ້ວຍໄພພິບັດຕ່າງໆ. ພ້ອມນັ້ນ, ກໍ່ເຫັນວ່າໄດ້ໃຫ້ການຊ່ວຍເຫຼືອພໍສົມຄວນດ້ວຍການແຈກຢາຍເຂົ້າຈຳນວນ 2,992 ໂຕນ ໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດ 81,250 ຄົນ. ນອກນັ້ນ, ກໍ່ມີຄວາມພະຍາຍາມເພື່ອຊ່ວຍເຫຼືອຜູ້ຖືກຜົນກະທົບຈາກບັນດາໄພພິບັດເປັນຕົ້ນແມ່ນການສະໜອງເຄື່ອງອຸປະໂພກ-ບໍລິໂພກ ເຊິ່ງສາມາດເຂົ້າເຖິງ 42,920 ຄົນ ທີ່ມີຄວາມຕ້ອງການ. ຄູ່ຮ່ວມພັດທະນາກໍ່ໄດ້ສືບຕໍ່ຂະຫຍາຍບໍລິການ ແລະ ຊຸດອຸດໜູນໃຫ້ແກ່ຜູ້ໄດ້ຮັບເຄາະຮ້າຍຈາກໄພພິບັດ ໂດຍຜ່ານຊ່ອງທາງຕ່າງໆ.

**ລະຫວ່າງ ປີ 2021-2022 ພາຍຫລັງການແຜ່ລະບາດຂອງພະຍາດ ໂຄວິດ-19, ອົງການ FAO ໄດ້ສະໜັບສະໜູນການຈັດຕັ້ງປະຕິບັດໂຄງການເພື່ອຊ່ວຍເຫຼືອ ແລະ ບັນເທົາທຸກພາຍຫຼັງໄພພິບັດໃຫ້ແກ່ຄອບຄົວທີ່ບອບບາງ.** ຈຸດປະສົງຕົ້ນຕໍແມ່ນເພື່ອປົກປ້ອງບຸກຄົນດັ່ງກ່າວພ້ອມທັງຊີວິດການເປັນຢູ່ຂອງເຂົາເຈົ້າກໍຄືການຜະລິດກະສິກໍາ. ພ້ອມນັ້ນ, ໂຄງການກໍໄດ້ສຸມໃສ່ການສ້າງຄວາມເຂັ້ມແຂງ ໃຫ້ແກ່ຊາວກະສິກອນຂະໜາດນ້ອຍ ແລະ ອົງການປົກຄອງຂັ້ນທ້ອງຖິ່ນຢູ່ ແຂວງຫຼວງພະບາງ ແລະ ອຸດົມໄຊ. ອັນນີ້ກໍເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດ ໂຄວິດ-19 ແລະ ຫຼຸດຜ່ອນຜົນກະທົບດ້ານເສດຖະກິດ ແລະ ສັງຄົມ. ປະຈຸບັນ, ຍ້ອນມີຂໍ້ຈຳກັດດ້ານຂໍ້ມູນຂ່າວສານ ແລະ ຂໍ້ມູນການຈົດທະບຽນ, ກໍ່ຈຳເປັນຕ້ອງນຳໃຊ້ວິທີການແບບກວມລວມ. ອັນນີ້ໝາຍຄວາມວ່າການຊ່ວຍເຫຼືອແມ່ນສະໜອງໃຫ້ທຸກຄົນແທນທີ່ຈະໃຫ້ບຸກຄົນ ແລະ ຄົວເຮືອນທີ່ມີຄວາມຕ້ອງການສະເພາະ. ການຊ່ວຍເຫຼືອມີພື້ນທີ່ເປົ້າໝາຍຢູ່ 55 ບ້ານ ທີ່ມີຫຼາຍກວ່າ 7,000 ຄົວເຮືອນ. ໃນນັ້ນ, 3,000 ຄົວເຮືອນກໍ່ໄດ້ຮັບເງິນອຸດໜູນເພື່ອຊ່ວຍຊອກຫາວຽກເຮັດງານທຳ ແລະ ອີກ 4,000 ຄົວເຮືອນ ກໍ່ຖືກສົ່ງເສີມໃຫ້ນຳໃຊ້ວິທີການຜະລິດກະສິກຳທີ່ດີ. ໂດຍລວມແລ້ວ, ປະມານ 37,100 ຄົນ ແລະ 10 ກຸ່ມຮ່ວມມືການຜະລິດໄດ້ຮັບຜົນປະໂຫຍດຈາກໂຄງການດັ່ງກ່າວ.

**ບັນດາຄູ່ຮ່ວມພັດທະນາເຊັ່ນ: WFP, FAO, ILO ແລະ UNICEF ໄດ້ຮ່ວມມືກັນເພື່ອດຳເນີນການສຶກສາແບບຮອບດ້ານ.** ເປົ້າໝາຍຫຼັກແມ່ນເພື່ອຍົກລະດັບຂີດຄວາມສາມາດ ແລະ ການເສີມຂະຫຍາຍມາດຕະການຄາດຄະເນລ່ວງໜ້າ ໂດຍທີ່ສຸມໃສ່ການພັດທະນາລະບົບປົກປ້ອງສັງຄົມທີ່ສາມາດຮັບມືກັບເຫດກະທົບສະເພາະ ແລະ ສາມາດແກ້ໄຂຮັບມືກັບເຫດກະທົບ ແລະ ວິກິດການຢ່າງມີປະສິດທິຜົນ. ການສຶກສາຄັ້ງນີ້ມີຈຸດປະສົງລະບຸປັດໄຈທີ່ສຳຄັນທີ່ຈະເອື້ອອຳນວຍໃຫ້ລະບົບປົກປ້ອງສັງຄົມແຫ່ງຊາດສາມາດຕອບໂຕ້ກັບເຫດກະທົບຕ່າງໆ. ໃນຂະນະທີ່ການສຶກສາໄດ້ພົບເຫັນວ່າມີຂໍ້ຈຳກັດໃນການຈັດຕັ້ງປະຕິບັດແຜນງານປົກປ້ອງສັງຄົມທີ່ສາມາດຮັບມືກັບເຫດກະທົບກໍຕາມ, ສິ່ງທີ່ສຳຄັນທີ່ຕ້ອງເນັ້ນໜັກແມ່ນການຂະຫຍາຍອັດຕາການປົກຄຸມຂອງການປົກປ້ອງສັງຄົມເພື່ອສ້າງຄວາມເຂັ້ມແຂງທົນທານໃຫ້ແກ່ຜູ້ທີ່ທຸກຍາກຢູ່ເຂດຊົນນະບົດທີ່ປະເຊີນໜ້າກັບຄວາມສ່ຽງດ້ານການປ່ຽນແປງດິນຟ້າອາກາດ. ອີກໜຶ່ງໃນຜົນສຳເລັດຂອງໂຄງການແມ່ນການຈັດຕັ້ງປະຕິບັດການປະເມີນໄພອັນຕະລາຍ, ຄວາມ

► **ກ່ອງ 3. ການກິນອາຫານ ທີ່ມີໂພຊະນາການ ຢູ່ ໂຮງຮຽນນາຊຽງດີ, ເມືອງ ຮູ້ນ, ແຂວງອຸດົມໄຊ**



© Lee Sipaseuth/WFP

ຮູບພາບໂດຍ: WFP/ລີ່ ສີປະເສີດ

ສອງເອື້ອຍນ້ອງ ຈຳປາ ແລະ ກິ່ງ ດຳລົງຊີວິດຢູ່ບ້ານຫ່າງໄກສອກຫຼີກຢູ່ພາກເໜືອ ຂອງ ລາວ. ແມ່ຂອງເຂົາເຈົ້າແມ່ນຊາວກະສິກອນ, ເປັນແມ່ລ້ຽງດ່ຽວທີ່ເຮັດວຽກໜັກເພື່ອລ້ຽງຄອບຄົວ. ຈຳປາ ແລະ ກິ່ງ ເຄີຍໃຊ້ເວລາຍ່າງໄປໂຮງຮຽນເປັນຊົ່ວໂມງ ເວລາໄປຮອດກໍ່ຫອບເມື່ອຍ ແລະ ຫິວເຂົ້າ. ປະຈຸບັນ, ທັງສອງກໍ່ໂຊກດີທີ່ສາມາດເຂົ້າເຖິງໂຄງການອາຫານທ່ຽງຢູ່ໂຮງຮຽນ ໂດຍຜ່ານແຜນງານທີ່ແນໃສ່ການໃຫ້ອາຫານທີ່ຄົບໂພຊະນາການໃຫ້ແກ່ນັກຮຽນໃນທຸກມື້. ໂຮງຮຽນປະຖົມນາຊຽງດີ ເປັນໜຶ່ງໃນ 515 ໂຮງຮຽນ ທີ່ລັດຖະບານແຫ່ງ ສປປ ລາວ ໄດ້ສະເໜີໃຫ້ອົງການ WFP ຊ່ວຍເຫຼືອໃນປີ 2016 ເພື່ອລິເລີ່ມໂຄງການໃຫ້ອາຫານທ່ຽງ. ຕັ້ງແຕ່ປີ 2019, ໂຄງການກໍໄດ້ສືບຕໍ່ຈັດຕັ້ງປະຕິບັດໂດຍການຮ່ວມມືກັນລະຫວ່າງໂຮງຮຽນ ແລະ ຊຸມຊົນ ໂດຍທີ່ບໍ່ມີການຊ່ວຍເຫຼືອໂດຍກົງຈາກອົງການອາຫານໂລກແລ້ວ. ຍັງຖືວ່າເປັນໂຄງການທີ່ເຂັ້ມແຂງທີ່ສະໜອງອາຫານສົດໆຮ້ອນໆໃຫ້ແກ່ທັງເດັກຊາຍ ແລະ ເດັກຍິງ ເພື່ອສົ່ງເສີມໃຫ້ເຂົ້າໂຮງຮຽນປົກກະຕິ.

ບອບບາງ ແລະ ຄວາມສາມາດ (HVCA) ຢູ່ 40 ຊຸມຊົນໃນແຂວງອຸດົມໄຊ ແລະ ຜົ້ງສາລີ. ດ້ວຍການຮ່ວມມືກັບ ກຊ ຣສສ, ອົງການ WFP ສາມາດປັບປຸງຍົກລະດັບຄວາມຮູ້ດ້ານວິຊາການ ແລະ ຄວາມສາມາດ ກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງໄພພິບັດດ້ວຍການເກັບກຳ ແລະ ວິເຄາະຂໍ້ມູນຂ່າວສານ. ນອກນັ້ນ, ກໍ່ໄດ້ຈັດການຝຶກອົບຮົມເພື່ອໂຄສະນາເຜີຍແຜ່ ກ່ຽວກັບການປ່ຽນແປງດິນຟ້າອາກາດໃຫ້ແກ່ເຈົ້າໜ້າທີ່ພາກລັດ, ຄະນະຄຸ້ມຄອງໄພພິບັດຂັ້ນບ້ານ ແລະ ຜູ້ໄດ້ຮັບຜົນປະໂຫຍດ. ພ້ອມນັ້ນ, ກໍ່ໄດ້ມີການຍົກລະດັບຄວາມພ້ອມ ແລະ ຕອບໂຕ້ໄພພິບັດລວມທັງການຄຸ້ມຄອງສາງ ຢູ່ 14 ເມືອງ ຢູ່ ແຂວງສາລະວັນ, ອັດຕະປື ແລະ ຈຳປາສັກ.

**ການປັບປຸງຂອດການປະສານງານ ລະຫວ່າງ ການຈັດຕັ້ງປະຕິບັດ ມາດຕະການຕອບໂຕ້ເຫດການສຸກເສີນ ແລະ ແຜນງານຊ່ວຍເຫຼືອສັງຄົມອື່ນໆມີຄວາມສຳຄັນເພື່ອຫັນຈາກການຕອບໂຕ້ເຫດການສຸກເສີນ ໄປສູ່ ການພັດທະນາແຜນງານ.** ຍຸດທະສາດຄຸ້ມຄອງໄພພິບັດແຫ່ງຊາດ ຄວນລະບຸຂົງເຂດທີ່ຕ້ອງການການຊ່ວຍເຫຼືອສຸກເສີນ. ດ້ວຍວິທີການລະບຸພື້ນທີ່ຄວາມສ່ຽງກໍ່ຈະສາມາດອຳນວຍຄວາມສະດວກໃຫ້ແກ່ການສ້າງແຜນງານ ແລະ ກິດຈະກຳປົກປ້ອງສັງຄົມຖາວອນ ຢູ່ພື້ນທີ່ດັ່ງກ່າວ ແລະ ສາມາດຍົກລະດັບທັງຄວາມວ່ອງໄວໃນການສະໜັບສະໜູນຊຸມຊົນທີ່ຖືກຜົນກະທົບພ້ອມທັງສ້າງຄວາມທົນທານໃຫ້ແກ່ຊຸມຊົນດັ່ງກ່າວລ່ວງໜ້າ. ຍົກຕົວຢ່າງ, ຊຸມຊົນ ສາມາດຮັບປະກັນຄວາມທົນທານຂອງດິນ ແລະ ໂຄງລ່າງພື້ນຖານ ຫຼື ຫັນກິດຈະກຳການສ້າງລາຍຮັບໃຫ້ມີຄວາມຫຼາກຫຼາຍ. ວິທີການນີ້ບໍ່ເປັນພຽງແຕ່ການປົກປ້ອງຊີວິດການເປັນຢູ່ຢ່າງດຽວແຕ່ກໍຍັງເປັນການສົ່ງເສີມການຍົກລະດັບຜະລິດຕະພາບກະສິກຳໃນໄລຍະຍາວແບບກວ້າງຂວາງ.

### ເສີມຂະຫຍາຍໂຄງການໃຫ້ອາຫານທ່ຽງໃຫ້ແກ່ໂຮງຮຽນ (SMP) ລັດຊັ້ນອານຸບານ, ປ.ກຽມ, ຊັ້ນປະຖົມ ແລະ ມັດທະຍົມຢູ່ບ້ານໃນເມືອງທີ່ທຸກຍາກໃນຂອບເຂດທົ່ວປະເທດ

**ອີງຕາມບົດລາຍງານຄວາມຄືບໜ້າຂອງ ກະຊວງສຶກສາທິການ ແລະ ກິລາ (ກຊ ສກ), ໂຄງການໃຫ້ອາຫານທ່ຽງສຳລັບໂຮງຮຽນກໍ່ໄດ້ປະສົບຜົນສຳເລັດໃນການຂະຫຍາຍໄປສູ່ໂຮງຮຽນພາກລັດ ແລະ ຄົວເຮືອນທີ່ທຸກຍາກກໍ່ຄືໂຮງຮຽນ 490 ແຫ່ງໃນ 137 ເມືອງ ຢູ່ 17 ແຂວງ.** ການເສີມຂະຫຍາຍດັ່ງກ່າວ ສາມາດສ້າງຜົນປະໂຫຍດໃຫ້ແກ່ 274,773 ຄົນ (137,573 ຍິງ). ເພື່ອສະໜັບສະໜູນໂຄງການ, ລັດຖະບານ ໄດ້ຮ່ວມມືກັບຄູ່ຮ່ວມພັດທະນາເພື່ອອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ ແລະ ແຈກຢາຍອາຫານ. ໃນນັ້ນກໍ່ລວມມີເຂົ້າ, ຖົ່ວ, ນ້ຳມັນພືດໂດຍມີມູນຄ່າລວມຫຼາຍກວ່າ 2.9 ລ້ານໂດລາສະຫະລັດ.

**ຜົນສຳເລັດອັນພົ້ນເດັ່ນແມ່ນການຈັດຕັ້ງປະຕິບັດໂຄງການກະສິກຳ ເພື່ອໂພຊະນາການຢູ່ ສປປ ລາວ.** ໂຄງການນີ້ມີເປົ້າໝາຍເພື່ອສ້າງຕົວແບບທີ່ສາມາດເສີມຂະຫຍາຍໄດ້ໃນໄລຍະ 7ປີ ໄປສູ່ອີກ 500 ບ້ານຢູ່ 6 ແຂວງໃນທົ່ວປະເທດ. ນອກນັ້ນ, ກໍແນໃສ່ປັບປຸງຕົວຊີ້ບອກດ້ານໂພຊະນາການຢູ່ ຊຸມຊົນທີ່ມີຄວາມບອບບາງ. ສຳລັບຄວາມຄືບໜ້າ, ໂຄງການໄດ້ແຈກຢາຍສະບຽງອາຫານທຽບເທົ່າກັບ 141 ໂຕນ ໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດ 66,694 ຄົນ ແລະ ໄດ້ເລີ່ມຈັດຕັ້ງປະຕິບັດໂຄງການໄລຍະສອງ. ພ້ອມນັ້ນ, WFP ກໍໄດ້ຈັດຕັ້ງປະຕິບັດໂຄງການໄດ້ສຳເລັດການຈັດຕັ້ງປະຕິບັດ Global 4Fs Lean Season Response ດ້ວຍການສະໜອງເຂົ້າຈຳນວນ 950 ໂຕນ ໃຫ້ແກ່ 110,033 ຄົນ ຢູ່ບັນດາແຂວງຕ່າງໆ.

ພ້ອມນັ້ນ, ໂຄງການຮ່ວມມືໃໝ່ຂອງອົງການ WFP ແລະ ລັດຖະບານແຫ່ງເຢຍລະມັນ ໂດຍສຸມໃສ່ການສົ່ງເສີມການຜະລິດອາຫານເພື່ອສະໜອງໃຫ້ນັກຮຽນຢູ່ຂັ້ນທ້ອງຖິ່ນສະເພາະ. ເພື່ອຮັບປະກັນການມີສ່ວນຮ່ວມຂອງຊຸມຊົນ ແລະ ຄວາມເປັນເຈົ້າການຂອງໂຄງການໃຫ້ອາຫານໃຫ້ແກ່ນັກຮຽນ, ອົງການ WFP ໄດ້ຈັດການຝຶກອົບຮົມໃຫ້ແກ່ສະມາຊິກຂອງຄະນະພັດທະນາການສຶກສາຂັ້ນບ້ານ ຢູ່ແຂວງບໍ່ແກ້ວ, ຫຼວງພະບາງ, ແລະ ຊຽງຂວາງ.

### ເພີ່ມເບ້ຍລ້ຽງໃຫ້ແກ່ນັກຮຽນຊັ້ນມັດທະຍົມຕົ້ນໂດຍໃຫ້ບູລິມະສິດແກ່ນັກຮຽນຈາກຄອບຄົວທີ່ທຸກຍາກ ແລະ ດ້ອຍໂອກາດ

**ການທົບທວນຊີ້ໃຫ້ເຫັນເຖິງຄວາມຄືບໜ້າທີ່ກ້າວ**

**ກະໂດດໃນການສົ່ງເສີມການເຂົ້າເຖິງການສຶກສາໃຫ້ແກ່ນັກຮຽນທີ່ມາຈາກຫຼາຍກຸ່ມປະຊາກອນ.** ເພື່ອຮັບປະກັນກາລະໂອກາດທີ່ເທົ່າທຽມກັນກໍ່ໄດ້ຈັດຕັ້ງປະຕິບັດຂໍ້ລິເລີ່ມເພື່ອສະໜັບສະໜູນນັກຮຽນທີ່ມີພອນສະຫວັນ, ນັກຮຽນທີ່ດ້ອຍໂອກາດ, ນັກຮຽນຊົນເຜົ່າ ແລະ ນັກຮຽນພິການ. ທີ່ພົ້ນເດັ່ນແມ່ນການຂະຫຍາຍໂຄງການຊ່ວຍເຫຼືອ ແລະ ໃຫ້ອາຫານທ່ຽງແກ່ໂຮງຮຽນພາກລັດທີ່ຄຸ້ມຄອງຕົນເອງ 827 ແຫ່ງ ລວມທັງໂຮງຮຽນສຳລັບເດັກພິການ 26 ແຫ່ງ. ໃນນັ້ນ, ກໍ່ໄດ້ມອບເບ້ຍລ້ຽງທັງໝົດໃຫ້ແກ່ນັກຮຽນ 8,469 ຄົນ ເຊິ່ງປະຈຸບັນໄດ້ຮັບເງິນເບ້ຍລ້ຽງ 200,000 ກີບ ຕໍ່ຄົນຕໍ່ເດືອນ. ພ້ອມນັ້ນ, ກໍໄດ້ດຳເນີນຂັ້ນຕອນການຈັດຊື້ເພື່ອໃຫ້ອາຫານທ່ຽງແກ່ໂຮງຮຽນ ຢູ່ 36 ເມືອງ ໃນ 7 ແຂວງ ເພື່ອປັບປຸງໂພຊະນາການຢູ່ຂົງເຂດດັ່ງກ່າວ. ຄວາມພະຍາຍາມ ແລະ ຄວາມໝາຍໝັ້ນຂອງ ກະຊວງສຶກສາທິການ ແລະ ກິລາ ດັ່ງກ່າວ, ສະແດງໃຫ້ເຫັນເຖິງເຈດຈຳນົງໃນການສ້າງລະບົບການສຶກສາທີ່ກວມລວມທົ່ວເຖິງ ແລະ ຕອບສະໜອງຄວາມຕ້ອງການຂອງນັກຮຽນທີ່ຫຼາກຫຼາຍຢູ່ຂອບເຂດທົ່ວປະເທດ.

## ຈັດສັນງົບປະມານພາຍໃນໃຫ້ແກ່ການສຶກສາໃຫ້ທັນເວລາ ແລະ ເພີ່ມການປົກຄຸມ

**ໃນປີ 2022, ກະຊວງສຶກສາທິການ ແລະ ກິລາ ໄດ້ສະແດງໃຫ້ເຫັນເຖິງຄວາມໝາຍໝັ້ນໃນການປັບປຸງການບໍລິຫານສະຖານທີ່ສຶກສາດ້ວຍການຈັດສັນງົບປະມານທັງໝົດ 92 ຕື້ກີບ ໃຫ້ແກ່ 18 ແຂວງ ແລະ 148 ຕົວເມືອງ.** ງົບປະມານດັ່ງກ່າວ,ໄດ້ແນໃສ່ການສະໜັບສະໜູນວຽກບໍລິຫານໂຮງຮຽນສະເພາະເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນໃນການຄຸ້ມຄອງບໍລິຫານສະຖານທີ່ສຶກສາ. ເພື່ອເປັນການຕໍ່ຍອດຄວາມໝາຍໝັ້ນດັ່ງກ່າວ, ກຊ ສກ ໄດ້ເພີ່ມງົບປະມານຈັດສັນອີກ 5 ຕື້ກີບເພື່ອຈຸດປະສົງອັນດຽວກັນ ໃນປີ 2023 ເຊິ່ງຊີ້ໃຫ້ເຫັນເຖິງການເນັ້ນໜັກ ຕໍ່ກັບວຽກງານສ້າງຄວາມເຂັ້ມແຂງດ້ານການບໍລິຫານຄຸ້ມຄອງ ເພື່ອສົ່ງເສີມການຍົກລະດັບຄຸນນະພາບການສຶກສາໂດຍລວມ. ການເພີ່ມງົບປະມານສະທ້ອນໃຫ້

### ▶ ກ່ອງ 4. ປະສົບການໃນການລົບລ້າງຄວາມທຸກຍາກຂອງປະເທດເກົາຫຼີໃຕ້



© Adri Berger/ILO

ກ່ອນຊຸມປີ 1960, ສ. ເກົາຫຼີ ເປັນປະເທດທີ່ມີຄວາມທຸກຍາກສູງໂດຍທີ່ອັດຕາລາຍຮັບຕໍ່ຫົວຄົນແຫ່ງຊາດ (GNI) ມີພຽງແຕ່ 87$ ແລະ ອັດຕາຄວາມທຸກຍາກເທົ່າກັບ 34 ສ່ວນຮ້ອຍ. ເຖິງຢ່າງໃດກໍຕາມ, ສ. ເກົາຫຼີ ສາມາດຜ່ານຜ່າສິ່ງທ້າທາຍດັ່ງກ່າວ ແລະ ກ້າວມາເປັນໜຶ່ງໃນປະເທດອຸດສາຫະກຳທີ່ມີຄວາມກ້າວໜ້າໃນໂລກໄດ້. ໃນໄລຍະນີ້, ສ. ເກົາຫຼີ ໄດ້ພົບພໍ້ກັບຫຼາຍຂໍ້ຫຍຸ້ງຍາກ, ລວມທັງຂໍ້ຈຳກັດໃນການເຂົ້າເຖິງ, ການຄ້ຳປະກັນສະບຽງອາຫານ, ຄວາມແຕກໂຕນດ້ານການພັດທະນາລະຫວ່າງເຂດຊົນນະບົດ ແລະ ຕົວເມືອງພ້ອມທັງການເຄື່ອນຍ້າຍຖິ່ນຖານພາຍໃນທີ່ສູງ.

ລັດຖະບານມີເປົ້າໝາຍໃນການສົ່ງເສີມການພັດທະນາທີ່ເທົ່າທຽມກັນຢູ່ທັງເຂດຊົນນະບົດ ແລະ ຕົວເມືອງ. ເພື່ອບັນລຸຈຸດປະສົງດັ່ງກ່າວ, ກໍ່ໄດ້ມີການຈັດຕັ້ງປະຕິບັດໂຄງການທີ່ມີຊື່ວ່າ "ເຊມາ ອຸດົງ" ທີ່ໄດ້ສຸມໃສ່ການສ້າງບ້ານໃໝ່ຢູ່ເຂດທີ່ດ້ອຍໂອກາດເພື່ອປັບປຸງຄຸນນະພາບຊີວິດການເປັນຢູ່ໂດຍລວມ. ຫຼັກການນຳພາຂອງໂຄງການແມ່ນການສົ່ງເສີມຄວາມກ້າວໜ້າ ແລະ ເຂັ້ມແຂງຂອງຊຸມຊົນ ແລະ ເປີດໂອກາດໃຫ້ຊຸມຊົນມີສິດເສລີພາບໃນການຕັດສິນບັນຫາໃນທຸກຂັ້ນຕອນຂອງໂຄງການ, ໃນນັ້ນລວມມີຂັ້ນຕອນການວາງແຜນ, ການຈັດຕັ້ງປະຕິບັດ, ການປະເມີນຜົນ ແລະ ການທົບທວນ. ວິທີການນີ້ໄດ້ຮັບປະກັນການພັດທະນາທີ່ມີລັກສະນະຍືນຍົງ ແລະ ນຳໄປສູ່ການປະຕິຮູບຊຸມຊົນທີ່ສ້າງຂຶ້ນໃໝ່ແບບໝັ້ນຄົງຍາວນານ.

ໂຄງການໄດ້ລິເລີ່ມໂດຍລັດຖະບານ ເຊິ່ງໄດ້ຈັດຕັ້ງປະຕິບັດນະໂຍບາຍເພື່ອສົ່ງເສີມການກຸ້ມຕົນເອງຂອງທຸກໝູ່ບ້ານ. ຄຽງ

ຄູ່ນະໂຍບາຍດັ່ງກ່າວ, ກໍ່ຍັງໄດ້ມີການຊ່ວຍເຫຼືອທີ່ເປັນຮູບປະທຳກໍຄືການລົງທຶນເພື່ອສ້າງພື້ນຖານໂຄງລ່າງທີ່ໄດ້ປະກອບສ່ວນຕໍ່ກັບການພັດທະນາໂດຍລວມຂອງບັນດາບ້ານທີ່ຖືກຄັດເລືອກ. ການລົງທຶນທີ່ກ່າວມານັ້ນປະກອບມີການສ້າງ ແລະ ເສີມຂະຫຍາຍທາງຫຼວງທ້ອງຖິ່ນ, ການປັບປຸງສະພາບຂອງຄົວເຮືອນ, ການສ້າງການບໍລິການຊັກລີດຂອງບ້ານ, ການຈັດຕັ້ງປະຕິບັດ ໂຄງການນໍ້າປະປາຊຸມຊົນ, ການສ້າງຂົວທາງ ແລະ ພັດທະນາລະບົບຊົນລະປະທານ. ພາຍຫຼັງທີ່ໂຄງການໄດ້ດໍາເນີນການໄດ້ສອງປີ, ຖ້າບ້ານໃດມີການປັບປຸງ ແລະ ພັດທະນາແບບພົ້ນເດັ່ນ ແລະ ກ້າວກະໂດດ, ລັດຖະບານກໍ່ຈະໃຫ້ການຊ່ວຍເຫຼືອເພີ່ມຕື່ມດ້ານວັດຖຸສິ່ງຂອງ.

ໂຄງການຖືກຈັດຕັ້ງປະຕິບັດໂດຍນໍາໃຊ້ທຶນຮອນ ແລະ ກໍາລັງແຮງງານທີ່ມີຂອງແຕ່ລະບ້ານເປັນຫຼັກ. ໃນຂະນະທີ່ລັດຖະບານໄດ້ປະກອບສ່ວນດ້ານວັດຖຸສິ່ງຂອງ ແລະ ທຶນຮອນຈໍານວນໜຶ່ງ, ຈຸດສຸມຫຼັກແມ່ນນໍາໃຊ້ຊັບພະຍາກອນທີ່ມີຢູ່ໃນບ້ານເອງ. ດ້ວຍວິທີການນີ້, ຫຼາຍກວ່າເຄິ່ງໜຶ່ງຂອງບ້ານທີ່ຢູ່ເຂດຊົນນະບົດໄດ້ຮັບການຍົກລະດັບ ແລະ ປັບປຸງແບບກ້າວກະໂດດ. ຜົນສໍາເລັດຄັ້ງນີ້ຈຶ່ງໄດ້ເປັນແຮງບັນດານໃຈໃຫ້ແກ່ໝູ່ບ້ານໃກ້ຄຽງເພື່ອກ້າວເຂົ້າສູ່ຂະບວນການພັດທະນາ ແລະ ບັນລຸຜົນສໍາເລັດໃນລະດັບທີ່ສາມາດທຽບກັນໄດ້. ສະຫຼຸບໄດ້ວ່າປັດໄຈທີ່ສໍາຄັນໃນການຫຼຸດຜ່ອນຄວາມທຸກຍາກຂອງ ສ. ເກົາຫຼີ ແມ່ນການສົ່ງເສີມຄວາມກ້າວໜ້າຂອງຊຸມຊົນ, ສົ່ງເສີມການມີສ່ວນຮ່ວມຢ່າງຕັ້ງໜ້າ ແລະ ສ້າງແຮງຈູງໃຈເພື່ອການຕັດສິນໃຈດ້ວຍຕົນເອງ.

## ▶ ກ່ອງ 5. ການສົ່ງເສີມສະຫະກອນໃນ ສປປ ລາວ



© Mongkon Duangkhiew/ILO

ທ່ານ ແສງທອງ ມະນີຊັບ ແລະ ເມຍ ຂອງລາວເປັນຊາວກະສິກອນປູກຊາ ຈາກ ເມືອງປາກຊ່ອງ. ສາມປີກ່ອນ, ຜູ້ກ່ຽວເປັນຜູ້ກໍ່ຕັ້ງ ສະມາຄົມສົ່ງເສີມຊາປາກຊ່ອງ ເຊິ່ງປະກອບມີ 116 ຄອບຄົວ. ສະມາຄົມນີ້ ໄດ້ປູກຊາເພື່ອສົ່ງອອກໄປ ສປ. ຈີນ, ສສ. ຫວຽດນາມ ແລະ ສະຫະພາບ ເອີຣົບ, ພ້ອມທັງຂາຍຢູ່ພາຍໃນປະເທດ. ເນື່ອງຈາກວ່າສະມາຄົມດັ່ງກ່າວ ຍັງເປັນສະມາຄົມທີ່ນ້ອຍ, ຈຶ່ງເຮັດໃຫ້ບໍ່ມີອຸປະກອນພຽງພໍເພື່ອຜະລິດຕາມຄວາມຕ້ອງການຂອງຕະຫຼາດ ເຊິ່ງໄດ້ສົ່ງຜົນກະທົບຕໍ່ກັບລາຍຮັບ. ນອກນັ້ນ, ກໍ່ຖືກບັງຄັບໃຫ້ນໍາໃຊ້ອຸປະກອນທີ່ເກົ່າ ແລະ ບໍ່ປອດໄພ, ຈຶ່ງເຮັດໃຫ້ເກີດມີອຸປະຕິເຫດ ແລະ ການບາດເຈັບ. ຄອບຄົວສ່ວນໃຫຍ່ກໍ່ບໍ່ໄດ້ເປັນສະມາຊິກຂອງລະບົບປະກັນສັງຄົມ.

ຍ້ອນໂຄງການ SOLAR ທີ່ໄດ້ຈັດຕັ້ງປະຕິບັດໂດຍອົງກອນ ILO ແລະ Oxfam ເຊິ່ງໄດ້ຮັບທຶນຈາກ EU ພ້ອມທັງການຊ່ວຍເຫຼືອຈາກ ບໍລິສັດ ຊາ ແມ່ຂອງ ແລະ ຜູ້ໃຫ້ທຶນອື່ນໆ, ສະມາຄົມດັ່ງກ່າວກໍ່ໄດ້ຮັບຖາດຕາກຊາ, ເຄື່ອງຈັກເດັດໃບຊາ, ເຄື່ອງມ້ວນໃບຊາ ແລະ ອຸປະກອນປົກປ້ອງຕົນເອງ. ສິ່ງທີ່ກ່າວມານັ້ນຈະສາມາດຊ່ວຍໃຫ້ເຮັດວຽກໄດ້ຢ່າງປອດໄພ ແລະ ສະດວກສະບາຍພ້ອມທັງໄດ້ເພີ່ມຜົນການຜະລິດອີກດ້ວຍ. ນອກນັ້ນ, ສະມາຄົມກໍ່ໄດ້ຍື່ນເອກະສານເພື່ອຂໍອະນຸມັດ

ການຂະຫຍາຍຕົວ ແລະ ຍົກລະດັບເປັນສະຫະກອນທີ່ໄດ້ຮັບໃບຢັ້ງຢືນການຜະລິດແບບປອດສານພິດ, ເນື່ອງຈາກວ່າພວກເຂົາໄດ້ປະສົງຢາກສົ່ງອອກໃນປະລິມານທີ່ເພີ່ມຂຶ້ນໄປສູ່ຕະຫຼາດໃນເອີຣົບ. ດ້ວຍລາຍຮັບທີ່ສູງຂຶ້ນ ແລະ ການຊ່ວຍເຫຼືອແບບຕໍ່ເນື່ອງຈາກໂຄງການ SOLAR, ຄາດວ່າບັນດາຄົວເຮືອນທີ່ກ່າວມານັ້ນ ຈະສາມາດຂຶ້ນທະບຽນເປັນສະມາຊິກປະກັນສັງຄົມ ແລະ ສາມາດເຮັດວຽກໃນສະພາບເງື່ອນໄຂທີ່ດີ!

ເຫັນເຖິງການຮັບຮູ້ຂອງກະຊວງສຶກສາກ່ຽວກັບຄວາມສຳຄັນຂອງການບໍລິຫານທີ່ເຂັ້ມແຂງ ເພື່ອສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການຮຽນການສອນນັກຮຽນ ແລະ ສະໜັບສະໜູນການພັດທະນາໃຫ້ເປັນມືອາຊີບ.

### ການຊ່ວຍເຫຼືອດ້ານການຝຶກອົບຮົມວິຊາຊີບ, ການພັດທະນາສີມືແຮງງານ ແລະ ອາຊີວະສຶກສາໃຫ້ແກ່ຄົນທຸກຍາກ ແລະ ປະຊາກອນໃນໄວອອກແຮງງານ ທີ່ດ້ອຍໂອກາດເພື່ອສົ່ງເສີມການເຂົ້າເຖິງກາລະໂອກາດການຈ້າງງານທີ່ມີຄຸນຄ່າ ແລະ ເປັນທຳ

**ສັງເກດເຫັນວ່າມີຄວາມຄືບໜ້າຫຼາຍໃນການສະໜອງການຝຶກອົບຮົມວິຊາຊີບ ແລະ ອາຊີວະສຶກສານັບຕັ້ງແຕ່ປີ 2021 ໂດຍ ກະຊວງສຶກສາທິການ ແລະ ກິລາ, ມີຄູອາຈານ 300 ຄົນທີ່ໄດ້ຮັບໂອກາດໃນການຍົກລະດັບຄວາມຮູ້ຜ່ານການຝຶກອົບຮົມນີ້.** ກະຊວງສຶກສາ ຍັງພະຍາຍາມສຸມໃສ່ການຍົກລະດັບການສຶກສາໃຫ້ແກ່ໄວໜຸ່ມ ແລະ ຜູ້ອອກໂຮງຮຽນ, ເຊິ່ງປະຈຸບັນມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 98,879 ຄົນ ພ້ອມທັງໄດ້ຮັບໂອກາດໃນການພັດທະນາສີມືແຮງງານ ແລະ ປັບປຸງໂອກາດໃນການຈ້າງງານ. ນອກນັ້ນ, ກໍ່ໄດ້ສືບຕໍ່ເສີມຂະຫຍາຍ ແລະ ພັດທະນາຫຼັກສູດສຳລັບ 20 ສາຂາອາຊີບ ເພື່ອຮັບປະກັນຄວາມສອດຄ່ອງກັບຄວາມຕ້ອງການຂອງພາກເອກະຊົນ, ເຊິ່ງເປັນການຍົກລະດັບຄວາມສຳຄັນຂອງການຝຶກອົບຮົມວິຊາຊີບ. ເຖິງວ່າຈະມີຄວາມຄືບໜ້າກໍ່ຕາມ, ສິ່ງທີ່ສຳຄັນແມ່ນຕ້ອງຮັບຮູ້ວ່າຍັງມີຫຼາຍໜ້າວຽກທີ່ຕ້ອງສືບຕໍ່ປະຕິບັດ. ລະບົບທີ່ກົມກຽວຮອບດ້ານຍັງບໍ່ທັນສາມາດບັນລຸໄດ້ເທື່ອຍ້ອນຍັງມີສິ່ງທ້າທາຍຂັ້ນພື້ນຖານທີ່ຕ້ອງແກ້ໄຂ, ໂດຍສະເພາະແມ່ນການລະບຸ ແລະ ຂຶ້ນທະບຽນຜູ້ທີ່ມີຄວາມທຸກຍາກ.

### ການພັດທະນາກຸ່ມຮ່ວມມືການຜະລິດ ແລະ ການບໍລິການສາທາລະນະເພື່ອອຳນວຍໃຫ້ແກ່ການເຂົ້າເຖິງວຽກເຮັດງານທຳທີ່ມີຄຸນຄ່າ ແລະ ເປັນທຳ

**ການມີສ່ວນຮ່ວມໃນການປະກອບສ່ວນເຂົ້າກິດຈະກຳທາງດ້ານເສດຖະກິດຂອງຜູ້ອອກແຮງງານໂດຍຜ່ານກຸ່ມຮ່ວມມືການຜະລິດ ແລະ ສະມາຄົມ ສາມາດສ້າງຜົນກະທົບຕໍ່ການປັບປຸງຊີວິດການເປັນຢູ່ ແລະ ເສດຖະກິດສັງຄົມຂອງຜູ້ອອກແຮງງານໃຫ້ດີຂຶ້ນ.** ບົດລາຍງານ ປະຈຳປີ 2022 ຂອງ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຊີ້ໃຫ້ເຫັນວ່າ, ຮອດປະຈຸບັນໄດ້ສ້າງຕັ້ງທັງໝົດ 4,193 ກຸ່ມຮ່ວມມືການຜະລິດ ແລະ 27 ສະຫະກອນ. ຜົນສຳເລັດອັນໃຫຍ່ຫຼວງນີ້ສະທ້ອນໃຫ້ເຫັນເຖິງຄະນະທີມງານທີ່ຮັບຜິດຊອບການທົບທວນໄດ້ຮັບຂໍ້ມູນວ່າ ການຈັດຕັ້ງກຸ່ມຮ່ວມມືການຜະລິດແມ່ນອີງໃສ່ ດຳລັດເລກທີ 660/ນຍ ວ່າດ້ວຍ ການສ້າງຕັ້ງກຸ່ມຮ່ວມມືການຜະລິດ ແລະ ສະຫະກອນ. ປະຈຸບັນ, ບັນດານິຕິກຳ ແລະ ລະບຽບການທີ່ກ່ຽວຂ້ອງກຳລັງຖືກສ້າງ ແລະ ປັບປຸງ, ສ່ວນແຜນແມ່ບົດກຳລັງຖືກປັບປຸງ ແລະ ຄາດວ່າຈະມີການຮັບຮອງຢ່າງເປັນທາງການໃນປີ 2024. ການປັບປຸງທີ່ກ່າວມານັ້ນຄາດວ່າຈະສົ່ງຜົນກະທົບອັນໃຫຍ່ຫຼວງຕໍ່ກັບກຸ່ມຮ່ວມມືການຜະລິດກໍຄືການປັບປຸງປະສິດທິພາບ, ທັນໃຫ້ຂັ້ນຕອນ ແລະ ຂະບວນການມີຄວາມລຽບງ່າຍ, ແລະ ຍົກລະດັບການບໍລິຫານກຸ່ມ. ສຸດທ້າຍແລ້ວກໍແນໃສ່ການສ້າງຜົນປະໂຫຍດໃຫ້ແກ່ການຍົກລະດັບປະສິດທິພາບຂອງການຜະລິດ ແລະ ປະກອບສ່ວນໂດຍລວມໃຫ້ແກ່ການຂະຫຍາຍຕົວ ຂອງ ຂະແໜງກະສິກຳ.

**ກະຊວງ ກະສິກຳ ແລະ ປ່າໄມ້ ກຳລັງຈັດຕັ້ງປະຕິບັດໂຄງການພັດທະນາຊົນນະບົດແບບເຊື່ອມສານ, ເຊິ່ງເອີ້ນກັນວ່າ "ໂຄງການເຊມານ ອຸດົງ[17]" ແລະ ມີໄລຍະການຈັດຕັ້ງປະຕິບັດລະຫວ່າງ ປີ 2021 ຫາ 2025 ຢູ່ບັນດາແຂວງພາກໃຕ້ ຂອງ ສປປ ລາວ** ໂດຍມີຈຸດປະສົງພັດທະນາຊົນນະບົດແບບມີສ່ວນຮ່ວມ ອີງຕາມນະໂຍບາຍ ສາມສ້າງ ຂອງ ລັດຖະບານ ແລະ ຫຼັກການ ຂອງ ຮູບແບບ ເຊມານ ອຸດົງ. ພາຍໃຕ້ໂຄງການກໍ່ໄດ້ສະໜອງທຶນຊ່ວຍເຫຼືອລ້າໃຫ້ແກ່ກຸ່ມຮ່ວມມືການລິດຢູ່ທ້ອງຖິ່ນເຊິ່ງ 70 ສ່ວນຮ້ອຍ ຂອງທຶນຊ່ວຍເຫຼືອແມ່ນໄດ້ຈາກໂຄງການໂດຍກົງ ແລະ ອີກ 30 ສ່ວນຮ້ອຍ ແມ່ນທາງກຳລັງແຮງງານຂັ້ນທ້ອງຖິ່ນເປັນຜູ້ປະກອບສ່ວນ. ແຜນງານນີ້ໄດ້ມີການເສີມຂະຫຍາຍໄປສູ່ແຂວງອື່ນໆໃນນັ້ນລວມມີ: ແຂວງ

17 ໂຄງການ Saemaul Undong, ປະຕິບັດຢູ່ ສ.ເກົາຫຼີ ໃນຊຸມປີ 1970, ແນໃສ່ຫັນບັນດາບ້ານຊົນນະບົດ ຜ່ານລະບົບການການຊ່ວຍເຫຼືອກຸ້ມຕົນເອງ, ຮ່ວມມື, ດຸໝັ່ນ. ເປັນການປັບປຸງພື້ນຖານໂຄງລ່າງ, ກະສິກຳ, ຊີວິດການເປັນຢູ່ຂອງຕົນ, ນຳໄປສູ່ການພັດທະນາເສດຖະກິດ - ສັງຄົມທີ່ສຳຄັນ. ຂໍ້ລິເລີ່ມທີ່ສຳເລັດຜົນນີ້ໄດ້ກາຍເປັນແບບຢ່າງໃນການພັດທະນາຊົນນະບົດ ແລະ ຈູງໃຈໃນການຂະຫຍາຍໂຄງການດັ່ງກ່າວໄປທົ່ວປະເທດ.

ວຽງຈັນ, ບໍລິຄໍາໄຊ, ຊຽງຂວາງ, ຈໍາປາສັກ, ເຊກອງ ແລະ ສາລະວັນ ເຊິ່ງມີຜູ້ໄດ້ຮັບຜົນປະໂຫຍດຫຼາຍພາກສ່ວນໃນຂັ້ນຊຸມຊົນຂອງບັນດາແຂວງທີ່ກ່າວມານັ້ນ.

## 4.5.2. ຊ່ອງຫວ່າງ ແລະ ສິ່ງທ້າທາຍ

**ລະບົບສະຫວັດດີການສັງຄົມໃນ ສປປ ລາວ ໄດ້ພົບພໍ້ກັບສິ່ງທ້າທາຍຫຼາຍຢ່າງໂດຍສະເພາະແມ່ນຂາດການວາງແຜນ ແລະ ຊີ້ນໍານໍາພາຈຶ່ງເຮັດໃຫ້ລະບົບຖືກຈັດຕັ້ງປະຕິບັດແບບກະແຈກກະຈາຍ.** ເຮັດໃຫ້ຜູ້ສົມຄວນໄດ້ຮັບຜົນປະໂຫຍດເສຍໂອກາດໃນການຮັບອຸດໜູນ ແລະ ບໍ່ໄດ້ແກ້ໄຂຄວາມບອບບາງທີ່ຜູ້ສົມຄວນໄດ້ຮັບຜົນປະໂຫຍດໄດ້ພົບພໍ້. ພ້ອມນັ້ນ, ຍັງບໍ່ທັນໄດ້ນໍາໃຊ້ແຫຼ່ງຊັບພະຍາກອນທີ່ມີຢ່າງຈໍາກັດນັ້ນໃຫ້ເກີດປະໂຫຍດສູງສຸດເທື່ອ. ຍິ່ງໄປກ່ວານັ້ນ, ລະບົບສະຫວັດດີການສັງຄົມສ່ວນຫຼາຍແມ່ນຖືກອອກແບບຕາມບູລິມະສິດຂອງຜູ້ໃຫ້ທຶນ ແລະ ຕາມຄວາມຕ້ອງການເທົ່ານັ້ນ. ປະຈຸບັນເຫັນວ່າມີຫຼາຍໂຄງການໃຫ້ອຸດໜູນແມ່ຍິງຖືພາ ແລະ ເດັກ, ແຕ່ຍັງມີບາງກຸ່ມບອບບາງເຊັ່ນ ກຸ່ມຜູ້ສູງອາຍຸ ຍັງບໍ່ທັນໄດ້ຮັບການຊ່ວຍເຫຼືອເທື່ອ.

**ໃນຂະນະດຽວກັນ, ກໍ່ເຫັນວ່າຍັງຂາດຂໍ້ມູນຂ່າວສານກ່ຽວກັບຄວາມທຸກຍາກ ແລະ ຄວາມບອບບາງຫຼາຍພໍສົມຄວນ ແລະ ບໍ່ມີຖານຂໍ້ມູນສະເພາະໃນການກໍານົດຜູ້ໄດ້ຮັບຜົນປະໂຫຍດ.** ຍັງມີຄວາມຫຍຸ້ງຍາກໃນການຊອກຫາຂໍ້ມູນກ່ຽວກັບຄວາມຕ້ອງການຂອງຜູ້ພິການທີ່ເຊື່ອຖືໄດ້ ແລະ ສາມາດສົມທຽບກັນໄດ້. ຖ້າບໍ່ມີຂໍ້ມູນດັ່ງກ່າວແມ່ນຈະບໍ່ສາມາດກໍານົດໄດ້ວ່າຈະໃຫ້ອຸດໜູນໃຫ້ແກ່ຜູ້ໃດແທ້. ພ້ອມນັ້ນ, ຍັງບໍ່ທັນມີຂໍ້ມູນດ້ານການສໍາຫລວດສະເພາະ ຫຼື ການປະເມີນຜົນເພື່ອປະເມີນປະສິດທິພາບຂອງການຈັດຕັ້ງປະຕິບັດລະບົບປົກປ້ອງສັງຄົມເພື່ອໃຫ້ເຂົ້າໃຈເລິກເຊິ່ງຕໍ່ເປົ້າໝາຍຜູ້ໄດ້ຮັບຜົນປະໂຫຍດ, ຂໍ້ຜິດພາດໃນການກໍານົດຜູ້ໄດ້ຮັບຜົນປະໂຫຍດ, ຄວາມຊໍ້າຊ້ອນຂອງໂຄງການໃຫ້ອຸດໜູນ ແລະ ຜົນກະທົບຕໍ່ການຫລຸດຜ່ອນຄວາມທຸກຍາກ. ການຈັດຕັ້ງປະຕິບັດແຜນງານສະຫວັດດີການສັງຄົມແບບກະແຈກກະຈາຍ ແລະ ມີຫຼາຍຜູ້ໃຫ້ທຶນລະດັບສາກົນທີ່ມີສ່ວນຮ່ວມ ແລະ ຂໍ້ມູນບໍລິຫານບໍ່ໄດ້ຖືກເກັບກໍາເປັນລະບົບນັ້ນສົ່ງຜົນເຮັດໃຫ້ເປັນອຸປະສັກຕໍ່ກັບຄວາມສາມາດ ໃນການປະເມີນ ແລະ ປັບປຸງນະໂຍບາຍປົກປ້ອງສັງຄົມ. ນອກຈາກນັ້ນ, ການທີ່ບໍ່ມີລະຫັດປະຈໍາຕົວທີ່ເປັນເອກະລັກບຸກຄົນນັ້ນເປັນບັນຫາອັນໃຫຍ່ຫຼວງຕໍ່ການກໍານົດ ແລະ ຢັ້ງຢືນຜູ້ໄດ້ຮັບຜົນປະໂຫຍດ ແລະ ສຸດທ້າຍກໍ່ເກີດຄວາມຜິດພາດໃນການກໍານົດເປົ້າໝາຍ.

**ລັດຖະບານແຫ່ງ ສປປ ລາວ ໄດ້ພົບພໍ້ກັບຄວາມຫຍຸ້ງຍາກໃນການສະໜອງທຶນຮອນເພື່ອຊ່ວຍເຫຼືອກຸ່ມທີ່ດ້ອຍໂອກາດຍ້ອນຂໍ້ຫຍຸ້ງຍາກດ້ານເສດຖະກິດ ແລະ ການເງິນ.** ດັ່ງນັ້ນ, ຈຶ່ງເຫັນວ່າການຊ່ວຍເຫຼືອ ແລະ ການໃຫ້ບໍລິການໃຫ້ແກ່ກຸ່ມທີ່ມີຄວາມບອບບາງພາຍໃນປະເທດຍິ່ງມີຄວາມຫຍຸ້ງຍາກເພີ່ມຂຶ້ນ. ຕົວຢ່າງໜຶ່ງ ແມ່ນສິ່ງທ້າທາຍໃນການຈັດຕັ້ງປະຕິບັດໂຄງການໃຫ້ອາຫານທ່ຽງທີ່ມີງົບປະມານຈໍາກັດ ແລະ ມີຄວາມຫຍຸ້ງຍາກດ້ານການຄຸ້ມຄອງບໍລິຫານ ແລະ ປະສານງານ. ຍິ່ງໄປກ່ວານັ້ນ, ການທີ່ບໍ່ມີນະໂຍບາຍຈະແຈ້ງດ້ານການອຸດໜູນນັກຮົບເກົ່າ ແລະ ການປະສານງານກັບຜູ້ໄດ້ຮັບເຄາະຮ້າຍຈາກລະເບີດຕົກຄ້າງແມ່ນເຮັດໃຫ້ກຸ່ມນີ້ບໍ່ໄດ້ຮັບຜົນປະໂຫຍດຕາມທີ່ເຂົາເຈົ້າສົມຄວນຈະໄດ້. ເຊິ່ງມັກສົ່ງຜົນໃຫ້ເກີດຄວາມສັບສົນ ແລະ ຄວາມລ່າຊ້າໃນການຕອບສະໜອງຕໍ່ອັນຕະລາຍທີ່ເກີດຈາກລະເບີດຕົກຄ້າງ ແລະ ສຸດທ້າຍສົ່ງຜົນໃຫ້ລະດັບຄວາມປອດໄພຂອງປະຊາຊົນຫລຸດລົງເລື້ອຍໆ.

**ຜົນການສໍາພາດສະແດງໃຫ້ເຫັນເຖິງສິ່ງທ້າທາຍຕ່າງໆທີ່ໄດ້ພົບພໍ້**ໂດຍສະເພາະແມ່ນຄະນະທີມງານທີ່ຮັບຜິດຊອບການທົບທວນໄດ້ຮັບຂໍ້ມູນວ່າ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ພົບພໍ້ກັບສິ່ງທ້າທາຍຫຼາຍດ້ານເປັນຕົ້ນແມ່ນໂຄງຮ່າງການຈັດຕັ້ງ, ການພັດທະນາ ແລະ ຍົກສູງຄວາມສາມາດໃນການນໍາພາ, ດ້ານການຄົ້ນຄວ້າວິໄຈ, ການຄຸ້ມຄອງຂໍ້ມູນຂ່າວສານ, ການເງິນ, ແລະ ການຄຸ້ມຄອງບໍລິຫານ. ສິ່ງທ້າທາຍເຫຼົ່ານີ້ເຮັດໃຫ້ເຫັນເຖິງຄວາມສໍາຄັນໃນການປັບປຸງເສີາຄໍ້າສະຫວັດດີການສັງຄົມແບບຮອບດ້ານ. ດັ່ງນັ້ນ, ສິ່ງທີ່ສໍາຄັນທີ່ສຸດແມ່ນຕ້ອງມີການປະຕິຮູບລະບົບປົກປ້ອງສັງຄົມຢ່າງຮີບດ່ວນເພື່ອຍົກສູງປະສິດຕິພາບ ແລະ ເພີ່ມລະດັບຄວາມສໍາຄັນຕໍ່ການຕັດສິນນະໂຍບາຍແຫ່ງຊາດ.

**ລັດຖະບານ ໄດ້ສະແດງຄວາມໝາຍໝັ້ນທີ່ປະທັບໃຈໃນການສະໜັບສະໜູນຜູ້ພິການໃນທົດສະວັດທີ່ຜ່ານມາ.** ເຖິງຈະມີກອບນິຕິກໍາ ແລະ ການຈັດຕັ້ງເປັນຢ່າງດີແລ້ວກໍ່ຕາມ, ການຈັດສັນແຫຼ່ງງົບປະມານແມ່ນຍັງຢູ່ໃນລະດັບຕໍ່າ ແລະ ລະດັບການຈັດຕັ້ງປະຕິບັດແມ່ນຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ. ຜູ້ພິການຍັງພົບກັບບັນຫາການຈໍາແນກ ແລະ ອຸປະສັກກີດກັ້ນຕ່າງໆ. ຄວາມເຊື່ອຖືດ້ານວັດທະນາທໍາສ່ວນໃຫຍ່ແລ້ວເຮັດໃຫ້ມີທັດສະນະຄະຕິວ່າ ຜູ້ພິການນໍາເອົາສິ່ງໂຊກຮ້າຍໃຫ້ສູ່ຄອບຄົວຈຶ່ງເຮັດໃຫ້ບາງຄົວເຮືອນບໍ່ສະໜອງຂໍ້ມູນໃຫ້ເວລາທີ່ດໍາເນີນການສໍາຫຼວດ. ດັ່ງນັ້ນ, ຈຶ່ງຈໍາເປັນຕ້ອງມີການໂຄສະນາເຜີຍແຜ່ ແລະ ປູກຈິດສໍານຶກເພີ່ມຕື່ມກ່ຽວກັບສິດທິຂອງຜູ້ພິການອີງຕາມກົດໝາຍວ່າດ້ວຍຄົນ ພິການແຫ່ງຊາດ ແລະ ແກ້ໄຂຄວາມລັງກຽດຂອງສັງຄົມ ຕໍ່ກັບຄວາມພິການເພື່ອສົ່ງເສີມການມີສ່ວນຮ່ວມແບບກວມລວມທົ່ວເຖິງ. ການສົ່ງເສີມການມີສ່ວນຮ່ວມຂອງຄົນ ພິການ ຄວນເຊື່ອມສານເຂົ້າໃນທຸກຂະແໜງການ. ພາກສ່ວນທີ່ກ່ຽວຂ້ອງລວມທັງອົງການຈັດຕັ້ງສັງຄົມ, ຜູ້ໃຫ້ທຶນ, ແລະ ຄູ່ຮ່ວມພັດທະນາອື່ນໆຄວນພິຈາລະນາຄວາມຕ້ອງການ ແລະ ຄວາມກັງວົນຂອງຄົນພິການເຂົ້າໃນແຜນ, ໂຄງການ ແລະ ແຜນງານການພັດທະນາຂອງຕົນ. ຍົກຕົວຢ່າງ, ແຜນງານໂພຊະນາການ ແລະ ການສັກຢາກັນພະຍາດຄວນພິຈາລະນາຄວາມຕ້ອງການພິເສດຂອງເດັກນ້ອຍທີ່ມີຄວາມພິການ. ແຜນງານທີ່ມີຈຸດປະສົງ

ສົ່ງເສີມການມີສ່ວນຮ່ວມຂອງຄົນພິການໃນປະຈຸບັນຍັງໄດ້ຮັບບູລິມະສິດຕໍ່າ, ໂດຍສະເພາະແມ່ນດ້ານການຈັດສັນງົບປະມານທົ່ວທຸກຂະແໜງການໃນທຸກລະດັບ. ຢູ່ຂັ້ນທ້ອງຖິ່ນ, ເຈົ້າໜ້າທີ່ຕ້ອງພົບກັບບັນຫາຍ້ອນຂໍ້ຈໍາກັດດ້ານການເງິນ ໂດຍສະເພາະແມ່ນເວລາທີ່ຕ້ອງຈັດສັນງົບປະມານເພື່ອຈັດຕັ້ງກິດຈະກໍາທີ່ມີກຸ່ມເປົ້າໝາຍເປັນຄົນພິການ. ໃນລະດັບຊາດ, ມີພຽງແຕ່ ກະຊວງສຶກສາທິການ ແລະ ກິລາ ແລະ ກະຊວງສາທາລະນະສຸກ ມີງົບປະມານຈັດສັນສະເພາະເພື່ອຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ແຜນດໍາເນີນງານຂອງຕົນເພື່ອສົ່ງເສີມການສຶກສາຮ່ວມ, ວຽກປິ່ນປົວສຸຂະພາບ ແລະ ການຟື້ນຟູໜ້າທີ່ການ. ແຜນງານ ແລະ ໂຄງການເພື່ອສົ່ງເສີມຄົນພິການຍັງຕ້ອງສືບຕໍ່ເອື່ອຍອີງການຊ່ວຍເຫຼືອຈາຜູ້ໃຫ້ທຶນພາຍນອກ.

### 4.5.3. ຄໍາແນະນໍາ

**ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສະຫວັດດີການສັງຄົມຢູ່ ສປປ ລາວ, ພວກເຮົາມີຂໍ້ສະເໜີແນະນໍາລຸ່ມນີ້ເພື່ອນໍາໄປພິຈາລະນາ.** ຂໍ້ສະເໜີທໍາອິດແມ່ນ ຄວນສ້າງໃຫ້ມີລະບົບຂຶ້ນທະບຽນແບບລວມສູນ ໂດຍໃຫ້ມີການແລກປ່ຽນຂໍ້ມູນຢ່າງຈະແຈ້ງ, ມີການປັບປຸງຂໍ້ມູນເປັນປະຈໍາເພື່ອໃຫ້ສາມາດເກັບກໍາໄດ້ສະພາບການເຄື່ອນໄຫວຕ່າງໆຂອງປະຊາຊົນ, ແກ້ໄຂບັນຫາຄວາມເປັນສ່ວນຕົວ ແລະ ຄຸນນະພາບຂອງຂໍ້ມູນ. ຖານຂຶ້ນທະບຽນຂໍ້ມູນນີ້ຄວນຈະເຊື່ອມໂຍງກັບຖານຂໍ້ມູນຂອງລັດຖະບານທີ່ມີຢູ່ແລ້ວ, ໂດຍອາດຈະໃຫ້ຄູ່ຮ່ວມພັດທະນາເປັນຜູ້ສະໜັບສະໜູນ. ໃນການຫັນການຊ່ວຍເຫຼືອດ້ານສະຫວັດດີການສັງຄົມຜ່ານລະບົບການຂຶ້ນທະບຽນແບບລວມສູນນັ້ນ, ຄວນຈະມີວິທີການແບບຄົບຖ້ວນ ແລະ ມີປະສິດທິພາບ ຈຶ່ງຈະສາມາດບັນລຸຜົນໄດ້ຮັບໃນການຊ່ວຍເຫຼືອຜູ້ທີ່ບອບບາງທີ່ສຸດໄດ້.

**ຂໍ້ສະເໜີທີສອງ ແມ່ນ ຄວນຈະລົງທຶນໃສ່ການຄົ້ນຄ້ວາວິໄຈເພື່ອນໍາໃຊ້ການສ້າງນະໂຍບາຍ, ກົດໝາຍ ແລະ ການວາງແຜນການ.** ການຄົ້ນຄ້ວາດັ່ງກ່າວນີ້ຄວນນໍາໃຊ້ຂໍ້ມູນຈາກລະບົບຕິດຕາມແຜນງານ ໂດຍຜ່ານຕົວຊີ້ບອກຫຼັກ (KPIs) ທີ່ໄດ້ຖືກອອກແບບເພື່ອຕິດຕາມຂໍ້ມູນດ້ານເຂດປົກຄຸມ, ການສະໜອງບໍລິການ, ແລະ ຜົນໄດ້ຮັບຂອງແຜນງານ (ເຊັ່ນ: ຕົວເລກປະຊາກອນທີ່ຫລຸດພົ້ນອອກຈາກຄວາມທຸກຍາກ). ສິ່ງເຫຼົ່ານີ້ຈະເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສະຫວັດດີການສັງຄົມ, ໃຫ້ການຊ່ວຍເຫຼືອຕາມຄວາມຕ້ອງການ ແລະ ແກ້ໄຂຄວາມທຸກຍາກ ແລະ ຄວາມບອບບາງແບບຮອບດ້ານ. ເພື່ອບັນລຸເປົ້າໝາຍທີ່ຕັ້ງໄວ້, ກະຊວງ ຮສສ ຄວນຈະຮ່ວມມືກັບອົງການຈັດຕັ້ງອື່ນໆ ແລະ ຄູ່ຮ່ວມພັດທະນາ ເພື່ອປັບປຸງຂະບວນການເກັບກໍາ ແລະ ວິໄຈຂໍ້ມູນເພື່ອຮັບປະກັນໃຫ້ມີຂໍ້ມູນເຜີຍແຜ່ໃຫ້ກັບຄູ່ຮ່ວມງານ ແລະ ພາກສ່ວນກ່ຽວຂ້ອງເປັນປະຈໍາ ແລະ ທັນການ.

ຄະນະກໍາມະການແຫ່ງຊາດເພື່ອຜູ້ພິການ ແລະ ຜູ້ສູງອາຍຸຄວນໄດ້ຮັບສິດໃນການຕິດຕາມ ແລະ ລາຍງານດ້ານການເຊື່ອມສານຂໍ້ມູນດ້ານຜູ້ພິການເຂົ້າໃນນະໂຍບາຍ ແລະ ແຜນງານຂອງກະຊວງກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາໃນຂັ້ນສູນກາງ ແລະ ທ້ອງຖິ່ນ.

**ຍ້ອນມີຄວາມສ່ຽງດ້ານການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທໍາມະຊາດສູງ, ລັດຖະບານມີເຈດຈໍານົງອອກແບບລະບົບປົກປ້ອງສັງຄົມເພື່ອຮັບມື ແລະ ໂຕ້ຕອບກັບໄພພິບັດໃຫ້ແກ່ຄອບຄົວທີ່ບອບບາງ.** ໃນເມື່ອກ່ອນ, ການຕອບໂຕ້ໄພພິບັດ ຢູ່ ສປປ ລາວ ແມ່ນປະຕິບັດແບບສະເພາະແຕ່ລະກໍລະນີໂດຍທີ່ຂາດວິທີການທີ່ເປັນລະບົບເພື່ອຮັບປະກັນການຕອບໂຕ້ແບບຮີບດ່ວນເຊິ່ງສົ່ງຜົນກະທົບຕໍ່ການໃຊ້ຈ່າຍຂອງງົບປະມານແຫ່ງລັດເກີນຄວາມເປັນຈິງອັນເນື່ອງມາຈາກການຂາດການກະກຽມຢ່າງຮອບຄອບ ແລະ ການຮົ່ວໄຫຼຂອງແຫຼ່ງທຶນ. ການທີ່ມີນະໂຍບາຍປົກປ້ອງສັງຄົມໃນການຮັບມືກັບວິກິດການສຸກເສີນແບບຄົບຊຸດນັ້ນ, ຊຸມຊົນທີ່ມີຄວາມສ່ຽງຈະໄດ້ຮັບການຊ່ວຍເຫຼືອ, ຊີວິດການເປັນຢູ່ຂອງເຂົາເຈົ້າຈະໄດ້ຮັບການປັບປຸງໃຫ້ດີຂຶ້ນ, ໂອກາດທີ່ຈະຕົກເປັນກຸ່ມບອບບາງຕໍ່ວິກິດການຕ່າງໆກໍ່ຈະມີໜ້ອຍກ່ວາ. ນອກຈາກນັ້ນ, ການທີ່ມີລະບົບປົກປ້ອງສັງຄົມຢູ່ແລ້ວນັ້ນ ລັດຖະບານບໍ່ຈໍາເປັນຕ້ອງສ້າງຕັ້ງກອງທຶນໃດໜຶ່ງເກີດຂຶ້ນໃໝ່ອີກໃນກໍລະນີເກີດໄພພິບັດຂຶ້ນ, ລະບົບປົກປ້ອງສັງຄົມທີ່ມີແລ້ວນັ້ນຈະເຮັດໜ້າທີ່ໃນການຮັບມືຢ່າງໄວວາກັບເຫດໄພພິບັດທີ່ເກີດຂຶ້ນ. ຕົວຢ່າງໜຶ່ງແມ່ນການຈ່າຍອຸດໜູນວ່າງງານໃຫ້ແກ່ຜູ້ປະກັນຕົນປະກັນສັງຄົມໃນຊ່ວງການລະບາດຂອງໂຄວິດ-19. ອີກຕົວຢ່າງໜຶ່ງ ແມ່ນການຈ່າຍຊົດເຊີຍລາຍຮັບໃຫ້ແກ່ຜູ້ອອກແຮງງານໃນຂະແໜງຕັດຫຍິບທີ່ໄດ້ຮັບການສະໜັບສະໜູນໂດຍລັດຖະບານເຢຍລະມັນຜ່ານອົງການແຮງງານສາກົນ, ການຈ່າຍຊົດເຊີຍລາຍຮັບນີ້ແມ່ນດໍາເນີນການໄດ້ຢ່າງໄວວາ, ເພາະຂໍ້ມູນຂອງຜູ້ອອກແຮງງານແມ່ນໄດ້ບັນທຶກໄວ້ໃນຖານຂອງລະບົບປະກັນສັງຄົມຢູ່ແລ້ວ. ນອກຈາກນັ້ນ, ຈໍາເປັນຕ້ອງໄດ້ປັບປຸງລະບົບການຄຸ້ມຄອງບໍລິຫານ ແລະ ປະສານງານ, ຈາກນັ້ນກໍ່ຕ້ອງຍົກສູງປະສິດທິພາບ ແລະ ປະສິດທິຜົນຂອງລະບົບການຄຸ້ມຄອງໄພພິບັດ ແລະ ບໍລິການຊ່ວຍເຫຼືອບັນເທົາທຸກ. ເພື່ອຈະບັນລຸເປົ້າໝາຍນີ້ ຕ້ອງໄດ້ສ້າງລະບຽບການຈະແຈ້ງ, ຕ້ອງມີກົນໄກການສື່ສານ ແລະ ຮ່ວມມືກັນລະຫວ່າງຄູ່ຮ່ວມງານຕ່າງໆ.



© Adri Berger/ILO

# ເອກະສານອ້າງອີງ


De, Loveleen, and Marco Schaefer. 2022. Pooled Funding Arrangements in the Lao People s Democratic Republic. ILO.

Health Sector Working Group. 2021. "Overview of Sector Performance in 2021/2021".

ILO. Forthcoming-a. Actuarial Valuation of the National Social Security Fund of the Lao Democratic People s Republic.

———. Forthcoming-b. Actuarial Assessment of the Health Insurance System.

Lao People's Democratic Republic, LSB (Lao Statistics Bureau). 2018. Lao Indicator Survey II 2017: Survey Findings Report. UNICEF.

Lao People's Democratic Republic, LSSO (Lao Social Security Organization). 2022. Annual Report 2020 2021.

Lao People's Democratic Republic, MOH (Ministry of Health). 2021a. Lao National Health Account 2021.

———. 2021b. Health Financing Strategy 2021–2025.

Lao People's Democratic Republic, NHIB (National Health Insurance Bureau). 2024. Annual Report 2023.

Merttens, Fred, Chansathith Chaleunsinh, Wajid Habib, Paul Jasper, Umer Naeem, and Revita Wahyudi. 2024. Understanding Informality and Expanding Social Security Coverage in the Lao People s Democratic Republic.

Oxfam in Laos. 2021. Promoting Informal Workers Access to the Lao Social Security Fund: A Participatory Research Study.

Peabody, John, Mary Tan, David Paculdo, Azusa Satao, and Kirthi Ramesh. 2019. "Quality of Health Care in the Lao People's Democratic Republic", ADBI Working Paper No. 981, July.

Rocha, Luiz Carlos Lumbreras. Unpublished. "Overview of the Current Functioning of Social Security Inspections and Recommendations: Strengthening Social Security Inspection in Lao PDR", 2023 report prepared for the ILO.

UNICEF (United Nations Children's Fund). 2023a. "Press Release on National Assembly of Lao PDR Amends Key Law to Strengthen Child Protection", 9 August 2023.

———. 2023b. "Press Release on Amended Law Marks Breakthrough for Stronger Protection of Children's Rights in Lao PDR", 5 December 2023.

World Bank. 2020a. "Human Capital Index 2020: Lao People's Democratic Republic", October.

———. 2020b. "Press Release on Lao PDR: Poverty Continues to Decline but Progress under Threat", 20 October 2020.

———. 2023a. Lao PDR Economic Monitor: Addressing Economic Uncertainty, May.

———. 2023b. "Macro Poverty Outlook 2023: Lao People's Democratic Republic".

———. 2023c. Lao PDR Economic Monitor: Fiscal Policy for Stability, November.

World Bank and ADB (Asian Development Bank). 2021. Climate Risk Country Profile: Lao PDR.

WHO (World Health Organization). 2015. "Health and Climate Change Country Profile 2015: Lao People's Democratic Republic".

———. 2023a. Tracking Universal Health Coverage: 2023 Global Monitoring Report.

———. 2023b. Progress towards Universal Health Coverage in the Lao People s Democratic Republic: Monitoring Financial Protection 2007 2019.

# ເອກະສານຊ້ອນທ້າຍ 1. ສະຖານະ ການຈັດຕັ້ງປະຕິບັດ ຍຸດທະສາດ NSPS

## ເປົ້າໝາຍ 1: ລະບົບປະກັນສຸຂະພາບຖືກພັດທະນາ ແລະ ຍົກລະດັບຄວາມເຂັ້ມແຂງ.

| ຈຸດປະສົງຍ່ອຍ | ກິດຈະກຳຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນຮັບຜິດຊອບ |
|---|---|---|---|---|
| **ຈຸດປະສົງຍຸດທາສາດ 1.1: ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປະກັນສຸຂະພາບເພື່ອສົ່ງເສີມຄວາມເປັນລະບົບ, ມີປະສິດທິຜົນໃນການຮັບປະກັນການເຂົ້າເຖິງການບໍລິການປິ່ນປົວສຸຂະພາບທົ່ວປວງຊົນ.** | | | | |
| H.I.1. ພັດທະນາ ແລະ ຈັດຕັ້ງປະຕິບັດຂອບນິຕິກຳ ເພື່ອການປົກຄຸມສຸຂະພາບທົ່ວປວງຊົນ | A. ພັດທະນາ ແລະ ດັດແກ້ນິຕິກຳ ແລະ ລະບຽບການກ່ຽວຂ້ອງກັບ ການປະກັນສຸຂະພາບເພື່ອແກ້ໄຂສິ່ງທ້າທາຍ ແລະ ຊ່ອງວ່າງທີ່ກີດກັ້ນ ການຂະຫຍາຍການປົກຄຸມສຸຂະພາບທົ່ວປວງຊົນ. | ປັບປຸງຄູ່ມື ການຈັດຕັ້ງປະຕິບັດ NHI.<br><br>ປັບປຸງຄູ່ມືຄຸ້ມຄອງການເງິນ ຂອງ NHI. | ໄດ້ຈັດກອງປະຊຸມລະດັບວິຊາການຈຳນວນໜຶ່ງກັບພາກສ່ວນກ່ຽວຂ້ອງເພື່ອປັບປຸງຄູ່ມືການຈັດຕັ້ງປະຕິບັດ NHI (ດຳລັດ 470). ຄາດວ່າຈະສຳເລັດພາຍໃນປີ 2024.<br><br>ເຖິງວ່າຮ່າງຄູ່ມືການຄຸ້ມຄອງການເງິນຂອງ NHI ມີຕັ້ງແຕ່ປີ 2019 ກໍຕາມ, ການປັບປຸງຄູ່ມືມີຄວາມຊັກຊ້າ.<br><br>ພ້ອມນັ້ນ, NHIB ກໍ່ມີສ່ວນຮ່ວມໃນກອງປະຊຸມວິຊາການເຊິ່ງສຸມໃສ່ການຍົກລະດັບຄວາມຍືດຢຸ່ນທາງການເງິນລະຫວ່ງ ຫ້ອງການປະກັນສຸຂະພາບແຫ່ງຊາດ ແລະ ກົມແຜນການ ແລະ ການເງິນ (ກຊ ສທ) ເຊິ່ງໄດ້ທົບທວນ ແລະ ປັບປຸງກົນໄກ ແລະ ເອກະສານການເງິນເພື່ອເປັນສ່ວນໜຶ່ງຂອງການປັບປຸງຄູ່ມືການຄຸ້ມຄອງການເງິນ ຂອງ NHI. | NHIB |

| ຈຸດປະສົງຍ່ອຍ | ກິດຈະກຳຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນຮັບຜິດຊອບ |
|---|---|---|---|---|
| | | | NHIB ໄດ້ສຳເລັດການຮ່າງຄູ່ມືຄຸ້ມຄອງການເງິນສຳລັບໂຄງການເພື່ອສ້າງຂີດຄວາມສາມາດໃນການຄຸ້ມຄອງນະໂຍບາຍ. ເວົ້າສະເພາະແມ່ນການສຸມໃສ່ການກວດສອບ ແລະ ການຈ່າຍເງິນຊົດເຊີຍໃຫ້ແກ່ລະບົບປະກັນສຸຂະພາບແຫ່ງຊາດຢູ່ ແຂວງຊຽງຂວາງ ແລະ ຫົວພັນ. ການຮ່ວມມືດັ່ງກ່າວມີການຊ່ວຍເຫຼືອຈາກມູນນິທິເກົາຫຼີເພື່ອການປິ່ນປົວສຸຂະພາບສາກົນ(KOFIH). | |
| | | ສ້າງລະບຽບການຂຶ້ນທະບຽນສະມາຊິກ. | ຍັງບໍ່ທັນເລີ່ມ | |
| | | ປັບປຸງ ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ, 2023 | ປະຈຸບັນກຳລັງຢູ່ໃນຂະບວນການປັບປຸງກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ. ໂດຍສອດຄ່ອງກັບກົດໝາຍວ່າດ້ວຍປະກັນສຸຂະພາບ ເຊິ່ງປະກອບມີຂັ້ນຕອນຫຼັກທີ່ສຳຄັນກໍ່ຄື ການຮັບຮອງເອົາຍຸດທະສາດປະກັນສຸຂະພາບແຫ່ງຊາດ, ການວິເຄາະຜົນໄດ້ຮັບຈາກການລົງທຶນ NHI, ແລະ ການພັດທະນາກອງທຶນປະກັນສຸຂະພາບແຫ່ງຊາດ. ພ້ອມນັ້ນ, ກໍ່ມີການປັບປຸງຄຳສັ່ງ ແລະ ຂໍ້ຕົກລົງຂອງ ລັດຖະມົນຕີກະຊວງສາທາລະນະສຸກ ກ່ຽວກັບການເກັບເງິນຈ່າຍຮ່ວມ ແລະ ການຄິດໄລ່ຕົ້ນທຶນ. ນອກນັ້ນ, ກໍ່ໄດ້ມີການສ້າງຕັ້ງຄະນະກຳມະການເພື່ອຕິດຕາມການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະກັນສຸຂະພາ ແຫ່ງຊາດ. | |
| | | ການສ້າງກົດໝາຍ ແລະ ນິຕິກຳລຸ່ມກົດໝາຍເພື່ອບັນລຸການປົກຄຸມສຸຂະພາບທົ່ວປວງຊົນ. | ຫ້ອງການປະກັນສຸຂະພາບໄດ້ດຳເນີນການປະເມີນຜົນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການປະກັນສຸຂະພາບແຫ່ງຊາດ ໃນເດືອນ 8 ປີ 2023. ການປະເມີນຄັ້ງນີ້ ເປັນການປະເມີນໃນໄລຍະຄົບຮອບ ຫ້າປີ ຂອງການຈັດຕັ້ງປະຕິບັດກົດໝາຍ ແລະ ມີຈຸດປະສົງປະເມີນປະສິດທິຜົນພ້ອມທັງເກັບກຳຄຳຄິດເຫັນຈາກພາກສ່ວນກ່ຽວຂ້ອງໃນຂັ້ນທ້ອງຖິ່ນ ແລະ ກະຊວງກ່ຽວຂ້ອງ. ຄຳເຫັນ ແລະ ຂໍ້ມູນທີ່ເກັບກຳໃນຂັ້ນຕອນການປະເມີນຈະນຳໃຊ້ເພື່ອສະເໜີການປັບປຸງກົດໝາຍໃນປີ 2024. | |
| | B. ການຈັດຕັ້ງປະຕິບັດ, ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການບັງຄັບໃຊ້ກົດໝາຍ | ສ້າງ ຄູ່ມື IEC.<br>ຈັດການສຳມະນາໃຫ້ກຸ່ມເປົ້າໝາຍ ເຊັ່ນ: ຜູ້ສ້າງນະໂຍບາຍ | ມີການຈັດກອງປະຊຸມສຳມະນາ ເພື່ອເຜີຍແຜ່ຂໍ້ມູນ ກ່ຽວກັບ ການປະກັນສຸຂະພາບ NHI ໃຫ້ແກ່ກຸ່ມເປົ້າໝາຍ ລວມທັງ ຜູ້ສ້າງນະໂຍບາຍ. ດັ່ງນັ້ນ, ຈຶ່ງໄດ້ຈັດກອງປະຊຸມ ເພື່ອສະເໜີ ກ່ຽວກັບ ຍຸດທະສາດປະກັນສຸຂະພາບແຫ່ງຊາດ ຢູ່ ສອງ ແຂວງ ກໍຄື ຈຳປາສັກ ແລະ ຫຼວງພະບາງ. | |

| ຈຸດປະສົງຍ່ອຍ | ກິດຈະກໍາຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນຮັບຜິດຊອບ |
|---|---|---|---|---|
| | | ພັດທະນາເວັບໄຊ້ NHI ເພື່ອຈຸດປະສົງໂຄສະນາເຜີຍແຜ່.[1] | ກະຊວງສາທາລະນະສຸກໄດ້ລິເລີ່ມການພັດທະນາເວັບໄຊ້ NHI ເຊິ່ງເປັນສ່ວນໜຶ່ງຂອງວຽກໂຄສະນາຂໍ້ມູນຂ່າວສານ. ໃນຂົງເຂດວຽກງານສຸຂະສຶກສາ, ເຫັນວ່າມີຄວາມຄືບໜ້າຫຼາຍພໍສົມຄວນໃນການຜະລິດ ແລະ ສ້າງສື່ໂຄສະນາ, ໃນນັ້ນລວມມີ: ໂປສະເຕີ້, ປ້າຍໂຄສະນາ, ແລະ ປຶ້ມແຜ່ນພັບ ເພື່ອສົ່ງເສີມນະໂຍບາຍປະກັນສຸຂະພາບພ້ອມທັງຕິດຕັ້ງສາຍດ່ວນ 1509. ສື່ດັ່ງກ່າວຖືກເຜີຍແຜ່ແບບກວ້າງຂວາງຜ່ານຊ່ອງທາງວິທະຍຸ, ໂທລະພາບ, ແລະ ສື່ສັງຄົມທາງອອນລາຍ. ນອກນັ້ນ, ການໂຄສະນາເຜີຍແຜ່ແບບຕັ້ງໜ້າ ແລະ ການຕິດຕາມການປະກັນສຸຂະພາບແຫ່ງຊາດກໍ່ຖືກຈັດຕັ້ງປະຕິບັດຢູ່ຂັ້ນຊຸມຊົນ ແລະ ໂຮງໝໍນ້ອຍຢູ່ທຸກແຂວງ.<br><br>ການສ້າງສາຍດ່ວນໄດ້ບັນລຸຜົນສໍາເລັດ ແລະ ຄວາມຄືບໜ້າຫຼາຍພໍສົມຄວນ. ສາຍດ່ວນສະເພາະ 1509, ສາມາດນໍາໃຊ້ໄດ້ 24 ຊົ່ວໂມງ ໂດຍທີ່ໄດ້ຮັບສາຍທັງໝົດ 9,800 ສາຍຈົນມາຮອດປະຈຸບັນ. ພ້ອມນັ້ນ, ກໍ່ໄດ້ຈັດກອງປະຊຸມເຜີຍແຜ່ສາຍດ່ວນໂດຍທີ່ເຕົ້າໂຮມຜູ້ເຂົ້າຮ່ວມຈາກ ບໍລິສັດລາວໂທລະຄົມ ແລະ ກອງທຶນປະກັນສັງຄົມ (NSSF). | |
| | | ການຮ່ວມມືລະຫວ່າງບັນດາຂະແໜງການກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍປະກັນສັງຄົມ ແລະ ຂະຫຍາຍການປົກຄຸມ. | ດ້ວຍການສະໜັບສະໜູນ ຈາກຄູ່ຮ່ວມພັດທະນາ ເປັນຕົ້ນແມ່ນ ອົງການ ILO, KOFIH, ທະນາຄານໂລກ, SRC ແລະ JICA, ກໍໄດ້ຈັດກອງປະຊຸມ/ການປະເມີນຜົນເພື່ອປຶກສາຫາລື ກ່ຽວກັບ ການຂະຫຍາຍການປົກຄຸມ ຂອງ ການປະກັນສັງຄົມ. ໜຶ່ງໃນວຽກງານຈຸດສຸມ ແມ່ນການປັບປຸງຂອບນິຕິກໍາ ເພື່ອເປັນພື້ນຖານສະໜັບສະໜູນລະບົບ. ຈຸດປະສົງເປົ້າໝາຍ ຂອງ ກອງປະຊຸມ ແມ່ນເພື່ອປຶກສາຫາລື ກ່ຽວກັບ ຍຸດທະສາດ ທີ່ສາມາດ ເພີ່ມທະວີການຂະຫຍາຍການປົກຄຸມຂອງການປະກັນສັງົຄົມ ແລະ ຮັບປະກັນການໃຫ້ອຸດໜູນເພີ່ມຂຶ້ນໃຫ້ປະຊາຊົນແບບກ້ວາງຂວາງ. | |
| | C. ການທົບທວນຊຸດອຸດໜູນຂອງ NHI ເພື່ອຮັບປະກັນການປົກຄຸມ ແລະ ການອຸດໜູນທີ່ພຽງພໍ. | ທົບທວນຊຸດອຸດໜູນປົກປ້ອງສຸຂະພາບ ຂອງສັງຄົມ ແລະ ພັນທະການຈ່າຍຮ່ວມສໍາລັບການປິ່ນປົວທີ່ຈໍາເປັນພື້ນຖານ[3] | ປະຈຸບັນ, ໄດ້ມີການທົບທວນຊຸດອຸດໜູນການປົກປ້ອງສຸຂະພາບຂອງສັງຄົມ ແລະ ພັນທະການຈ່າຍຮ່ວມທີ່ພວມດໍາເນີນການ. ນອກນັ້ນ, ກໍ່ໄດ້ມີການສຶກສາຄົ້ນຄວ້າກ່ຽວກັບການປັບປຸງຂໍ້ຕົກລົງຂອງ ລັດຖະມົນຕີກະຊວງສາທາລະນາສຸກ ສະບັບເລກທີ. 0476/ກຊສທ, ລົງວັນທີ 16 ພຶດສະພາ 2018. ຂໍ້ຕົກລົງດັ່ງກ່າວ ຕິດພັນສະເພາະກ່ຽວກັບກົນໄກເກັບເງິນຈ່າຍຮ່ວມ, ລາຍຈ່າຍ ແລະ ການຄິດໄລ່ຕົ້ນທຶນສໍາລັບກອງທຶນປະກັນສຸຂະພາບ. | |
| | | ສ້າງລາຍການກ່ຽວກັບການບໍລິການທົ່ວໄປ, ສະເພາະ ແລະ ໂຄງສ້າງລາຄາ | ໄດ້ຈັດກອງປະຊຸມຈໍານວນໜຶ່ງເພື່ອວິເຄາະ ແລະ ປະເມີນການສະໜອງການບໍລິການພ້ອມທັງໂຄງສ້າງລາຄາ. | |

| ຈຸດປະສົງຍ່ອຍ | ກິດຈະກຳຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|
| H.I.2. ສ້າງລະບົບ ແລະ ຍົກລະດັບ ຂີດຄວາມສາມາດ ຂອງ ເຈົ້າໜ້າທີ່ປະກັນ ສຸຂະພາບ. | A. ພັດທະນາຂີດຄວາມສາມາດ ຂອງເຈົ້າໜ້າທີ່ປະກັນສຸຂະພາບຢູ່ ທຸກລະດັບ. | ສ້າງກົນໄກຂອງອົງການຈັດຕັ້ງ ແລະ ຂີດ ຄວາມສາມາດໃນການຈັດລຽງບູລິມະສິດການ ບໍລິການຈຳເປັນພື້ນຖານ. | ໄດ້ຈັດການຝຶກອົບຮົມກ່ຽວກັບການວິເຄາະຂໍ້ມູນ ແລະ ກົນໄກຂໍອຸດໜູນປະກັນ ສຸຂະພາບໃຫ້ແກ່ສີ່ແຂວງ ກໍ່ຄື ຫຼວງພະບາງ, ອຸດົມໄຊ, ບໍ່ແກ້ວ, ຜົ້ງສາລີ ເພື່ອສົ່ງເສີມ ການສ້າງກົນໄກ ແລະ ຂີດຄວາມສາມາດເພື່ອຈັດລຽງບູລິມະສິດການບໍລິການຈຳເປັນ ພື້ນຖານ.<br><br>ມາຮອດປະຈຸບັນ, ກໍມີຄວາມຄືບໜ້າໂດຍຜ່ານແຜນງານທີ່ປຶກສາກ່ຽວກັບການສ້າງ ຂີດຄວາມສາມາດໃຫ້ແກ່ລະບົບປະກັນສຸຂະພາບແຫ່ງ ສປປ ລາວ. ກອງປະຊຸມ ສຳ ມະນາຄັ້ງສຸດທ້າຍໄດ້ຈັດຂຶ້ນໃນວັນທີ 15 ທັນວາ 2023 ເພື່ອແລກປ່ຽນຜົນໄດ້ຮັບ ແລະ ທິດທາງໃນອະນາຄົດ ລະຫວ່າງພາກສ່ວນກ່ຽວຂ້ອງລວມທັງ NHIF, KOFIH ແລະ NHIB/MOH. KOFIH ໄດ້ສົ່ງທີ່ປຶກສາດ້ານການບໍລິຫານໂຄງການສະເພາະ ຈາກ ສ. ເກົາຫຼີ ເພື່ອຮ່ວມມືກັບ NHIB ກ່ຽວກັບລະບົບຄຸ້ມຄອງ NHI. ການບໍລິ ການທີ່ປຶກສາລວມມີການແລກປ່ຽນຄວາມຮູ້ປະສົບການດ້ານການບໍລິຫານວຽກ ປະກັນສຸຂະພາບ, ການປຶກສາຫາລືດ້ານນະໂຍບາຍ, ແລະ ສ້າງຂີດຄວາມສາມາດໃຫ້ ແກ່ພະນັກງານ NHIB. | NHIB |
| | | ສ້າງໜ່ວຍງານທີ່ຮັບຜິດຊອບຫຼັກກ່ຽວກັບ ການບໍລິການທີ່ຈຳເປັນພື້ນຖານຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ. | ປະຈຸບັນມີຂໍ້ຈຳກັດດ້ານຂໍ້ມູນເພື່ອປະເມີນຄວາມຄືບໜ້າສຳລັບກິດຈະກຳນີ້ສະເພາະ | |
| | | ການຝຶກອົບຮົມ ກ່ຽວກັບ ການຮັບ, ສົ່ງຕໍ່ ແລະ ປົດປ່ອຍ (ລະບົບ ATD). | ອີງຕາມ ບົດລາຍງານປະຈຳປີ 2022 ຂອງ NHIB, ໄດ້ມີການຈັດການຝຶກອົບຮົມ ກ່ຽວກັບ ການນຳໃຊ້ຖານຂໍ້ມູນປະກັນສຸຂະພາບເພື່ອຮັບ, ສົ່ງຕໍ່ ແລະ ປົດປ່ອຍ ຄົນເຈັບ ຫຼື ລະບົບ ATD ແບບອອບລາຍຢູ່ສີ່ແຂວງ: ຫົວພັນ, ຈຳປາສັກ, ຊຽງຂວາງ ແລະ ວຽງຈັນ. | |
| | | ການຝຶກອົບຮົມດ້ານການຄຸ້ມຄອງການເງິນ. | ປະຈຸບັນຍັງບໍ່ທັນມີຄວາມຄືບໜ້າ. ເຖິງຢ່າງໃດກໍຕາມ, ໜຶ່ງໃນຂໍ້ລິເລີ່ມທີ່ພວມ ດຳເນີນການແມ່ນການພັດທະນາເຄື່ອງມືເພື່ອບັນທຶກ ແລະ ລາຍງານຂໍ້ມູນຂ່າວສານ ເຊິ່ງຈະມີການຝຶກອົບຮົມແບບຮອບໃນຂັ້ນຕອນຕໍ່ໄປສຳລັບພາກສ່ວນທີ່ຮັບຜິດຊອບ ໃນຂອບເຂດທົ່ວປະເທດ. | |
| | | ຝຶກອົບຮົມດ້ານການຍັ້ງຢືນ. | ການຝຶກອົບຮົມເພື່ອການຍັ້ງຢືນຈັດຂຶ້ນທຸກໆປີ | |
| | | ພັດທະນາຫຼັກສູດ ກ່ຽວກັບ ການປະກັນ ສຸຂະພາບ. | ຍັງບໍ່ທັນເລີ່ມເທື່ອ | |

| ຈຸດປະສົງຍ່ອຍ | ກິດຈະກຳຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|
| | | ການຝຶກອົບຮົມກ່ຽວກັບການປະກັນສຸຂະພາບໃຫ້ບຸກຄະລາກອນທຸກລະດັບ. | ໄດ້ມີການຈັດການຝຶກອົບຮົມຈຳນວນໜຶ່ງເພື່ອຍົກລະດັບທັກສະ ແລະ ຄວາມຮູ້ ຂອງພະນັກງານ NHIB ດ້ານການຮ່າງໜັງສືທາງການ. ຈຸດປະສົງຂອງການຝຶກອົບຮົມແມ່ນເພື່ອຍົກລະດັບຄວາມສາມາດຂອງພະນັກງານເພື່ອສາມາດສື່ສານດ້ວຍການຂຽນຢ່າງມີປະສິດທິຜົນ. | |
| | B. ພັດທະນາລະບົບຄຸ້ມຄອງການເງິນທີ່ເໝາະສົມພຽງພໍ ແລະ ຍືນຍົງໃຫ້ແກ່ NHI. | ຍົກລະດັບຄວາມສາມາດດ້ານການຄຸ້ມຄອງການເງິນຢູ່ທຸກລະດັບ (ຈັດຕັ້ງປະຕິບັດວິທີການຄຸ້ມຄອງການເງິນ ແລະ ຂໍ້ມູນຂ່າວສານແບບດິຈິຕອນ) | ໄດ້ຈັດກອງປະຊຸມເພື່ອປຶກສາຫາລືກ່ຽວກັບແຜນຝຶກອົບຮົມເພື່ອຍົກລະດັບຄວາມສາມາດດ້ານການຄຸ້ມຄອງການເງິນຢູ່ທຸກລະດັບ. | |
| | | ການສຶກສາຕົ້ນທຶນ. | ໄດ້ມີກອງປະຊຸມຈັດຂຶ້ນລະຫວ່າງ NHIB ແລະ ສະຖາບັນສາທາລະນາສຸກສາດ ແລະ ການແພດເຂດຮ້ອນ ພ້ອມທັງຄູ່ຮ່ວມພັດທະນາ ເພື່ອປຶກສາຫາລືກ່ຽວກັບການສຶກສາຕົ້ນທຶນ. NHIB ໃນຖານະທີ່ເປັນເຈົ້າຂອງໂຄງການໄດ້ແຕ່ງຕັ້ງໃຫ້ສະຖານບັນເປັນຜູ້ດຳເນີນການສຶກສາ. ການຕັດສິນໃຈດັ່ງກ່າວແມ່ນໄດ້ຕົກລົງເຫັນດີກັບທ່ານລັດຖະມົນຕີ. | |
| | | ອອກແບບກົນໄກການບໍລິການຊຳລະສະສາງ. | ຍັງບໍ່ທັນເລີ່ມຕົ້ນ | |
| | C. ພັດທະນາ ແລະ ຈັດຕັ້ງປະຕັ້ງປະຕິບັດລະບົບຕິດຕາມ ແລະ ຄຸ້ມຄອງຂໍ້ມູນຂ່າວສານສະເພາະ ແລະ ເຊື່ອມສານເພື່ອຍົກລະດັບປະສິດທິພາບໃນການຄຸ້ມຄອງລະບົບປະກັນສຸຂະພາບໃນທຸກລະດັບ. | ພັດທະນາ/ທັນ ລະບົບຖານຂໍ້ມູນເປັນທັນສະໄໝ (ສະມາຊິກ ແລະ ATD). | ການຈັດຕັ້ງປະຕິບັດລະບົບ ATD ກຳລັງຢູ່ໃນຂັ້ນຕອນລໍຖ້າ. ເຖິງຢ່າງໃດກໍຕາມ, ກະຊວງສາທາລະນາສຸກໂດຍຮ່ວມມືກັບມູນນິທິ ເກົາຫຼີເພື່ອການປິ່ນປົວສຸຂະພາບສາກົນ (KOFIH), ມີຄວາມໝາຍໝັ້ນເພື່ອຍົກລະດັບປະສິດທິຜົນຂອງລະບົບຊຳລະສະສາງສຳລັບລະບົບປະກັນສຸຂະພາບແຫ່ງຊາດ. ອົງປະກອບໜຶ່ງຂອງໂຄງການນີ້ແມ່ນການປັບປຸງລະບົບຂໍ້ມູນຂ່າວສານ ແລະ ຄວາມສາມາດໃນການຄຸ້ມຄອງຂໍ້ມູນຈາກລະບົບທົບທວນການຂໍອດໝູນຂອງລະບົບປະກັນສຸຂະພາບແຫ່ງຊາດພາຍໃນປີ 2025. ໃນວັນທີ 6 ພຶດສະພາ 2022, ໄດ້ມີການເຊັນບົດບັນທຶກຄວາມເຂົ້າໃຈ (MOU) ແລະ ດຳເນີນການສຶກສາປີຖານຢູ່ພື້ນທີ່ເປົ້າໝາຍຂອງແຂວງຊຽວຂວາງ ແລະ ຫົວພັນ. | |

| ຈຸດປະສົງຍ່ອຍ | ກິດຈະກຳຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|
| | | ລະບົບຂຶ້ນທະບຽນສະມາຊິກປະກັນສຸຂະພາບແຫ່ງຊາດ. | ປະຈຸບັນ ບັນຫາຍັງຢູ່ໃນຂັ້ນຕອນການປຶກສາຫາລື. ພາຍໃຕ້ ໂຄງການຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນາການຢູ່ເຂດຊົນນະບົດ ຈັດຕັ້ງປະຕິບັດໂດຍກະຊວງກະສິກຳ ແລະ ປ່າໄມ້ ສະໜັບສະໜູນໂດຍທະນາຄານໂລກກໍ່ໄດ້ສຸມໃສ່ການພັດທະນາອົງປະກອບຕົ້ນຕໍຂອງລະບົບປົກປ້ອງສັງຄົມ. ໃນນັ້ນ ກໍ່ລວມມີການສ້າງຖານຈົດທະບຽນສັງຄົມທີ່ນຳໃຊ້ຂໍ້ມູນປະເມີນຄວາມທຸກຍາກ ແລະ ລະບົບລະບຸຄົວເຮືອນທີ່ເປັນເປົ້າໝາຍທີ່ມີຢູ່. ຖານຈົດທະບຽນສັງຄົມຈະຊ່ວຍລະບຸຜູ້ໄດ້ຮັບຜົນປະໂຫຍດຂອງໂຄງການຕ່າງໆເຊັ່ນການໃຫ້ເງິນອຸດໜູນ (CCT). ນອກນັ້ນ, ໂຄງການກໍ່ໄດ້ສ້າງຖານຈົດທະບຽນຜູ້ໄດ້ຮັບຜົນປະໂຫຍດແບບເຊື່ອມສານ ເພື່ອປັບປຸງການປະສານງານ ແລະ ການຕິດຕາມການນຳໃຊ້ຊັບພະຍາກອນຂອງບັນດາໂຄງການຢູ່ພື້ນທີ່ເປົ້າໝາຍ. | |
| | | ປັບປຸງລະບົບການລາຍງານ ແລະ ການກວດສອບ. | ມີຄວາມພະຍາຍາມໃນການປັບປຸງລະບົບການລາຍງານ ແລະ ການກວດສອບ. ນອກນັ້ນ, ກໍ່ໄດ້ມີການເຜີຍແຜ່ກົດໝາຍວ່າດ້ວຍການປະກັນສຸຂະພາບ ແລະ ນິຕິກຳກ່ຽວຂ້ອງກ່ຽວກັບການໂຮມລະບົບສຳລັບບັນດາແຂວງທີ່ມີການຕິດຕາມ ແລະ ກວດສອບ. | |
| | D. ການຖອດຖອນບົດຮຽນປະສົບການ ຈາກປະເທດສະມາຊິກອາຊຽນ ແລະ ສາກົນ. | ການເຂົ້າຮ່ວມກອງປະຊຸມ/ກອງປະຊຸມສຳມະນາ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນບົດຮຽນ ແລະ ເຕັກນິກວິຊາການດ້ານການປະກັນສຸຂະພາບ. | ໂດຍໄດ້ຮັບການສະໜັບສະໜູນຈາກ JICA, WHO, KOFIH ແລະ WB, ກໍ່ໄດ້ຈັດກອງປະຊຸມສຳມະນາເພື່ອແລກປ່ຽນບົດຮຽນດ້ານວິຊາການທີ່ກ່ຽວຂ້ອງກັບລະບົບປະກັນສຸຂະພາບແຫ່ງຊາດ. ນອກນັ້ນ, ກໍ່ໄດ້ມີການສ້າງສາຍພົວພັນຮ່ວມມືກັບ ຫ້ອງການປະກັນສຸຂະພາບແຫ່ງຊາດພາກ 8 ຄະນະອຸດອນທານີ, ຄູ່ຮ່ວມພັດທະນາ ແລະ ພາກສ່ວນກ່ຽວຂ້ອງ. ພ້ອມນັ້ນ, ກໍ່ໄດ້ຈັດການແລກປ່ຽນສອງຝ່າຍກ່ຽວກັບວຽກປະກັນສຸຂະພາບ ແລະ ແລກປ່ຽນຄວາມຮູ້ວິຊາການ. ໄດ້ຈັດກອງປະຊຸມທາງໄກທີ່ສຸມໃສ່ຫົວຂໍ້ການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປະກັນສຸຂະພາບຂອງ ສປປ ລາວ ໂດຍຜ່ານການແລກປ່ຽນບົດຮຽນກ່ຽວກັບລະບົບການຂໍອຸດໜູນຂອງ NHSO ປະເທດໄທ. ກິດຈະກຳເຫຼົ່ານີ້ເປັນການສະແດງເຖິງຄວາມໝາຍໝັ້ນເພື່ອການຮຽນຮູ້ ແລະ ແລກປ່ຽນບົດຮຽນແບບຕໍ່ເນື່ອງເພື່ອປັບປຸງລະບົບ NHI ຢູ່ ສປປລາວ. | |

| ຈຸດປະສົງຍ່ອຍ | ກິດຈະກຳຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|
| H.I.3. ສ້າງ ແລະ ປະຕິບັດຕາມມາດຕະຖານ ຂັ້ນຕ່ຳສຳລັບ ສະຖານທີ່ປິ່ນປົວ. | A. ກຳນົດ ແລະ ຈັດຕັ້ງປະຕິບັດ ມາດຕະຖານຄຸນນະພາບຂັ້ນຕ່ຳ ສຳລັບການໃຫ້ບໍລິການປິ່ນປົວ (ອັດຕາຂອງວິຊາການປິ່ນປົວຕໍ່ກັບ ປະຊາກອນ, ການເຂົ້າເຖິງ ແລະ ຄຸນນະພາບ ຂອງ ສະຖານທີ່ປິ່ນປົວ, ອຸປະກອນການແພດ, ຢາພື້ນຖານ). | ນຳໃຊ້ເງື່ອນໄຂການອອກໃບອະນຸຍາດຜູ້ໃຫ້ບໍລິການ/ການຢັ້ງຢືນ ເພື່ອເຮັດສັນຍາ, ຊຳລະ, ຊຳລະໃນມູນຄ່າສູງ ຫຼື ໄດ້ຮັບເອກະລາດ.<br><br>ການຮັບປະກັນຄຸນນະພາບ ແລະ ຄວາມເປັນເອກະລາດ ຂອງ ໂຮງໝໍ. | ປະຈຸບັນມີຂໍ້ມູນຈຳກັດເພື່ອປະເມີນຄວາມຄືບໜ້າ ຂອງ ກິດຈະກຳນີ້.<br><br>ປະຈຸບັນ ມີຄວາມຄືບໜ້າ ໃນການຮັບປະກັນຄຸນນະພາບ ແລະ ສົ່ງເສີມຄວາມເປັນເອກະລາດ ຂອງ ໂຮງໝໍ, ລວມທັງນະໂຍບາຍ 5 ດີ 1 ພໍໃຈ (ນະໂຍບາຍດອກຈຳປາ). ມີການຈັດກອງປະຊຸມປຶກສາຫາລືກັບຂະແໜງການ, ກົມກອງ ແລະ ຄູ່ຮ່ວມພັດທະນາທີ່ກ່ຽວຂ້ອງເພື່ອກະກຽມສ້າງນິຕິກຳກ່ຽວກັບຄວາມເປັນເອກະລາດຂອງໂຮງໝໍ. | ກະຊວງສາທາລະນະສຸກ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ |
| | B. ປັບປຸງ ແລະ ຄວບຄຸມການປະຕິບັດສອດຄ່ອງກັບຄູ່ມືປິ່ນປົວແຫ່ງຊາດ. | ເພີ່ມທະວີການຕິດຕາມກວດກາ ແລະ ຢັ້ງຢືນ. | ສຳລັບລາຍລະອຽດຄວາມຄືບໜ້າການຈັດຕັ້ງປະຕິບັດ ແມ່ນກະລຸນາເບິ່ງທີ່ການສ້າງ ແລະ ປະຕິບັດຕາມມາດຕະຖານຂັ້ນຕ່ຳຂອງສະຖານທີ່ປິ່ນປົວ. ມີໂຄງການຈຳນວນໜຶ່ງທີ່ໄດ້ຈັດຕັ້ງປະຕິບັດ ເພື່ອສະໜັບສະໜູນຄວາມພະຍາຍາມດັ່ງກ່າວ, ລວມທັງຂໍ້ລິເລີ່ມຂອງ JICA ເພື່ອປັບປຸງຄຸນນະພາບຂອງການບໍລິການ ແລະ ການຄຸ້ມຄອງການເງິນໃຫ້ແກ່ໂຮງໝໍ. ນອກນັ້ນ, ໂຄງການ ADB ເພື່ອປັບປຸງຄຸນນະພາບຂອງການປິ່ນປົວສຸຂະພາບ (2023-2028) ມີຈຸດປະສົງເພີ່ມທະວີຄວາມສາມາດ ຂອງ ກະຊວງສາທາລະນາສຸກ ເພື່ອສະໜອງການບໍລິການປິ່ນປົວສຸຂະພາບທີ່ມີຄຸນນະພາບສູງຢູ່ຂັ້ນແຂວງ ແລະ ເມືອງ. ພ້ອມນັ້ນ, ໂຄງການສົ່ງເສີມການເຂົ້າເຖິງການບໍລິການດ້ານສຸຂະພາບ ແລະ ໂພຊະນາການຂອງທະນາຄານໂລກ (2020-2029) ສຸມໃສ່ການປັບປຸງການເຂົ້າເຖິງການບໍລິການທີ່ມີຄຸນນະພາບ ແລະ ການສະໜອງຊັບພະຍາກອນໃຫ້ແກ່ໂຮງໝໍນ້ອຍແບບຍືດຍຸ່ນເພື່ອປະຕິບັດລາຍຈ່າຍດ້ານການດຳເນີນງານສະເພາະ. | |
| | C. ປັບປຸງ ຄຸນນະພາບ ຂອງ ສະຖານທີ່ປິ່ນປົວ, ເພີ່ມຈຳນວນ ຂອງ ວິຊາການປິ່ນປົວ, ແລະ ຮັບປະກັນວ່າມີຢາພື້ນຖານ ແລະ ອຸປະກອນການແພດທີ່ພຽງພໍ. | ສ້າງຄຳແນະນຳ ເພື່ອຈັດຕັ້ງປະຕິບັດ ດຳລັດ 349, ແລະ ເຊື່ອມໂຍງການຈ່າຍເງິນນະໂຍບາຍ ກັບການປັບປຸງຄຸນນະພາບ.<br><br>ສະໜອງອຸປະກອນໃຫ້ແກ່ NHIB, PHIB ແລະ DHIB. | | |
| H.I.4 ເພີ່ມການເຂົ້າເຖິງການບໍລິການປິ່ນປົວສຸຂະພາບຢູ່ເຂດຊົນນະບົດ. | A. ການຂະຫຍາຍການບໍລິການ/ການເຂົ້າເຖິງລວມທັງສິ່ງອຳນວຍຄວາມສະດວກທີ່ຈຳເປັນ, ອຸປະກອນການແພດ, ບຸກຄະລາກອນທີ່ມີທັກສະ ແລະ ຢາຈຳເປັນພື້ນຖານ. | ສ້າງກົນໄກ ແລະ ຍົກລະດັບຂີດຄວາມສາມາດເພື່ອຈັດລຽງບູລິມະສິດໃນການບໍລິການຈຳເປັນພື້ນຖານ; ສ້າງໜ່ວຍງານທີ່ຮັບຜິດຊອບການປິ່ນປົວຂັ້ນພື້ນຖານໃນຂັ້ນສູນກາງຈົນຮອດທ້ອງຖິ່ນ. | NHIB ແລະ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຮ່ວມມືກັນເພື່ອນຳໃຊ້ລະບົບຈົດທະບຽນສັງຄົມ ເພື່ອໃຫ້ການຊ່ວຍເຫຼືອໃຫ້ແກ່ຜູ້ທຸກຍາກ ແລະ ອ່ວຽງານ. ພາຍໃຕ້ການຮ່ວມມືດັ່ງກ່າວ, NHI ໄດ້ຈັດກອງປະຊຸມປຶກສາຫາລືກັບບັນດາພາກສ່ວນກ່ຽວຂ້ອງ ແລະ ກຳລັງສະຫຼຸບການຮ່າງບົດບັນທຶກຄວາມເຂົ້າໃຈເພື່ອລົງນາມ ແລະ ຫັນການຮ່ວມມືໃຫ້ເປັນທາງການ. | ກະຊວງສາທາລະນະສຸກ |

| ຈຸດປະສົງຍ່ອຍ | ກິດຈະກຳຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|
| | B. ການຂະຫຍາຍການປົກຄຸມຂອງການປະກັນສຸຂະພາບໄປສູ່ເຂດຊົນນະບົດດ້ວຍການອອກບັດປະກັນສຸຂະພາບໃຫ້ແກ່ຄົນລາວທັງໝົດ. | ເພີ່ມຄວາມຮັບຮູ້/ການປະຕິບັດສອດຄ່ອງກ່ຽວກັບສິດເງື່ອນໄຂ ແລະ ພັນທະ (ເຊັ່ນ: ເອກະສານ) ດ້ວຍການອອກບັດໃຫ້ແກ່ສະມາຊິກ NHI (ເລີ່ມຈາກຜູ້ທຸກຍາກ) | ຂໍ້ລິເລີ່ມດັ່ງກ່າວໄດ້ຈັດຕັ້ງ ແລະ ອອກບັດໃຫ້ແກ່ຜູ້ທຸກຍາກພ້ອມທັງໄດ້ຂຶ້ນທະບຽນ ແລະ ອອກບັດໃຫ້ແກ່ບຸກຄົນທີ່ຄົບເງື່ອນໄຂຢູ່ແຂວງທີ່ເປັນເປົ້າໝາຍທົດລອງກໍ່ຄື ຊຽງຂວາງ ແລະ ຫົວພັນ. ຈຸດປະສົງແມ່ນເພື່ອຮັບປະກັນໃຫ້ບຸກຄົນມີເອກະສານພຽງພໍເພື່ອເຂົ້າເຖິງການບໍລິການສຸຂະພາບ ແລະ ປະຕິບັດພັນທະຂອງຕົນພາຍໃຕ້ NHI. | |
| H.I.5. ຮັບປະກັນການຈັດສັນງົບປະມານຂອງລັດທີ່ພຽງພໍ ແລະ ທັນເວລາໃຫ້ແກ່ການປະກັນສຸຂະພາບ. | A. ຈັດສັນງົບປະມານຂອງລັດແບບພຽງພໍ ແລະ ທັນເວລາເພື່ອປະກອບສ່ວນເຂົ້າໃນກອງທຶນ, ເພື່ອສະໜັບສະໜູນການຈ່າຍເງິນສົມທົບຂອງພະນັກງານລັດທີ່ເປັນຜູ້ປະກັນຕົນໃນລະບົບປະກັນສຸຂະພາບ. | ອຳນວຍການຫັນຈາກກອງທຶນຂອງ GAVI ແລະ ກອງທຶນໂລກ, ປັບປຸງງົບປະມານຂອງ NHI ເພື່ອກວມເອົາການບໍລິການຈຳເປັນພື້ນຖານອີງຕາມຊຸດອຸດໜູນຂອງ NHI.<br><br>ປະຕິຮູບການລະດົມທຶນເພື່ອວຽກສຸຂະພາບເພື່ອກ້າວໄປສູ່ການປົກຄຸມແບບທົ່ວປວງຊົນ: ເພີ່ມທຶນ, ທຶນສະສົມຮ່ວມ, ແລະ ຈັດຕັ້ງປະຕິບັດກອງທຶນ. | ແຜນງົບປະມານສຳລັບປີທີສອງຂອງງົບປະມານທີ່ເບີກຈ່າຍອີງຕາມຕົວຊີ້ບອກຂອງ ໂຄງການສົ່ງເສີມການເຂົ້າເຖິງການບໍລິການສຸຂະພາບ ແລະ ໂພຊະນາການ (HANSA) ໄດ້ມີການສະຫຼຸບເປັນທີ່ຮຽບຮ້ອຍ. ແຜນງົບປະມານດັ່ງກ່າວກວມເອົາການຈັດຕັ້ງປະຕິບັດກິດຈະກຳພາຍໃຕ້ ໂຄງການ HANSA ສຳລັບປີ 2022-2023.<br><br>ສຳລັບຍຸດທະສາດການເງິນຂອງ ຂະແໜງສາທາລະນາສຸກ 2021-2025, ແຜນດຳເນີນງານ ແລະ ງົບປະມານສຳລັບໄລຍະທີສາມຂອງ ການປົກຄຸມສຸຂະພາບທົ່ວປວງຊົນ (UHC 3) ຖືກຮັບຮອງແລ້ວ. ບັນດາແຜນທີ່ກ່າວມານັ້ນໄດ້ກຳນົດກິດຈະກຳສະເພາະ ແລະ ການຈັດສັນຊັບພະຍາກອນທາງການເງິນເພື່ອສົ່ງເສີມການບັນລຸເປົ້າໝາຍ UHC. ນອກນັ້ນ, ກໍ່ໄດ້ສ້າງແຜນປະຈຳປີລະຫວ່າງສະພາບໍລິຫານຂອງລະບົບປະກັນສຸຂະພາບ (NHIB) ແລະ ຄູ່ຮ່ວມພັດທະນາຕົ້ນຕໍ. ແຜນດັ່ງກ່າວລະບຸຂົງເຂດການຮ່ວມມື ແລະ ການສະໜັບສະໜູນເພື່ອບັນລຸຈຸດປະສົງກ່ຽວຂ້ອງກັບການປົກຄຸມສຸຂະພາບທົ່ວປວງຊົນ.<br><br>ຫ້ອງການປະກັນສຸຂະພາບແຫ່ງຊາດ, ໂດຍໄດ້ຮັບການສະໜັບສະໜູນຈາກທະນາຄານໂລກ, ໄດ້ມີສ່ວນຮ່ວມຢ່າງຕັ້ງໜ້າໃນເຄືອຂ່າຍແລກປ່ຽນ ແລະ ຖອດຖອນບົດຮຽນ (Joint Learning Network) ກ່ຽວກັບນະໂຍບາຍການລະດົມທຶນເພື່ອການປະກັນສຸຂະພາບ, ການຈັດສັນ ແລະ ການນຳໃຊ້ພ້ອມທັງພາກປະຕິບັດທີ່ດີ ເພື່ອສົ່ງເສີມການປົກຄຸມສຸຂະພາບທົ່ວປວງຊົນ. ເຄືອຂ່າຍແລກປ່ຽນ ແລະ ຖອດຖອນບົດຮຽນເປັນໜຶ່ງໃນວິທີການທີ່ເປັນນະວັດຕະກຳໃໝ່ ແລະ ຂັບເຄື່ອນດ້ວຍພາກສ່ວນກ່ຽວຂ້ອງພາຍໃນ. | ກະຊວງການເງິນ, ກະຊວງ ສາທາລະນະສຸກ |
| | B. ລະດົມຊັບພະຍາກອນພາຍໃນ ແລະ ຈາກຕ່າງປະເທດ | ເຮັດວຽກຮ່ວມກັບ ກຊ ກງ ເພື່ອເພີ່ມອາກອນສຳລັບຢາສູບ, ເຄື່ອງດື່ມທີ່ມີທາດ | ພະນັກງານລັດຖະກອນ, ໂດຍສະເພາະຈາກ NHIB (ກະຊວງສາທາ ແລະ ກະຊວງການເງິນ) ແລະ ໄດ້ຮັບການສະໜັບສະໜູນຈາກ WB, ກໍໄດ້ເຂົ້າຮ່ວມກອງ | |

| ຈຸດປະສົງຍ່ອຍ | ກິດຈະກຳຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|
| | ເພື່ອຮັບປະກັນການບໍລິການປິ່ນປົວສຸຂະພາບ ໃຫ້ແກ່ຜູ້ທຸກຍາກ. | ເຫຼົ້າ ແລະ ນ້ຳຕານ, ແລະ ນ້ຳມັນ ແລະ ຈັດສັນສະເພາະວຽກສຸຂະພາບ (ແລະ ຮັບປະກັນວ່າ ອາກອນທີ່ເກັບໄດ້ແມ່ນຮັກສາ ແລະ ໂອນໃຫ້ NHI). | ປະຊຸມສຳມະນາ, ການຝຶກອົບຮົມ ແລະ ກອງປະຊຸມຕ່າງໆກ່ຽວກັບການລະດົມທຶນພາຍໃນຜ່ານການນຳໃຊ້ອາກອນສຸຂະພາບ. ສິ່ງທີ່ພົ້ນເດັ່ນແມ່ນການແຕ່ງຕັ້ງຄະນະກຳມະການປະສານງານກ່ຽວກັບອາກອນສຸຂະພາບໂດຍທ່ານລັດຖະມົນຕີກະຊວງສາທາລະນະສຸກ ໃນວັນທີ 13 ກຸມພາ 2023. ຄະນະດັ່ງກ່າວ ມີໜ້າທີ່ໃຫ້ຄຳແນະນຳກ່ຽວກັບບັນຫາອາກອນສຸຂະພາບ ແລະ ອຳນວຍຄວາມສະດວກໃຫ້ແກ່ການປຶກສາຫາລືຢ່າງເປັນທາງການລະຫວ່າງພາກສ່ວນກ່ຽວຂ້ອງ ໂດຍສະເພາະແມ່ນກັບປະເທດທີ່ເປັນຄູ່ຮ່ວມພັດທະນາ. ດ້ວຍເຫດນັ້ນ, ລັດຖະບັນຍັດຂອງປະທານປະເທດ ເລກທີ 003 (ລົງວັນທີ 09 ຕຸລາ 2023) ຈຶ່ງໄດ້ລະບຸຢາສູບ, ເຄື່ອງດື່ມທີ່ມີທາດເຫຼົ້າ, ເຄື່ອງດື່ມທີ່ມີທາດນ້ຳຕານເປັນລາຍການທີ່ມີອັດຕາອາກອນຊົມໃຊ້ເພີ່ມຂຶ້ນ. | |
| | | ເຮັດວຽກກັບ ກຊ ຮສສ, ກຊ ກງ, ກຊ ອຸດສາຫະກຳ ແລະ ການຄ້າ, ກົມພາສີ, ສະຫະພັນກຳມະບານ ແລະ ພາກເອກະຊົນ ເພື່ອເພີ່ມສະມາຊິກປະກັນສັງຄົມ. | ປະຈຸບັນມີຄວາມພະຍາຍາມເພື່ອຈະເພີ່ມສະມາຊິກຂອງຂະແໜງການພາກວິສາຫະກິດເຂົ້າລະບົບປະກັນສັງຄົມໂດຍຜ່ານການຮ່ວມມືກັບບັນດາພາກສ່ວນກ່ຽວຂ້ອງ. ຫ້ອງການ NHIB ໄດ້ບັນລຸນິຕິກຳໝາຍອັນສຳຄັນ ກໍ່ຄືການເຊັນ MOUກັບອົງການກາແດງສະວິດ ເພື່ອຈັດຕັ້ງປະຕິບັດໄລຍະ III ຂອງ ໂຄງການປົກຄຸມສຸຂະພາບທົ່ວປວງຊົນ ຢູ່ ສປປ ລາວ. ອີກ MOU ໜຶ່ງທີ່ມີຄວາມສຳຄັນ ແລະ ໄດ້ລົງນາມແມ່ນລະຫວ່າງ NHIB ແລະ KOFIH ເພື່ອຍົກລະດັບຄວາມສາມາດໃນການຄຸ້ມຄອງນະໂຍບາຍ, ເວົ້າສະເພາະ ກໍ່ຄືການກວດສອບ ແລະ ການຊຳລະເງິນຊົດເຊີຍປະກັນສຸຂະພາບ. | |

# ເປົ້າໝາຍ 2: ສືບຕໍ່ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປະກັນສັງຄົມ.

| ຈຸດປະສົງຍ່ອຍ | ກິດຈະກຳຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|
| **ຈຸດປະສົງຍຸດທະສາດ 2.1: ແຮງງານ ແລະ ຜູ້ປະກອບອາຊີບອິດສະຫຼະທຸກຄົນ ໃນພາກວິສາຫະກິດ ຖືກປົກຄຸມດ້ວຍລະບົບປະກັນສັງຄົມ** | | | | |
| S.S.1. ການຂະຫຍາຍການປົກຄຸມປະກັນສັງຄົມໃຫ້ແກ່ແຮງງານທຸກຄົນໃນພາກວິສາຫະກິດ. | A. ຂະຫຍາຍການປົກຄຸມປະກັນສັງຄົມໃຫ້ແກ່ແຮງງານທີ່ເຮັດວຽກໃນວິສາຫະກິດທີ່ຂຶ້ນທະບຽນກັບ ກະຊວງອຸດສາຫະກຳ ແລະ ການຄ້າ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ. | ສຶກສາຄົ້ນຄ້ວາ ກ່ຽວກັບ ອຸປະສັກ ຕໍ່ກັບຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃນການເຂົ້າເປັນສະມາຊິກຂອງລະບົບປະກັນສັງຄົມ, ລວມທັງນະໂຍບາຍເພື່ອຂະຫຍາຍການປົກຄຸມ ແລະ ການກຳນົດຂະແໜງການບູລິມະສິດເພື່ອທົດລອງການຂະຫຍາຍການປົກຄຸມ. | ມີຂໍ້ລິເລີ່ມທີ່ຖືກຈັດຕັ້ງປະຕິບັດເພື່ອອຳນວຍຄວາມສະດວກໃຫ້ແກ່ການຂະຫຍາຍການປົກຄຸມປະກັນສັງຄົມແບບກວ້າງຂວາງ. ນອກນັ້ນ, ກໍ່ໄດ້ມີການຈັດກອງປະຊຸມເພື່ອຂະຫຍາຍການປົກຄຸມໂດຍທີ່ເນັ້ນໃສ່ການປັບປຸງຂອບນິຕິກຳເພື່ອພັດທະນາລະບົບໂດຍລວມ. | ອົງການປະກັນສັງຄົມແຫ່ງຊາດ |
| | | ໂຄງການເພື່ອຂະຫຍາຍການປົກຄຸມປະກັນສັງຄົມ (ເຊັ່ນ: ແຮງງານຂອງວິສາຫະກິດທີ່ຂຶ້ນທະບຽນ) ໃນຂັ້ນເມືອງຢູ່ຂອບເຂດທົ່ວປະເທດ. | ປະຈຸບັນມີຄວາມຄືບໜ້າຫຼາຍພໍສົມຄວນໃນການຂະຫຍາຍການປົກຄຸມປະກັນສັງຄົມໃຫ້ແກ່ແຮງງານໃນວິສາຫະກິດທີ່ຂຶ້ນທະບຽນກັບກະຊວງອຸດສາຫະກຳ ແລະ ການຄ້າ. ມີການຈັດຕັ້ງປະຕິບັດໂຄງການໄລຍະສັ້ນເພື່ອຄໍ້າປະກັນຜູ້ປະກັນຕົນທັງໝົດທີ່ເຮັດວຽກໃນໂຮງງານຕັດຫຍິບທີ່ຖືກຜົນກະທົບຈາກໂຄວິດ-19 ໂດຍໄດ້ຮັບການສະໜັບສະໜູນຈາກອົງການ ILO. ໂຄງການໄດ້ປະສົບຜົນສຳເລັດໃນການຂຶ້ນທະບຽນ ແລະ ອອກບັດປະກັນສັງຄົມໃຫ້ແກ່ຜູ້ປະກັນຕົນໃໝ່ພ້ອມທັງອຳນວຍຄວາມສະດວກໃນການອອກບັດໃໝ່ທົດແທນໃຫ້ແກ່ພະນັກງານລັດຖະກອນ, ວິສາຫະກິດ ແລະ ຜູ້ປະກັນຕົນພາກສະໝັກໃຈ. ນອກນັ້ນ, ໂຄງການກໍ່ໄດ້ຂຶ້ນທະບຽນໃຫ້ແກ່ຜູ້ຮັບອຸດໜູນບຳນານຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ຂຶ້ນທະບຽນຜູ້ຮັບອຸດໜູນເສຍອົງຄະໃນຂອບເຂດທົ່ວປະເທດ. | |
| | | ຈັດຕັ້ງປະຕິບັດໂຄງການເພື່ອພັດທະນາ ແລະ ປັບປຸງລະບົບກວດກາປະກັນສັງຄົມ ແລະ ນຳໃຊ້ມາດຕະການຕໍ່ກັບຜູ້ລະເມີດ ແລະ ເພີ່ມທະວີການກວດກາປະກັນສັງຄົມຢູ່ຂັ້ນທ້ອງຖິ່ນ. | ເຖິງວ່າປະຈຸບັນໄດ້ປັບປຸງກົດໝາຍວ່າດ້ວຍປະກັນສັງຄົມກໍຕາມ, ການບັງຄັບໃຊ້ກົດໝາຍຕໍ່ກັບຜູ້ລະເມີດຍັງບໍ່ທັນປະຕິບັດໄດ້ເຕັມເມັດເຕັມໜ່ວຍ. ເຈົ້າໜ້າທີ່ກວດກາປະກັນສັງຄົມບໍ່ມີພາລະບົດບາດອີງຕາມກົດໝາຍ ຫຼື ໄດ້ດຳເນີນການກວດກາຢູ່ສະຖານທີ່ຕົວຈິງ ຫຼື ນຳໃຊ້ມາດຕະຖານປັບໄໝ ແລະ ລົງໂທດ. ໜ້າວຽກເຫຼົ່ານີ້ສ່ວນໃຫຍ່ແມ່ນພະນັກງານຂອງ ອົງການປະກັນສັງຄົມແຫ່ງຊາດ ແລະ ຫ້ອງການທ້ອງຖິ່ນເປັນຜູ້ຈັດຕັ້ງປະຕິບັດ ເຊິ່ງປະຈຸບັນຍັງສືບຕໍ່ປະເຊີນໜ້າກັບຂໍ້ຈຳກັດ | |

| ຈຸດປະສົງຍ່ອຍ | ກິດຈະກຳຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|
| | | | ໃນການກວດກາວິສາຫະກິດທີ່ເປັນເປົ້າໝາຍ ແລະ ນຳໃຊ້ມາດຕະຖານທີ່ແທດເໝາະຕໍ່ກັບຜູ້ຫຼົບໜີ ແລະ ບໍ່ຢາກເຂົ້າເປັນສະມາຊິກຂອງລະບົບປະກັນສັງຄົມ. | |
| | | ໂຄງການເພື່ອປັບປຸງ IECs ແລະ ກິດຈະກຳປະຊາສຳພັນໂດຍສະເພາະແມ່ນການເຜີຍແຜ່ ກົດໝາຍວ່າດ້ວຍປະກັນສັງຄົມ ແລະ ລະບຽບການກ່ຽວຂ້ອງ ຫ້ແກ່ທຸກພາກສ່ວນ. | ມີຄວາມຄືບໜ້າຫຼາຍພໍສົມຄວນໃນການຈັດຕັ້ງປະຕິບັດວຽກປະຊາສຳພັນໂດຍການຮ່ວມມືລະຫວ່າງອົງການຈັດຕັ້ງພາກລັດ ແລະ ຫົວໜ່ວຍແຮງງານໃນຂອບເຂດທົ່ວປະເທດ. ໃນນັ້ນ ກໍ່ໄດ້ມີການນຳໃຊ້ຍຸດທະສາດການສື່ສານຫຼາຍຮູບແບບກໍ່ຄື ໜັງສືພິມ, ວິທະຍຸ, ແລະ Facebook. ພ້ອມນັ້ນ ກໍ່ໄດ້ມີການຕິດຕາມ ແລະ ກວດກາ ແລະ ການຝຶກອົບຮົມ ເພື່ອຍົກລະດັບຄວາມສາມາດດ້ານການປະຊາສຳພັນໃນຂັ້ນແຂວງຢູ່ຂອບເຂດທົ່ວປະເທດ. ໂດຍໄດ້ຮັບການສະໜັບສະໜູນຈາກ ອົງການ ILO ແລະ ຄູ່ຮ່ວມພັດທະນາ, ອົງການປະກັນສັງຄົມແຫ່ງຊາດ ໄດ້ຈັດຕັ້ງປະຕິບັດກິດຈະກຳເຜີຍແຜ່ກົດໝາຍວ່າດ້ວຍການປະກັນສັງຄົມ ແລະ ຂັ້ນຕອນເພື່ອໃຫ້ຫົວໜ່ວຍວິສາຫະກິດ ແລະ ແຮງງານນອກລະບົບຢູ່ບັນດາແຂວງຕ່າງໆ. | |
| | B. ການຂະຫຍາຍການປົກຄຸມປະກັນສັງຄົມໃຫ້ແກ່ຜູ້ປະກອບອາຊີບອິດສະຫຼະໃນຂະແໜງທາງການ. | ໂຄງການເພື່ອຂະຫຍາຍການປົກຄຸມປະກັນສັງຄົມໃຫ້ແກ່ຜູ້ປະກອບອາຊີບອິດສະຫຼະທີ່ມີຄວາມສາມາດໃນການຈ່າຍເງິນສົມທົບຢູ່ຂັ້ນເມືອງໃນຂອບເຂດທົ່ວປະເທດ. | ນອກຈາກການນຳໃຊ້ຍຸດທະສາດການສື່ສານຫຼາຍຮູບແບບເປັນຕົ້ນແມ່ນການລົງໂຄສະນາຜ່ານໜັງສືພິມ, ລາຍການວິທະຍຸ ແລະ Facebook ກໍ່ຍັງໄດ້ຮ່ວມມືກັບສະຫະພັນກຳມະບານລາວ ແລະ ສະມາຄົມສົ່ງເສີມແຮງງານນອກລະບົບເພື່ອຈັດກິດຈະກຳໂຄສະນາເຜີຍແຜ່ ແລະ ປະຊາສຳພັນກ່ຽວກັບການປະກັນສັງຄົມສາມ ຄັ້ງໃຫ້ແກ່ແຮງງານນອກລະບົບ. ກິດຈະກຳເຫຼົ່ານີ້ແນໃສ່ການຍົກລະດັບຄວາມຮູ້ ແລະ ໃຫ້ຂໍ້ມູນໃຫ້ແກ່ແຮງງານນອກລະບົບເພື່ອໃຫ້ເຂົ້າໃຈກ່ຽວກັບຄວາມສຳຄັນຂອງການປະກັນສັງຄົມ ແລະ ສິດ ແລະ ຜົນປະໂຫຍດທີ່ເຂົາເຈົ້າຈະໄດ້ຮັບ. | |
| | | ໂຄງການເພື່ອປັບປຸງ IECs ແລະ ກິດຈະກຳປະຊາສຳພັນໂດຍສະເພາະແມ່ນ ການເຜີຍແຜ່ກົດໝາຍວ່າດ້ວຍປະກັນສັງຄົມ ແລະ ລະບຽບການກ່ຽວຂ້ອງໃຫ້ແກ່ທຸກພາກສ່ວນ. | ວຽກງານດັ່ງກ່າວ ໄດ້ຮັບການສະໜັບສະໜູນ ຢ່າງຕັ້ງໜ້າຈາກຄູ່ຮ່ວມພັດທະນາລວມທັງໂຄງການ SOLAR. ໂຄງການ SOLAR, ທີ່ໄດ້ຮັບທຶນຈາກສະຫະພາບເອີຣົບ ແລະ ຈັດຕັ້ງປະຕິບັດຮ່ວມກັນໂດຍອົງການ ILO ແລະ Oxfam ແນໃສ່ການໃຫ້ຂໍ້ມູນຂ່າວສານ ແລະ ຕອບຄຳຖາມຕ່າງໆກ່ຽວກັບການອຸດໜູນປະກັນສັງຄົມໃຫ້ແກ່ຜູ້ປະກອບອາຊີບອິດສະຫຼະຢູ່ພາກພື້ນທີ່ມີການຜະລິດກະສິກຳ ຢູ່ ສປປ ລາວ. ໂຄງການໄດ້ສຸມໃສ່ສາມແຂວງເປົ້າໝາຍ: ແຂວງສາລະວັນ, ເຊກອງ ແລະ ຈຳປາສັກ. ກະລຸນາເບິ່ງຄວາມຄືບໜ້າມາດຮອດປະຈຸບັນສຳລັບຈຸດປະສົງຍຸດທະສາດ 2.1 ການຂະຫຍາຍການປົກຄຸມປະກັນສຸຂະພາບໃຫ້ແກ່ແຮງງານໃນຂະແໜງການໃນລະບົບຂ້າງເທິງ. | |

| ຈຸດປະສົງຍ່ອຍ | ກິດຈະກຳຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນຮັບຜິດຊອບ |
|---|---|---|---|---|
| S.S.2. ຈັດຕັ້ງປະຕິບັດການກວດກາວິສາຫະກິດທີ່ຂຶ້ນທະບຽນ. | A. ສ້າງຂີດຄວາມສາມາດໃຫ້ແກ່ໜ່ວຍງານວິຊາການທີ່ຮັບຜິດຊອບການກວດກາປະກັນສັງຄົມ ແລະ ຄວາມສາມາດໃນການບັງຄັບໃຊ້ກົດໝາຍປະກັນສັງຄົມ. | ໂຄງການເພື່ອພັດທະນາ ແລະ ປັບປຸງການກວດກາປະກັນສັງຄົມ ແລະ ນຳໃຊ້ມາດຕະການຕໍ່ກັບຜູ້ລະເມີດ ແລະ ເພີ່ມທະວີການກວດກາຢູ່ຂັ້ນທ້ອງຖິ່ນ. | ໜຶ່ງໃນຜົນສຳເລັດທີ່ພົ້ນເດັ່ນ ພາຍໃຕ້ການນຳພາຂອງ ຫ້ອງການອົງການປະກັນສັງຄົມ ຢູ່ ແຂວງຫຼວງພະບາງເພື່ອແກ້ໄຂບັນຫາກ່ຽວກັບການຈ່າຍເງິນສົມທົບ. ຜ່ານການຢັ້ງຢືນຂໍ້ມູນຢູ່ແຂວງຫຼວງພະບາງ, ໂຄງການໄດ້ພົບເຫັນກໍລະນີການເບີກຈ່າຍທີ່ບໍ່ຖືກຕ້ອງ ແລະ ໄດ້ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດວຽກງານຢູ່ 6 ແຂວງ: ຫຼວງພະບາງ, ວຽງຈັນ, ຫົວພັນ, ຊຽງຂວາງ, ອັດຕະປື ແລະ ເຊກອງ.<br><br>ພາຍໃຕ້ຈຸດປະສົງທີ 1 ຂອງ ໂຄງການ SOLAR, ຈຸດສຸມແມ່ນການປັບປຸງການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປະກັນສັງຄົມ ແລະ ກົດໝາຍແຮງງານຢູ່ຂັ້ນທ້ອງຖິ່ນ. ສາມາດບັນລຸຜົນສຳເລັດໄດ້ດ້ວຍການທົດລອງນຳໃຊ້ ແລະ ສົ່ງເສີມມາດຕະການຢູ່ຂັ້ນແຂວງ ແລະ ຂັ້ນເມືອງ. ເພື່ອບັນລຸເປົ້າໝາຍນັ້ນ, ໂຄງການໄດ້ຈັດການຝຶກອົບຮົມ ແລະ ພັດທະນາຂີດຄວາມສາມາດໂດຍຮ່ວມມືກັບອົງການ ILO, Oxfam ແລະ ບັນດາ CSO ຕ່າງໆ. ກິດຈະກຳໜຶ່ງທີ່ສຳຄັນແມ່ນການວາງແຜນ ແລະ ການຝຶກອົບຮົມ ເຊິ່ງ ອົງການປະກັນສັງຄົມແຫ່ງຊາດ ໄດ້ຈັດການຝຶກອົບຮົມ ແລະ ໃຫ້ຄຳແນະນຳໃຫ້ແກ່ພະນັກງານ 53 ທ່ານ ທັງໃນລະດັບແຂວງ ແລະ ເມືອງ ຈາກເຂດພູພຽງບໍລະເວນ, ແຂວງຈຳປາສັກ, | LSSO |
| | B. ສ້າງ ແລະ ປັບປຸງຂອບນິຕິກຳເພື່ອການກວດກາ ແລະ ລະດົມຊັບພະຍາກອນທີ່ຕ້ອງການໃຫ້ສຳເລັດ. | ໂຄງການເພື່ອປັບປຸງກົດໝາຍປະກັນສັງຄົມໃຫ້ສອດຄ່ອງກັບສະພາບຕົວຈິງ. | ເພື່ອເພີ່ມການປົກຄຸມ, ກໍ່ໄດ້ເຫັນວ່າມີຄວາມຄືບໜ້າຫຼາຍພໍສົມຄວນໃນການປັບປຸງກົດໝາຍວ່າດ້ວຍການປະກັນສັງຄົມ. ນອກນັ້ນ, ກໍ່ໄດ້ມີການສຶກສາຄົ້ນຄ້ວາ ແລະ ປະເມີນຜົນອີງຕາມຫຼັກຖານຕົວຈິງ ແລະ ກຳນົດຊຸດຄຳແນະນຳເພື່ອປັບປຸງກົດໝາຍ. ພ້ອມນັ້ນ, ນິຕິກຳ ແລະ ລະບຽບການອື່ນໆກໍ່ໄດ້ຖືກສ້າງຂຶ້ນ/ປັບປຸງເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງບໍລິຫານລະບົບປະກັນສັງຄົມ. ສິ່ງທີ່ພົ້ນເດັ່ນ ແມ່ນໂຄງການໄດ້ສຶກສາຄົ້ນຄວ້າກ່ຽວກັບ ນະໂຍບາຍປະກັນສັງຄົມ ໂດຍທີ່ສຸມໃສ່ຜູ້ປະກັນຕົນພາກວິສາຫະກິດທີ່ຖືກຜົນກະທົບຈາກການແຜ່ລະບາດຂອງໂຄວິດ-19 ໃນປີ 2021. | |
| | C. ຮ່າງຂໍ້ກຳນົດໃນກົດໝາຍກ່ຽວກັບມາດຕະການປັບໄໝຜູ້ໃຊ້ແຮງງານທີ່ລະເມີດກົດໝາຍ. | ໂຄງການເພື່ອສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍ ເພື່ອເປັນເຄື່ອງມືໃນການຈັດຕັ້ງປະຕິບັດຕາມແຕ່ລະໄລຍະ. | ອີງຕາມບົດລາຍງານປະຈຳປີ 2022 ຂອງ ອປຊ, ຍັງບໍ່ທັນເຫັນຢ່າງຈະແຈ້ງກ່ຽວກັບຄວາມຄືບໜ້າໃນການສ້າງຂໍ້ກຳນົດເພື່ອອະນຸຍາດໃຫ້ເກັບຄ່າປັບໄໝຈາກຜູ້ໃຊ້ແຮງງານທີ່ລະເມີດກົດໝາຍ. ເຖິງຢ່າງໃດກໍຕາມ, ບັນຫາດັ່ງກ່າວສາມາດແກ້ໄຂໄດ້ໃນໄລຍະການປັບປຸງກົດໝາຍວ່າດ້ວຍປະກັນສັງຄົມໃນປີ 2024. | |

| ຈຸດປະສົງຍ່ອຍ | ກິດຈະກໍາຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນຮັບຜິດຊອບ |
|---|---|---|---|---|
| | D. ແລກປ່ຽນຂໍ້ມູນຂ່າວສານ ລະຫວ່າງເຈົ້າໜ້າທີ່ກວດກາແຮງງານ ແລະ ເຈົ້າໜ້າທີ່ກວດກາປະກັນສັງຄົມ. | ໂຄງການເພື່ອຍົກລະດັບການກວດກາປະກັນສັງຄົມດ້ວຍການພັດທະນາລະບົບ MIS ເພື່ອອໍານວຍໃຫ້ແກ່ເຈົ້າໜ້າທີ່ກວດກາສາມາດເຂົ້າເຖິງ ແລະ ນໍາໃຊ້ຂໍ້ມູນຂ່າວສານເອເລັດໂຕຣນິກເພື່ອວຽກກວດກາ. | ບົດລາຍງານ ປີ 2022 ຂອງ ອປຊ ບໍ່ສາມາດສະໜອງຂໍ້ມູນທີ່ກ່ຽວຂ້ອງກັບການພັດທະນາລະບົບຄຸ້ມຄອງຂໍ້ມູນຂ່າວສານ ຫຼື ວິທີການນໍາໃຊ້ເພື່ອສົ່ງເສີມໃຫ້ເຈົ້າໜ້າທີ່ກວດກາສາມາດເຂົ້າເຖິງເພື່ອດໍາເນີນການກວດກາ<br><br>ພາຍໃຕ້ຈຸດປະສົງ 1 (ກິດຈະກໍາ 1.1.3), ອົງການ ILO ແລະ Oxfam ໄດ້ສະໜັບສະໜູນ ການທົດລອງການກວດກາປະກັນສັງຄົມຢູ່ຂັ້ນທ້ອງຖິ່ນໂດຍລົງໄປສະຖານທີ່ຕົວຈິງ ແລະ ໄດ້ຮ່ວມມືກັບຫ້ອງການຂັ້ນທ້ອງຖິ່ນຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ໂຄງການໄດ້ຈັດການປຶກສາຫາລືເບື້ອງຕົ້ນກ່ຽວກັບລະບົບການກວດກາຢູ່ສະຖານທີ່ຕົວຈິງ ແລະ ຮ່າງແບບຟອມລາຍງານ. ນອກນັ້ນ, ໂຄງການກໍ່ໄດ້ຮ່ວມມືກັບຫ້ອງການປະກັນສັງຄົມ ແຂວງ ຫຼວງພະບາງ ເຊິ່ງໄດ້ຈັດການກວດກາຮ່ວມກັບຫ້ອງການແຮງງານ. ວຽກກະກຽມກິດຈະກໍາທົດລອງສຸມໃສ່ການໃຫ້ຄໍາຄິດຄໍາເຫັນເພື່ອອອກແບບໂຄງການທົດລອງການກວດກາປະກັນສັງຄົມເຊິ່ງອາດຈັດຕັ້ງປະຕິບັດຢູ່ ເມືອງປາກຊ່ອງ. | |
| | E. ປັບປຸງ ແລະ ອັບເດດ ຂໍ້ມູນບັນທຶກກ່ຽວກັບ ວິສາຫະກິດທີ່ຂຶ້ນທະບຽນກັບກະຊວງອຸດສາຫະກໍາ ແລະ ການຄ້າໃນຂັ້ນສູນກາງ ແລະ ທ້ອງຖິ່ນ. | ໂຄງການເພື່ອຍົກລະດັບ ແລະ ທັນລະບົບຖານຂໍ້ມູນການໃຫ້ອຸດໜູນພາກວິສາຫະກິດ ແລະ ພາກສະໝັກໃຈໃຫ້ເປັນທັນສະໄໝເພື່ອຮັບປະກັນຄວາມຖືກຕ້ອງຊັດເຈນໃນການຈ່າຍເງິນອຸດໜູນ. | ປະຈຸບັນໂຄງການມີຄວາມຄືບໜ້າຫຼາຍ ແລະ ໄດ້ປະສົບຜົນສໍາເລັດໃນການດໍາເນີນການສຶກສາຄົ້ນຄວ້າ ແລະ ພັດທະນາເພື່ອສ້າງແຜນງານ ແລະ ຖານຂໍ້ມູນເພື່ອອໍານວຍຄວາມສະດວກໃຫ້ແກ່ລະບົບການເບີກຈ່າຍເງິນອຸດໜູນວ່າງງານໃຫ້ແກ່ຜູ້ຖືກຜົນກະທົບຈາກໂຄວິດ-19. ພ້ອມນັ້ນ, ລະບົບເບີກຈ່າຍເງິນອຸດໜູນໄລຍະສັ້ນກໍ່ຖືກພັດທະນາຂຶ້ນມາສະເພາະຜູ້ປະກັນຕົນທີ່ເຮັດວຽກຢູ່ໂຮງງານຕັດຫຍິບທີ່ຖືກຜົນກະທົບຈາກໂຄວິດ-19. | |
| | F. ຈັດການກວດກາບໍລິສັດພາກເອກະຊົນ ທີ່ຂຶ້ນທະບຽນກັບ ກະຊວງ ອຸດສາຫະກໍາ ແລະ ການຄ້າ ເພື່ອຢັ້ງຢືນ ການປະຕິບັດສອດຄ່ອງ ກັບກົດໝາຍ ແລະ ລະບຽບການດ້ານການປະກັນສັງຄົມ ແລະ ແຮງງານ. | ໂຄງການເພື່ອພັດທະນາ ແລະ ປັບປຸງລະບົບກວດກາປະກັນສັງຄົມ ແລະ ນໍາໃຊ້ມາດຕະຖານຕໍ່ກັບຜູ້ລະເມີດ, ເພີ່ມທະວີການກວດກາຢູ່ຂັ້ນທ້ອງຖິ່ນ. | ບົດລາຍງານ ອປຊ ປະຈໍາ ປີ 2022 ບໍ່ໄດ້ກໍານົດຈະແຈ້ງກ່ຽວກັບຄວາມຄືບໜ້າໃນການພັດທະນາ ແລະ ປັບປຸງລະບົບກວດກາປະກັນສັງຄົມລວມທັງມາດຕະການຕໍ່ກັບຜູ້ລະເມີດ ແລະ ການເພີ່ມທະວີການກວດກາຢູ່ຂັ້ນທ້ອງຖິ່ນແຕ່ເຫັນວ່າບັນຫາດັ່ງກ່າວຈະຖືກແກ້ໄຂໃນຂະບວນການປັບປຸງກົດໝາຍ ໃນປີ 2024. | |

| ຈຸດປະສົງຍ່ອຍ | ກິດຈະກໍາຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນຮັບຜິດຊອບ |
|---|---|---|---|---|
| S.S.3. ສົ່ງເສີມການຂຶ້ນທະບຽນເປັນສະມາຊິກ ປະກັນສັງຄົມ. | A. ສົ່ງເສີມໃຫ້ແຮງງານ, ຜູ້ໃຊ້ແຮງງານ ແລະ ຜູ້ປະກອບອາຊີບອິດສະຫຼະເຂົ້າເປັນສະມາຊິກປະກັນສັງຄົມດ້ວຍການຍົກລະດັບຄວາມຮູ້ກ່ຽວກັບການອຸດໜູນຂອງລະບົບປະກັນສັງຄົມ.<br><br>B. ຊຸກຍູ້ໃຫ້ວິສາຫະກິດທີ່ຂຶ້ນທະບຽນປະຕິບັດສອດຄ່ອງກັບກົດໝາຍປະກັນສັງຄົມ ແລະ ກົດໝາຍແຮງງານດ້ວຍການຈັດຕັ້ງປະຕິບັດກິດຈະກໍາສົ່ງເສີມຫຼາຍຮູບແບບ ແລະ ມາດຕະຖານອື່ນໆ. | ໂຄງການເພື່ອປັບປຸງ IECs ແລະ ກິດຈະກໍາປະຊາສໍາພັນ, ໂດຍສະເພາະແມ່ນການເຜີຍແຜ່ກົດໝາຍປະກັນສັງຄົມ ແລະ ລະບຽບການໃຫ້ສັງຄົມຮັບຮູ້ແບບກວ້າງຂວາງ. | ກິດຈະກໍາການເຜີຍແຜ່ຂໍ້ມູນຂ່າວສານ, ຍົກລະດັບຄວາມຮູ້ ແລະ ປະຊາສໍາພັນໄດ້ມີການປັບປຸງຫຼາຍພໍສົມຄວນໂດຍສະເພາະແມ່ນການເຜີຍແຜ່ກົດໝາຍປະກັນສັງຄົມ ແລະ ລະບຽບການທີ່ກ່ຽວຂ້ອງເພື່ອໃຫ້ສັງຄົມທຸກພາກສ່ວນຮັບຮູ້ຢ່າງກວ້າງຂວາງ. ໂຄງການໄດ້ຈັດຕັ້ງປະຕິບັດກິດຈະກໍາປະຊາສໍາພັນຢ່າງມີປະສິດທິຜົນດ້ວຍການຮ່ວມມືກັບບັນດາອົງການຈັດຕັ້ງພາກລັດ ແລະ ຫົວໜ່ວຍແຮງງານໃນຂອບເຂດທົ່ວປະເທດ. ນອກນັ້ນ, ກໍ່ໄດ້ນໍາໃຊ້ຍຸດທະສາດການສື່ສານທີ່ຫຼາກຫຼາຍ ເຊິ່ງລວມມີການໂຄສະນາລົງໜັງສືພິມ, ລາຍການວິທະຍຸ, ແລະ Facebook. ພ້ອມນັ້ນ, ໂຄງການກໍ່ໄດ້ປະສົບຜົນສໍາເລັດໃນການຕິດຕາມ, ກວດກາ, ແລະ ຝຶກອົບຮົມເພື່ອຍົກລະດັບຄວາມສາມາດດ້ານການປະຊາສໍາພັນຢູ່ຂັ້ນແຂວງ ພ້ອມທັງເຜີຍແຜ່ກົດໝາຍວ່າດ້ວຍການປະກັນສັງຄົມໃຫ້ແກ່ຫົວໜ່ວຍທຸລະກິດ ແລະ ແຮງງານນອກລະບົບຢູ່ສອງແຂວງ (ສະຫວັນນະເຂດ ແລະ ຫຼວງພະບາງ), ເຊິ່ງໄດ້ຮັບການສະໜັບສະໜູນດ້ານທຶນຮອນຈາກ ອົງການ ILO. ໂຄງການໄດ້ຮ່ວມມືກັບ ສະຫະພັນກໍາມະບານລາວ ແລະ ສະມາຄົມສົ່ງເສີມແຮງງານນອກລະບົບ (IWAA) ເພື່ອຈັດກິດຈະກໍາໂຄສະນາເຜີຍແຜ່ສາມຄັ້ງກ່ຽວກັບການປະກັນສັງຄົມໃຫ້ແກ່ແຮງງານນອກລະບົບ. | LSSO |
| S.S.4. ຮັບປະກັນການອອກແບບດ້ານຄະນິດສາດປະກັນສັງຄົມທີ່ເຂັ້ມແຂງ ແລະ ມີຄັງເງິນສໍາຮອງທີ່ພຽງພໍ. | A. ດໍາເນີນການຄໍານວນຄະນິດສາດປະກັນສັງຄົມເພື່ອປະເມີນສະຖານະດ້ານການເງິນຂອງກອງທຶນປະກັນສັງຄົມໃນໄລຍະສັ້ນ ແລະ ໄລຍະຍາວ. | ໂຄງການຄໍານວນຄະນິດສາດປະກັນສັງຄົມເພື່ອການວາງແຜນ ແລະ ພັດທະນາລະບົບແບບຍືນຍົງ.<br><br>- ສ້າງຂີດຄວາມສາມາດດ້ານການຄໍານວນຄະນິດສາດປະກັນສັງຄົມໃຫ້ແກ່ ອປຊ.<br><br>- ດໍາເນີນການຄໍານວນຄະນິດສາດແບບຮອບດ້ານ.<br><br>- ປັບປຸງກົດໝາຍອີງຕາມຜົນຂອງການຄໍານວນຄະນິດສາດ | ໄດ້ມີການຄໍານວນຄະນິດສາດປະກັນສັງຄົມ ເພື່ອປະເມີນສະຖານະດ້ານການເງິນຂອງກອງທຶນປະກັນສັງຄົມ (NSSF) ແລະ ຮັບປະກັນຄວາມຍືນຍົງໄລຍະຍາວ. ການຄໍານວນຄະນິດສາດກອງທຶນປະກັນສັງຄົມໄດ້ສະເໜີທາງເລືອກເພື່ອປະຕິຮູບ ແລະ ຂໍ້ມູນພື້ນຖານເພື່ອປັບປຸງກົດໝາຍ. ໃນນັ້ນ, ກໍ່ໄດ້ມີການສ້າງຕັ້ງຄະນະຄໍານວນຄະນິດສາດປະກັນສັງຄົມແຫ່ງຊາດ, ຈັດການຝຶກອົບຮົມ, ພ້ອມທັງໄດ້ຮັບການຊ່ວຍເຫຼືອຈາກຊ່ຽວຊານຂອງອົງການ ILO ແລະ ທີ່ປຶກສາວິຊາສະເພາະ. | LSSO |

| ຈຸດປະສົງຍ່ອຍ | ກິດຈະກຳຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນຮັບຜິດຊອບ |
|---|---|---|---|---|
| | B. ຈັດຕັ້ງປະຕິບັດມາດຕະຖານປະຕິຮູບອີງຕາມຜົນຂອງການຄຳນວນຄະນິດສາດເພື່ອຮັບປະກັນຄວາມຍືນຍົງຂອງກອງທຶນປະກັນສັງຄົມ. | ໂຄງການຄຳນວນຄະນິດສາດປະກັນສັງຄົມເພື່ອການວາງແຜນ ແລະ ພັດທະນາລະບົບແບບຍືນຍົງ. | ໃນປີ 2022, ໄດ້ມີການລິເລີ່ມການຄຳນວນຄະນິດສາດ ແລະ ປະເມີນກອງທຶນປະກັນສັງຄົມແຫ່ງຊາດເຊິ່ງໄດ້ສຳເລັດໃນປີ 2024. | |
| S.S.5. ປັບປຸງລະບົບເກັບເງິນສົມທົບ | A. ຈັດຕັ້ງປະຕິບັດກົນໄກ ທີ່ແທດເໝາະເພື່ອອຳນວຍຄວາມສະດວກໃນການເກັບເງິນສົມທົບ ແລະ ຈ່າຍອຸດໜູນກອງທຶນປະກັນສັງຄົມໂດຍຜ່ານລະບົບທະນາຄານ | ໂຄງການເພື່ອປັບປຸງກົນໄກການຊຳລະຂອງກອງທຶນພາກລັດຢູ່ຂັ້ນທ້ອງຖິ່ນໂດຍແນໃສ່ການຊຳລະແບບວ່ອງໄວ, ມີປະສິດທິພາບ ແລະ ທັນການພ້ອມທັງຈ່າຍອຸດໜູນໃຫ້ແກ່ສະມາຊິກຕາມຄຳຮ້ອງຂໍ.<br><br>ໂຄງການປັບປຸງກົນໄກຊຳລະຂອງພາກວິສາຫະກິດ ແລະ ພາກສະໝັກໃຈເພື່ອໃຫ້ຂະບວນການເບີກຈ່າຍວ່ອງໄວ ແລະ ຫຼຸດຜ່ອນການຈ່າຍດ້ວຍເງິນສົດ ໃນທຸກລະດັບ. | ພາຍໃຕ້ຄວາມພະຍາຍາມໃນການປັບປຸງລະບົບເກັບເງິນສົມທົບ, ກໍ່ໄດ້ມີການຄົ້ນຄວ້າ ແລະ ປັບປຸງລະບົບເກັບເງິນສົມທົບຕົວຈິງພ້ອມທັງການຈ່າຍເງິນອຸດໜູນຕ່າງໆ. ໂດຍສອດຄ່ອງກັບຈຸດປະສົງນີ້, ຈຶ່ງໄດ້ເຮັດສັນຍາລະຫວ່າງ ບໍລິສັດ Lao mobile money ເພື່ອນຳໃຊ້ກະເປົາເງິນເອເລັກໂຕຣນິກ M-Money ເພື່ອຈ່າຍເງິນອຸດໜູນ. ການຮ່ວມມືດັ່ງກ່າວມີຈຸດປະສົງຍົກລະດັບປະສິດທິພາບ ແລະ ຄວາມສະດວກໃນການໃຫ້ອຸດໜູນໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດຜ່ານຊ່ອງທາງດີຈີຕອນ. | LSSO |
| **ຈຸດປະສົງຍຸດທະສາດ 2.2: ລະບົບປະກັນສັງຄົມປົກຄຸມແຮງງານນອກລະບົບເພີ່ມຂຶ້ນ.** | | | | |
| S.S.6. ປັບປຸງການອອກແບບລະບົບໃນປະຈຸບັນເພື່ອໃຫ້ແທດເໝາະກັບຄຸນລັກສະນະຂອງແຮງງານນອກລະບົບ. | A. ພັດທະນາກົນໄກພຽງພໍເພື່ອຮັບປະກັນໃຫ້ແຮງງານນອກລະບົບສາມາດເຂົ້າເປັນສະມາຊິກຂອງລະບົບປະກັນສັງຄົມພາກສະໝັກໃຈ ແລະ ໃຫ້ອຸດໜູນອີງຕາມຄວາມຕ້ອງການສະເພາະ. | ໂຄງການເພື່ອພັດທະນາລະບົບຂຶ້ນທະບຽນສະມາຊິກເພື່ອໃຫ້ຜູ້ປະກັນຕົນພາກສະໝັກໃຈເພື່ອສົ່ງເສີມການເຂົ້າເຖິງການບໍລິການປະກັນສັງຄົມ ແບບກວ້າງຂວາງ. | ອົງການ ILO ໄດ້ດຳເນີນການຄົ້ນຄ້ວາລະອຽດດ້ານປະລິມານ ແລະ ຢູ່ພາກສະໜາມໂດຍໄດ້ຮັບການສະໜັບສະໜູນຈາກ ອປຊ ເພື່ອວິເຄາະຄຸນລັກສະນະ, ປັດໃຈຂັບເຄື່ອນ ແລະ ທ່າອ່ຽງແນວໂນ້ມຂອງຂະແໜງການນອກລະບົບຢູ່ ສປປ ລາວ. ຜົນໄດ້ຮັບແມ່ນການສ້າງຍຸດທະສາດຂະແໜງການສະເພາະເພື່ອຂະຫຍາຍການປົກຄຸມປະກັນສັງຄົມໃຫ້ແກ່ແຮງງານທີ່ເຮັດວຽກໃນວິສາຫະກິດ ແລະ ຜູ້ປະກອບອາຊີບອິດສະຫຼະ. ຈຸດປະສົງຂອງການຄົ້ນຄ້ວາແມ່ນເພື່ອຂະຫຍາຍການປົກຄຸມຢູ່ ສປປ ໄປສູ່ຂະແໜງການນອກລະບົບ.<br><br>ພາຍໃຕ້ຈຸດປະສົງທີ 1 (ກິດຈະກຳ 1.1.2), ໂຄງການ SOLAR ໄດ້ສຸມໃສ່ການເຂົ້າເຖິງລະບົບປະກັນສັງຄົມໃນພາກສະໝັກໃຈ. ເພື່ອບັນລຸຈຸດປະສົງນີ້, ຈຶ່ງໄດ້ຈັດຕັ້ງປະຕິບັດກິດຈະກຳທົດລອງລວມທັງການສ້າງຕັ້ງສູນຂໍ້ມູນຂ່າວສານແຮງງານຢູ່ສີ່ແຫ່ງ ໃນຂອບເຂດພູພຽງບໍລະເວນ. ຈຸດປະສົງຫຼັກຂອງ ການສ້າງສູນຕ່າງໆແມ່ນ | LSSO |

| ຈຸດປະສົງຍ່ອຍ | ກິດຈະກຳຫຼັກ | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ<br>ຮັບຜິດຊອບ |
|---|---|---|---|---|
| | B. ຊຸກຍູ້ ແລະ ສົ່ງເສີມໃຫ້ແຮງງານນອກລະບົບເຂົ້າເປັນສະມາຊິກປະກັນສັງຄົມດ້ວຍການກຳນົດອັດຕາເງິນສົມທົບທີ່ຕໍ່າກວ່າ. | | ເພື່ອໃຫ້ຂໍ້ມູນຂ່າວສານທີ່ສຳຄັນໃຫ້ແກ່ຄົວເຮືອນຊາວກະສິກອນກ່ຽວກັບສິດ ແລະ ຜົນປະໂຫຍດຂອງເຂົາເຈົ້າພາຍໃຕ້ກົດໝາຍແຮງງານ, ກົດໝາຍປະກັນສັງຄົມ, ຄວາມປອດໄພ ແລະ ສຸຂະພາບແຮງງານ, ກົນໄກລວມໝູ່, ແລະ ສິດທີ່ດ້ານບົດບາດຍິງຊາຍ. ບັນດາຂໍ້ລິເລີ່ມດັ່ງກ່າວແນໃສ່ປັບປຸງການຮັບຮູ້ ແລະ ຄວາມຮູ້ຂອງແຮງງານເພື່ອສົ່ງເສີມການເຂົ້າເປັນສະມາຊິກປະກັນສັງຄົມພາກສະໝັກໃຈ.<br><br>ອີງຕາມບົດລາຍງານ 2022 ຂອງ ອປຊ, ຍັງບໍ່ທັນເຫັນມີຂໍ້ມູນກ່ຽວກັບຄວາມຄືບໜ້າກ່ຽວກັບກິດຈະກຳສົ່ງເສີມໃຫ້ແຮງງານອກລະບົບເຂົ້າເປັນສະມາຊິກຂອງພາກສະໝັກໃຈ. ເຖິງຢ່າງໃດກໍຕາມ, ບັນຫານີ້ແມ່ນສາມາແກ້ໄຂໄດ້ໃນການປັບປຸງກົດໝາຍປະກັນສັງຄົມໃນປີ 2024. | |
| ອື່ນໆ | ເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ<br><br>ງົບປະມານປະກອບສ່ວນ | | ປະຈຸບັນ, ກໍ່ໄດ້ສຳເລັດການພັດທະນາລະບົບຖານຂໍ້ມູນຈົດທະບຽນ/ເງິນສົມທົບຂອງພາກວິສາຫະກິດໂດຍການນຳໃຊ້ MySQL. ລະບົບຖືກອອກແບບເພື່ອເຮັດໃຫ້ຂະບວນການຂຶ້ນທະບຽນກະທັດຮັດ ແລະ ລວມສູນ ເພື່ອເກັບກຳຂໍ້ມູນເງິນສົມທົບພາກວິສາຫະກິດໃນຂອບເຂດທົ່ວປະເທດ. ພ້ອມນັ້ນ, ກໍ່ໄດ້ມີການເຄື່ອນຍ້າຍຂໍ້ມູນຈາກລະບົບເກົ່າໄປສູ່ລະບົບໃໝ່ເພື່ອທົດສອບ ແລະ ປະເມີນການນຳໃຊ້ ແລະ ການປະຕິບັງານຂອງລະບົບ.<br><br>ເວັບໄຊ້ຂອງອົງການປະກັນສັງຄົມຖືກພັດທະນາ ແລະ ເປີດນຳໃຊ້.<br><br>ຈຳນວນງົບປະມານປະກອບສ່ວນທີ່ໄດ້ຖືກປະເມີນ ແລະ ຄິດໄລ່ແມ່ນກວມເອົາ 76% ຂອງແຜນປະຈຳປີ. ຖ້າແຍກອອກລະອຽດແມ່ນ: ລັດຖະບານໄດ້ອະນຸມັດງົບປະມານສົມທົບເທົ່າກັບ 82% ຂອງແຜນປະຈຳປີ, ສ່ວນຜູ້ປະກັນຕົນພາກວິສາຫະກິດ ແລະ ສະໝັກໃຈແມ່ນກວມເອົາ 114% ຂອງ ແຜນປະຈຳປີ. | LSSO |

# ເປົ້າໝາຍ 3: ລະບົບສັງຄົມສົງເຄາະຖືກພັດທະນາໃຫ້ມີຄວາມເຂັ້ມແຂງ

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນຮັບຜິດຊອບ |
|---|---|---|---|
| **ຍຸດທະສາດ 3.1: ການຂະຫຍາຍການປົກຄຸມຂອງລະບົບສັງຄົມສົງເຄາະ ແລະ ສະໜອງການບໍລິການໃຫ້ແກ່ກຸ່ມເປົ້າໝາຍຕາມຄວາມຕ້ອງການ.** | | | |
| **S.W.1. ໃຫ້ບໍລິການ ແລະ ການອຸດໜູນໃຫ້ແກ່ແມ່ຍິງຖືພາ ແລະ ເດັກນ້ອຍ.** | | | |
| **a) ການເກັບກຳ ແລະ ສັງລວມຂໍ້ມູນ** ກ່ຽວກັບແມ່ຍິງຖືພາ ແລະ ເດັກນ້ອຍ, ໂດຍສະເພາະແມ່ນຜູ້ທີ່ທຸກຍາກ ຫຼື ກຸ່ມປະຊາກອນທີ່ດ້ອຍໂອກາດ. | A. ເກັບກຳຂໍ້ມູນຂັ້ນເມືອງ:<br>- **ຕ້ອງການຂໍ້ມູນ** (ຈຳນວນປະຊາກອນ, ອັດຕາຄວາມທຸກຍາກ ແລະ ຈຳນວນຜູ້ທຸກຍາກ, ຈຳນວນແມ່ຍິງຖືພາ ແລະ ເດັກເກີດໃໝ່ແຕ່ລະປີ, ຈຳນວນເດັກນ້ອຍທີ່ລວງສູງຕ່ຳກວ່າເກນມາດຕະຖານ 19 ປີລົງມາ, ຈຳນວນຜູ້ທີ່ນ້ຳໜັກຕ່ຳກວ່າເກນມາດຕະຖານ/ຂາດສານອາຫານ 19 ປີລົງມາ, ອັດຕາການຕາຍຂອງ ເດັກແດງ ແລະ ເດັກອາຍຸຕ່ຳກວ່າຫ້າປີ);<br>- **ສະໜອງ** (ສະຖານທີ່/ການບໍລິການປິ່ນປົວ, ລະບົບການເງິນ (ATMs, ທະນາຄານ, ຕົວແທນ, ສະຖາບັນການເງິນຈຸລະພາກ, ຫ້ອງການພາກລັດທີ່ສາມາດເຂົ້າເຖິງໄດ້ໂດຍມວນຊົນ); ໂຄງລ່າງພື້ນຖານໃນການຂົນສົ່ງ (ເຊັ່ນ: ເວລາສະເລ່ຍເພື່ອເດີນທາງເຂົ້າຕົວເມືອງສຳລັບທຸກບ້ານ).<br><br>B. ເກັບກຳຂໍ້ມູນລະດັບຊາດ: ຂໍ້ມູນກ່ຽວກັບງົບປະມານ, ຕົ້ນທຶນຂອງ MECG (ການຈຳລອງ/ຄາດຄະເນ, ອື່ນໆ)<br><br>C. ການພັດທະນາລະບົບຖານຂໍ້ມູນເພື່ອເກັບຮັກສາ ແລະ ຄຸ້ມຄອງ ຂໍ້ມູນທີ່ກ່າວມາຂ້າງເທິງນັ້ນເພື່ອ:<br>(ກ) ນຳໃຊ້ເພື່ອການຕັດສິນໃຈກ່ຽວກັບເມືອງເປົ້າໝາຍ ແລະ ບູລິມະສິດສຳລັບການຂະຫຍາຍໂຄງການ MECG; ແລະ<br>(ຂ) ສະໜອງຂໍ້ມູນເພື່ອກະກຽມການຂະຫຍາຍໂຄງການ ແລະ ໃຫ້ບໍລິການໃຫ້ແກ່ເມືອງເປົ້າໝາຍ. | ມີຄວາມຄືບໜ້າແບບກ້າວກະໂດດໃນການສ້າງລະບົບຈົດທະບຽນສັງຄົມໂດຍໄດ້ຮັບການຊ່ວຍເຫຼືອຈາກທະນາຄານໂລກ. ຖານຈົດທະບຽນ ເປັນອົງປະກອບທີ່ສຳຄັນເພື່ອພັດທະນາລະບົບປົກປ້ອງສັງຄົມ. ດ້ວຍການນຳໃຊ້ຂໍ້ມູນການປະເມີນຄວາມທຸກຍາກທີ່ມີຢູ່, ໂຄງການມີຈຸດປະສົງສ້າງຖານຈົດທະບຽນສັງຄົມທີ່ຮອບດ້ານ ແລະ ກວມລວມທົ່ວເຖິງທີ່ສາມາດລະບຸຜູ້ໄດ້ຮັບຜົນປະໂຫຍດໃຫ້ແກ່ບັນດາໂຄງການຕ່າງໆຢ່າງມີປະສິດທິຜົນ.<br><br>ໄດ້ມີການສຶກສາຕົ້ນທຶນຄ່າໃຊ້ຈ່າຍສຳລັບໂຄງການ MECG ພ້ອມທັງບົດຂັດຫຍໍ້ດ້ານວິຊາການເພື່ອອະທິບາຍຂໍ້ສົມມຸດຖານທີ່ນຳໃຊ້ເພື່ອການວິເຄາະ ແລະ ຄຳນວນ.<br><br>ໄດ້ມີການສ້າງລະບົບ MIS ສະເພາະທີ່ອອກແບບມາໂດຍທີ່ສາມາດເສີມຂະຫຍາຍ ແລະ ປັບຕົວໄດ້, ລວມທັງໃນໄລຍະເກີດເຫດການສຸກເສີນ. ລະບົບນີ້ມີທັງກົນໄກນຳໃຊ້ແບບອອນລາຍເຊິ່ງໄດ້ຮັບການພັດທະນາ ແລະ ຮັບຮອງໃນລະດັບຊາດ ພ້ອມທັງແຜນການຈັດຕັ້ງປະຕິບັດຢູ່ຂັ້ນທ້ອງຖິ່ນ. | ກຊ ຮສສ, ກົມສັງຄົມສົງເຄາະ |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|
| **b) ພັດທະນາ ແລະ ປັບປຸງ ນິຕິກຳ ກ່ຽວຂ້ອງ ກ່ຽວກັບ** ການສັງຄົມສົງເຄາະ ແລະ ການອຸດໜູນແມ່ຍິງຖືພາ ແລະ ເດັກນ້ອຍສາມປີ ລົງມາຈາກຄອບຄົວທີ່ທຸກຍາກທີ່ສຸດ ແລະ ຜູ້ທີ່ຕ້ອງການ ການປົກປ້ອງສັງຄົມອີງຕາມເງື່ອນໄຂ ແລະ ຄວາມສາມາດ. | A. ການປັບປຸງນິຕິກຳໄລຍະສັ້ນ | A.1. ທົບທວນ ແລະ ເກັບກຳຂໍ້ມູນກ່ຽວກັບນິຕິກຳ ແລະ ລະບຽບການກ່ຽວຂ້ອງທັງໝົດທີ່ຕ້ອງປັບປຸງໂດຍສອດຄ່ອງ/ສະໜັບສະໜູນ ການຈັດຕັ້ງປະຕິບັດ MECG.<br>(ເຊັ່ນ: ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກນ້ອຍ ເລກທີ. 05/ສພຊ/2006). | ປະຈຸບັນຍັງບໍ່ທັນມີຂໍ້ມູນພຽງພໍເພື່ອປະເມີນຄວາມຄືບໜ້າຂອງກິດຈະກຳນີ້.<br>ສະພາແຫ່ງຊາດໄດ້ຮັບຮອງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກນ້ອຍໃນວັນທີ 17 ກໍລະກົດ 2023 ເຊິ່ງເປັນນິມິດໝາຍອັນສຳຄັນໃນການປົກປ້ອງ ແລະ ສົ່ງເສີມຄວາມກ້າວໜ້າດ້ານສິດທິເດັກນ້ອຍຢູ່ ສປປ ລາວ ໂດຍໄດ້ຮັບການຊ່ວຍເຫຼືອຈາກ ອົງການ UNICEF. ກົດໝາຍສະບັບປັບປຸງ ສອດຄ່ອງກັບສົນທິສັນຍາວ່າດ້ວຍສິດທິຂອງເດັກນ້ອຍ ລວມທັງຜົນປະໂຫຍດອັນຊອບທຳ ແລະ ການມີສ່ວນຮ່ວມຂອງເດັກນ້ອຍ.<br>ກົດໝາຍສະບັບປັບປຸງໄດ້ກຳນົດໃຫ້ ກຊ ຮສສ ເປັນອົງການຫຼັກທີ່ນຳພາການພັດທະນາລະບົບຄຸ້ມຄອງຂໍ້ມູນຂ່າວສານ ແລະ ລະດົມທຶນເພື່ອການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງເດັກນ້ອຍ. | ກຊ ຮສສ, ກົມສັງຄົມສົງເຄາະ |
| | | A.2. ປຶກສາຫາລືກັບພາກສ່ວນກ່ຽວຂ້ອງ, ຮ່າງເນື້ອໃນປັບປຸງ, ຮັບຮອງເອົານິຕິກຳສະບັບປັບປຸງ. | ເພື່ອສະທ້ອນໃຫ້ເຫັນເຖິງທັດສະນະມຸມມອງຂອງເດັກນ້ອຍ, ກະຊວງຍຸຕິທຳໄດ້ຈັດກອງປະຊຸມປຶກສາຫາລືຈຳນວນໜຶ່ງກັບເດັກນ້ອຍຢູ່ນະຄອນຫຼວງ ແລະ ຫົກແຂວງ ກໍ່ຄື ແຂວງໄຊຍະບູລີ, ຫຼວງພະບາງ, ບໍລິຄຳໄຊ, ວຽງຈັນ, ສະຫວັນນະເຂດ ແລະ ຈຳປາສັກ. ມີເດັກນ້ອຍທີ່ເປັນຜູ້ຕາງໜ້າທັງໝົດ 106 ຄົນທີ່ໄດ້ເຂົ້າຮ່ວມຈາກຫຼາຍກຸ່ມປະຊາກອນເປັນຕົ້ນແມ່ນເດັກນ້ອຍທີ່ມີຄວາມພິການ, ເດັກນ້ອຍທີ່ບໍ່ໄດ້ເຂົ້າໂຮງຮຽນ, ເດັກນ້ອຍຈາກກຸ່ມຊົນເຜົ່າ, ເດັກນ້ອຍທີ່ເຄີຍຕິດຢາເສບຕິດ, ເດັກກຳພ້າ ແລະ ເດັກທີ່ຖືກປະລະເຊິ່ງໄດ້ເຂົ້າຮ່ວມການສຳພາດທັງເປັນກຸ່ມ ແລະ ບຸກຄົນ. | |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | | ຄວາມຄືບໜ້າ | ພາກສ່ວນຮັບຜິດຊອບ |
|---|---|---|---|---|
| | B. ການປ່ຽນແປງນິຕິກຳໄລຍະຍາວ | B.1. ປຶກສາຫາລື/ສົນທະນາ, ຮ່າງ ແລະ ຮັບຮອງເອົາດຳລັດ (ໃນລະດັບນາຍົກລັດຖະມົນຕີ) ເພື່ອໃຫ້ສະຖານະດ້ານກົດໝາຍໃຫ້ແກ່ໂຄງການ MECG.<br>B.2. ສ້າງຄະນະກຳມະການສາມຝ່າຍເພື່ອລິເລີ່ມ ແລະ ປຶກສາປາລືກ່ຽວກັບການສ້າງປຶ້ມຄູ່ມືການຊ່ວຍເຫຼືອສັງຄົມສົງເຄາະແບບບໍ່ເກັບເງິນສົມທົບເພື່ອເປັນການຕໍ່ຍອດກົດໝາຍປະກັນສັງຄົມ.<br>B.3. ຮ່າງ, ປຶກສາຫາລື ແລະ ຮັບຮອງເອົານິຕິກຳກ່ຽວກັບການສັງຄົມສົງເຄາະເພື່ອເຊື່ອມສານເສົາຄ້ຳສັງຄົມສົງເຄາະເຂົ້າເປັນນິຕິກຳ (ໂດຍຮັບປະກັນຄວາມຮອບດ້ານ ແລະ ສອດຄ່ອງກັບ 9 ລະບົບ). | ໄດ້ຈັດກອງປະຊຸມຈຳນວນໜຶ່ງເພື່ອສ້າງຂອບນິຕິກຳໃຫ້ແກ່ໂຄງການ MECG.<br>ດຳລັດ ເລກທີ 571/ນຍ ເພື່ອສ້າງຕັ້ງຄະນະກຳມະການແຮງງານສາມຝ່າຍແຫ່ງຊາດ ຖືກຮັບຮອງໂດຍ ທ່ານ ນາຍົກລັດຖະມົນຕີ ໃນວັນທີ 20 ກັນຍາ 2021.<br>ປະຈຸບັນບໍ່ມີຂໍ້ມູນພຽງພໍເພື່ອປະເມີນຄວາມຄືບໜ້າຂອງກິດຈະກຳນີ້. | |
| **c) ໃຫ້ເງິນອຸດໜູນໃຫ້ແກ່ເດັກນ້ອຍອາຍຸຕ່ຳກວ່າ 3 ປີ ຢູ່ເມືອງທີ່ທຸກຍາກທີ່ສຸດ**ເພື່ອຮັບປະກັນໃຫ້ໄດ້ຮັບໂພຊະນາການທີ່ຄົບຖ້ວນໃນໄລຍະສອງປີທຳອິດຂອງຊີວິດ. | A. ຈັດການທົດລອງໂຄງການ MECG ຕາມວິທີການ ຂອງ UNICEF ໂດຍຮ່ວມມືກັບ ກຊ ຮສສ ແລະ ຜູ້ຈັດຕັ້ງປະຕິບັດທີ່ບໍ່ແມ່ນພາກລັດ. | | ໄດ້ຈັດກອງປະຊຸມຈຳນວນໜຶ່ງເພື່ອປຶກສາຫາລື ແລະ ຢັ້ງຢືນການອອກແບບ, ຄູ່ມືການດຳເນີນງານ, ແລະ ແຜນແມ່ບົດລະບົບຄຸ້ມຄອງຂໍ້ມູນຂ່າວສານຂອງໂຄງການທົດລອງ MECG. ສາມອີງປະກອບນີ້, ໄດ້ສຳເລັດການອອກແບບໂດຍຜ່ານການປຶກສາຫາລື ແລະ ຢັ້ງຢືນກັບພາກລັດໂດຍທີ່ແນໃສ່ອຳນວຍການເສີມຂະຫຍາຍໂຄງການຈາກໄລຍະທົດລອງ. | ກຊ ຮສສ, ກົມສັງຄົມສົງເຄາະ |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | | | ຄວາມຄືບໜ້າ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|
| d) ສະໜອງການຊ່ວຍເຫຼືອດ້ານວັດຖຸ (ອາຫານ, ປີ້ແລກອາຫານ ແລະ ວັດຖຸສິ່ງຂອງອື່ນໆ) ແລະ ການຊ່ວຍເຫຼືອດ້ານຈິດໃຈ ໂດຍໃຫ້ບຸລິມະສິແກ່ແມ່ຍິງ ແລະ ເດັກນ້ອຍທີ່ຕ້ອງການປົກປ້ອງພິເສດ - ສ່ວນໃຫຍ່ກໍ່ຄືແມ່ຍິງຖືພາທີ່ມີລາຍຮັບຕໍ່າ, ເດັກກຳພ້າ; ເດັກທີ່ຖືກປະລະ; ຜູ້ຖືກຄວາມຮຸນແຮງທີ່ເປັນເດັກນ້ອຍ; ຜູ້ຖືກເຄາະຮ້າຍຈາກການຂູດຮີດ ຫຼື ລ່ວງລະເມີດທາງເພດ; ເດັກນ້ອຍທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ; ແລະ ເດັກນ້ອຍທີ່ຖືກຊ່ວຍເຫຼືອອອກຈາກສະພາບແວດລ້ອມການເຮັດວຽກທີ່ອັນຕະລາຍ ຫຼື ຖືກຂູດຮີດແຮງງານ. | B. ການຖອດຖອນບົດຮຽນຈາກການທົດລອງ | B.1. ອົງປະກອບການອອກແບບ (ປະສິດທິຜົນ) | ວິທີການຄັດເລືອກຂັ້ນເມືອງ ຂອງ UNICEF? | | |
| | | | ຄວາມສອດຄ່ອງ ຂອງ ຊຸດອຸດໜູນ ແລະ ລະດັບຄວາມພຽງພໍ? | ມີການໃຫ້ບໍລິການ ແລະ ການອຸດໜູນໃຫ້ແກ່ແມ່ຍິງຖືພາ ແລະ ເດັກນ້ອຍ ເຊິ່ງສາມາດເຂົ້າເຖິງຜູ້ໄດ້ຮັບຜົນປະໂຫຍດ 2,596 ຄົນ ຢູ່ແຂວງສະຫວັນນະເຂດ ແລະ ອັດຕະປື. ພ້ອມນັ້ນ, ກໍ່ໄດ້ສະໜັບສະໜູນບ້ານ SOS ທີ່ໃຫ້ການຊ່ວຍເຫຼືອໃຫ້ແກ່ເດັກກຳພ້າທີ່ດ້ອຍໂອກາດໂດຍໃຫ້ການຝຶກອົບຮົມວິຊາຊີບ ແລະ ກາລະໂອກາດໃນການຈ້າງງານ. ໂຄງການມີຈຸດປະສົງຊ່ວຍເຫຼືອ 1,231 ຄົນທີ່ມີຄວາມຕ້ອງການໂດຍສຸມໃສ່ຜູ້ຊາຍໄວໜຸ່ມທີ່ມີຄວາມສ່ຽງຈາກການຄ້າມະນຸດ 929 ຄົນ.<br><br>WFP ໄດ້ໃຫ້ການຊ່ວຍເຫຼືອດ້ານເງິນອຸດໜູນໃຫ້ແກ່ 15,871 ຄົນ (2,665 ຄົວເຮືອນ), ໂດຍສຸມໃສ່ແມ່ຍິງຖືພາ ແລະ ແມ່ທົ່ວໄປພ້ອມທັງຜູ້ເບິ່ງແຍງດູແລເດັກນ້ອຍລະຫວ່າງ 6-59 ເດືອນ, ຜູ້ຍິງ ແລະ ເດັກຍິງໃນໄວຈະເລີນພັນ, ຄົນທີ່ມີຄວາມພິການ, ແລະ ຄົວເຮືອນທີ່ມີຜູ້ຍິງເປັນຫົວໜ້າຄອບຄົວ. ຜູ້ໄດ້ຮັບຜົນປະໂຫຍດໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການຊື້ອາຫານທີ່ມີຄຸນຄ່າດ້ານໂພຊະນາການເພື່ອຊ່ວຍຮັບປະກັນຄວາມຕ້ອງການດ້ານສະບຽງອາຫານ. | |
| | | | ການນຳໃຊ້ບໍລິການເພີ່ມຂຶ້ນຂອງກຸ່ມເປົ້າໝາຍ? | | |
| | | ການນຳໃຊ້ເຄື່ອງມືການປະເມີນຜົນກ່ອນ/ພາຍຫຼັງ ແລະ ສົມທຽບລະຫວ່າງເມືອງ; ກອງປະຊຸມສຳມະນາການປະເມີນຜົນຈັດຂຶ້ນ ໂດຍ *UNICEF*. | | | |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | | | ຄວາມຄືບໜ້າ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|
| | | B.2. ກົນໄກການຈັດຕັ້ງປະຕິບັດ. | ການໂຄສະນາເຜີຍແຜ່ (ການສື່ສານ, ລະດົມ ແລະ ຍົກລະດັບຄວາມເຂົ້າໃຈ) | ມີການປຶກສາຫາລືຢ່າງຕໍ່ເນື່ອງກັບຄູ່ຮ່ວມພັດທະນາ ໂດຍສະເພາະແມ່ນ UNICEF ລວມທັງ UNVs ແລະ ຜູ້ໃຫ້ການຊ່ວຍເຫຼືອດ້ານອື່ນໆ ເພື່ອຈັດກິດຈະກຳໂຄສະນາເຜີຍແຜ່ໃຫ້ແກ່ຊຸມຊົນເພື່ອຈັດຕັ້ງປະຕິບັດໂຄງການທົດລອງ. ກິດຈະກຳນີ້ຖືກຜົນກະທົບຍ້ອນຄວາມຊັກຊ້າໃນການຕົກລົງເຫັນດີກ່ຽວກັບແຜນ ແລະ PSP. | |
| | | (ປະສິດທິຜົນ ແລະ ຄວາມແທດເໝາະຂອງຂະບວນການ) | ການຄັດເລືອກ (ການຢັ້ງຢືນການຖືພາໂດຍ ອສບ ແລະ ການຢັ້ງຢືນທີ່ຢູ່ອາໄສຢູ່ເມືອງ) | ຍັງບໍ່ທັນເລີ່ມ | |
| | | | ການຂຶ້ນທະບຽນ (ຢູ່ສະຖານທີ່ປິ່ນປົວ ໂດຍນຳໃຊ້ແອັບຂອງ MECG) | ຍັງບໍ່ທັນເລີ່ມ | |
| | | ການຖອດຖອນບົດຮຽນ ຈາກການຕິດຕາມ ແລະ ປະເມີນຜົນໂຄງການທົດລອງ (ຂໍ້ມູນປະຈຳວັນ) ແລະ ກົນໄກແກ້ໄຂຄຳຮ້ອງທຸກ: ການສະຫຼຸບລຸ່ວງເປັນປະຈຳຈາກ *UNICEF* ໃຫ້ແກ່ ກຊ ຣສສ ຕະຫຼອດໄລຍະທົດລອງ. | ການຂຶ້ນທະບຽນ (ຈັດສັນຈຳນວນ, ປ້ອນເຂົ້າລະບົບ MIS, ພິມບັດ, ຂຶ້ນທະບຽນການເບີກຈ່າຍ ແລະ ການສື່ສານເພື່ອປ່ຽນແປງພຶດຕິກຳ) | ກຳນົດ MIS ອີງຕາມລະບົບທີ່ມີການຕັ້ງຄ່າສະເພາະ ທີ່ສາມາດເສີມຂະຫຍາຍ ໂດຍສະເພາະ ແມ່ນໃນໄລຍະສຸກເສີນ. ລະບົບ MIS ລວມທັງແອັບເທິງມືຖືທີ່ອອກແບບ ແລະ ໄດ້ຮັບການຢັ້ງຢືນລະດັບຊາດຍັງລໍຖ້າການຈັດຕັ້ງປະຕິບັດຢູ່ແຕ່ລະລະດັບຂອງພາກລັດ. | |
| | | | ກົນໄກການເບີກຈ່າຍ (ການສຶກສາປະເມີນຄວາມສ່ຽງດ້ານຄວາມຮັບຜິດຊອບທາງການເງິນ) | ທຸກໆສອງເດືອນ, ພະນັກງານ Unitel, ບໍລິສັດ ໂທລະຄົມມະນາຄົມ ຢູ່ ສປປ ລາວ ໄປແຕ່ລະບ້ານເພື່ອຈ່າຍເງິນອຸດໜູນໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດຂອງ ໂຄງການ MECG. | |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນຮັບຜິດຊອບ |
|---|---|---|---|
| | B.3. ໂຄງຮ່າງການຈັດຕັ້ງ<br><br>ການຖອດຖອນບົດຮຽນ ຈາກໂຄງການທົດລອງ: ຕິດຕາມ/ປະເມີນໜ້າວຽກທີ່ສຳເລັດ; ຕິດຕາມເວລາເພື່ອສຳເລັດແຕ່ລະໜ້າວຽກ; ອັດຕາຜູ້ໄດ້ຮັບຜົນປະໂຫຍດ/ພະນັກງານ; ການວິເຄາະບໍລິມາດໜ້າວຽກ; ຄວາມເພິ່ງພໍໃຈ. | ໄດ້ມີການພັດທະນາ M&E ສຳລັບໂຄງການທົດລອງເບື້ອງຕົ້ນ ແລະ ສະເໜີເປັນສ່ວນໜຶ່ງຂອງຮ່າງຄູ່ມືການດຳເນີນງານໂຄງການ ເຊິ່ງປະຈຸບັນໄດ້ຮັບການຢັ້ງຢືນ ແລະ ຈັດຕັ້ງປະຕິບັດ. | |
| | B.4. ຄວາມເປັນໄປໄດ້ໃນການເສີມຂະຫຍາຍ<br><br>ຖອດຖອນບົດຮຽນ ຈາກໂຄງການທົດລອງ MECG ແລະ ນຳໃຊ້ໃນການອອກແບບ ແລະ ຈັດຕັ້ງປະຕິບັດໃຫ້ແກ່ຄົນທີ່ມີຄວາມພິການ ແລະ ຜູ້ສູງອາຍຸໃນອານະຄົດ. | ປະຈຸບັນ, ຍັງບໍ່ມີຂໍ້ມູນພຽງພໍເພື່ອປະເມີນຄວາມຄືບໜ້າຂອງກິດຈະກຳນີ້ສະເພາະ. | |
| | C. ການຂະຫຍາຍ ໂຄງການ MECG ໃນຂອບເຂດທົ່ວປະເທດຢູ່ເມືອງທີ່ທຸກຍາກ/ເປັນເປົ້າໝາຍ (ເບິ່ງຕື່ມໃນກິດຈະກຳ MECG ຂອງ NSPS (ກ) ການເກັບກຳຂໍ້ມູນເພື່ອກະກຽມ ແລະ ຕັດສິນໃຈກ່ຽວກັບຕົວເມືອງທີ່ທຸກຍາກເພື່ອເປັນເປົ້າໝາຍການຈັດຕັ້ງປະຕິບັດ; ຮັບປະກັນທາງດ້ານງົບປະມານ ແລະ ດ້ານຝ່າຍສະໜອງ). | | |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| **S.W.2. ໃຫ້ການບໍລິການ ແລະ ການອຸດໜູນຄົນທີ່ມີຄວາມພິການ ແລະ ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ (ລບຕ)** | | | |
| a) ເກັບກຳ ແລະ ສັງລວມຂໍ້ມູນຄົນທີ່ມີຄວາມພິການເພື່ອຮັບປະກັນວ່າໄດ້ຮັບການບໍລິການ ແລະ ຊ່ວຍເຫຼືອອຸດໜູນທີ່ເໝາະສົມ. | ເກັບກຳ ແລະ ສັງລວມຂໍ້ມູນທີ່ມີຢູ່ (LSSO, LECS, UNFPA, WHO, LSB, ຫ້ອງການກອງເລຂາຄະນະຄຸ້ມຄອງລະເບີດບໍ່ທັນແຕກ) ກ່ຽວກັບ PwDs ແລະ ຜູ້ລອດຊີວິດ ຈາກ ລບຕ ເພື່ອກຳນົດ: (i) ປະເພດ, ຄວາມຖືກຕ້ອງ ແລະ ຊັດເຈນ ກ່ຽວກັບ ຂໍ້ມູນ ຄົນທີ່ມີຄວາມພິການ/ລບຕ; (ii) ຊ່ອງວ່າງດ້ານຂໍ້ມູນທີ່ຕ້ອງແກ້ໄຂ ແລະ (iii) ເກັບກຳຂໍ້ມູນທີ່ຍັງຂາດ ເພື່ອກະກຽມກິດຈະກຳ (ຂ), (ຄ), (ງ) ແລະ (ຈ). | ຍັງບໍ່ທັນໄດ້ເລີ່ມ | ກົມນະໂຍບາຍຕໍ່ຜູ້ທີ່ມີຜົນງານ, ຄົນທີ່ມີຄວາມພິການ ແລະ ຜູ້ສູງອາຍຸ; |
| b) ພັດທະນາ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງກັບການຊ່ວຍເຫຼືອ ແລະ ອຸດໜູນໃຫ້ແກ່ຄົນທີ່ມີຄວາມພິການ (ລວມທັງຜູ້ລອດຊີວິດຈາກ ລບຕ ທີ່ເສຍອົງຄະ) ແລະ ຜູ້ລອດຊີວິດຈາກການນຳໃຊ້ຄວາມຮຸນແຮງ ອີງຕາມບົດບາດຍິງ-ຊາຍ ທີ່ສອດຄ່ອງກັບສະພາບເງື່ອນໄຂ ແລະ ຄວາມສາມາດ. | ໂຄງການດ້ານການຊ່ວຍເຫຼືອ ແລະ ຟື້ນຟູຊີວິດການເປັນຢູ່ຂອງຜູ້ເຄາະຮ້າຍຈາກເຫດລະເບີດຕົກຄ້າງ (ແຜນວຽກ ກຊ ຣສສ 2021-2025)<br><br>ທົບທວນນິຕິກຳທີ່ມີຢູ່ (ໂດຍສະເພາະແມ່ນສິດ ແລະ ຂໍ້ກຳນົດໃຫ້ແກ່ PwDs ແລະ ຜູ້ລອດຊີວິດ ຈາກ ລບຕ ເພື່ອ: (ກ) ກຳນົດສະຖານະປະຈຸບັນໃນການປົກປ້ອງ/ສິດທິທາງດ້ານກົດໝາຍໃຫ້ແກ່ກຸ່ມເປົ້າໝາຍ; ແລະ (ຂ) ໃຫ້ຄຳແນະນຳໃຫ້ແກ່ NSPC ກ່ຽວກັບການປັບປຸງ ແລະ ສ້າງກົດໝາຍໃໝ່ ໂດຍສະເພາະແມ່ນຂໍ້ກຳນົດໃຫ້ແກ່ຄົນທີ່ມີຄວາມພິການ ແລະ ຜູ້ລອດຊີວິດຈາກ ລບຕ ໃນກົດໝາຍປະກັນສັງຄົມ. ຕົວຢ່າງ: (i) ສ້າງນິຕິກຳລຸ່ມກົດໝາຍພາຍໃຕ້ກົດໝາຍວ່າດ້ວຍຄົນທີ່ມີຄວາມພິການ ສະບັບເລກທີ 057/ສພຊ, ລົງວັນທີ 10 ທັນວາ 2018, ເພື່ອໃຫ້ອຸດໜູນໃຫ້ແກ່ຄົນທີ່ມີຄວາມພິການ ແລະ ຜູ້ລອດຊີວິດຈາກ ລບຕ, ແລະ (ii) ສ້າງນິຕິກຳລຸ່ມກົດໝາຍພາຍໃຕ້ກົດໝາຍປະກັນສັງຄົມ ເລກທີ 54/ສພຊ, ລົງວັນທີ 27 ມິຖຸນາ 2018 ເພື່ອຮັບປະກັນການປົກຄຸມຄົນທີ່ມີຄວາມພິການ ແລະ ຜູ້ຊອດຊີວິດຈາກ ລບຕ ໂດຍ ອປຊ ແລະ ການປະກັນສຸຂະພາບແຫ່ງຊາດ. | ມີຄວາມຄືບໜ້າໃນການປັບປຸງນິຕິກຳ ແລະ ລະບຽບການທີ່ກ່ຽວຂ້ອງກັບຄົນທີ່ມີຄວາມພິການ. ລັດຖະບານໄດ້ຈັດຕັ້ງປະຕິບັດກົດໝາຍ ແລະ ນະໂຍບາຍເພື່ອປົກປ້ອງສິດໃນການເຂົ້າເຖິງວຽກທີ່ມີຄຸນຄ່າ ແລະ ການບໍລິການທີ່ຈຳເປັນພື້ນຖານ. ນອກນັ້ນ, ກໍ່ໄດ້ມີການຈັດກອງປະຊຸມສຳມະນາ ແລະ ເຜີຍແຜ່ຂໍ້ມູນຂ່າວສານເພື່ອຮັບປະກັນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຄົນທີ່ມີຄວາມພິການ 2019 ແບບເຕັມສ່ວນ, ແນໃສ່ການລຶບລ້າງການຈຳແນກ, ທັບມ້າງອຸປະສັກ ແລະ ຮັບປະກັນການເຂົ້າເຖິງໃນທຸກລະດັບ. ພ້ອມນັ້ນ, ກໍ່ໄດ້ມີການຮ່າງດຳລັດເພື່ອສ້າງຕັ້ງກອງທຶນຄົນທີ່ມີຄວາມພິການເພື່ອເພີ່ມທະວີຄວາມພະຍາຍາມໃນວຽກຟື້ນຟູໜ້າທີ່ການ ແລະ ການຊ່ວຍເຫຼືອເພື່ອພັດທະນາຄົນທີ່ມີຄວາມພິການ. | ກອງເລຂາຄະນະກຳມະການຄວບຄຸມ ລບຕ. |
| c) ໃຫ້ບໍລິການ ແລະ ອຸດໜູນແກ່ຜູ້ພິການທີ່ບໍ່ສາມາດເຮັດວຽກ, ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ແລະ ອາໄສຢູ່ໃນຄອບຄົວທີ່ມີລາຍຮັບຕໍ່າ ລວມທັງ ຜູ້ລອດຊີວິດຈາກ | ໂຄງການເພື່ອໃຫ້ການຊ່ວຍເຫຼືອ ແລະ ຟື້ນຟູໜ້າທີ່ການຂອງຜູ້ຖືກເຄາະຮ້າຍຈາກ ລບຕ (ແຜນວຽກ ກຊ ຣສສ 2021-2025) | ປະຈຸບັນ, ຍັງບໍ່ມີຂໍ້ມູນພຽງພໍເພື່ອປະເມີນຄວາມຄືບໜ້າຂອງກິດຈະກຳນີ້ສະເພາະ. | |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| ເຫດລະເບີດຕົກຄ້າງ ແລະ ຈາກການໃຊ້ຄວາມຮຸນແຮງທາງເພດ. | ສ້າງຄູ່ມື (ເຊັ່ນ: ຂະບວນການເຮັດວຽກ, ວິທີການວິທະຍາ, ກົນໄກ ແລະ ເຄື່ອງມື) ເພື່ອໃຫ້ການຊ່ວຍເຫຼືອ ແລະ ອຸດໜູນຄົນທີ່ມີຄວາມພິການ ແລະ ຜູ້ລອດຊີວິດຈາກ ລບຕ ທີ່ບໍ່ສາມາດເຮັດວຽກ ແລະ ເບິ່ງແຍງດູແລຕົນເອງຈາກຜູ້ທີ່ຢູ່ຄົວເຮືອນທີ່ມີລາຍຮັບຕໍ່າ. ສາມາດນໍາໃຊ້ບົດຮຽນຈາກໂຄງການທົດລອງ MECG. | ຄູ່ມືການດໍາເນີນງານ ເພື່ອ MECG ຖືກສ້າງຂຶ້ນ, ຢັ້ງຢືນ, ແລະ ເຜີຍແຜ່ດ້ວຍການຈັດການຝຶກອົບຮົມໃນລະດັບຊາດ, ແຂວງ ແລະ ເມືອງ.<br><br>ພ້ອມນັ້ນ, ຄູ່ມືການດໍາເນີນງານໄດ້ຖືກແລກປ່ຽນເພື່ອປັບປຸງ ແລະ ແກ້ໄຂດ້ວຍມືອາຊີບ. ພາຍຫຼັງທີ່ໄດ້ສະບັບສຸດທ້າຍແມ່ນຈະຖືກຈັດພິມ ແລະ ເຜີຍແຜ່ໃຫ້ແກ່ບັນດາຫ້ອງການສັງຄົມສົງເຄາະໃນລະດັບສູນກາງ, ແຂວງ ແລະ ເມືອງ. | |
| d) ສະໜັບສະໜູນການສ້າງຕັ້ງ ແລະ ຍົກລະດັບຂີດຄວາມສາມາດໃຫ້ແກ່ສະມາຄົມຄົນທີ່ມີຄວາມພິການດ້ວຍການສະໜອງການຝຶກອົບຮົມ, ການບໍລິການ, ການອຸດໜູນ ຫຼື ຊັບພະຍາກອນຕົວຈິງ ອີງຕາມສະພາບເງື່ອນໄຂ ແລະ ຄວາມສາມາດ. | ໂຄງການຝຶກອົບຮົມ ແລະ ສະໜອງວຽກເຮັດງານທໍາໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ ລບຕ (ແຜນວຽກ ກຊ ຣສສ 2021-2025).<br><br>ສ້າງຄູ່ມືດ້ານການຝຶກອົບຮົມໃຫ້ແກ່ສະມາຄົມສົ່ງເສີມຄົນທີ່ມີຄວາມພິການ.<br><br>ຈັດການຝຶກອົບຮົມໃຫ້ແກ່ ສະມາຄົມ ຄົນທີ່ມີຄວາມພິການ ເພື່ອຍົກລະດັບຂີດຄວາມສາມາດ. | ການຄໍ້າປະກັນ ແລະ ຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ ທີ່ເສຍອົງຄະ. ການຊ່ວຍເຫຼືອດັ່ງກ່າວສຸມໃສ່ການຝຶກອົບຮົມວິຊາຊີບ ແລະ ຊ່ວຍເຫຼືອເພື່ອຊອກຫາວຽກເຮັດງານທໍາ. ພ້ອມນັ້ນ, ໂຄງການກໍ່ໄດ້ໃຫ້ການບໍລິການປິ່ນປົວໃຫ້ແກ່ຜູ້ລອດຊີວິດຈາກ ລບຕ ທັງໝົດ 199 ຄົນ ແລະ ອໍານວຍຄວາມສະດວກໃຫ້ແກ່ການຟື້ນຟູໜ້າທີ່ການໃຫ້ແກ່ 41,295 ຄົນທີ່ຖືກຜົນກະທົບຈາກເຫດການ ລບຕ. | |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| 5. ເຊື່ອມສານຂໍ້ກຳນົດເພື່ອຄົນທີ່ມີຄວາມພິການເຂົ້າໃນວຽກຂອງບັນດາກະຊວງ ແລະ ຂະແໜງການອື່ນໆ. | ສ້າງກົນໄກການເຮັດວຽກຮ່ວມກັບຫຼາຍຂະແໜງການຜ່ານກອງເລຂາ NSPC ທີ່ສາມາດເຊື່ອມສານກັບຈຸດປະສານງານຂອງຄະນະກຳມະການແຫ່ງຊາດເພື່ອຄົນທີ່ມີຄວາມພິການ ອີງຕາມກົດໝາຍວ່າດ້ວຍຄົນທີ່ມີຄວາມພິການ ເລກທີ. 57/ສພຊ ລົງວັນທີ 10 ທັນວາ 2018, ແລະ ກຳນົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ກັບໜ່ວຍງານວິຊາການ.<br><br>ສ້າງແຜນດຳເນີນງານແບບເຊື່ອມສານສຳລັບຄົນທີ່ມີຄວາມພິການເພື່ອເຊື່ອມໂຍງກັບແຜນຂອງຂະແໜງການອື່ນພ້ອມທັງຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນເຊື່ອມສານດັ່ງກ່າວ. | ປະຈຸບັນ, ຍັງບໍ່ມີຂໍ້ມູນພຽງພໍເພື່ອປະເມີນຄວາມຄືບໜ້າຂອງກິດຈະກຳນີ້ສະເພາະ. | |
| **S.W.3. ໃຫ້ການບໍລິການ ແລະ ການອຸດໜູນໃຫ້ແກ່ຜູ້ສູງອາຍຸ.** | | | |
| a) ເກັບກຳ ແລະ ສັງລວມຂໍ້ມູນກ່ຽວກັບຜູ້ສູງອາຍຸ - ໂດຍສະເພາະຜູ້ທີ່ທຸກຍາກ, ຜູ້ທີ່ມາຈາກກຸ່ມດ້ອຍໂອກາດ, ແລະ ປ່ອຍພຽວ - ເພື່ອຮັບປະກັນໃຫ້ໄດ້ຮັບການບໍລິການ ແລະ ຊ່ວຍເຫຼືອທີ່ເໝາະສົມ. | ເກັບກຳ ແລະ ສັງລວມຂໍ້ມູນຜູ້ສູງອາຍຸຈາກສູນສະຖິຕິແຫ່ງຊາດ, ອົງການປະກັນສັງຄົມແຫ່ງຊາດ, UNFPA, WHO, NHIB ແລະ ສະມາຄົມຜູ້ສູງອາຍຸ. ນຳໃຊ້ເພື່ອວິເຄາະ ແລະ ວາງແຜນ ແລະ ນະໂຍບາຍຜູ້ສູງອາຍຸ. | ປະຈຸບັນ, ຍັງບໍ່ມີຂໍ້ມູນພຽງພໍເພື່ອປະເມີນຄວາມຄືບໜ້າຂອງກິດຈະກຳນີ້ສະເພາະ. | ກົມນະໂຍບາຍຕໍ່ຜູ້ທີ່ມີຜົນງານ, ຄົນທີ່ມີຄວາມພິການ ແລະ ຜູ້ສູງອາຍຸ; |
| b) ສ້າງ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງ ເພື່ອຮັບປະກັນການສະໜອງບໍລິການໃຫ້ແກ່ຜູ້ສູງອາຍຸ ໂດຍສະເພາະຜູ້ທີ່ທຸກຍາກ, ຈາກກຸ່ມດ້ອຍໂອກາດ ແລະ ປ່ອຍພຽວ, ອີງຕາມສະພາບເງື່ອນໄຂ ແລະ ຄວາມສາມາດ. | ທົບທວນນິຕິກຳປະຈຸບັນ ທີ່ກ່ຽວຂ້ອງກັບຜູ້ສູງອາຍຸ ໂດຍສະເພາະແມ່ນ ດຳລັດວ່າດ້ວຍຜູ້ສູງອາຍຸ ສະບັບເລກທີ. 473/ລບ, ລົງວັນທີ 12 ກໍລະກົດ 2021. ວິເຄາະຊ່ອງວ່າງ ແລະ ບັນຫາທີ່ຕ້ອງລະບຸຢ່າງຈະແຈ້ງໃນດຳລັດເພື່ອຈຸດປະສົງໃນການຈັດຕັ້ງປະຕິບັດດຳລັດເພື່ອສະໜັບສະໜູນຜູ້ສູງອາຍຸ. ສະເໜີປັບປຸງດຳລັດກັບ NSPC ແລະ ຂະແໜງການທີ່ກ່ຽວຂ້ອງ.<br><br>ສ້າງນິຕິກຳລຸ່ມກົດໝາຍພາຍໃຕ້ ດຳລັດຜູ້ສູງອາຍຸ ລວມທັງຄຳແນະນຳເພື່ອຈັດຕັ້ງປະຕິບັດດຳລັດໂດຍແນໃສ່ການສ້າງຜົນປະໂຫຍດໃຫ້ແກ່ຜູ້ສູງອາຍຸທີ່ທຸກຍາກ ແລະ ດ້ອຍໂອກາດ. | ກະຊວງແຮງງານ ແລະ ສະວັດດີການສັງຄົມ, ໂດຍໄດ້ຮັບການຊ່ວຍເຫຼືອຈາກ ອົງການ UNESCAP, ກຳລັງຢູ່ໃນຂັ້ນຕອນການສ້າງແຜນດຳເນີນງານແຫ່ງຊາດ ເພື່ອຜູ້ສູງອາຍຸ ແລະ ຄາດວ່າຈະສຳເລັດໃນຕອນທ້າຍ ຂອງ ປີ 2024. ນອກນັ້ນ, ກໍໄດ້ສ້າງ ແລະ ຮັບຮອງເອົາດຳລັດສະເພາະກ່ຽວກັບການແກ້ໄຂບັນຫາຂອງຜູ້ສູງອາຍຸ. | |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| c) ການປະເມີນ ຄວາມເປັນໄປໄດ້ໃນການ ຈັດຕັ້ງປະຕິບັດລະບົບໃຫ້ ອຸດໜູນບໍານານສັງຄົມ ໃຫ້ແກ່ຜູ້ສູງອາຍຸ ທີ່ບໍ່ ແມ່ນສະມາຊິກຂອງ ລະບົບປະກັນສັງຄົມແບບ ຈ່າຍເງິນສົມທົບ. | ຄົ້ນຄ້ວາ ແລະ ຈັດຕັ້ງປະຕິບັດການສຶກສາຄວາມເປັນໄປໄດ້ໃນການໃຫ້ການຊ່ວຍເຫຼືອແກ່ຜູ້ສູງອາຍຸທີ່ບໍ່ໄດ້ ຮັບການປົກຄຸມດ້ວຍລະບົບປະກັນສັງຄົມ ແລະ ປະກັນສຸຂະພາບ, ໂດຍສະເພາະແມ່ນຜູ້ທຸກຍາກ ແລະ ດ້ອຍໂອກາດ ແລະ ບໍ່ມີຜູ້ເບິ່ງແຍງ, ພ້ອມທັງຜູ້ທີ່ເປັນພະຍາດຊໍາເຮື້ອ ແລະ/ຫຼື ຕ້ອງການການເບິ່ງແຍງ ດູແລໄລຍະຍາວ. ລາຍງານຜົນໃຫ້ແກ່ NSPC ແລະ ຂະແໜງການກ່ຽວຂ້ອງ. | ປະຈຸບັນມີຂໍ້ມູນຂ່າວສານທີ່ຈໍາກັດກ່ຽວກັບຄວາມຄືບໜ້າໃນການ ໃຫ້ບໍລິການ ແລະ ຊ່ວຍເຫຼືອຜູ້ສູງອາຍຸເຖິງວ່າຈະມີນະໂຍບາຍ ປົກປ້ອງຊີວິດການເປັນຢູ່ກໍຕາມ. | |
| d) ໃຫ້ການອຸດໜູນ ແລະ ຊ່ວຍເຫຼືອດ້ານວັດຖຸ ສິ່ງຂອງ ແລະ ຈິດໃຈໃຫ້ ແກ່ຜູ້ສູງອາຍຸທີ່ທຸກຍາກ ແລະ ປ່ອຍພຽວ. | ພັດທະນາຫຼັກສູດການຝຶກອົບຮົມ (ລວມທັງຂະບວນການ, ວິທີການ, ກົນໄກ ແລະ ເຄື່ອງມື) ກ່ຽວກັບ ການຊ່ວຍເຫຼືອ ແລະ ອຸດໜູນຜູ້ສູງອາຍຸທີ່ທຸກຍາກ, ດ້ອຍໂອກາດ, ບໍ່ມີຜູ້ເບິ່ງແຍງດູແລ ແລະ ຕ້ອງການ ການປິ່ນປົວໄລຍະຍາວ, ໂດຍນໍາໃຊ້ບົດຮຽນຈາກໂຄງການທົດລອງ MECG. | ປະຈຸບັນ, ມີຄວາມຄືບໜ້າໃນການໃຫ້ເງິນອຸດໜູນ ແລະ ການຊ່ວຍເຫຼືອດ້ານວັດຖຸສິ່ງຂອງໃຫ້ແກ່ອະດີດນັກຮົບນັກ ປະຕິວັດຜູ້ສູງອາຍຸ. ທຸກໆຄົນຕ້ອງນໍາສົ່ງເອກະສານໃຫ້ແກ່ ພາກສ່ວນກ່ຽວຂ້ອງ ເພື່ອດໍາເນີນການເຊິ່ງມີເຄືອຂ່າຍໃນ ຂອບເຂດທົ່ວປະເທດ. ສໍາລັບຜູ້ໄດ້ຮັບນະໂຍບາຍແມ່ນຈະໄດ້ຮັບ ເງິນອຸດໜູນເທົ່າກັບ 70 ສ່ວນຮ້ອຍຂອງເງິນເດືອນສຸດທ້າຍເຊິ່ງ ຈະນອນຢູ່ລະຫວ່າງ 1.2 ຫາ 2 ລ້ານກີບ. | |
| e) ສະໜັບສະໜູນ ການສ້າງຕັ້ງ ແລະ ຍົກລະດັບຄວາມສາມາດ ຂອງສະມາຄົມຜູ້ສູງອາຍຸ. | ທົດລອງການອຸດໜູນຜູ້ສູງອາຍຸໃຫ້ແກ່ຜູ້ສູງອາຍຸທີ່ທຸກຍາກ, ບອບບາງ, ບໍ່ມີຜູ້ເບິ່ງແຍງດູແລ ໂດຍນໍາໃຊ້ ບົດຮຽນຈາກໂຄງການ MECG. | ປະຈຸບັນ, ຍັງບໍ່ມີຂໍ້ມູນພຽງພໍເພື່ອປະເມີນຄວາມຄືບໜ້າຂອງກິດ ຈະກໍານີ້ສະເພາະ. | |
| | ສ້າງຄູ່ມືການຝຶກອົບຮົມເພື່ອສ້າງຂີດຄວາມສາມາດໃຫ້ແກ່ສະມາຄົມຜູ້ສູງອາຍຸ. | ຍັງບໍ່ທັນໄດ້ເລີ່ມ | |
| | ຈັດການຝຶກອົບຮົມໃຫ້ແກ່ສະມາຄົມຜູ້ສູງອາຍຸໂດຍນໍາໃຊ້ຄູ່ມືທີ່ສ້າງຂຶ້ນມາ. | ຍັງບໍ່ທັນໄດ້ເລີ່ມ | |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນຮັບຜິດຊອບ |
|---|---|---|---|
| **S.W.4. ໃຫ້ການບໍລິການ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກໄພພິບັດທຳມະຊາດ ແລະ ໄພພິບັດທີ່ມະນຸດສ້າງຂຶ້ນ.** | | | |
| a) ເກັບກຳ ແລະ ສັງລວມຂໍ້ມູນຂ່າວສານກ່ຽວກັບຜູ້ຖືກເຄາະຮ້າຍຈາກໄພພິບັດທຳມະຊາດ ແລະ ໄພພິບັດທີ່ມະນຸດສ້າງຂຶ້ນເພື່ອຮັບປະກັນໃຫ້ໄດ້ຮັບການບໍລິການ ແລະ ຊ່ວຍເຫຼືອທີ່ເໝາະສົມ. | ພັດທະນາແນວຄວາມຄິດ ແລະ ຈັດຕັ້ງປະຕິບັດການສຶກສາຄວາມເປັນໄປໄດ້ແບບຮອບດ້ານກ່ຽວກັບລະບົບປະກັນສັງຄົມທີ່ສາມາດປັບຕົວ/ຮັບມືກັບເຫດກະທົບ (SRSP), ລວມທັງເກັບກຳຂໍ້ມູນພ້ອມທັງທົບທວນຂໍ້ກຳນົດທາງດ້ານກົດໝາຍ ແລະ ການກຳນົດທາງເລືອກ ແລະ ແຜນດຳເນີນງານ (ເພື່ອຊ້ອນທ້າຍກັບແຜນດຳເນີນງານ NSPS), ໂດຍມີຈຸດປະສົງແນໃສ່ການພັດທະນາລະບົບປົກປ້ອງສັງຄົມທີ່ສາມາດປັບຕົວ (ເຊັ່ນ: ການອອກແບບ ແລະ ກົນໄກການຈັດຕັ້ງປະຕິບັດສຳລັບລະບົບທີ່ຈ່າຍເງິນສົມທົບ ແລະ ບໍ່ເກັບເງິນສົມທົບ) ກັບໄພພິບັດທຳມະຊາດ ແລະ ເຫດການກະທົບດ້ານເສດຖະກິດຕ່າງໆ. | ປະຈຸບັນ, ຍັງບໍ່ມີຂໍ້ມູນພຽງພໍເພື່ອປະເມີນຄວາມຄືບໜ້າຂອງກິດຈະກຳນີ້ສະເພາະ. | |
| b) ສ້າງ ແລະ ປັບປຸງນິຕິກຳກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກໄພພິບັດທຳມະຊາດ ແລະ ໄພພິບັດທີ່ມະນຸດສ້າງຂຶ້ນອີງຕາມສະພາບເງື່ອນໄຂ ແລະ ຄວາມສາມາດຕົວຈິງ. | | ປະຈຸບັນ, ຍັງບໍ່ມີຂໍ້ມູນພຽງພໍເພື່ອປະເມີນຄວາມຄືບໜ້າຂອງກິດຈະກຳນີ້ສະເພາະ. | |
| c) ໃຫ້ການຊ່ວຍເຫຼືອດ້ານການບັນເທົາທຸກເຫດການສຸກເສີນ ແລະ ຜູ້ຖືກເຄາະຮ້າຍຈາກໄພພິບັດເພື່ອຟື້ນຟູຊີວິດການເປັນຢູ່. | ໂຄງການຮ່ວມກັບ WFP ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມສາມາດໃນການຟື້ນຟູຫຼັງເກີດໄພພິບັດໃຫ້ແກ່ຊຸມຊົນທີ່ຖືກຜົນກະທົບດ້ວຍອຸທົກກະໄພຢູ່ບັນດາແຂວງພາກໃຕ້ (ເບິ່ງແຜນວຽກ ກຊ ຮສສ 2021-2025 ເພີ່ມຕື່ມ). | ມີຫຼາຍອົງການຈັດຕັ້ງທີ່ໃຫ້ການຊ່ວຍເຫຼືອ ແລະ ການບໍລິການໃຫ້ແກ່ຜູ້ຖືກເຄາະຮ້າຍຈາກໄພພິບັດທຳມະຊາດ ແລະ ໄພພິບັດທີ່ມະນຸດສ້າງຂຶ້ນໂດຍຜ່ານບັນດາຂໍ້ລິເລີ່ມດັ່ງລຸ່ມນີ້:<br><br>ຈັດສັນແຫຼ່ງທຶນເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍຢູ່ 59 ເຂດໃນ 9 ແຂວງ ແລະ 50 ເມືອງ ທີ່ຖືກຜົນກະທົບຈາກໄພພິບັດ. ໄດ້ສະໜອງເຂົ້າໃນບໍລິມາດ 2,992 ໂຕນ ໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດປະມານ 81,250 ຄົນ. ນອກນັ້ນ, ກໍໄດ້ແຈກເຄື່ອງອຸປະໂພກບໍລິໂພກໃຫ້ແກ່ 42,920 ຄົນ ທີ່ຖືກຜົນກະທົບ.<br><br>ໂດຍຮ່ວມມືກັບ ກຊ ຮສສ ແລະ ໄດ້ຮັບການຊ່ວຍເຫຼືອ ຈາກ USAID, ອົງການ WFP ໄດ້ຝຶກອົບຮົມໃຫ້ແກ່ຜູ້ຕາງໜ້າຈາກພາກລັດ 34 ທ່ານ (12 ຍິງ) ຈາກ 14 ເມືອງ ພາຍໃນ ສາມ | |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| | | ແຂວງພາກໃຕ້ກໍ່ຄື ສາລະວັນ, ອັດຕະປື ແລະ ຈຳປາສັກ ກ່ຽວກັບການຍົກລະດັບຄວາມສາມາດຂອງເຈົ້າໜ້າທີ່ຂັ້ນແຂວງ ແລະ ເມືອງເພື່ອກະກຽມຄວາມພ້ອມໃນການຕອບໂຕ້ໄພພິບັດ ແລະ ການຄຸ້ມຄອງສາງ. ການຝຶກອົບຮົມໄດ້ຍົກໃຫ້ເຫັນເຖິງຄວາມສຳຄັນຂອງການຄຸ້ມຄອງສາງຢູ່ຂັ້ນເມືອງຢ່າງມີປະສິດທິພາບ ເພື່ອກະກຽມຄວາມພ້ອມເພື່ອຕອບໂຕ້ໄພພິບັດລວມທັງການຄຸ້ມຄອງເຄື່ອງບັນເທົາທຸກ ແລະ ການຊ່ວຍເຫຼືອຊຸມຊົນ ທີ່ຖືກຜົນກະທົບ.<br><br>ອົງການ FAO ໄດ້ສະໜັບສະໜູນໂຄງການເພື່ອຊ່ວຍເຫຼືອຊາວກະສິກອນຂະໜາດນ້ອຍ ແລະ ບຸກຄົນທີ່ມີຄວາມບອບບາງໃນສັງຄົມຢູ່ ສປປ ລາວ ເພື່ອສະກັດກັ້ນການແຜ່ລະບາດຂອງ ໂຄວິດ-19. ຈຸດປະສົງຂອງໂຄງການແມ່ນເພື່ອປົກປ້ອງກຸ່ມຄົນດັ່ງກ່າວ ພ້ອມທັງວິຖີຊີວິດການເປັນຢູ່ດ້ວຍການຍົກລະດັບຄວາມທົນທານຕໍ່ກັບຄວາມສ່ຽງ ແລະ ຜົນກະທົບຈາກການແຜ່ລະບາດພະຍາດ. ຈຸດປະສົງແມ່ນເພື່ອຍົກລະດັບຄວາມສາມາດຂອງຊາວກະສິກອນຂະໜາດນ້ອຍ ແລະ ອົງການປົກຄອງຂັ້ນທ້ອງຖິ່ນຢູ່ ແຂວງຫຼວງພະບາງ ແລະ ອຸດົມໄຊ ເພື່ອສະກັດກັ້ນການແຜ່ລະບາດພະຍາດໂຄວິດ-19 ແລະ ຫຼຸດຜ່ອນຜົນກະທົບດ້ານເສດຖະກິດ ແລະ ສັງຄົມ. ປະຈຸບັນ, ໄດ້ນຳໃຊ້ວິທີການທົ່ວໄປຍ້ອນຂາດຂໍ້ມູນຂ່າວສານ, ໂດຍໄດ້ໃຫ້ການຊ່ວຍເຫຼືອໃຫ້ແກ່ທຸກຄົນ ແທນທີ່ຈະຄັດເລືອກເອົາບຸກຄົນ ຫຼື ຄົວເຮືອນສະເພາະທີ່ເປັນເປົ້າໝາຍ. ພື້ນທີ່ເປົ້າໝາຍຂອງໂຄງການກວມເອົາ 55 ບ້ານເຊິ່ງມີ 7,000 ຄົວເຮືອນ, ໃຫ້ເງິນອຸດໜູນເພື່ອຊອກຫາວຽກເຮັດງານທຳແກ່ 3,000 ຄົວເຮືອນ ແລະ ສົ່ງເສີມວິທີການກະສິກຳທີ່ດີໃຫ້ແກ່ 4,000 ຄົວເຮືອນ. ມີປະມານ 37,100 ຄົນ ແລະ 10 ກຸ່ມຜະລິດໄດ້ຮັບການຊ່ວຍເຫຼືອຜ່ານໂຄງການນີ້. | |
| | ພັດທະນາກົນໄກ ແລະ ຊ່ອງທາງການຊຳລະແບບເຊື່ອມສານ ແລະ ຍືດຢຸ່ນທີ່ສາມາດລະດົມທຶນຜ່ານຜູ້ໃຫ້ບໍລິການຊຳລະຖ້າມີຄວາມຈຳເປັນ. | ປະຈຸບັນ ຍັງບໍ່ມີຂໍ້ມູນພຽງພໍເພື່ອປະເມີນຄວາມຄືບໜ້າຂອງກິດຈະກຳນີ້ສະເພາະ. | |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| d) ໃຫ້ການບໍລິການ ແລະ ຊ່ວຍເຫຼືອຜູ້ທີ່ລອດຊີວິດຈາກການນຳໃຊ້ຄວາມຮຸນແຮງອີງຕາມບົດບາດຍິງ-ຊາຍ ເພື່ອຟື້ນຟູຊີວິດການເປັນຢູ່ ແລະ ຮັບປະກັນການສົ່ງຕໍ່ເພື່ອຮັບບໍລິການປິ່ນປົວສຸຂະພາບຕາມຄວາມຕ້ອງການ. | ກອງເລຂາ NSPC ເລັ່ງລັດການປຶກສາຫາລືເພື່ອໃຫ້ຄຳແນະນຳ ແລະ ຂໍ້ສະເໜີແນະເພື່ອຈັດຕັ້ງປະຕິບັດກິດຈະກຳນີ້ໃຫ້ເຊື່ອມໂຍງກັບລະບົບສັງຄົມສົງເຄາະ | ຍັງບໍ່ທັນໄດ້ເລີ່ມ | |
| **S.W.5. ເສີມຂະຫຍາຍການຈັດຕັ້ງປະຕິບັດໂຄງການໃຫ້ອາຫານທ່ຽງ (SMP) ໄປສູ່ໂຮງຮຽນລັດຊັ້ນອະນຸບານ, ປ ກຽມ, ຊັ້ນປະຖົມ ແລະ ຊັ້ນມັດທະຍົມທຸກແຫ່ງຢູ່ບ້ານທີ່ນອນຢູ່ໃນເມືອງທີ່ທຸກຍາກໃນຂອບເຂດທົ່ວປະເທດ.** | | | |
| a) ພັດທະນາ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງກັບການໃຫ້ອາຫານທ່ຽງໃຫ້ແກ່ເດັກນ້ອຍຢູ່ໂຮງຮຽນ, ອີງຕາມສະພາບເງື່ອນໄຂ ແລະ ຄວາມສາມາດ. | ກຊ ສກ ທີ່ເປັນສະມາຊິກຂອງກອງເລຂາ NSPC - ໂດຍຮ່ວມມືກັບ WFP - ດຳເນີນການສຶກສານິຕິກຳປະຈຸບັນກ່ຽວກັບການໃຫ້ອາຫານທ່ຽງໃຫ້ແກ່ເດັກນ້ອຍຢູ່ໂຮງຮຽນ ເພື່ອລະບຸຊ່ອງວ່າງ ແລະ ກາລະໂອກາດໃນການເສີມຂະຫຍາຍການຈັດຕັ້ງປະຕິບັດໄປສູ່ໂຮງຮຽນລັດທຸກລະດັບ. | ກະຊວງສຶກສາທິການ ແລະ ກິລາ ຈະໄດ້ຮັບແຫຼ່ງທຶນໃໝ່ຈາກລັດຖະບານເຢຍລະມັນຜ່ານອົງການ WFP, ສຸມໃສ່ການຜະລິດອາຫານຢູ່ທ້ອງຖິ່ນ ເພື່ອໂຄງການອາຫານທ່ຽງ 2024-2026. | |
| b) ສະໜອງອາຫານສຸກໜຶ່ງຄາບຕໍ່ມື້ໃຫ້ແກ່ນັກຮຽນຢູ່ໂຮງຮຽນລັດຊັ້ນອະນຸບານ, ປ ກຽມ, ປະຖົມ ແລະ ມັດທະຍົມທຸກແຫ່ງຢູ່ເມືອງທີ່ທຸກຍາກໃນຂອບເຂດທົ່ວປະເທດ. ລາຍການອາຫານປະຈຳອາທິດຕ້ອງອອກແບບເພື່ອຕອບ | ປຶກສາຫາລືກັບຜູ້ຕາງໜ້າຂອງ ກະຊວງສຶກສາທິການ ແລະ ກິລາ ທີ່ເປັນສະມາຊິກກອງເລຂາ NSPC ແລະ WFP ກ່ຽວກັບການໃຫ້ອາຫານທ່ຽງໃຫ້ແກ່ໂຮງຮຽນສຳລັບແຜນວຽກ 2021-2025 ໂດຍແນໃສ່ການຮັບປະກັນດ້ານງົບປະມານ ແລະ ການຈັດຕັ້ງປະຕິບັດຕົວຈິງພ້ອມທັງເສີມຂະຫຍາຍໄປສູ່ຕົວເມືອງອື່ນໆໃນຂອບເຂດທົ່ວປະເທດໂດຍເລີ່ມຈາກເມືອງທີ່ທຸກຍາກທີ່ສຸດ. | ໂຄງການໃຫ້ອາຫານທ່ຽງໄດ້ປະສົບຜົນສຳເລັດໃນການເສີມຂະຫຍາຍການຈັດຕັ້ງປະຕິບັດຢູ່ໂຮງຮຽນລັດ ແລະ ຄົວເຮືອນທີ່ທຸກຍາກກໍ່ຄືໂຮງຮຽນ 490 ແຫ່ງ, 137 ເມືອງ ແລະ 17 ແຂວງ. ມີທັງໝົດ 222,183 ຄົນທີ່ໄດ້ຮັບຜົນປະໂຫຍດຈາກໂຄງການນີ້. | |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| ສະໜອງຄວາມຕ້ອງການດ້ານໂພຊະນາການສະເພາະຂອງເດັກນ້ອຍ. | | ເພື່ອເອື້ອອຳນວຍໃຫ້ແກ່ໂຄງການ, ລັດຖະບານໄດ້ນຳເຂົ້າ ແລະ ແຈກຢາຍອາຫານໂດຍໄດ້ຮັບການຊ່ວຍເຫຼືອຈາກ ອົງການອາຫານໂລກ ແລະ ການບໍລິການບັນເທົາທຸກຄາໂທລິກ. ໂຄງການໄດ້ໃຫ້ການຊ່ວຍເຫຼືອເປັນເຂົ້າ, ໝາກຖົ່ວ, ນ້ຳມັນພືດ ເຊິ່ງມີມູນຄ່າ 2.9 ລ້ານໂດລາສະຫະລັດ. | |
| **S.W.6. ເພີ່ມເງິນອຸດໜູນໃຫ້ແກ່ນັກຮຽນຢູ່ຊັ້ນມັທະຍົມຕົ້ນ, ໂດຍໃຫ້ບູລິມະສິດແກ່ຄອບຄົວທີ່ທຸກຍາກ ແລະ ດ້ອຍໂອກາດ.** | | | |
| a) ພັດທະນາ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງກັບການໃຫ້ທຶນການສຶກສາ ແລະ ເງິນອຸດໜູນ, ອີງຕາມສະພາບເງື່ອນໄຂ ແລະ ຄວາມສາມາດ. | ຜູ້ຕາງໜ້າຂອງ ກະຊວງ ສຶກສາທິການ ແລະ ກິລາ ທີ່ເປັນສະມາຊິກຂອງກອງເລຂາ NSPC ຄົ້ນຄວ້າກ່ຽວກັບນິຕິກຳໃນປະຈຸບັນທີ່ກ່ຽວຂ້ອງກັບການໃຫ້ເງິນອຸດໜູນໃຫ້ແກ່ນັກຮຽນຊັ້ນມັດທະຍົມຕົ້ນໂດຍແນ່ໃສ່ການເພີ່ມເງິນອຸດໜູນໃຫ້ໄດ້ຢ່າງຕ່ຳ 150,000 ກີບຕໍ່ເດືອນ ຕໍ່ນັກຮຽນທີ່ມາຈາກຄອບຄົວທີ່ທຸກຍາກ ແລະ ດ້ອຍໂອກາດ. | ປະຈຸບັນ, ຍັງບໍ່ມີຂໍ້ມູນພຽງພໍເພື່ອປະເມີນຄວາມຄືບໜ້າຂອງກິດຈະກຳນີ້ສະເພາະ. | |
| b) ເພີ່ມເງິນອຸດໜູນໃຫ້ແກ່ນັກຮຽນຢູ່ໂຮງຮຽນຊັ້ນມັດທະຍົມຕົ້ນ - ໂດຍໃຫ້ບູລິມະສິດໃຫ້ແກ່ຜູ້ທີ່ທຸກຍາກ ແລະ ດ້ອຍໂອກາດ (ເຊັ່ນ: ຄົນທີ່ມີຄວາມພິການ ແລະ ກຸ່ມຊົນເຜົ່າ) - ເພື່ອສາມາດຊື້ອຸປະກອນການຮຽນ, ຄ່າຮຽນ ແລະ ການເດີນທາງຕາມຄວາມຈຳເປັນ. | ປຶກສາຫາລືກັບ ກຊ ສກ ແລະ ຜູ້ຕາງໜ້າທີ່ເປັນສະມາຊິກໃນກອງເລຂາເພື່ອເພີ່ມເງິນອຸດໜູນໃຫ້ແກ່ນັກຮຽນຊັ້ນມັດທະຍົມຕົ້ນ ແລະ ລະບຸໃນແຜນ ກຊ ສກ ສຳລັບປີ 2021-2025 | ກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ ສົ່ງເສີມການເຂົ້າເຖິງການສຶກສາໃຫ້ແກ່ນັກຮຽນທີ່ມີພອນສະຫວັນ, ນັກຮຽນດ້ອຍໂອກາດ, ຈາກກຸ່ມຊົນເຜົ່າ ແລະ ນັກຮຽນທີ່ມີຄວາມພິການ. ລາຍລະອຽດ ຂອງ ແຕ່ລະໂຄງການມີດັ່ງຕໍ່ໄປນີ້:<br>- ໂຄງການໃຫ້ອາຫານທ່ຽງ ເສີມຂະຫຍາຍໄປສູ່ໂຮງຮຽນລັດ 827 ແຫ່ງ.<br>- ໂຮງຮຽນຊົນເຜົ່າ ກໍ່ເປັນສ່ວນໜຶ່ງຂອງ ໂຄງການອາຫານທ່ຽງ ພ້ອມທັງໂຮງຮຽນຄົນທີ່ມີຄວາມພິການ 26 ແຫ່ງ. ມີນັກສຶກສາທັງໝົດ 8,469 ຄົນທີ່ໄດ້ຮັບເງິນເບ້ຍລ້ຽງ 200,000 ກີບ ຕໍ່ຄົນ.<br>- ໄດ້ດຳເນີນການຈັດຊື້ຈັດຈ້າງເພື່ອໃຫ້ອາຫານທ່ຽງໃຫ້ໂຮງຮຽນຢູ່ 7 ແຂວງ ແລະ 36 ຕົວເມືອງ. | |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| **S.W.7. ຈັດສັນງົບປະມານແຫ່ງລັດ ເພື່ອລົງທຶນໃນການສຶກສາ ແລະ ຂະຫຍາຍການເຂົ້າເຖິງ.** | | | |
| a) ຮັບປະກັນການປະຕິບັດກົດໝາຍທີ່ກ່ຽວຂ້ອງເພື່ອຈັດສັນງົບປະມານໃຫ້ໂຮງຮຽນ, ອີງຕາມສະພາບເງື່ອນໄຂ ແລະ ຄວາມສາມາດ. | ກະຊວງສຶກສາ ແລະ ກະຊວງການເງິນ ເຊິ່ງເປັນສະມາຊິກຂອງ NSPC ຕ້ອງສ້າງອະນຸກຳມະການກ່ຽວກັບການສັງຄົມສົງເຄາະ ເພື່ອສົ່ງເສີມລະບົບການສຶກສາພາກລັດ, ໂດຍມີຈຸດປະສົງຮັບປະກັນ ແລະ ສ້າງ: (ກ) ເວທີການປຶກສາຫາລືເປັນປະຈຳລະຫວ່າງກະຊວງ; ແລະ (ຂ) ການສະໜອງຂໍ້ມູນທັນການ ຈາກລຸ່ມຫາເທິງສຳລັບໂຮງຮຽນທີ່ບໍ່ໄດ້ຮັບການຈັດສັນງົບປະມານປະຈຳປີລວມທັງຄຳຄິດເຫັນຂອງໂຮງຮຽນ ແລະ ໂຮງຮຽນອານຸບານກ່ຽວກັບລະດັບຄ່າທຳນຽມທີ່ເກັບນຳປະຊາຊົນ. | ໃນປີ 2022, ກະຊວງສຶກສາທິການ ແລະ ກິລາ ເພີ່ມຄວາມພະຍາຍາມໃນການບໍລິຫານສະຖານການສຶກສາ ໂດຍຈັດສັນງົບປະມານ 92 ຕື້ກີບ ໃຫ້ແກ່ 18 ແຂວງ ແລະ 148 ເມືອງ. ທຶນດັ່ງກ່າວແມ່ນແນໃສ່ການສະໜັບສະໜູນກິດຈະກຳບໍລິຫານໂຮງຮຽນ. ພ້ອມນັ້ນ, ໃນປີ 2023, ກໍ່ໄດ້ມີການຈັດສັນງົບປະມານ 5 ຕື້ກີບເພີ່ມເຕີມເພື່ອຈຸດປະສົງດຽວກັນ. | |
| b) ປັບປຸງກົນໄກການປະສານງານລະຫວ່າງ ກຊ ສກ ແລະ ກຊ ກງ. | | ປະຈຸບັນ, ຍັງບໍ່ມີຂໍ້ມູນພຽງພໍເພື່ອປະເມີນຄວາມຄືບໜ້າຂອງກິດຈະກຳນີ້ສະເພາະ. | |
| c) ຮັບປະກັນໃຫ້ມີທຶນພຽງພໍ ແລະ ຈັດສັນແບບທັນການໃຫ້ແກ່ໂຮງຮຽນ ເພື່ອຈຸດປະສົງໃນການບໍ່ເກັບຄ່າຮຽນຈາກຄອບຄົວ ຂອງນັກຮຽນຊັ້ນອະນຸບານ, ປ ກຽມ, ຊັ້ນປະຖົມ ແລະ ມັດທະຍົມຕົ້ນ ໃນຂອບເຂດທົ່ວປະເທດ. | | | |
| **S.W.8. ໃຫ້ການອຸດໜູນເພື່ອຝຶກອົບຮົມວິຊາຊີບ, ພັດທະນາສີມືແຮງງານ ແລະ ອາຊີວະສຶກສາໃຫ້ແກ່ບຸກຄົນທີ່ທຸກຍາກ ແລະ ຢູ່ໃນອາຍຸເກນອອກແຮງງານທີ່ດ້ອຍໂອກາດເພື່ອອຳນວຍໃຫ້ສາມາດເຂົ້າເຖິງກາລະໂອກາດການຈ້າງງານທີ່ມີຄຸນຄ່າ.** | | | |
| a) ສ້າງ/ປັບປຸງ ນິຕິກຳກ່ຽວກັບການໃຫ້ທຶນການສຶກສາ TVET ເພື່ອສະໜອງການຝຶກ | ປຶກສາຫາລືກ່ຽວກັບນິຕິກຳ ແລະ ລະບຽບການປະຈຸບັນເພື່ອໃຫ້ທຶນການສຶກສາໃຫ້ແກ່ນັກສຶກສາ TVET ເພື່ອຊອກຫາຊ່ອງວ່າງ ແລະ ວິທີການແກ້ໄຂ. | ປະຈຸບັນ, ຍັງບໍ່ມີຂໍ້ມູນພຽງພໍເພື່ອປະເມີນຄວາມຄືບໜ້າຂອງກິດຈະກຳນີ້ສະເພາະ. | |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| ອົບຮົມວິຊາຊີບໃຫ້ແກ່ຄົນທີ່ທຸກຍາກ ແລະ ຢູ່ໃນເກນອາຍຸອອກແຮງງານ ທີ່ດ້ອຍໂອກາດຕາມສະພາບເງື່ອນໄຂ ແລະ ຄວາມສາມາດ.<br><br>b) ໃຫ້ການອຸດໜູນເພື່ອຝຶກອົບຮົມວິຊາຊີບ, ພັດທະນາສີມືແຮງງານ ແລະ ອາຊີວະສຶກສາໃຫ້ແກ່ບຸກຄົນທີ່ທຸກຍາກ ແລະ ຢູ່ໃນອາຍຸເກນອອກແຮງງານທີ່ດ້ອຍໂອກາດເພື່ອອຳນວຍໃຫ້ສາມາດເຂົ້າເຖິງການຈ້າງງານ ຫຼື ມີສ່ວນຮ່ວມໃນການພັດທະນາວິສາຫະກິດ. | ປຶກສາຫາລືກັບຜູ້ຕາງໜ້າຂອງ ກຊ ສກ ເພື່ອເຊື່ອມສານກິດຈະກຳໃຫ້ເງິນອຸດໜູນໃຫ້ແກ່ນັກສຶກສາຂະແໜງ TVET ທີ່ທຸກຍາກ ແລະ ດ້ອຍໂອກາດເຂົ້າໃນແຜນ ຫ້າ ປີ ຂອງ ກະຊວງສຶກສາທິການ ແລະ ກິລາ 2021-2025. | ໄດ້ປະສົບຜົນສຳເລັດໃນການສະໜອງການຝຶກອົບຮົມວິຊາຊີບໃຫ້ແກ່ຄູອາຈານ 300 ທ່ານ ແລະ ການພັດທະນາທັກສະສີມືແຮງງານອີງຕາມຄວາມຕ້ອງການຂອງຕະຫຼາດໃຫ້ແກ່ 14,000 ກວ່າຄົນ. ນອກນັ້ນ, ກໍ່ໄດ້ສຸມໃສ່ການຍົກລະດັບການສຶກສາໃຫ້ແກ່ຄົນໄວໜຸ່ມ ແລະ ຜູ້ທີ່ອອກໂຮງຮຽນໂດຍມີຜູ້ໄດ້ຮັບຜົນປະໂຫຍດ 98,879 ຄົນ. ນອກນັ້ນ, ກໍ່ໄດ້ມີການປັບປຸງ ແລະ ເສີມຂະຫຍາຍ 20 ຫຼັກສູດ. | |
| **S.W.9. ສ້າງກຸ່ມຜູ້ຜະລິດ ແລະ ການໃຫ້ບໍລິການຂອງພາກລັດເພື່ອອຳນວຍຄວາມສະດວກໃນການເຂົ້າເຖິງວຽກເຮັດງານທຳທີ່ມີຄຸນຄ່າ.** | | | |
| a) ສ້າງ ແລະ ປັບປຸງນິຕິກຳ ເພື່ອສົ່ງເສີມກຸ່ມຜະລິດ ແລະ ການບໍລິການພາກລັດໃຫ້ແກ່ແຮງງານຊົນນະບົດທີ່ມີລາຍຮັບຕ່ຳພ້ອມທັງສົ່ງເສີມການເຂົ້າເຖິງວຽກທີ່ມີຄຸນຄ່າ. | ກະຊວງກະສິກຳ ແລະ ປ່າໄມ້ ດຳເນີນການສຶກສາກ່ຽວກັບນິຕິກຳທີ່ມີທີ່ກ່ຽວຂ້ອງກັບກຸ່ມຜູ້ຜະລິດ ແລະ ການບໍລິການພາກລັດໃຫ້ແກ່ແຮງງານຊົນນະບົດທີ່ມີລາຍຮັບຕ່ຳ ເພື່ອຮັບປະກັນການເຊື່ອມສານເຂົ້າໃນກົດໝາຍ ຫຼື ດຳລັດຂອງນາຍົກລັດຖະມົນຕີ. | ການຈັດຕັ້ງປະຕິບັດໜ້າວຽກສ່ວນໃຫຍ່ແມ່ນອີງຕາມ ດຳລັດ 660 ເຊິ່ງເປັນດຳລັດຄຸ້ມຄອງກຸ່ມຜູ້ຜະລິດ. ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບກຸ່ມຜູ້ຜະລິດ. ເວົ້າສະເພາະ, ດຳລັດ 348 ແລະ ແຜນແມ່ບົດແມ່ນກຳລັງຢູ່ໃນຂັ້ນຕອນການປັບປຸງ ແລະ ຄາດວ່າຈະຖືກຮັບຮອງໃນປີໜ້າ. | |

| ກິດຈະກຳ NSPS | ຄາດໝາຍ/ຜົນໄດ້ຮັບ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| b) ສ້າງສະຫະກອນທີ່ເປັນຕົວແບບ ໂດຍຮ່ວມມືກັບຄູ່ຮ່ວມພັດທະນາສາກົນ. | ກອງເລຂາ NSPC ຮ່ວມມືກັບຄູ່ຮ່ວມພັດທະນາ (ເຊັ່ນ ILO ແລະ FAO) ເພື່ອແລກປ່ຽນພາກປະຕິບັດທີ່ດີດ້ານການສ້າງ ແລະ ບໍລິການກຸ່ມຜູ້ຜະລິດ ແລະ ສະຫະກອນ (ດີສຸດແມ່ນຈາກປະເທດໃນພາກພື້ນອາຊຽນເຊັ່ນ ຟີລິບປິນ) ແລະ ຖອດຖອນບົດຮຽນແບບເພື່ອນຕໍ່ເພື່ອນເຊິ່ງອາດນຳໃຊ້ຊັບພະຍາກອນຂອງເຄືອຂ່າຍ ເພື່ອສົ່ງເສີມການພັດທະນາສະຫະກອນຢູ່ພາກພື້ນອາຊີ ແລະ ປາຊີຟິກ. | ກະຊວງ ກປ ກຳລັງຈັດຕັ້ງປະຕິບັດຂໍ້ລິເລີ່ມເພື່ອພັດທະນາຊົນນະບົດແບບເຊື່ອມສານ ເຊິ່ງເອີ້ນກັນວ່າ ໂຄງການ ເຊມາ ອຸດົງ ໂດຍໄດ້ຮັບການສະໜັບສະໜູນຈາກ KOICA. ເຊມາ ອຸດົງ ແມ່ນໂຄງການໜຶ່ງທີ່ປະສົບຜົນສຳເລັດອັນສຳຄັນຂອງ ກຊ ກປ ໃນການຊ່ວຍເຫຼືອກຸ່ມຜະລິດຢູ່ຂັ້ນທ້ອງຖິ່ນ. ໂຄງການໄດ້ສະໜອງທຶນໃຫ້ແກ່ກຸ່ມດັ່ງກ່າວເຊິ່ງ 70 ສ່ວນຮ້ອຍ ຂອງທຶນແມ່ນໄດ້ຈາກໂຄງການ ແລະ ອີກ 30 ສ່ວນຮ້ອຍ ແມ່ນການປະກອບສ່ວນຂອງແຮງງານທ້ອງຖິ່ນ. ໂຄງການນີ້ໄດ້ເສີມຂະຫຍາຍໄປສູ່ແຂວງວຽງຈັນ, ບໍລິຄຳໄຊ, ຊຽງຂວາງ, ຈຳປາສັກ, ເຊກອງ ແລະ ສາລະວັນ ໂດຍທີ່ມີຊຸມຊົນໄດ້ຮັບຜົນປະໂຫຍດຫຼາຍພາກສ່ວນ. | |
| c) ສົ່ງເສີມກຸ່ມຜະລິດ ແລະ ການໃຫ້ບໍລິການໃຫ້ແກ່ແຮງງານຊົນນະບົດທີ່ທຸກຍາກ ເພື່ອເຂົ້າເຖິງວຽກເຮັດງານທຳທີ່ມີຄຸນຄ່າ ອີງຕາມຄວາມຕ້ອງການ ຂອງຕະຫຼາດແຮງງານ ຫຼື ປ່ຽນອາຊີບອີງຕາມຄວາມຕ້ອງການຂອງກຸ່ມຜະລິດ, ການບໍລິການ, ສະຫະກອນທ້ອງຖິ່ນ ເພື່ອເພີ່ມລາຍຮັບ ແລະ ຫຼຸດຜ່ອນຄວາມທຸກຍາກ. | ປຶກສາຫາລືກັບຄູ່ຮ່ວມພັດທະນາ ແລະ ກະຊວງການເງິນກ່ຽວກັບທາງເລືອກໃນການເຊື່ອມສານວຽກຊ່ວຍເຫຼືອການພັດທະນາສະຫະກອນ ແລະ ກຸ່ມຜະລິດຢູ່ເຂດຊົນນະບົດເຂົ້າໃນແຜນຫ້າປີຂອງ ກະຊວງກະສິກຳ ແລະ ປ່າໄມ້. | ໄດ້ມີຄວາມພະຍາຍາມອັນໃຫຍ່ຫຼວງຈົນມາຮອດປະຈຸບັນ, ອີງຕາມບົດລາຍງານປະຈຳປີ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ປີ 2022, ໃນນັ້ນ ກໍ່ໄດ້ມີການສ້າງຕັ້ງກຸ່ມຜະລິດ 4,193 ກຸ່ມ ແລະ 27 ສະຫະກອນ. ຜົນສຳເລັດນີ້, ຊີ້ໃຫ້ເຫັນເຖິງການຂະຫຍາຍຕົວຂອງບັນດາກຸ່ມ, ການສົ່ງເສີມຄວາມກ້າວໜ້າດ້ານເສດຖະກິດ ແລະ ການປັບປຸງຊີວິດການເປັນຢູ່ໂດຍລວມ. | |

# ເອກະສານຊ້ອນທ້າຍ 2. ລາຍການເອກະສານທີ່ໄດ້ທົບທວນ

| ລຳດັບ | ຊື່ເອກະສານ |
|---|---|
| **ການປົກປ້ອງສັງຄົມ** | |
| 1 | ຍຸດທະສາດປົກປ້ອງສັງຄົມແຫ່ງຊາດ, ວິໄສທັດຮອດປີ 2030, ເປົ້າໝາຍຮອດປີ 2025 |
| 2 | ດຳລັດນາຍົກລັດຖະມົນຕີ ເລກທີ. 655 ວ່າດ້ວຍການສ້າງຕັ້ງຄະນະກຳມະການປົກປ້ອງສັງຄົມແຫ່ງຊາດ |
| 3 | ມະຕິຂອງສະພາແຫ່ງຊາດວ່າດ້ວຍການປົກປ້ອງສັງຄົມ |
| 4 | ບົດສະຫຼຸບໂຄງການ UNJP ໃຫ້ແກ່ລັດຖະບານ ແຫ່ງ ສປປ ລາວ |
| 5 | ການປຶກສາຫາລືກ່ຽວກັບການປົກປ້ອງສັງຄົມ ອົງການການປະເມີນຜົນ |
| 6 | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຄູ່ມືຂໍ້ມູນຂ່າວສານດ້ານການຕິດຕາມຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ແລະ SDG 1.3, 2021 |
| 7 | ແຈ້ງການເລກທີ 3292/ຮສສ ກ່ຽວກັບການເກັບກຳຂໍ້ມູນສະຖິຕິປົກປ້ອງສັງຄົມ ແລະ SDG1.3 |
| 8 | ອົງການແຮງງານສາກົນ, ການສຶກສາຕົ້ນທຶນປົກປ້ອງສັງຄົມເພື່ອປະກອບສ່ວນເຂົ້າແຜນພັດທະນາເສດຖະກິດສັງຄົມ ຂອງ ສປປ ລາວ (ຍັງບໍ່ໄດ້ຕີພິມເຜີຍແຜ່) |
| 9 | ອົງການແຮງງານສາກົນ ບົດລາຍງານການປະເມີນສະພາບການປົກປ້ອງສັງຄົມໂດຍການປຶກສາຫາລືຮ່ວມກັນ ຢູ່ ສປປ ລາວ , ບົດສັງລວມ 2017 |
| 10 | ອົງການ ສປຊ, ພັດທະນາລະບົບຕອບໂຕ້ເຫດກະທົບ ເພື່ອຮັບມືກັບພະຍາດ ໂຄວິດ-19 ໃນ ສປປ ລາວ, ບົດຂັດຫຍໍ້, ພຶດສະພາ 2020 |
| 11 | ອົງການແຮງງານສາກົນ, ຊຸດເຄື່ອງມືຝຶກອົບຮົມຄູຝຶກດ້ານການປົກປ້ອງສັງຄົມສຳລັບ ສປປ ລາວ, 2023 |
| 12 | Tim Scheffman, ສຶກສາຄວາມສ່ຽງດ້ານການເງິນ ແລະ ມູນຄ່າຂອງເງິນສຳລັບການຈ່າຍອຸດໜູນສະຫວັດດີການສັງຄົມ ຂອງ ສປປ ລາວ (ອົງການແຮງງານສາກົນ 2022) |
| 13 | ທ່ານ ພູເພັດ ກ້ຽວພິລາວົງ, ສຶກສາຜົນກະທົບການປົກປ້ອງສັງຄົມຕໍ່ການເຕີບໂຕຂອງເສດຖະກິດ ແລະ ການລົງທຶນປະກັນສັງຄົມໃນ ສປປ ລາວ, ບົດສະເໜີດ້ານນະໂຍບາຍ, ອົງການແຮງງານສາກົນ 2022 |
| 14 | Krzysztof Hagemejer and Edwin C. Rodin-Brown, ສາລະບານບັນຊີສຳລັບລາຍການລາຍງານຈ່າຍປົກປ້ອງສັງຄົມ (ບໍ່ໄດ້ຕີພິມເຜີຍແຜ່). |
| 15 | UNCDF, ແຜນລະດົມທຶນເພື່ອການສ້າງຕັ້ງກອງທຶນປົກປ້ອງສັງຄົມແຫ່ງຊາດ (ບໍ່ໄດ້ຕີພິມເຜີຍແຜ່). |
| **ກອງທຶນປະກັນສັງຄົມ ແຫ່ງ ຊາດ** | |
| 1 | ກົດໝາຍ ວ່າດ້ວຍການປະກັນສັງຄົມ ສະບັບປັບປຸງ, ເລກທີ 054/ສພຊ, ລົງວັນທີ 27 ມິຖຸນາ 2018 |
| 2 | ຄູ່ມືການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍການປະກັນສັງຄົມ, ເລກທີ 2571/ຮສສ, ລົງວັນທີ 24 ກໍລະກົດ 2015 |
| 3 | ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງອົງການປະກັນສັງຄົມແຫ່ງຊາດ ເລກທີ 1555/ຮສສ, ລົງວັນທີ 15 ກຸມພາ 2024 |
| 4 | ດຳລັດ ວ່າດ້ວຍສະພາບໍລິຫານ ຂອງກອງທຶນປະກັນສັງຄົມແຫ່ງຊາດ ເລກທີ 346/ນຍ, ລົງວັນທີ 22 ມິຖຸນາ 2020 |
| 5 | ຂໍ້ຕົກລົງ ລັດຖະມົນຕີ ວ່າດ້ວຍການກວດກາປະກັນສັງຄົມ, ເລກທີ 4139, ລົງວັນທີ 2 ພະຈິກ 2021 |
| 6 | ແຜນພັດທະນາ ຫ້າປີ ຂອງ ອປຊ |

| | |
|---|---|
| 7 | ຄູ່ມື E-Office ຂອງ ອປຊ |
| 8 | ແຜນວຽກການປັບປຸງກົດໝາຍຂອງ ອປຊ |
| 9 | ບົດລາຍງານປະຈຳປີຂອງກອງທຶນປະກັນສັງຄົມແຫ່ງຊາດ 2019 ຫາ 2023 |
| 10 | ຂໍ້ມູນສະມາຊິກຂອງ ອປຊ |
| 11 | ບົດລາຍງານ ການຄຳນວນຄະນິດສາດກອງທຶນປະກັນສັງຄົມແຫ່ງຊາດ ຂອງ ສປປ ລາວ |
| 12 | Fred Merttens et al., ສຶກສາດ້ານທຳຄວາມເຂົ້າໃຈຂອງແຮງງານນອກລະບົບ ແລະ ການຂະຫຍາຍອັດຕາປົກຄຸມ ປະກັນສັງຄົມ ຂອງ ສປປ ລາວ (ILO, 2024) |
| 13 | ອົງການແຮງງານສາກົນ, ບົດລາຍງານ ແລະ ຄູ່ມືດ້ານການກວດກາປະກັນສັງຄົມ (ບໍ່ໄດ້ຕີພິມເຜີຍແຜ່). |
| **ກອງທຶນປະກັນສຸຂະພາບແຫ່ງຊາດ** | |
| 1 | ກົດໝາຍ ວ່າດ້ວຍການປະກັນສຸຂະພາບ ທັງສະບັບພາສາລາວ ແລະ ອັງກິດ, ເລກທີ 149/ສພຊ, ວັນທີ 25 ມັງກອນ 2019 |
| 2 | ດຳລັດ ວ່າດ້ວຍການປະກັນສຸຂະພາບ_470 17 ຕຸລາ 2012 |
| 3 | ຄຳແນະນຳຂອງ ກະຊວງສາທາລະນະສຸກ ກ່ຽວກັບ ການປະກັນສຸຂະພາບ NHI (0476) ລົງນາມ 16 May 2018 NHI |
| 4 | ຍຸດທະສາດປະກັນສຸຂະພາບ 2021-2025 |
| 5 | ຍຸດທະສາດປະກັນສຸຂະພາບ 2017-2021 |
| 6 | ຍຸດທະສາດການເງິນສາທາລະນະສຸກ 2021 - 2025 |
| 7 | ກົດໝາຍວ່າດ້ວຍການປິ່ນປົວ 2005 |
| 8 | ກົດໝາຍວ່າດ້ວຍການປິ່ນປົວ ສະບັບປັບປຸງ 2014 |
| 9 | ຄູ່ມືກວດສອບປະກັນສຸຂະພາບ ເລກທີ 2246/ສທ (2020) |
| 10 | ບົດບັນທຶກຄວາມເຂົ້າໃຈລະຫວ່າງ ຫ້ອງການປະກັນສຸຂະພາບ ແລະ ກຊ ປ້ອງກັນຄວາມສະຫງົບ |
| 11 | ບົດລາຍງານປະກັນສຸຂະພາບປະຈຳປີ 2020 ແລະ ແຜນ 2021 |
| 12 | ຂໍ້ແນະນຳການຈັດຕັ້ງປະຕິບັດກອງທຶນປະກັນສຸຂະພາບ 2022 |
| 13 | Jean Claude Hennicot, ທາງເລືອກໃນການລົງທຶນໃສ່ກອງທຶນປະກັນສຸຂະພາບເພື່ອຄວາມຍືນຍົງດ້ານການເງິນ , ບົດຂັດຫຍໍ້ດ້ານນະໂຍບາຍ, 7 ມັງກອນ 2022 |
| **ສະຫວັດດີການສັງຄົມ** | |
| 1 | ກົດໝາຍ ວ່າດ້ວຍຄົນພິການ, ເລກທີ 146/ນຍ, ລົງວັນທີ 22 ມັງກອນ 2019 |
| 2 | ກົດໝາຍ ວ່າດ້ວຍການຄຸ້ມຄອງໄພພິບັດ, ເລກທີ 262/ນຍ, ລົງວັນທີ 5 ສິງຫາ 2019 |
| 3 | ດຳລັດ ວ່າດ້ວຍກອງທຶນຄຸ້ມຄອງກອງທຶນໄພພິບັດ, ເລກທີ 238/ນຍ, ລົງວັນທີ 18 ພຶດສະພາ 2020 |
| 4 | ຂໍ້ຕົກລົງ ວ່າດ້ວຍກອງທຶນສັງຄົມສົງເຄາະ, ເລກທີ 631/ນຍ, ວັນທີ 24 ທັນວາ 2020 |
| **ເອກະສານອື່ນໆ** | |
| 1 | ກົດໝາຍ ວ່າດ້ວຍແຮງງານ, ເລກທີ 43/ນຍ, ລົງວັນທີ 24 ທັນວາ 2013) |

| | |
|---|---|
| 2 | ດຳລັດ ວ່າດ້ວຍການຄຸ້ມຄອງແຮງງານໃນຂະແໜງຄົວເຮືອນ |
| 3 | ຂໍ້ຕົກລົງ ວ່າດ້ວຍການກວດກາແຮງງານ, ເລກທີ 3803/ຮສສ, ລົງວັນທີ 13 ກັນຍາ 2022 |
| 4 | ດຳລັດ ວ່າດ້ວຍຄະນະກຳມະການແຮງງານສາມຝ່າຍ, ເລກທີ 571/ນຍ, ລົງວັນທີ 20 ກັນຍາ 2021 |
| 5 | ແຜນພັດທະນາຂະແໜງແຮງງານ ແລະ ສະຫວັດດີການສັງຄົມ 5 ປີ 2021 - 2025 |
| 6 | ບົດສຳຫລວດກຳລັງແຮງງານ 2022 |
| 7 | ບົດລາຍງານຄວາມຄືບໜ້າຂອງ ໂຄງການຮ່ວມມື ILO/Korea ສະໜັບສະໜູນການຈັດຕັ້ງປະຕິບັດລະບົບປົກປ້ອງສັງຄົມຂັ້ນພື້ນຖານໃຫ້ແກ່ຜູ້ອອກແຮງງານ ແລະ ຄອບຄົວຂອງເຂົາເຈົ້າໃນພາກພື້ນອາຊີຕາເວັນອອກ-ໄລຍະ 3 |
| 8 | ບົດລາຍງານຄວາມຄືບໜ້າຂອງໂຄງການ SOLAR ຫລຸດຜ່ອນຄວາມດ້ອຍໂອກາດຂອງ ສປປ ລາວ: ເສີມສ້າງຄວາມກ້າວໜ້າໃຫ້ແກ່ລະບົບປົກປ້ອງສັງຄົມ, ສິດທິດ້ານແຮງງານ ແລະ ການເກີດສິດອຸດໜູນໃນຂະແໜງກາເຟ ແລະ ຊາ |
| 9 | ບົດລາຍງານຄວາມຄືບໜ້າຂອງ ໂຄງການ ILO-Lux ສ້າງພື້ນຖານປົກປ້ອງສັງຄົມໃຫ້ແກ່ໝົດທຸກຄົນ: ສະໜັບສະໜູນການຂະຫຍາຍເຂດປົກຄຸມປົກປ້ອງສັງຄົມໃນພາກພື້ນອາຊີ |
| 10 | ບົດລາຍງານຄວາມຄືບໜ້າຂອງ ໂຄງການຮ່ວມມື ສປຊ ບໍ່ປະຖິ້ມໃຜຢູ່ຂ້າງຫຼັງ: ສ້າງລະບົບປົກປ້ອງສັງຄົມຂັ້ນພື້ນຖານໃຫ້ແກ່ ສປປ ລາວ |
| 11 | ບົດລາຍງານຄວາມຄືບໜ້າດ້ານການໃຫ້ອຸດໜູນແມ່ ແລະ ເດັກເກີດໃໝ່ (ອົງການຢູນີເຊັບ) |

# ເອກະສານຊ້ອນທ້າຍ 3. ຕາຕະລາງເກັບກຳຂໍ້ມູນ

| ວັນທີ/ເວລາ | ຜູ້ເຂົ້າຮ່ວມ | ສະຖານທີ່ພົບປະ/ຂໍ້ມູນຕິດຕໍ່ | ຄຳເຫັນ |
|---|---|---|---|
| **ວັນຈັນ, 02 ຕຸລາ 2023** | | | |
| 09:30 - 10:30 | ກົມແຜນການ ແລະ ຮ່ວມມືສາກົນ (ກຊ ຮສສ) - ພະແນກຮ່ວມມືສາກົນ | ທ່ານ ວິໄລທອງ, ຫົວໜ້າກົມ ແຜນການ ແລະ ຮ່ວມມືສາກົນ, ກຊ ຮສສ, ທ່ານ ນາງ ສຸລິຕະ, ຮອງຫົວໜ້າ ພະແນກຮ່ວມມືສາກົນ, | ສັງຄົມສົງເຄາະ |
| 10:30 - 11:30 | ກົມສັງຄົມສົງເຄາະ - ກຊ ຮສສ | ທ່ານ ວົງຄຳ ພັນທະນຸວົງ, ຫົວໜ້າກົມ, ກຊ ຮສສ | ສັງຄົມສົງເຄາະ |
| 13:30 - 14:30 | ກົມນະໂຍບາຍ ຕໍ່ກັບຜູ້ທີ່ມີຜົນງານ ແລະ ຄົນທີ່ມີຄວາມພິການ, ກຊ ຮສສ | ປອ. ເບີທໍ່ ຕັ່ງພໍທໍ່, ຫົວໜ້າພະແນກ ຄົນທີ່ມີຄວາມພິການ, ກຊ ຮສສ | ສັງຄົມສົງເຄາະ |
| 14:30 - 16:00 | ພະແນກການເງິນ, ຫ້ອງການ ກະຊວງ, ກຊ ຮສສ | ທ່ານ ວິໄລ ແລະ ທ່ານ ແອນ້ອຍ | ການລະດົມທຶນເພື່ອປົກປ້ອງສັງຄົມ |
| **ວັນອັງຄານ, 03 ຕຸລາ 2023** | | | |
| 9:00 - 11:00 | ຫ້ອງການປະກັນສຸຂະພາບແຫ່ງຊາດ - (ຮອງຫົວໜ້າພະແໜກແຜນການ) | ປອ. ວຽງໄຊ ວິຣະວົງ, ຮອງຫົວໜ້າ, ກຊ ສາທາ | ການປະກັນສຸຂະພາບ |
| 11:00 - 12:00 | ຫອ້ງການກະຊວງ, ກະຊວງສາທາ | ກຊ ສາທາລະນະສຸກ | ສັງຄົມສົງເຄາະ |
| 13:30 - 15:00 | ອົງການປະກັນສັງຄົມແຫ່ງຊາດ (ກຊ ຮສສ) (ຮອງຫົວໜ້າພະແນກແຜນການ) | ປອ. ບົວທອມ ພົມມະຈັນ, ຮອງຫົວໜ້າ ອປຊ, ທ່ານ ນາງ ແວວມະນີ ຄຳພາຍ, ຫົວໜ້າພະແນກ ແຜນການ ແລະ ຮ່ວມມືສາກົນ | ປະກັນສັງຄົມ |
| 15:00 - 16:30 | ອົງການແຮງງານສາກົນ (ILO) | ທ່ານ ນາງ Loveleen De, Marielle Phe Goursat ແລະ ທ່ານ ນາງ ອຸໄລວັນ ແລະ ທ່ານ ທອງເຫຼັກ ຊິ່ງ | ການປົກປ້ອງສັງຄົມ |
| **ເດີນທາງໄປ ແຂວງ ຈຳປາສັກ** | | | |
| **ວັນພຸດ, 04 ຕຸລາ 2023** | | | |
| 10:30 - 12:00 | ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ | | ການປະກັນສັງຄົມ ແລະ ສັງຄົມສົງເຄາະ |
| 13:30-15:00 | ຫອ້ງການປະກັນສັງຄົມແຂວງ | | ການປະກັນສັງຄົມ |
| **ວັນພະຫັດ, ຕຸລາ 05 2023** | | | |
| 9:00 - 10:30 | ຫອ້ງການປະກັນສຸຂະພາບແຂວງ, ພະແນກສາທາລະນະສຸກແຂວງ | | ການປະກັນສຸຂະພາບ |
| 10:45 - 12:00 | ພະແນກສຶກສາທິການ ແລະ ກິລາ | | ສັງຄົມສົງເຄາະ |

| | | | |
|---|---|---|---|
| 13:30-15:30 | ພະແນກກະສິກຳ ແລະ ປ່າໄມ້ - ຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ | | ສັງຄົມສົງເຄາະ |
| **ວັນສຸກ, ຕຸລາ 6, 2023** | | | |
| 9:00-10:30 | ໄປເມືອງປາກຊ່ອງ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ | | ສັງຄົມສົງເຄາະ |
| 10:30-12:00 | ຫ້ອງການປະກັນສັງຄົມເມືອງປາກຊ່ອງ | ທີ່ປຶກສາ | |
| **ວັນຈັນ, ຕຸລາ 9, 2023** | | | |
| 09:00 - 10:30 | ກະຊວງສຶກສາທິການ ແລະ ກິລາ - ກົມແຜນການ | ກະຊວງສຶກສາທິການ ແລະ ກິລາ | ສັງຄົມສົງເຄາະ |
| 10:30 - 12:00 | ສູນກາງສະຫະພັນແມ່ຍິງລາວ | ຫອ້ງການສະຫະພັນແມ່ຍິງລາວ | ສັງຄົມສົງເຄາະ |
| 13:30 - 14:30 | ກະຊວງກະສິກຳ ແລະ ປ່າໄມ້ - ກົມພັດທະນາຊົນນະບົດ ແລະ ສະຫະກອນ | ກະຊວງກະສິກຳ ແລະ ປ່າໄມ້ | ສັງຄົມສົງເຄາະ |
| 14:45 - 16:00 | ສະພາອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ | ທ່ານ ນາງ ດາວອະດົງ | Constituent |
| **ວັນອັງຄານ, ຕຸລາ 10, 2023** | | | |
| 09:00 - 10:30 | ຫອ້ງການ ລບຕ | UXO office | ສັງຄົມສົງເຄາະ |
| 10:30 - 12:00 | ກົມປົກປ້ອງແຮງງານ, ສະຫະພັນກຳມະບານລາວ | ຫອ້ງການສະຫະພັນກຳມະບານລາວ | ການປະກັນສັງຄົມ<br>ສັງຄົມສົງເຄາະ |
| 13:30 - 14:45 | ກົມງົບປະມານແຫ່ງລັດ, ກະຊວງການເງິນ | ກົມງົບປະມານ, ກະຊວງການເງິນ | ການປົກປ້ອງສັງຄົມ |
| 15:00 - 16:30 | ຄະນະກຳມາທິການວັດທະນາທຳ ແລະ ສັງຄົມ | ສະພາແຫ່ງຊາດ, ປອ. ບຸນລ້ອມ ແກ້ວບົວທອມ, ຮອງປະທານ, ຄະນະກຳມະທິການວັດທະນາ ແລະ ສັງຄົມ, ແລະ ທ່ານ ບຸນສະຫວັນ, ຮອງຫົວໜ້າກົມສັງຄົມ. | ການປົກປ້ອງສັງຄົມ |
| **ວັນພຸດ, ຕຸລາ 11, 2023** | | | |
| 9:00 - 10:00 | ກົມງົບປະມານ, ກະຊວງແຜນການ ແລະ ການລົງທຶນ | ກະຊວງແຜນການ ແລະ ການລົງທຶນ | ການປົກປ້ອງສັງຄົມ |
| 10:30 - 12:00 | ກົມແຜນການ ແລະ ຮ່ວມມືສາກົນ, ກະຊວງອຸດສາຫະກຳ ແລະ ການຄ້າ | ກະຊວງ ອຸດສາຫະກຳ ແລະ ການຄ້າ | ການປົກປ້ອງສັງຄົມ |
| 13:30 - 14:30 | United Nations Children's Fund (UNICEF) | ທ່ານ ນາງ Maryam Abdu, ຫ້ອງການ UNICEF | ສັງຄົມສົງເຄາະ |
| 15:00 - 16:00 | The UN Resident Coordinator's Office (UNRCO) ຫອ້ງການຜູ້ປະສານງານອົງການເຄືອຂ່າຍ ສປຊ | ທ່ານ Matthew Johnson, UNRCO office | ສັງຄົມສົງເຄາະ |
| **ວັນພະຫັດ, ຕຸລາ 12, 2023** | | | |
| 9:30 - 10:30 | World Food Program (WFP) | ຫ້ອງການ WFP | ສັງຄົມສົງເຄາະ |
| 10:45 - 11:30 | Food and Agriculture Organization (FAO) | ທ່ານ ພອນໄຊ<br>ຫ້ອງການ FAO | ສັງຄົມສົງເຄາະ |
| 13:30 - 14:30 | World Bank (WB) ທະນາຄານໂລກ | ທ່ານ ທອງເດືອນ ນັນທະນາວອນ | ການປະກັນສຸຂະພາບ<br>ສັງຄົມສົງເຄາະ |

| | | | |
|---|---|---|---|
| 14:45 - 16:00 | OXFAM | ທ່ານ ຄຳພິ ຄຳມະວົງ ແລະ ທ່ານ ສັງ ຄີ ຈະເລີນຄູນ<br>ຫ້ອງການ OXFAM | ສັງຄົມສົງເຄາະ |
| 16:00 - 17:00 | ອົງການອະນາໄມໂລກ (WHO) | Dr. Eunyoung Kim<br>ທ່ານ ນາງ ອັນເພັງ ສິຣິມົງຄູນ | ການປະກັນສຸຂະພາບ |
| **ເດີນທາງໄປຊຽງຂວາງ** | | | |
| **ວັນຈັນ, ຕຸລາ 16 2023** | | | |
| 9:00 - 10:30 | ພະແນກ ແຮງງານ ແລະ ສະຫວັດດີການສັງຄົມ | ຫອ້ງການພະແນກແຂວງ | ການປົກປ້ອງສັງຄົມ<br>ສັງຄົມສົງເຄາະ |
| 10:30 - 12:00 | ຫອ້ງການປະກັນສຸຂະພາບແຂວງ | ຫອ້ງການປະກັນສຸຂະພາບແຂວງ | ການປະກັນສຸຂະພາບ |
| 13:00 - 14:00 | ພະແນກກະສິກຳ ແລະ ປ່າໄມ້ | ຫອ້ງການພະແນກ | ສັງຄົມສົງເຄາະ |
| 14:45 - 16:00 | ລົງຢ້ຽມຢາມເມືອງຄູນ - ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງຄູນ | ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງຄູນ | ສັງຄົມສົງເຄາະ |
| **ວັນອັງຄານ, ຕຸລາ 17, 2023** | | | |
| 09:00 - 10:00 | ພະແນກສຶກສາທິການ ແລະ ກິລາ | | ສັງຄົມສົງເຄາະ |
| 10:00 - 12:00 | ຫອ້ງການປະກັນສັງຄົມແຂວງ | | ປະກັນສັງຄົມ |

International
Labour
Organization